ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນພັດທະນາເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ IV (2026-2030)

ນະຄອນຫຼວງວຽງຈັນ, ວັນທີ 14 ກໍລະກົດ 2026

## ຄຳນຳ

ແຜນພັດທະນາ 5 ປີ ຄັ້ງທີ IV (2026-2030) ເປັນການຈັດຕັ້ງຜັນຂະຫຍາຍວິໄສທັດ, ຍຸດທະສາດການພັດທະນາ ໄລຍະ 10 ປີ (2021-2030) ຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານ ແລະ ເປັນແຜນຈັດຕັ້ງຜັນຂະຫຍາຍວິໄສທັດ 20 ປີ ຮອດປີ 2040, ເປັນແຜນການທີ່ມີການກຳນົດບາດກ້າວສຳ ຄັນ ໃນການກຳນົດທິດທາງເພື່ອຜັກດັນໃຫ້ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ກາຍເປັນເຄື່ອງມືສຳຄັນ ແລະ ຊຸກຍູ້ການຫັນເປັນທັນສະໄໝ ໃນປີ 2030 ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ໃຫ້ເຂັ້ມແຂງຍືນຍົງ ເປັນຈຸດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະຊາຊົນ ມີສ່ວນຮ່ວມຢ່າງກວ້າງຂວາງ.

ແຜນພັດທະນາ 5 ປີ ຄັ້ງນີ້ ຈະສູ້ຊົນສືບຕໍ່ຍົກລະດັບຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໃຫ້ມີບົດບາດສຳຄັນໃນການຊຸກຍູ້ ແລະ ສົ່ງເສີມການນຳໃຊ້ເຕັກໂນໂລຊີ ດີຈິຕອນ (Digital) ເຂົ້າໃນທຸກຂະແໜງການ ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເທື່ອລະກ້າວຢ່າງມີຈຸດສຸມ ກາຍເປັນຂະແໜງປາຍແຫຼມຂອງເສດຖະກິດແຫ່ງຊາດ, ສ້າງລາຍຮັບເຂົ້າງົບປະມານຢືນຢູ່ໃນອັນດັບແຖວໜ້າຂອງປະເທດ.

ຈຸດໝາຍລວມຂອງແຜນພັດທະນາ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໄລຍະ 5 ປີ ຄັ້ງທີ IV (2026-2030) ແມ່ນສຸມໃສ່ "*ພັດທະນາ ເຕັກໂນໂລຊີ, ການສື່ສານ ແລະ ນະວັດຕະກຳ ໃຫ້ມີການຂະຫຍາຍຕົວແບບກ້າວກະໂດດ; ສົ່ງເສີມ ແລະ ນຳໃຊ້ ໂທລະຄົມມະນາຄົມ, ເຕັກໂນໂລຊີ ການສື່ສານ ຂໍ້ມູນຂ່າວສານ (ໄອຊີທີ), ປັນຍາປະດິດ ແລະ ດິຈິຕອນ ທີ່ທັນສະໄໝ, ມີຄວາມປອດໄພສູງ ເຂົ້າໃນທຸກຂະແໜງການເສດຖະກິດ-ສັງຄົມ ແຕ່ສູນກາງລົງຮອດທ້ອງຖິ່ນ; ນຳໃຊ້ຜົນສຳເລັດຂອງການຄົ້ນຄ້ວາ ແລະ ຖ່າຍທອດເຕັກໂນໂລຊີ ແລະ ນະວັດຕະກຳ ເພື່ອຍູ້ແຮງຂະບວນການຜະລິດສິນຄ້າ, ການບໍລິການ ໃຫ້ກາຍເປັນຜະລິດຕະພັນທີ່ມີຄວາມຫຼາກຫຼາຍ ສາມາດສ້າງມູນຄ່າເພີ່ມ ແລະ ມີຄວາມອາດສາມາດໃນການແຂ່ງຂັນ; ພັດທະນາຊັບພະຍາກອນມະນຸດທາງດ້ານ ດິຈິຕອນ ແລະ ປັນຍາປະດິດ ໃຫ້ມີຄຸນນະພາບສູງ; ສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ການພັດທະນາ ແລະ ສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ ທີ່ນຳໃຊ້ພະລັງງານສີຂຽວ ເພື່ອຂັບເຄື່ອນການພັດທະນາ ເສດຖະກິດ-ສັງຄົມ ເຂົ້າສູ່ຍຸກອຸດສາຫະກຳ 4.0, ຫັນເປັນລັດຖະບານດິຈິຕອນ ແລະ ສ້າງເສດຖະກິດ-ສັງຄົມດິຈິຕອນ ໂດຍນຳໃຊ້ປັນຍາປະດິດ ເປັນກົນໄກຫຼັກ*". ຊຶ່ງມີ 10 ເປົ້າໝາຍໃຫຍ່ຄື:

**ເປົ້າໝາຍ 1:** ບຸກຄະລາກອນ ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ ແລະ ໄດ້ຮັບການຍົກລະດັບວິຊາສະເພາະທີ່ມີມາດຕະຖານ, ມີຄວາມຮູ້, ມີທັກສະໃນການນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນວຽກງານ ແລະ ສົ່ງເສີມໃຫ້ມີຫົວຄິດປະດິດສ້າງທີ່ທັນສະໄໝ ຮັບປະກັນ ເປັນເຈົ້າການກຽມຄວາມພ້ອມທີ່ຈະກ້າວໄປສູ່ຍຸກສະໄໝໃໝ່, ມີສ່ວນຮ່ວມຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຫຼາຍຂຶ້ນ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ສູງຂຶ້ນ.

**ເປົ້າໝາຍ 2:** ມີນິຕິກຳເພື່ອຮອງຮັບ ແລະ ສອດຄ່ອງກັບ ການຫັນເປັນດິຈິຕອນ (Digital Transformation), ລັດຖະບານດິຈິຕອນ (Digital Government), ເສດຖະກິດດິຈິຕອນ (Digital Economy) ແລະ ສັງຄົມດິຈິຕອນ (Digital Society); ເຜີຍແຜ່, ເຊື່ອມຊຶມ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດບັນດາລະບຽບການ ຮັບປະກັນໃນການບັງຄັບໃຊ້ກົດ ໝາຍໃຫ້ມີປະສິດທິຜົນ.

**ເປົ້າໝາຍ 3:** ພັດທະນາ ແລະ ສົ່ງເສີມການບໍລິຫານລັດແບບດິຈິຕອນ ເຂົ້າໃນທຸກຂະແໜງການ ອົງການຈັດຕັ້ງລັດ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ຫັນເປັນທັນສະໄໝ. ຍົກລະດັບປະສິດທິພາບຂອງການບໍລິຫານ ແລະ ຄຸ້ມຄອງລັດໃຫ້ມີຄວາມສະດວກ, ວ່ອງໄວ, ປະຢັດ ແລະ ຮັບປະກັນຄວາມປອດໄພ ສ້າງລາຍຮັບເຂົ້າງົບປະມານແຫ່ງລັດໄດ້ຫຼາຍຂຶ້ນ ກ້າວໄປສູ່ລັດຖະບານທີ່ດິຈິຕອນ ແລະ ສັງຄົມດິຈິຕອນ.

**ເປົ້າໝາຍ 4:** ໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ດິຈິຕອນ ໄດ້ຮັບການພັດທະນາ ແລະ ສ້າງຢ່າງເປັນລະບຽບຕາມມາດຕະຖານສາກົນ ແລະ ມີຄວາມປອດໄພ, ສົ່ງຮັບຂໍ້ມູນໄດ້ວ່ອງໄວ, ສາມາດສະໜອງບໍລິການທຸກທຸກເມືອງ ແລະ ທຸກຕາແສງທົ່ວປະເທດເພື່ອຮອງຮັບການຫັນເປັນດິຈິຕອນ (Digital Transformation),

ລັດຖະບານດິຈິຕອນ (Digital Government), ເສດຖະກິດດິຈິຕອນ (Digital Economy), ສັງຄົມດິຈິຕອນ (Digital Society) ຂອງ ສປປ ລາວ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**ເປົ້າໝາຍ 5:** ຮັບປະກັນການນຳໃຊ້ ແລະ ເກັບລາຍຮັບ ຈາກຊັບພະຍາກອນໂທລະຄົມມະນາຄົມໃຫ້ມີປະສິດທິພາບ, ປະສິດທິຜົນ,ຖືກເປົ້າໝາຍ, ທົ່ວເຖິງ, ພັດທະນາຢ່າງຕໍ່ເນື່ອງ ແລະ ຫັນເປັນທັນສະໄໝ.

**ເປົ້າໝາຍ 6:** ເພີ່ມທະວີລະບົບຄວາມປອດໄພ ໃຫ້ແກ່ບັນດາໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ດິຈິຕອນ, ມີລະບົບຕິດຕາມກວດກາ, ເຝົ້າລະວັງທາງໄຊເບີ ແລະ ແຈ້ງເຕືອນຄວາມປອດໄພທີ່ໄດ້ມາດຕະຖານ ຮ່ວມກັນພາຍໃນ ແລະ ສາກົນ ເພື່ອປ້ອງກັນ ແລະ ສະກັດກັ້ນການໂຈມຕີທາງໄຊເບີ, ການນຳໃຊ້ເຄືອຂ່າຍໂທລະຄົມເຂົ້າໃນການກໍ່ອາດສະຍາກຳໄຊເບີ, ມີການຕິດຕາມ ຂໍ້ມູນຂ່າວສານຜ່ານອິນເຕີເນັດ, ສະກັດກັ້ນ ແລະ ຕອບຕ້ານ ບັນດາຂ່າວປອມ ເທິງສື່ສັງຄົມອອນລາຍ ແລະ ອິນເຕີເນັດ.

**ເປົ້າໝາຍ 7:** ຊຸກຍູ້ ແລະ ສົ່ງເສີມການພັດທະນາອຸດສະຫະກຳດິຈິຕອນ, ການຄົ້ນຄວ້ານຳໃຊ້ເຕັກໂນໂລຊີລະດັບສູງ ແລະ ອັດສະລິຍະ, ສົ່ງເສີມການສ້າງຫົວໜ່ວຍວິສາຫະກິດທີ່ນຳໃຊ້ນະວັດຕະກາໃໝ່ (Start-Up), ສ້າງນະວັດຕະກຳດ້ານດິຈິຕອນ, ການໃຫ້ບໍລິການ ການເງິນເອເລັກໂຕຣນິກເທິງໂທລະສັບມືຖື (Mobile Money); ເພື່ອສະໜັບສະໜູນການຂະຫຍາຍຕົວທາງດ້ານເສດຖະກິດໃນຍຸກແຫ່ງດິຈິຕອນ, ຮອງຮັບການຫັນເປັນດິຈິຕອນ, ເສດຖະກິດດິຈິຕອນ; ສົ່ງເສີມບັນດາຂະແໜງການ ສ້າງນະວັດຕະກຳຮັບໃຊ້ຂະແໜງການຂອງຕົນ ຜ່ານໂຄງລ່າງພື້ນຖານ ແລະ ການບໍລິການ ໂທລະຄົມມະນາຄົມ ແລະ ດິຈິຕອນ, ພັດທະນານະວັດຕະກຳດ້ານໄອຊີທີ ຂອງຄົນລາວ ສູ່ສາກົນ ແລະ ຫຼຸດຜ່ອນຄວາມແຕກໂຕນທາງດ້ານດິຈິຕອນ.

**ເປົ້າໝາຍ 8:** ຍູ້ແຮງການພັດທະນາ ແລະ ນຳໃຊ້ປັນຍາປະດິດ (AI) ເພື່ອເປັນກຳລັງຂັບເຄື່ອນທີ່ສຳຄັນ ໃນການຫັນເປັນລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ, ສັງຄົມດິຈິຕອນ ພ້ອມທັງສ້າງຄວາມອາດສາມາດ ໃນການແຂ່ງຂັນ ແລະ ສ້າງມູນຄ່າເພີ່ມ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

**ເປົ້າໝາຍ 9:** ສັງຄົມໄດ້ນຳໃຊ້ການບໍລິການໄປສະນີຢ່າງກວ້າງຂວາງ, ທັນສະໄໝ, ມີມາດຕະຖານ ແລະ ຄຸນນະພາບ ໃນລາຄາທີ່ເໝາະສົມ ມີບໍລິການໃນທຸກເມືອງ ແລະ ທຸກຕາແສງ ທົ່ວປະເທດ; ເປັນອົງປະກອບທີ່ສຳຄັນຊຸກຍູ້ການຄ້າເອເລັກໂຕຣນິກ, ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ (ສອຈ) ແລະ ຫຼຸດຜ່ອນຄວາມແຕກໂຕນລະຫວ່າງສູນກາງ ແລະ ທ້ອງຖິ່ນ ແກ້ໄຂບັນຫາເສດຖະກິດເພື່ອຫຼຸດຜ່ອນຄວາມທຸກຍາກ.

**ເປົ້າໝາຍ 10:** ເສີມຂະຫຍາຍການພົວພັນ ແລະ ຍາດແຍ່ງການຮ່ວມມື ກັບຕ່າງປະເທດ ໃນຂອບສອງຝ່າຍ, ອາຊຽນ, ອານຸພາກພື້ນ ແລະ ອົງການຈັດຕັ້ງສາກົນ ອີງຕາມແນວທາງການຕ່າງປະເທດຂອງ ສປປ ລາວ ສັນຕິພາບ ເອກະລາດ ມິດຕະພາບ ແລະ ການຮ່ວມມື ຢ່າງສະເໝີຕົ້ນສະເໝີປາຍ; ແລະ ປະຕິບັດນະໂຍບາຍ ເປີດກວ້າງການພົວພັນຮ່ວມມື ແບບຫຼາຍທິດ, ຫຼາຍຝ່າຍ ແລະ ຫຼາຍຮູບແບບ ເພື່ອຜັນຂະຫຍາຍບັນດາແຜນວຽກ ແລະ ຍົກສູງບົດບາດຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ.

ເພື່ອບັນລຸເປົ້າໝາຍຂ້າງເທິງນັ້ນຈຶ່ງໄດ້ກຳນົດ 5 ວຽກສຳຄັນທີ່ເປັນບູລິມະສິດຄື <u>(1) ພັດທະນາບຸກຄະລາກອນດິຈິຕອນ; (2) ພັດທະນາລະບົບບໍລິຫານລັດດິຈິຕອນ; (3) ພັດທະນາໂຄງລ່າງພື້ນຖານດິຈິຕອນ (4) ພັດທະນາລະບົບຄວາມປອດໄພດິຈິຕອນ; (5) ຊຸກຍູ້ສົ່ງເສີມສະຕາດອັບ (Startup) ຫຼື ທຸລະກິດນຳໃຊ້ນະວັດຕະກຳໃໝ່ ແລະ ພັດທະນາລະບົບນິເວດດິຈິຕອນ (Eco System)</u>; ແລະ ນອກຈາກນັ້ນຍັງໄດ້ກຳນົດ 10 ແຜນວຽກຈຸດສຸມຄື: ການພັດທະນາບຸກຄະລາກອນ; ສ້າງ ແລະ ປັບປຸງນິຕິກຳ ຮອງຮັບການຫັນເປັນ ດິຈິຕອນ; ພັດທະນາລະບົບບໍລິຫານລັດໃຫ້ເປັນທັນສະໄໝ; ພັດທະນາໂຄງລ່າງພື້ນຖານ ໂທລະຄົມມະນາຄົມ ແລະ ດິຈິຕອນ; ຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ; ພັດທະນາລະບົບຄວາມປອດໄພດ້ານໄຊເບີ; ພັດທະນາ ແລະ ນຳໃຊ້ນະວັດຕະກຳ ດິຈິຕອນ; ປັນຍາປະດິດ; ພັດທະນາໄປສະນີ ຫັນເປັນທັນສະໄໝ; ຮ່ວມມື ແລະ ການເຊື່ອມໂຍງຕ່າງປະເທດ.

ດັ່ງນັ້ນ, ຈຶ່ງຮຽກຮ້ອງມາຍັງທຸກຂະແໜງການ ແລະ ທຸກພາກສ່ວນ ໂດຍສະເພາະບັນດາກົມ, ສະຖາບັນ, ສູນ, ຫ້ອງການ ແລະ ອົງການ ພ້ອມດ້ວຍພະນັກງານພາຍໃນຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຈົ່ງນໍາເອົາແຜນ ພັດທະນາເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ IV (2026-2030) ຜັນຂະຫຍາຍເຂົ້າໃນວຽກງານທີ່ຮັບຜິດຊອບ ເພື່ອເປັນການປະກອບສ່ວນຊຸກຍູ້ການຈັດຕັ້ງປະຕິບັດ ວິໄສທັດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 20 ປີ (2021-2040), ຍຸດທະສາດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 10 ປີ (2021-2030) ແລະ ວາລະແຫ່ງຊາດວ່າດ້ວຍ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນຂອງຊາດ.

**ນະຄອນຫຼວງວຽງຈັນ, ວັນທີ 14 ກໍລະກົດ 2026**

ລັດຖະມົນຕີ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

**ສັນຕິສຸກ ສິມມາລາວົງ**

# ສາລະບານ


ແຜນພັດທະນາເຕັກໂນໂລຊີ ການສື່ສານ 5 ປີ ຄັ້ງທີ IV (2026-2030

ພາກທີ I ສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ແຜນພັດທະນາເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ III (2021-2025)....1

I. ສະພາບລວມກະຊວງ ເຕັກໂນໂລຊີ ແລະ ການສື່ສານ....1

II. ຜົນສຳເລັດ ຄາດໝາຍ ແລະ ຕົວຊີ້ບອກ ຂອງແຜນພັດທະນາ ເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ III (2021-2025)....2

III. ຜົນສຳເລັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ.7

1. ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ:....7

2. ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ....8

IV. ຜົນສຳເລັດ 4 ວຽກ ບູລິມະສິດສຳຄັນໃນການຫັນເປັນທັນສະໄໝດ້ວຍດີຈີຕອນ....8

1. ສ້າງລັດຖະບານດີຈີຕອນ....8

2. ພັດທະນາລະບົບການຊຳລະສະສາງດີຈີຕອນ....9

3. ຊຸກຍູ້ສົ່ງເສີມສະຕາດອັບ (Start up) ຫຼື ທຸລະກິດນຳໃຊ້ນະວັດຕະກຳໃໝ່ ແລະ ພັດທະນາລະບົບນິເວດ ດີຈີຕອນ (Ecosystem)....9

4. ພັດທະນາບຸກຄະລາກອນ ດີຈີຕອນ....10

V. ຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດດີຈີຕອນແຫ່ງຊາດ....10

VI. ຜົນສຳເລັດການຈັດຕັ້ງປະຕິບັດແຜນວຽກຈຸດສຸມ ໃນແຕ່ລະດ້ານຂອງຂະແໜງ ເຕັກໂນໂລຊີ ແລະ ການສື່ສານ 14

1.1 ແຜນວຽກຈຸດສຸມທີ 1: ການພັດທະນາບຸກຄະລາກອນ....15

1.2 ແຜນວຽກຈຸດສຸມທີ 2: ສ້າງ ແລະ ປັບປຸງນິຕິກຳ ຮອງຮັບການຫັນເປັນ ດີຈີຕອນ....18

1.3 ແຜນວຽກຈຸດສຸມທີ 3: ພັດທະນາລະບົບບໍລິຫານລັດໃຫ້ເປັນທັນສະໄໝ....18

1.4 ແຜນວຽກຈຸດສຸມທີ 4: ພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ, ໄອຊີທີ ແລະ ດີຈີຕອນ....20

1.5 ແຜນວຽກຈຸດສຸມທີ 5: ຄຸ້ມຄອງຄື້ນວິທະຍຸສື່ສານ....23

1.6 ແຜນວຽກຈຸດສຸມທີ 6: ພັດທະນາລະບົບຄວາມປອດໄພດ້ານໄຊເບີ....24

1.7 ແຜນວຽກຈຸດສຸມທີ 7: ພັດທະນາ ແລະ ນຳໃຊ້ນະວັດຕະກຳ ໄອຊີທີ....25

1.8 ແຜນວຽກຈຸດສຸມທີ 8: ການພັດທະນາໄປສະນີ ຫັນເປັນທັນສະໄໝ....26

1.9 ແຜນວຽກຈຸດສຸມທີ 9: ການຮ່ວມມື ແລະ ການເຊື່ອມໂຍງ ຕ່າງປະເທດ....27

1.10 ການຄຸ້ມຄອງລາຍຮັບ-ງົບປະມານ ແລະ ການລົງທຶນ:....29

1.11 ດ້ານຄວາມຕ້ອງການຂອງແມ່ຍິງ, ແມ່ ແລະ ເດັກ....31

1.12 ການກວດກາ ແລະ ຕິດຕາມປະເມີນຜົນ....31

1.13 ດ້ານການຄຸ້ມຄອງພາກທຸລະກິດ/ຈຸລະພາກ....33

VII. ການສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນ....34

1. ດ້ານດີ....34

2. ດ້ານອ່ອນ ແລະ ຂໍ້ຄົງຄ້າງ:....34

VIII. ສາເຫດຂໍ້ຄົງຄ້າງ:....35

IX. ບົດຮຽນທີ່ຖອດຖອນ ແລະ ວິທີແກ້ໄຂ:....36

ພາກທີ II ແຜນພັດທະນາເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ IV (2026-2030).....37
I. ຄາດຄະເນສະພາບລວມ.....37
1.1 ຄາດຄະເນສະພາບແວດລ້ອມພາກພື້ນ ແລະ ສາກົນ.....37
1.2 ຄາດຄະເນສະພາບແວດລ້ອມພາຍໃນປະເທດ.....37
1.3 ທ່າແຮງການພັດທະນາວຽກງານ ເຕັກໂນໂລຊີ ແລະ ການສື່ສານ.....37
II. ຈຸດໝາຍລວມ, ທິດທາງ, ເປົ້າໝາຍ, ຄາດໝາຍ, ວຽກສຳຄັນບູລິມະສິດ ແລະ ແຜນວຽກຈຸດສຸມ ຂອງແຜນ ພັດທະນາ 5 ປີຄັ້ງທີ IV (2026-2030).....38
2.1 ຈຸດໝາຍລວມ.....38
2.2 ທິດທາງ ແລະ ໜ້າທີ່ລວມ.....39
III. ເປົ້າໝາຍໃຫຍ່ຮອດປີ 2030.....40
3.1 ເປົ້າໝາຍແຜນພັດທະນາຂະແໜງເຕັກໂນໂລຊີ ແລະ ການສື່ສານ.....40
3.2 ຄາດໝາຍ ແລະ ຕົວຊີ້ບອກ.....41
IV. ວຽກບູລິມະສິດ ແລະ ແຜນວຽກຈຸດສຸມ ຂອງແຜນພັດທະນາ ເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ IV (2026-2030).....45
4.1 ວຽກບູລິມະສິດສຳຄັນ ໃນການຫັນເປັນທັນສະໄໝດ້ວຍດີຈິຕອນ.....45
1) ພັດທະນາບຸກຄະລາກອນດີຈິຕອນ.....46
2) ພັດທະນາບໍລິຫານລັດດີຈິຕອນ.....48
3) ພັດທະນາໂຄງລ່າງພື້ນຖານດີຈິຕອນ.....49
4) ພັດທະນາລະບົບຄວາມປອດໄພດີຈິຕອນ.....50
5) ຊຸກຍູ້ສົ່ງເສີມທຸລະກິດສະຕາດອັບ, ທຸລະກິດນະວັດຕະກໍາໃໝ່ ແລະ ພັດທະນາລະບົບນິເວດດີຈິຕອນ...51
4.2 ແຜນວຽກຈຸດສຸມ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຮອດປີ 2030.....52
4.2.1 ແຜນວຽກຈຸດສຸມທີ 1: ການພັດທະນາບຸກຄະລາກອນ.....52
4.2.2 ແຜນວຽກຈຸດສຸມທີ 2: ສ້າງ ແລະ ປັບປຸງນິຕິກຳ ຮອງຮັບການຫັນເປັນດີຈິຕອນ.....58
4.2.3 ແຜນວຽກຈຸດສຸມທີ 3: ພັດທະນາລະບົບບໍລິຫານລັດ ແບບດີຈິຕອນ.....61
4.2.4 ແຜນວຽກຈຸດສຸມທີ 4: ພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ດີຈິຕອນ.....63
4.2.5 ແຜນວຽກຈຸດສຸມທີ 5: ຄຸ້ມຄອງຄົ້ນຄວາມຖີ່ວິທະຍຸສື່ສານ.....68
4.2.6 ແຜນວຽກຈຸດສຸມທີ 6: ພັດທະນາລະບົບຄວາມປອດໄພດ້ານໄຊເບີ.....71
4.2.7 ແຜນວຽກຈຸດສຸມທີ 7: ພັດທະນາ ແລະ ນຳໃຊ້ ນະວັດຕະກຳ ໄອຊີທີ.....73
4.2.8 ແຜນວຽກຈຸດສຸມທີ 8: ວຽກງານປັນຍາປະດິດ.....77
4.2.9 ແຜນວຽກຈຸດສຸມທີ 9: ພັດທະນາໄປສະນີຫັນເປັນທັນສະໄໝ.....79
4.2.10 ແຜນວຽກຈຸດສຸມທີ 10: ການຮ່ວມມື ແລະ ການເຊື່ອມໂຍງຕ່າງປະເທດ.....82
V. ແຜນຄວາມຕ້ອງການງົບປະມານການລົງທຶນ ໃນໄລຍະ 5 ປີ (2026-2030).....84
ພາກທີ III ວິທີການຈັດຕັ້ງປະຕິບັດ ແລະ ການຕິດຕາມ,ປະເມີນຜົນແຜນພັດທະນາ 5 ປີ ຮອດປີ 2030.....86
1. ວິທີການຈັດຕັ້ງປະຕິບັດ.....86
2. ກົນໄກການຈັດຕັ້ງປະຕິບັດ.....86
3. ການຕິດຕາມ ແລະ ປະເມີນຜົນ.....86

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

# ພາກທີ I
# ສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ແຜນພັດທະນາເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ III (2021-2025)

ການຈັດຕັ້ງປະຕິບັດແຜນພັດທະນາ ເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ III (2021-2025) ໃນໄລຍະທີ່ຜ່ານມາ ແມ່ນດໍາເນີນໃນສະພາບການຂອງໂລກຍັງສືບຕໍ່ພົບຄວາມຫຍຸ້ງຍາກຫຼາຍ ເຖິງແມ່ນທົ່ວໂລກຈະສາມາດຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ແລ້ວກໍ່ຕາມ ແຕ່ຜົນກະທົບທາງເສດຖະກິດທີ່ເປັນຕ່ອງໂສ້ແມ່ນຍັງເປັນບັນຫາທີ່ຕ້ອງໄດ້ແກ້ໄຂຢ່າງຕໍ່ເນື່ອງ, ໃນຂະນະດຽວກັນສະພາບການພາກພື້ນ ແລະ ສາກົນ ຍັງສືບຕໍ່ຜັນແປຢ່າງສັບສົນ ແລະ ຄາດເດົາໄດ້ຍາກ. ໃນນັ້ນ, ວິກິດດ້ານພະລັງງານ ແລະ ໄພເງິນເຟີ້ ໄດ້ກາຍເປັນບັນຫາໃຫຍ່ຫຼວງທີ່ທົ່ວໂລກກໍາລັງປະເຊີນໜ້າເຮັດໃຫ້ການຟື້ນຟູທາງດ້ານເສດຖະກິດ ເລີ່ມຈາກບັນດາປະເທດທີ່ມີເສດຖະກິດຂະໜາດໃຫຍ່ ແມ່ນມີຄວາມສ່ຽງໃນການທົດຖອຍ ເຊິ່ງທັງໝົດນີ້ ໄດ້ສົ່ງຜົນກະທົບໂດຍກົງຕໍ່ການພັດທະນາຂອງປະເທດເຮົາຢ່າງຫຼີກລ້ຽງບໍ່ໄດ້, ເຮັດໃຫ້ປະເທດເຮົາມີຄວາມຫຍຸ້ງຍາກທາງດ້ານເສດຖະກິດມະຫາພາກ, ປະເຊີນໜ້າກັບການຂາດແຄນນໍ້າມັນເຊື້ອໄຟ ບວກກັບການຖີບຕົວສູງຂຶ້ນຢ່າງແຮງຂອງລາຄານໍ້າມັນເຊື້ອໄຟ, ບັນຫາຢາເສບຕິດ, ອັດຕາເງິນເຟີ້ທີ່ມີການຜັນຜວນບໍ່ຄົງທີ່, ຄ່າເງິນກີບອ່ອນຄ່າ, ບັນດາອິດທິກໍາລັງປໍລະປັກຍັງສືບຕໍ່ສວຍໂອກາດສ້າງຄວາມປັ່ນປ່ວນໃນສັງຄົມອອນລາຍ ແບ່ງແຍກພາຍໃນ ອັນໄດ້ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ, ປະຊາຊົນບັນດາເຜົ່າ. ຕໍ່ໜ້າສະພາບການທີ່ຍັງມີຄວາມບໍ່ແນ່ນອນດັ່ງກ່າວ ພາຍໃຕ້ການນໍາພາຢ່າງໃກ້ຊິດຂອງສູນກາງພັກ, ການຄຸ້ມຄອງຂອງລັດຖະບານ ກໍ່ຄືຄະນະບໍລິຫານງານພັກ ແຕ່ລະຂັ້ນ. ໃນນັ້ນ, ອີງຄະນະພັກ ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ນໍາພາສະມາຊິກພັກ-ພະນັກງານ ຈັດຕັ້ງປະຕິບັດຕາມມະຕິຂອງກອງປະຊຸມໃຫຍ່ຜູ້ແທນສະມາຊິກພັກ ຄັ້ງທີ II ຂອງຕົນ ຢ່າງຕັ້ງໜ້າ ເພື່ອແກ້ໄຂບັນຫາທີ່ເກີດຂຶ້ນໃນສັງຄົມ ທີ່ຕິດພັນກັບຂອບເຂດຄວາມຮັບຜິດຊອບຂອງຕົນ ໄດ້ເຮັດໃຫ້ບັນຫາຄັ່ງຮ້ອນທີ່ກ່າວມາຂ້າງເທິງນີ້ ຖືກຄວບຄຸມ ແລະ ປະຄັບປະຄອງ ບໍ່ໃຫ້ຕົກເຂົ້າໃນສະພາບວິກິດການຮ້າຍແຮງ, ສາມາດຜ່ານຜ່າຄວາມຫຍຸ້ງຍາກ ແລະ ຍາດໄດ້ຜົນສໍາເລັດທີ່ເປັນພື້ນຖານ ໃຫ້ຄ່ອຍໆດີຂຶ້ນເທື່ອລະກ້າວ.

## I. ສະພາບລວມກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໄດ້ຄົ້ນຄວ້າຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ່ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ຂອງລັດຖະບານ, ວິໄສທັດການພັດທະນາເສດຖະກິດ ດີຈິຕອນແຫ່ງຊາດ ໄລຍະ 20 ປີ (2021-2040), ຍຸດທະສາດ ການພັດທະນາເສດຖະກິດດີຈິຕອນ ແຫ່ງຊາດ ໄລຍະ 10 ປີ (2021-2030), ແຜນພັດທະນາເສດຖະກິດດີຈິ ຕອນ ແຫ່ງຊາດ ໄລຍະ 5 ປີ (2021-2025) ທີ່ຕິດພັນກັບການແກ້ໄຂສອງວາລະແຫ່ງຊາດຄື: ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງຊາດ, ການແກ້ໄຂບັນຫາຢາເສບຕິດ, ແຜນພັດທະນາເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ III (2021-2025) ຂອງຂະແໜງການ, ການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ແລະ ບັນດາມະຕິ, ຄໍາສັ່ງ, ຂໍ້ກໍານົດ,

ລະບຽບການຕ່າງໆ ແລະ ນິຕິກຳທີ່ກ່ຽວຂ້ອງ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໄດ້ກຳນົດຈຸດໝາຍລວມ **"ພັດທະນາ ເຕັກໂນໂລຊີ, ການສື່ສານ ແລະ ນະວັດຕະກຳ ໃຫ້ມີການຂະຫຍາຍຕົວແບບກ້າວກະໂດດ; ສົ່ງເສີມ ແລະ ນຳໃຊ້ໂທລະຄົມມະນາຄົມ, ເຕັກໂນໂລຊີ ການສື່ສານ ຂໍ້ມູນຂ່າວສານ (ໄອຊີທີ) ແລະ ດີຈີຕອນ ທີ່ທັນສະໄໝ, ມີຄວາມປອດໄພສູງ ເຂົ້າໃນທຸກຂະແໜງການ ເສດຖະກິດ-ສັງຄົມ ແຕ່ສູນກາງລົງຮອດທ້ອງຖິ່ນ; ນຳໃຊ້ຜົນ ສຳເລັດຂອງການຄົ້ນຄ້ວາ ແລະ ຖ່າຍທອດເຕັກໂນໂລຊີ ແລະ ນະວັດຕະກຳ ເພື່ອຍູ້ແຮງຂະບວນການຜະລິດສິນຄ້າ, ການບໍລິການໃຫ້ກາຍເປັນຜະລິດຕະພັນທີ່ມີຄວາມຫຼາກຫຼາຍ ສາມາດສ້າງມູນຄ່າເພີ່ມ ແລະ ມີຄວາມອາດສາມາດໃນການແຂ່ງຂັນ; ພັດທະນາຊັບພະຍາກອນມະນຸດທາງດ້ານດີຈີຕອນ ໃຫ້ມີຄຸນະພາບສູງ, ສ້າງສະພາບແວດລ້ອມທີ່ດີໃຫ້ແກ່ການພັດທະນາ ແລະ ສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ ທີ່ປະຢັດພະລັງງານ, ປະຢັດວັດຖຸດິບ ແລະ ເປັນມິດກັບສິ່ງແວດລ້ອມ ເພື່ອຂັບເຄື່ອນການພັດທະນາ ເສດຖະກິດ-ສັງຄົມ ເຂົ້າສູ່ຍຸກອຸດສາຫະກຳ 4.0, ຫັນເປັນລັດຖະບານດີຈີຕອນ ແລະ ສ້າງເສດຖະກິດ-ສັງຄົມດີຈີຕອນ". ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ກຳນົດຄຳຂວັນ: "ນຳໃຊ້ເຕັກໂນໂລຊີດີຈີຕອນໃຫ້ກາຍເປັນກຳລັງແຮງຂັບເຄື່ອນການພັດທະນາປະເທດຊາດ ຫັນເປັນລັດຖະບານດີຈີຕອນ, ສ້າງເສດຖະກິດດີຈີຕອນ ແລະ ສັງຄົມດີຈີຕອນ ໃຫ້ມີການຂະ ຫຍາຍຕົວຢ່າງເຂັ້ມແຂງ, ໝັ້ນທ່ຽງ ແລະ ຍືນຍົງ"** 5 ປີ ຜ່ານມາ ຊຶ່ງມີ 9 ເປົ້າໝາຍໃຫຍ່, 41 ຄາດໝາຍ/ຕົວຊີ້ວັດ ເພື່ອບັນລຸເປົ້າໝາຍ ແລະ ຄາດໝາຍ ຈຶ່ງໄດ້ກຳນົດ 4 ວຽກສຳຄັນທີ່ເປັນບູລິມະສິດ ຄື: (1) ສ້າງລັດຖະບານດີຈີ ຕອນ; (2) ພັດທະນາລະບົບການຊຳລະສະສາງ ດີຈີຕອນ; (3) ຊຸກຍູ້ສົ່ງເສີມສະຕາດອັບ (Startup) ຫຼື ທຸລະກິດທີ່ນຳໃຊ້ນະວັດຕະກຳໃໝ່ ແລະ ພັດທະນາລະບົບນິເວດ ດີຈີຕອນ (Eco System); ແລະ (4) ພັດທະນາບຸກຄະລາກອນດີຈີຕອນ. ນອກຈາກນັ້ນ, ຍັງໄດ້ກຳນົດ 9 ແຜນວຽກຈຸດສຸມຄື: ການພັດທະນາບຸກຄະລາກອນ; ສ້າງ ແລະ ປັບປຸງນິຕິກຳ ຮອງຮັບການຫັນເປັນດີຈີ ຕອນ; ພັດທະນາລະບົບບໍລິຫານລັດໃຫ້ເປັນທັນສະໄໝ; ພັດທະນາໂຄງລ່າງພື້ນຖານ ໂທລະຄົມມະນາຄົມ,ໄອຊີທີ ແລະ ດີຈີຕອນ; ຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ; ພັດທະນາລະບົບຄວາມປອດໄພດ້ານໄຊເບີ; ພັດທະນາ ແລະ ນຳໃຊ້ນະວັດຕະກຳ ໄອຊີທີ; ພັດທະນາໄປສະນີ ຫັນເປັນທັນສະໄໝ; ການຮ່ວມມື ແລະ ການເຊື່ອມໂຍງຕ່າງປະເທດ. ໃນນັ້ນ, ໄດ້ກຳນົດ 56 ແຜນງານ ແລະ 151 ໂຄງການເພື່ອຈັດຕັ້ງປະຕິບັດ. ຜ່ານການຈັດຕັ້ງປະຕິບັດບັນດາຄາດໝາຍ, ແຜນງານ ແລະ ໂຄງການຈຸດສຸມ ໃນໄລຍະຜ່ານມາ ສາມາດຈັດຕັ້ງປະຕິບັດ 41 ແຜນງານ ທຽບໃສ່ແຜນການເທົ່າກັບ 73.21% (ແຜນງານ 56 ແຜນງານ) ແລະ ໄດ້ຮັບການຈັດຕັ້ງປະຕິບັດ 36 ໂຄງການ ທຽບໃສ່ແຜນການເທົ່າກັບ 26% (ແຜນການ 140 ໂຄງການ) ສະເພາະທຶນພາຍໃນ ໂຄງການລົງທຶນຂອງລັດ ເຮັດໃຫ້ວຽກງານຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຍືນຢູ່ໃນອັນດັບແຖວໜ້າໃນການປະກອບສ່ວນສ້າງລາຍຮັບເຂົ້າງົບປະມານແຫ່ງຊາດຕະຫຼອດມາ.

## II. ຜົນສຳເລັດການຈັດຕັ້ງປະຕິບັດຄາດໝາຍ ຂອງແຜນພັດທະນາເສດຖະກິດ - ສັງຄົມ 5 ປີຄັ້ງທີ IX (2021-2025) ຂອງລັດຖະບານ ໃນຂະແໜງການເຕັກໂນໂລຊີ ແລະ ການສື່ສານ

### 2.1 ທົບທວນຄືນຄາດໝາຍ ຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ IX (2021-2025) ຂອງລັດຖະບານ.

1) ຊຸກຍູ້ສົ່ງເສີມໃຫ້ທຸກຂະແໜງການທັງພາກລັດ ແລະ ເອກະຊົນ ນຳໃຊ້ສູນຂໍ້ມູນດີຈີຕອນ ໃຫ້ໄດ້ 80%;
2) ສ້າງເຂດພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ລະດັບສູງ 01 ແຫ່ງ;
3) ສ້າງສູນຂໍ້ມູນຂ່າວສານ (ICT) ທັນສະໄໝ ຢູ່ທ້ອງຖິ່ນ 03 ແຫ່ງ;
4) ຂະຫຍາຍ ແລະ ນຳໃຊ້ຕາໜ່າງອິນເຕີເນັດຄວາມໄວສູງແບບບໍ່ມີສາຍໃຫ້ໄດ້ 148 ເມືອງ;
5) ຂະຫຍາຍນຳໃຊ້ລະບົບກອງປະຊຸມທາງໄກ ແລະ ລະບົບອີເມວຂອງພາກລັດ 68 ພາກສ່ວນ ສູນກາງ ແລະ ທ້ອງຖິ່ນ;
6) ຂະຫຍາຍສະຖານີໂທລະສັບມືຖື ລະບົບ 3G ຄວບຄຸມ 100%, 4G 90% ແລະ 5G ໃຫ້ໄດ້ 18 ແຂວງ;
7) ສ້າງໃຫ້ມີສູນສຳຮອງສູນອິນເຕີເນັດແຫ່ງຊາດໃຫ້ໄດ້ 2 ແຫ່ງ;

8) ນຳໃຊ້ຄອມພິວເຕີ 70%, ອິນເຕີເນັດ  60%, ໂທລະສັບ 100% ແລະ ອິນເຕີເນັດຄວາມໄວສູງ 70% ຂອງ ປະຊາກອນທັງໝົດ;
9) ສົ່ງເສີມພາກລັດ ແລະ ພາກເອກະຊົນ ຫັນມານຳໃຊ້ດາວທຽມ ໃຫ້ໄດ 18 ພາກສ່ວນ;
10) ຂະຫຍາຍນຳໃຊ້ ລະບົບຫ້ອງການທັນສະໄໝ (e-Office) ໃຫ້ໄດ້ 45 ຫ້ອງການ ສູນກາງ ແລະ ທ້ອງຖິ່ນ;
11) ຫັນເປັນທັນສະໄໝໃນການຊຳລະສະສາງ ແລະ ການເກັບລາຍຮັບເຂົ້າງົບປະມານດ້ວຍລະບົບຕ່າງໆ;
12) ສູ້ຊົນການບໍລິຫານລັດເປັນທັນສະໄໝ ແລະ ປັບປຸງການບໍລິຫານລັດ e-Government;
13) ສ້າງເສດຖະກິດພິເສດດ້ານດິຈິຕອນ 01 ແຫ່ງ ເພື່ອດຶງດູດການລົງທຶນຈາກຕ່າງປະເທດ.

## 2.2 ຜົນສຳເລັດ ຂອງຄາດໝາຍ ແລະ ຕົວຊີ້ບອກ ຂອງແຜນພັດທະນາ ເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ III (2021-2025).

ໃນໄລຍະຜ່ານມາ, ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ໄດ້ສຸມໃສ່ ຈັດຕັ້ງປະຕິບັດບັນດາວຽກຈຸດສຸມ, ແຜນງານທີ່ເປັນບຸລິມະສິດ ເຮັດໃຫ້ສາມາດບັນລຸຄາດໝາຍ/ຕົວຊີ້ບອກ ເຊິ່ງສະແດງອອກດັ່ງລຸ່ມນີ້:

1). ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໄດ້ຖືເອົາການສຶກສາອົບຮົມການເມືອງ-ແນວຄິດ ເປັນຕົ້ນຕໍ ໂດຍໄດ້ສຳເລັດຈັດຕັ້ງຄົ້ນຄວ້າຮ່ຳຮຽນ, ເຜີຍແຜ່, ເຊື່ອມຊຶມແນວທາງ, ມະຕິ, ຄຳສັ່ງ, ກົດລະບຽບຂອງພັກ, ກົດໝາຍຂອງລັດ, ປາຖະກະຖາມູນເຊື້ອວັນປະສາດສຳຄັນຂອງພັກ, ຂອງຊາດ ແລະ ເອກະສານສຳຄັນຕ່າງໆຂອງພັກ-ລັດ;
2). ສຳເລັດການຄົ້ນຄວ້າ, ສັບຊ້ອນ, ຍົກຍ້າຍພະນັກງານ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຈຳນວນ 46 ທ່ານ, ຍິງ 15 ທ່ານ, ແຕ່ງຕັ້ງພະນັກງານໃນຕຳແໜ່ງບໍລິຫານໄດ້ທັງໝົດ 141 ທ່ານ, ຍິງ 52 ທ່ານ ແລະ ສຳເລັດນຳສົ່ງພະນັກງານ ລົງກໍ່ສ້າງຮາກຖານ ຢູ່ທ້ອງຖິ່ນ ຈຳນວນ 7 ທ່ານ, ຍິງ 1 ທ່ານ;
3). ສຳເລັດການເພີ່ມ ວິຊາພື້ນຖານປັນຍາປະດິດ ເຂົ້າໃນ 1 ຫຼັກສູດ ປະລິນຍາຕີ ສາຂາວິສະວະກຳເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ.
4). ປັບປຸງສະຖາບັນ ຕາມກົດໝາຍວ່າດ້ວຍສຶກສາຊັ້ນສູງ ເພື່ອຍົກລະດັບເປັນມະຫາວິທະຍາໄລ, ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ສາມາດສ້າງບຸກຄະລາກອນ ດ້ານໂທລະຄົມມະນາຄົມ/ໄອຊີທີ ອອກຮັບໃຊ້ສັງຄົມ ໄດ້ທັງໝົດ 837 ຄົນ ເທົ່າກັບ 66,96% ຂອງແຜນການ (ແຜນການ ປີ 1,250 ຄົນ);
5). ລັດຖະບານໄດ້ອອກດຳລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ວິໄສທັດການພັດທະນາເສດຖະກິດດິຈິຕອນ ໄລຍະ 20 ປີ (2021-2040), ຍຸດທະສາດການພັດທະນາເສດຖະກິດ ດິຈິຕອນ ໄລຍະ 10 ປີ (2021-2030) ແຜນພັດທະນາເສດຖະກິດດິຈິຕອນ ໄລຍະ 5 ປີ (2021-2025) ສະບັບເລກທີ 367/ນຍ, ລົງວັນທີ 12 ທັນວາ 2022; ແລະ ສຳເລັດສ້າງບັນດານິຕິກຳ ເພື່ອຮອງຮັບການກ້າວເຂົ້າສູ່ເສດຖະກິດດິຈິຕອນ;
6). ຊຸກຍູ້ສົ່ງເສີມໃຫ້ຫຼາຍຂະແໜງການ ທັງພາກລັດ ແລະ ເອກະຊົນ ມານຳໃຊ້ສູນດິຈິຕອນໄດ້ 78 ພາກສ່ວນ, ມາຮອດປັດຈຸບັນ ສູນດັ່ງກ່າວໄດ້ຖືກນຳໃຊ້ໄປຫຼາຍກ່ວາ 40%;
7). ສຳເລັດການພັດທະນາແອັບພລິເຄຊັນ ແບບລວມສູນດິຈິຕອນ ເປັນຕົ້ນແມ່ນ M-Money ແລະ U-Money ເປັນລະບົບຊຳລະເງິນຜ່ານລະບົບມືຖື ແລະ ອິນເຕີເນັດ ສາມາດເປີດບໍລິການນຳໃຊ້ໃຫ້ແກ່ສັງຄົມແລ້ວ;
8). ສຳເລັດສ້າງ ແລະ ຂະຫຍາຍລະບົບເຄືອຂ່າຍພາຍໃນພາກລັດ ເຊື່ອມໂຍງບັນດາອົງການຈັດຕັ້ງລັດ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ 36 ຫ້ອງການ ເທົ່າກັບ 53% ຂອງແຜນການ (ແຜນການ 5 ປີ 68 ຫ້ອງການ). ໃນນີ້, ສູນກາງ 19 ຫ້ອງການ ແລະ ທ້ອງຖິ່ນ 17 ຫ້ອງການ ແລະ ສາມາດເຊື່ອມໂຍງເຂົ້າຫາລະບົບລັດຖະບານດິຈິ ຕອນເປັນຕົ້ນລະບົບກອງປະຊຸມທາງໄກ, ລະບົບສູນຂໍ້ມູນພາກລັດ ແລະ ລະບົບຫ້ອງການທັນສະໄໝ ໄດ້ຢ່າງສະດວກ, ວ່ອງໄວ ແລະ ປອດໄພ;
9). ໄດ້ຄົ້ນຄວ້າແຜນພັດທະນາລະບົບເຊື່ອມໂຍງຂໍ້ມູນພາກລັດ (Government Data Exchange) ເພື່ອແລກປ່ຽນ ແລະ ລວມສູນຂໍ້ມູນພາກລັດ, ລະບົບຂໍ້ມູນເປີດພາກລັດ (Open Government Data) ເພື່ອໃຫ້ທຸກພາກສ່ວນ

ສາມາດນຳໃຊ້ເພື່ອພັດທະນາບໍລິການໃຫ້ປະຊາຊົນ, ລວມທັງລະບົບ Dashboard ເພື່ອເປັນມາດຕະຖານໃນການບໍລິຫານຂໍ້ມູນສະຖິຕິພາກລັດ ໃຫ້ເປັນເອກະພາບ;

10). ສຳເລັດການຂະຫຍາຍການນຳໃຊ້ລະບົບກອງປະຊຸມທາງໄກ (Video Conference) ໃຫ້ແກ່ຫ້ອງການລັດຢູ່ສູນກາງ ແລະ ທ້ອງຖິ່ນ ຈຳນວນ 97 ພາກສ່ວນ ທຽບໃສ່ແຜນການ ແມ່ນລື່ນແຜນ 142.6% (ແຜນການ 5 ປີ 68 ຫ້ອງການ), ສ້າງບັນຊີຜູ້ນຳໃຊ້ທັງໝົດ 20,893 ບັນຊີ ເທົ່າກັບ 13.9% ຂອງແຜນການ (ແຜນການ 5 ປີ 150,000 ບັນຊີ);

11). ສຳເລັດການຕິດຕັ້ງ, ຂະຫຍາຍລະບົບອີເມລ (e-mail), ແລະ ຂະຫຍາຍການນຳໃຊ້ລະບົບອີເມວ ໃຫ້ບັນດາຫ້ອງການລັດທັງສູນກາງ ແລະ ທ້ອງຖິ່ນ ທັງໝົດ ຈຳນວນ 44 ພາກສ່ວນ ເທົ່າກັບ 64.70% ຂອງແຜນການ (ແຜນການ 5 ປີ 68 ພາກສ່ວນ), ມີ 58 ໂດເມນ ແລະ ມີບັນຊີຜູ້ຊົມໃຊ້ທັງໝົດ ຈຳນວນ 5,589 ບັນຊີລາຍຊື່ ເທົ່າກັບ 37.26% ຂອງ ແຜນການ (ແຜນການ 5 ປີ 15,000 ລາຍຊື່);

12). ສຳເລັດການພັດທະນາ, ປັບປຸງ ແລະ ຂະຫຍາຍການນຳໃຊ້ບັນດາລະບົບຫ້ອງການທັນສະໄໝ (e-Office) ໃຫ້ແກ່ 44 ຫ້ອງການ (ຢູ່ສູນກາງ 27 ພາກສ່ວນ ແລະ ຢູ່ທ້ອງຖິ່ນ ໄດ້ຕິດຕັ້ງທົດລອງນຳໃຊ້ ຈຳນວນ 17 ຫ້ອງວ່າການແຂວງ/ນະຄອນຫຼວງ), ລວມທັງໝົດ 13,258 ບັນຊີ; (ສູນກາງ 9,820 ລາຍຊື່ ແລະ ທ້ອງຖິ່ນ 3,438 ລາຍຊື່);

13). ສຳເລັດການພັດທະນາ ແລະ ຂະຫຍາຍບັນຊີລາຍຊື່ລະບົບສື່ສານພາກລັດ (G-Chat) ຮອງຮັບໄດ້ທັງໝົດ 15,000 ບັນຊີ ເທົ່າກັບ 30% ຂອງແຜນການ (ແຜນການ 5 ປີ 50,000 ບັນຊີ), ຂະຫຍາຍການນຳໃຊ້ທັງໝົດ ຈຳນວນ 24,231 ລາຍຊື່ (ສູນກາງ 10,563 ບັນຊີ ແລະ ທ້ອງຖິ່ນ 13,668 ບັນຊີ);

14). ພັດທະນາ ແລະ ຂະຫຍາຍການນຳລະບົບເວັບໄຊຂອງພາກລັດ (G-Web Platform) ປະຕິບັດໄດ້ 57 ພາກສ່ວນ ເທົ່າກັບ 126.66% ຂອງແຜນການ (ແຜນການ 5 ປີ ມີ 45 ພາກສ່ວນ). ໃນນີ້, ຂັ້ນສູນກາງ 26 ພາກສ່ວນ ແລະ ທ້ອງຖິ່ນ 31 ພາກສ່ວນ;

15). ສຳເລັດການຕິດຕັ້ງ, ພັດທະນາ ແລະ ເປີດນຳໃຊ້ລະບົບຈັດເກັບ ແລະ ນຳໃຊ້ເອກະສານຮ່ວມກັນຂອງພາກລັດ G-Share/G-Drive ຢ່າງເປັນທາງການ ແລະ ຂະຫຍາຍການນຳໃຊ້ ໃຫ້ບັນດາກະຊວງ ແລະ ອົງການຈັດຕັ້ງທຽບເທົ່າທັງສູນກາງ ແລະ ທ້ອງຖິ່ນ ຈຳນວນທັງໝົດ 15,261 ບັນຊີ (ຂັ້ນສູງກາງ: 6,959 ບັນຊີ, ຂັ້ນທ້ອງຖິ່ນ: 8,302 ບັນຊີ) ປັດຈຸບັນສາມາດຮອງຮັບໄດ້ 16,000 ບັນຊີ ເທົ່າກັບ 30.52% ຂອງແຜນການ (ແຜນການ 5 ປີ ຮອງຮັບ 50,000 ບັນຊີ);

16). ສ້າງລະບົບແລກປ່ຽນ ແລະ ຢັ້ງຢືນຂໍ້ມູນພາກລັດ (Information Sharing System, Lao KYC) ປະຈຸບັນມີຜູ້ນຳໃຊ້ລະບົບທັງໝົດ 3,386,686 ບັນຊີ; ສົ່ງເສີມ ແລະ ຮ່ວມມືກັບພາກທຸລະກິດໃນການພັດທະນາລະບົບບໍລິການສັງຄົມຕ່າງໆ ໃຫ້ມີຄຸນນະພາບ, ມີຄວາມຍຸຕິທຳ ແລະ ປອດໄພ ເຊັ່ນ: ສຳເລັດການພັດທະນາຕໍ່ຍອດແອັບ LaoKYC ເປັນ Super App (Gov-X), ປັດຈຸບັນໄດ້ເຊື່ອມຕໍ່ລະບົບປະກັນສັງຄົມ, ລະບົບຖານຂໍ້ມູນວິສາຫະກິດແຫ່ງຊາດ, ລະບົບໃບຂັບຂີ່ ແລະ ລະບົບຄັງປັນຍາລາວ;

17). ສຳເລັດສ້າງສູນບໍລິການຂໍ້ມູນຂ່າວສານແບບເອເລັກໂຕຣນິກຢູ່ທ້ອງຖິ່ນ ຈຳນວນ 1 ແຫ່ງ ຢູ່ແຂວງສະຫວັນນະເຂດ ເທົ່າກັບ 33.33% ຂອງແຜນການ (ແຜນການ 5 ປີ 3 ພາກ);

18). ສຳເລັດການຂະຫຍາຍພື້ນທີ່ເກັບຂໍ້ມູນ ຂອງລະບົບຄລາວ ຈາກ 495TB ເພີ່ມຂຶ້ນອີກ ຈຳນວນ 595TB ລວມທັງໝົດ ຈຳນວນ 1,090TB ເຮັດໃຫ້ມີພື້ນທີ່ເກັບຂໍ້ມູນຂ່າວສານເພີ່ມຂຶ້ນ 120% (ຕາມແຜນການ 5 ປີ 30%) ເພື່ອຮັບຮອງການຕິດຕັ້ງພັດທະນາລະບົບບໍລິຫານລັດດ້ວຍດີຈີຕອນ ແລະ ລະບົບຊອບແວຕ່າງໆ ໃນການຫັນເປັນທັນສະໄໝ ແລະ ສຳເລັດຂະຫຍາຍລະບົບບໍລິການຮັບຝາກເວັບໄຊ ສາມາດຮອງຮັບບໍລິການເພີ່ມຂຶ້ນ 200 ເວັບໄຊ;

19). ສຳເລັດການເຊັນສັນຍາ ແລະ ເຊື່ອມຕໍ່ເຕັກນິກ ລວມສູນການສື່ສານສັນຍານອິນເຕີເນັດ ບໍລິສັດ ລາວໂທລະຄົມມະນາຄົມ, ບໍລິສັດ ອີທີແອລ ຈຳກັດ, ບໍລິສັດ ສະຕາ ໂທລະຄົມ, ບໍລິສັດ ເບສ ເທເລຄອມ ຈຳກັດ, ບໍລິສັດ

ພລາເນັດ ຈຳກັດ, ບໍລິສັດດາວທຽມລາວ ເອເຊຍ-ປາຊີຟິກ, ບໍລິສັດ ມັງກອນ ເຕັກໂນໂລຊີ, ບໍລິສັດ ຈະເລີນຊັບ, ບໍລິສັດ ເອັສແອວທີ ແລະ ບໍລິສັດ GDMS ຢູ່ນະຄອນຫຼວງວຽງຈັນ;

20). ສຳເລັດການເຊັນສັນຍາ ແລະ ເຊື່ອມຕໍ່ເຕັກນິກລວມສູນໂທລະຄົມມະນາຄົມ (ໂທລະສັບ-ຂໍ້ຄວາມສັ້ນ ພາຍໃນປະເທດ ແລະ ຂາເຂົ້າ ຈາກຕ່າງປະເທດ) ຄື: ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ,ບໍລິສັດ ທີພລັດ, ບໍລິສັດ ອີທີແອລ ຈຳກັດ, ບໍລິສັດ ສະຕາ ໂທລະຄົມ, ບໍລິສັດ ເບສ ເທເລຄອມ ຈຳກັດ;

21). ສຳເລັດ ການສົ່ງເສີມຂະຫຍາຍ ການບໍລິການ ແລະ ການນຳໃຊ້ລະຫັດຊື່ອິນເຕີເນັດ .La ແລະ .ລາວ ທັງພາຍໃນ ແລະ ຕ່າງປະເທດ ຈາກ 45,000 ລະຫັດຊື່ ໃນປີ 2021 ແລະ ເພີ່ມຂຶ້ນ ມາເປັນ 52,000 ລະຫັດຊື່. ສຳເລັດການທົດລອງສ້າງຊື່ E-mail ເປັນພາສາລາວ. ສຳເລັດການເປັນເຈົ້າພາບຈັດ ກອງປະຊຸມປະຈຳປີ ອົງການ APTLD ຄັ້ງທີ 83 ທີ່ ນະຄອນຫຼວງວຽງຈັນ, ໄດ້ເຮັດການສົ່ງເສີມການນຳໃຊ້ລະຫັດຊື່ອິນເຕີເນັດ ຂອງລາວໃນຫຼາຍຮູບແບບ. ສຳເລັດການສ້າງລະຫັດຊື່ອິນເຕີເນັດ ແລະ ປະສານງານໃນການສຳຮອງເວັບໄຊກອງປະຊຸມສຸດຍອດອາຊຽນ ໃນປີ 2024;

22). ສຳລັດການສ້າງລະບົບອອກໃບຮັບຮອງລາຍເຊັນເອເລັກໂຕຣນິກ ແຫ່ງຊາດ (National Root Certificate Authority: NRCA) ເພື່ອເປັນສູນກາງຄຸ້ມຄອງການອອກໃບຮັບຮອງທັງໝົດຂອງ ສປປ ລາວ, ສຳເລັດການສ້າງລະບົບອອກໃບຮັບຮອງລາຍເຊັນເອເລັກໂຕຣນິກພາກລັດ Government Certification Authority (GovCA) ແລະ ລະບົບອອກໃບ ຮັບຮອງລາຍເຊັນເອເລັກໂຕຣນິກທົ່ວໄປ Lao Certification Authority (LCA) ເພື່ອກະກຽມໃຫ້ບໍລິການທັງພາກລັດ ແລະ ພາກທົ່ວໄປ. ພ້ອມທັງສຳເລັດການນຳໃຊ້ລາຍເຊັນເອເລັກໂຕຣນິກເຂົ້າໃນລະບົບຫ້ອງການທັນສະໄໝ (E-Office) ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ. ປັດຈຸບັນໄດ້ອອກໃບຮັບຮອງລາຍເຊັນເອເລັກໂຕຣນິກຫລາຍກ່ວາ 500 ລາຍເຊັນ, ໄດ້ເຊັນສັນຍາຮ່ວມມື ກັບກະຊວງການເງິນ ໃນການພັດທະນານຳໃຊ້ລາຍເຊັນເອເລັກໂຕຣນິກ (CA) ເຂົ້າໃນລະບົບຄຸ້ມຄອງ ລາຍຮັບ-ລາຍຈ່າຍ ຂອງກະຊວງ ການເງິນ; ປັດຈຸບັນແມ່ນສຳເລັດການເຊື່ອມຕໍ່ລະບົບຫ້ອງການທັນສະໄໝ (e-office) ແລະ ລະບົບຄຸ້ມຄອງການເງິນພາກລັດ (LIFMIS) ຂອງກະຊວງ ການເງິນ;

23). ໄດ້ຈັດສັນຄື້ນຄວາມຖີ່ ໃຫ້ບັນດາບໍລິສັດ ຜູ້ໃຫ້ບໍລິການທາງດ້ານໂທລະຄົມມະນາຄົມ ທົດລອງນຳໃຊ້ ໃນລະບົບ 5G;

24). ໄດ້ສຳເລັດເຊັນ MOU ກັບ Unitel ເພື່ອປັບປຸງອັກສອນພາສາລາວ ທີ່ນຳໃຊ້ໃນລາວຮອງຮັບພາສາລາວ ແລະ ບັນຈຸເອົາແບບອັກສອນພາສາລາວທາງການເພັດຊະລາດເຂົ້າໃນລະບົບ ແລະ ເຄື່ອງອຸປະກອນເລັກໂຕຣນິກ ຂອງບໍລິສັດຜູ້ຜະລິດ ເພື່ອໃຫ້ມີການນຳໃຊ້ທີ່ສະດວກສະບາຍ ແລະ ສົມບູນແບບເພື່ອເຮັດໃຫ້ເຄື່ອງອຸປະ ກອນ ແລະ ລະບົບໄອຊີທີ ຮອງຮັບພາສາລາວ;

25). ສ້າງ ແລະ ປັບປຸງນະໂຍບາຍ, ນິຕິກຳ ໃນຂົງເຂດເຕັກໂນໂລຊີ ແລະ ການສື່ສານ ເພື່ອຮອງຮັບການຫັນເປັນດິຈິຕອນ, ເສດຖະກິດດິຈິຕອນ ໄດ້ທັງໝົດ 28 ສະບັບ ທຽບໃສ່ແຜນການເທົ່າກັບ 56% (ແຜນການ 50 ສະ ບັບ). ໃນນີ້, ສຳເລັດສ້າງ ແລະ ປັບປຸງກົດໝາຍ 3 ສະບັບ, ກຳລັງດຳເນີນການ 3 ສະບັບ ແລະ ຍຸດທະສາດ 1 ສະ ບັບ, ສຳເລັດ ດຳລັດ 2 ສະບັບ, ກຳລັງດຳເນີນການ 4 ສະບັບ, ສຳເລັດຂໍ້ຕົກລົງ 14 ສະບັບ ແລະ ຄຳແນະນຳ 1 ສະບັບ;

26). ສຳເລັດ ສ້າງສະຖານີກວດກາຄື້ນຄວາມຖີ່ວິທະຍຸສື່ສານແບບບໍ່ມີຄົນປະຈຳ (Remote Monitoring Station) 3 ສະຖານີ ທີ່ນະຄອນຫຼວງວຽງຈັນ ເທົ່າກັບ 60% ຂອງແຜນການ (ແຜນການ 5 ປີ 5 ສະຖານີ) ເມືອງຈັນທະບູລີ ຕັ້ງຢູ່ສູນອິນເຕີເນັດແຫ່ງຊາດ, ເມືອງສີສັດຕະນາກ ຕັ້ງຢູ່ສະຖາບັນເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ ແລະ ເມືອງສີໂຄດຕະບອງ ຕັ້ງຢູ່ສະໜາມບິນສາກົນ ວັດໄຕ;

27). ສຳເລັດອະນຸຍາດນຳໃຊ້ເລກໝາຍໂທລະຄົມ ທັງໝົດ 23,450,000 ເລກໝາຍ. ໃນນີ້, ອອກໃໝ່ 900,000 ເລກໝາຍ ມີການນຳໃຊ້ຕົວຈິງ 7,096,521 ເລກໝາຍ ແລະ ເລກໝາຍພິເສດ (3 ແລະ 4 ຕົວເລກ) 192 ເລກໝາຍ, ອອກໃໝ່ 26 ເລກໝາຍ, ຮອດເດືອນ ມິຖຸນາ 2025 ຈຳນວນເລກໝາຍໂທລະສັບຕັ້ງໂຕະ ແລະ ມືຖື ທີ່ໄດ້ຂຶ້ນທະບຽນນຳໃຊ້ໃນລະບົບຮອດເດືອນ ມິຖຸນາ 2025 ມີທັງໝົດ 7,516,005 ເລກໝາຍ;

28). ໂຄງລ່າງພື້ນຖານ ໂທລະຄົມມະນາຄົມໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຂະຫຍາຍສະຖານີຮັບສົ່ງສັນຍານ ໂທລະສັບມືຖືໄດ້ 555 ສະຖານີ ປັດຈຸບັນມີທັງໝົດ 8,904 ສະຖານີ, ຄອບຄຸມໄດ້ 18 ແຂວງ, 148 ເມືອງ ແລະ 8,245 ບ້ານ, ເຮັດໃຫ້ທົ່ວປະເທດ ມີສັນຍານມືຖື ແຍກຕາມລະບົບ 2G ຄອມຄຸມ 97%, 3G ຄອມຄຸມ 86% ແລະ 4G ຄອບຄຸມໄດ້ 78% ແລະ 5G ໃຫ້ບໍລິການໃນຕົວເມືອງໃຫຍ່ຂອງແຕ່ລະແຂວງ ສາມາດ ຄອບຄຸມໄດ້ 4% ຂອງຈໍານວນບ້ານທັງໝົດ ເພື່ອກຽມຄວາມພ້ອມແກ່ການຫັນປ່ຽນສູ່ເສດຖະກິດດິຈິຕອນ ແລະ ອຸດສາຫະກໍາ 4.0 ຕາມທິດກ້າວໃຫ້ທັນ ແລະ ໝູນໃຊ້ໃຫ້ເໝາະສົມກັບລະດັບການເຕີບໂຕຂອງ ອຸດສາຫະກໍາການຜະລິດ ແລະ ການບໍລິການຂອງປະເທດ;

29). ຂະຫຍາຍເຄືອຂ່າຍ ສາຍສົ່ງໂທລະຄົມມະນາຄົມ ສາຍໃຍແກ້ວ (Optic Fiber) ເຂົ້າເຖິງບັນດາແຂວງ, ເທດສະບານເມືອງ ໄດ້ 4,253 ກິໂລແມັດ, ທຽບໃສ່ແຜນການ ເທົ່າກັບ 43%, ປັດຈຸບັນມີທັງໝົດ 97,153 ກິໂລແມັດ, ປັດຈຸບັນ ສປປ ລາວ ມີຈຸດເຊື່ອມຕໍ່ສາຍສົ່ງ ໂທລະຄົມ ແລະ ອິນເຕີເນັດ ຈໍານວນ 18 ຈຸດ ເພື່ອຫັນ ປະເທດລາວໃຫ້ກາຍເປັນປະເທດທາງຜ່ານດ້ານໂທລະຄົມມະນາຄົມ;

30). ສໍາເລັດການສ້າງຕັ້ງກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ;

31). ສໍາເລັດການສົ່ງເສີມພາກລັດ ແລະ ເອກະຊົນຫັນມານໍາໃຊ້ດາວທຽມລາວ ເຂົ້າໃນວຽກງານຂອງຕົນ ໄດ້ທັງໝົດ 16 ພາກສ່ວນ ທຽບໃສ່ແຜນການ 5 ປີ ເທົ່າກັບ 80% (ແຜນການ 18 ພາກສ່ວນ), ສໍາເລັດຕິດຕັ້ງສະ ຖານີລະ ບົບສື່ສານ VSAT ຮັບໃຊ້ວຽກງານພາກລັດໄດ້ທັງໝົດ 204 ສະຖານີ ໃນທົ່ວປະເທດ, ຊຶ່ງປະກອບມີ (ວິທະຍຸ ກະຈາຍສຽງແຫ່ງຊາດ 93 ສະຖານີ, ວິທະຍຸກອງທັບ 80 ສະຖານີ ແລະ ວິທະຍຸ ປກສ 9 ສະຖານີ, ສະຖານີ ໂທລະພາບສູນກາງ ແລະ ທ້ອງ ຖິ່ນ 11 ສະຖານີ; ເຂື່ອນໄຟຟ້ານໍ້າອູ 7 ສະຖານີ, ກອງຄຸ້ມຄອງຈາລະຈອນ ອາກາດລາວ 4 ສະຖານີ);

32). ຕາໜ່າງໄປສະນີຂະຫຍາຍຕົວໃນທຸກແຂວງ ແຕ່ຕົວເມືອງຫາຊົນນະບົດຫຼາຍຂຶ້ນ ຊຶ່ງກວມເອົາ 100% ຂອງ 148 ຕົວເມືອງໃນທົ່ວປະເທດ, ປະຈຸບັນມີປ່ອງບໍລິການ 1,172 ປ່ອງໃນທົ່ວປະເທດ ເພີ່ມຂຶ້ນ 732.5% ແລະ ເຊື່ອມໂຍ່ງກັບ 192 ປະເທດທົ່ວໂລກ, ນໍາໃຊ້ລະຫັດໄປສະນີ 5 ໂຕເລກ ເຂົ້າໃນການຄັດແຍກເຮັດໃຫ້ການ ແຈກຢາຍມີຄວາມວ່ອງໄວຂຶ້ນ, ຫົວໜ່ວຍບໍລິການເພີ່ມຂຶ້ນເປັນ 63 ບໍລິສັດ ເທົ່າກັບ 196.8% ໃນນີ້ມີ 1 ບໍລິສັດທີ່ເປັນຫຸ້ນສ່ວນລະຫວ່າງລັດ ແລະ ເອກະຊົນ, ມີ 4 ບໍລິສັດທີ່ໃຫ້ບໍລິການລະຫວ່າງປະເທດ, ພາຍໃນ ແລະ ລະຫວ່າງປະເທດ 7 ບໍລິສັດ ແລະໃຫ້ບໍລິການສະເພາະພາຍໃນແຂວງໃດໜຶ່ງ 52 ບໍລິສັດ, ພາກລັດໄດ້ສໍາ ເລັດການສ້າງລະບົບສູນລວມຕິດຕາມກວດກາເຄື່ອງຝາກ ເພື່ອສະໜອງໃຫ້ແກ່ຜູ້ປະກອບການ ແລະ ສັງຄົມ, ຜູ້ ໃຫ້ບໍລິການໄປສະນີ ໄດ້ມີການນໍາໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການບໍລິການຢ່າງກວ້າງ ໂດຍມີການເຊື່ອມ ໂຍງກັບແພລດຟອມການຄ້າ ແລະ ລະບົບຊໍາລະແບບເອເລັກໂຕຼນິກ ຊຶ່ງໄດ້ສ້າງເງື່ອນ ແລະ ຂໍ້ສະດວກໃຫ້ການ ຄ້າເອເລັກໂຕຼນິກພາຍໃນປະເທດຂະຫຍາຍຕົວແບບກ້າວກະໂດດ, ບໍລິມາດການຮັບຝາກທັງພາຍໃນ ແລະ ລະຫວ່າງ ປະເທດເພີ່ມຂຶ້ນເປັນ 7,263 ໂຕນ/ປີ ເທົ່າກັບ 1,095%, ຈັດພິມສະແຕມອອກຮັບໃຊ້ໃນລະບົບການ ບໍລິການ ແລະ ການສະສົມເພີ່ມຂຶ້ນ ເພື່ອໂຄສະນາເຜີຍແຜ່ອັນສໍາຄັນຂອງຊາດ ແລະ ການຮ່ວມມືກັບສາກົນ;

33). ຄຽງຄູ່ກັນນັ້ນ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໄດ້ສໍາເລັດເຊັນບົດບັນທຶກຄວາມເຂົ້າໃຈ ຫຼາຍກ່ວາ 35 ສະບັບ ໃນການກະກຽມຄວາມພ້ອມຫັນໄປສູ່ ລັດຖະບານດິຈິຕອນ, ສັງຄົມດິຈິຕອນ ແລະ ເສດຖະກິດດິຈິ ຕອນ ເປັນຕົ້ນ: ພັດທະນາ ແລະ ໃຫ້ບໍລິການລະບົບບໍລິຫານລວມສູນການເຊື່ອມຕໍ່ ແລະ ການຄຸ້ມຄອງຄວາມ ປອດໄພທາງອິນເຕີເນັດແຫ່ງຊາດ; ການສ້າງສວນອຸທິຍານດິຈິຕອນ; ຝຶກອົບຮົມຊ່ຽວຊານໄອທີ, ພັດທະນາ ແລະ ບໍລິການລະບົບເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ (Blockchain) ຢູ່ ສປປ ລາວ; ພັດທະນາການບໍລິການ ຢັ້ງຢືນທາງເອເລັກໂຕຣນິກ (CA) ຢູ່ ສປປ ລາວ ແລະ ພັດທະນາລະບົບບໍລິການທັນສະໄໝ, ພັດທະນາ ແລະ ປັບປຸງສະຖານີ ແລະ ລະບົບຕິດຕາມ ກວດກາຄື້ນຄວາມຖີ່ວິທະຍຸສື່ສານ ຄົບວົງຈອນ ໃນຂອບເຂດທົ່ວ ປະເທດ.

34). ໃນໄລຍະຜ່ານມາ ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ສ້າງລາຍຮັບ ທັງທາງກົງ ແລະ ທາງອ້ອມໄດ້ທັງໝົດປະມານ 795.39 ຕື້ກວ່າກີບ (795,391,417,355 ກີບ) ທຽບໃສ່ແຜນການ 5 ປີເທົ່າກັບ 115.34% (ແຜນການ 689,608,192,500 ກີບ). ໃນນີ້, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເກັບໄດ້ຄ່າທານຽມ ແລະ ຄ່າບໍລິການ 63.19 ຕື້ກວ່າກີບ (63,191,172,262 ກີບ) ເທົ່າກັບ 102.72% (ແຜນການ 61,515,876,000 ກີບ), ກະຊວງການເງິນ, ກົມຊັບສິນຮັບຊ່ວຍ ປະຕິບັດເກັບໄດ້ຈຳນວນ 732.2 ຕື້ກວ່າກີບ (732,200,245,093 ກີບ), ທຽບໃສ່ແຜນການ 5 ປີເທົ່າກັບ 116.58% (ແຜນການ 628,092,316,500 ກີບ). (ຂໍ້ມູນວັນທີ 03/03/2026) ລາຍຮັບດັ່ງກ່າວບໍ່ໄດ້ລວມໂຄງການທົດລອງຊັບສິນດິຈິຕອນ;

35). ສຳເລັດວຽກງານການຊຸກຍູ້ສົ່ງເສີມການຫັນເປັນດິຈິຕອນ ໃຫ້ແກ່ພາກລັດ ແລະ ສັງຄົມ ໂດຍການສ້າງບົດ ຮຽນວິຊາການ "ຄວາມຮູ້ພື້ນຖານການຫັນເປັນດິຈິຕອນ" ຈຳນວນ 5 ເຫຼັ້ມ ແລະ ໄດ້ມີການລົງເຄື່ອນໄຫວ ຈັດກອງປະຊຸມ ຝຶກອົບຮົມ, ສຳມະນາ ໃນສູນກາງ ແລະ ທ້ອງຖິ່ນ ຫຼາຍກວ່າ 20 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດແມ່ນຫຼາຍກວ່າ 2,500 ຄົນ;

36). ສຳເລັດການຈັດຝຶກອົບຮົມ ການສ້າງຄູຝຶກ (Training of Trainer) ໃນຫົວຂໍ້ "ຄວາມຮູ້ພື້ນຖານການຫັນເປັນດິຈິຕອນ" ເຫຼັ້ມທີ 1, ເຫຼັ້ມ 2 ແລະ ເຫຼັ້ມ 3 ໃຫ້ແກ່ບັນດາກົມ/ທຽບເທົ່າ ແລະ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ໃນຂອບເຂດ ທົ່ວປະເທດ ມີຜູ້ເຂົ້າຮ່ວມທັງໝົດ ຫຼາຍກວ່າ 300 ເທື່ອຄົນ;

37). ສຳເລັດວຽກງານ ການສົ່ງເສີມການນຳໃຊ້ເຕັກໂນໂລຊີໃຫ້ທົ່ວສັງຄົມ ໂດຍການ ຈັດງານ ສັບປະດາດິຈິຕອນລາວ (Lao Digital Week) 3 ຄັ້ງ ຄື: ຄັ້ງທີ 1 ໃນເດືອນທັນວາ 2022, ຄັ້ງທີ 2 ໃນເດືອນມັງກອນ 2024 ແລະ ຄັ້ງທີ 3 ໃນເດືອນເມສາ 2025, ການວາງສະແດງ ແລະ ຊອກຄູ່ຮ່ວມມື ດ້ານເຕັກໂນໂລຊີນະວັດຕະກຳ, ກອງປະຊຸມພົບປະບໍລິສັດເອກະຊົນ, ການລົງເຜີຍແຜ່ວຽກງານການສົ່ງເສີມ ແລະ ໃຫ້ຄວາມຮູ້ຄວາມເຂົ້າໃຈ ການສ້າງແນວຄວາມຄິດ, ການສ້າງໂອກາດການລົງທຶນໃນທຸລະກິດສະຕາດອັບ ຊຶ່ງມີຜູ້ເຂົ້າຮ່ວມຈາກພາກສ່ວນຕ່າງໆຫຼາຍກ່ວາ 300 ພາກສ່ວນ ແລະ ມີຜູ້ເຂົ້າຮ່ວມທັງໝົດປະມານ 11,763 ເທື່ອຄົນ;

## III. ຜົນສຳເລັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ

ອີງໃສ່ແຜນຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ. ໃນນັ້ນ, ໄດ້ກຳນົດແຜນວຽກ ໃຫ້ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນໃຈກາງໃນການຜັນຂະຫຍາຍມາດຕະການໃນວຽກງານພັດທະນາເຕັກໂນໂລຊີ ແລະນະວັດຕະກຳໃໝ່, ໃຫ້ກາຍເປັນເຄື່ອງມືຊຸກຍູ້ການຜະລິດ, ວຽກງານພັດທະນາລະບົບ ICT ແລະ ວຽກການຫັນເປັນເສດຖະກິດດິຈິຕອນ. ນອກຈາກນີ້ ຍັງເປັນຈຸດອຳນວຍຄວາມສະດວກໃນການສະໜອງຂໍ້ມູນເບີໂທລະສັບ, ຂໍ້ມູນຕ່າງໆທີ່ກ່ຽວຂ້ອງກັບເປົ້າໝາຍ, ຜູ້ຖືກຫາຄະດີ ຢາເສບຕິດຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ ແລະ ການກວດກາວັດຖຸພັນປະເພດຕ່າງໆທີ່ຜ່ານລະບົບໄປສະນີ.

### 1. ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ:

**ການເກັບລາຍຮັບເປັນທັນສະໄໝເຂົ້າງົບປະມານ:** ນຳໃຊ້ລາຍເຊັນເອເລັກໂຕຣນິກ (CA) ເຂົ້າໃນລະບົບຈັດເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການແຈ້ງສ່ວຍສາອາກອນ, ການແຈ້ງພາສີ ແລະ ອື່ນໆ ແບບເອເລັກໂຕຣນິກ.

**ໂຄງການທົດລອງທຸລະກຳຊັບສິນດິຈິຕອນ:** ລັດຖະບານ ໄດ້ມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນໂຄງການທົດລອງທຸລະກຳຊັບສິນດິຈິຕອນ ຂອງ ສປປ ລາວ. ລາຍຮັບຈາກໂຄງການທົດລອງດັ່ງກ່າວ ມາຈາກ 3 ແຫຼ່ງ ຄື: 1) ຄ່າລິຂະສິດອອກໃບອະນຸຍາດ (ການຂຸດຄົ້ນ ແລະ ສູນຊື້-ຂາຍ), 2) ອາກອນມອບເໝົາ (ການຂຸດຄົ້ນ ແລະ ສູນຊື້-ຂາຍ) ແລະ 3) ຄ່ານຳໃຊ້ພະລັງງານໄຟຟ້າ. ມາຮອດປະຈຸບັນ ບໍລິສັດທີ່ໄດ້ຮັບອະນຸຍາດຈາກລັດຖະບານ ໃຫ້ເຮັດທົດລອງທຸລະກຳຊັບສິນດິຈິຕອນ ຢູ່ ສປປ ລາວ ມີທັງໝົດ 17

ບໍລິສັດ ຄື: ເຮັດຂຸດຄົ້ນຊັບສິນ ດິຈິຕອນ ຈຳນວນ 15 ບໍລິສັດ (ໃນນີ້, ມີ 7 ບໍລິສັດທີ່ສຳເລັດການກໍ່ສ້າງໂຄງລ່າງພື້ນຖານ ແລະ ໄດ້ເຮັດຂຸດຄົ້ນຕົວຈິງ), ເຮັດສູນຊື້ຂາຍເງິນຄຣິບໂຕ ຈຳນວນ 2 ບໍລິສັດ. (ໃນນີ້, ມີ 1 ບໍລິສັດທີ່ໄດ້ເປີດໃຫ້ບໍລິການ ປັດຈຸບັນ), ມາຮອດປັດຈຸບັນ ລາຍຮັບທີ່ໄດ້ຈາກການເຮັດໂຄງການທົດລອງດັ່ງກ່າວ ມີທັງໝົດ 778,612,163 USD ແລະ 5,882,436,479 ກີບ. ໃນນັ້ນ, ເປັນລາຍຮັບຄ່າລິຂະສິດ ການອະນຸຍາດຂຸດຄົ້ນ ມີ 11 ສັນຍາ ເປັນຈຳນວນເງິນ 7,000,000 USD ແລະ 5,718,000,000 ກີບ ແລະ ການອອກອະນຸຍາດສູນຊື້ຂາຍ ມີ 2 ບໍລິສັດ ເປັນຈຳນວນເງິນ 2,000,000 USD, ລາຍຮັບຈາກອາກອນມອບເໝົາທຸລະກິດຂຸດຄົ້ນ ເປັນຈຳນວນເງິນ 45,491,429.2 USD ແລະ ຈາກສູນຊື້-ຂາຍ ເປັນຈຳນວນເງິນ 164,400,000 ກີບ, ລາຍຮັບຈາກຄ່າຊົມໃຊ້ພະລັງງານໄຟຟ້າ ນັບແຕ່ເລີ່ມໂຄງການ ທ້າຍປີ 2021 ຫາ ປີ 2025 ເປັນຈຳນວນເງິນ 726,120,734 USD.

### 2. ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ

**ການຂຶ້ນທະບຽນຊິມກາດໂທລະສັບ**: ສຳເລັດການພັດທະນາ ແລະ ຕິດຕັ້ງລະບົບຂຶ້ນທະບຽນເລກໝາຍໂທລະສັບ ເຊິ່ງລະບົບດັ່ງກ່າວແມ່ນຈະເກັບກຳເອົາຂໍ້ມູນຂອງຜູ້ນຳໃຊ້ເລກໝາຍໂທລະສັບມືຖື ເກັບຮັກສາໄວ້ໃນຖານຂໍ້ມູນ ເຊິ່ງດ້ານໜຶ່ງເປັນຂໍ້ມູນໃຫ້ວຽກງານ ປກສ-ປກຊ, ຮອດທ້າຍປີ 2025 ຈຳນວນເລກໝາຍໂທລະສັບຕັ້ງໂຕະ ແລະ ມືຖື ທີ່ໄດ້ຂຶ້ນທະບຽນນຳໃຊ້ໃນລະບົບຮອດເດືອນ ມີທັງໝົດ 7,826,319 ເລກໝາຍ, ສຳເລັດການສ້າງແຜນພັດທະນາ ລະບົບຄຸ້ມຄອງໝາຍເລກໂທລະສັບມືຖື, ສຳເລັດການພັດທະນາລະບົບຂຶ້ນທະບຽນເລກໝາຍໂທລະສັບ Version 2.0. ຄຽງຄູ່ກັນນັ້ນ ຍັງໄດ້ສະກັດກັ້ນຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງຜ່ານເວັບໄຊ ແລະ ເຟສບຸກ ໂດຍປະສານ ກັບເຈົ້າໜ້າທີ່ຕຳຫຼວດເພື່ອໃຫ້ຂໍ້ມູນເປັນຫຼັກຖານໃນການດຳເນີນຄະດີ. ນອກຈາກນັ້ນ, ຍັງໄດ້ເອົາໃຈໃສ່ພິເສດໃນວຽກງານຄຸ້ມຄອງທາງສຽງໃນສື່ສັງຄົມອອນລາຍ ເພື່ອຮັບປະກັນໄດ້ຄວາມສະຫງົບສຸກຢູ່ໃນສັງຄົມ ໂດຍສະເພາະແມ່ນບັນດາທາງສຽງທີ່ສ້າງຂຶ້ນໂດຍກຸ່ມຄົນທີ່ບໍ່ດີ ທີ່ຫວັງສ້າງຄວາມປັ່ນປ່ວນໃນສັງຄົມ ແລະ ໃສ່ຮ້າຍປ້າຍສີ ຕໍ່ຕ້ານການນຳພາຂອງພັກ-ລັດ ແລະ ບັນດາຂ່າວທີ່ບໍ່ມີມູນຄວາມຈິງເຜີຍແຜ່ລົງອິນເຕີເນັດ ກໍ່ຄວາມວຸ້ນວາຍໃນສັງຄົມ, ກໍ່ໃຫ້ເກີດມີຜົນກະທົບໂດຍກົງຕໍ່ວຽກງານການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ການຕ້ານ ແລະ ສະກັດກັ້ນ ລັກລອບ ຝາກ-ສົ່ງ ຢາເສບຕິດຜ່ານຕາໜ່າງໄປສະນີ:**

ໄດ້ປະສານສົມທົບກັບຂະແໜງ ປກສ ຈັດກອງປະຊຸມເຜີຍແຜ່ນິຕິກຳ ທີ່ຕິດພັນກັບການຕ້ານ ແລະ ສະກັດກັ້ນຢາເສບຕິດໃຫ້ແກ່ຜູ້ປະກອບການໄປສະນີ, ພ້ອມທັງ ເອົາໃຈໃສ່ໃນການຕິດຕາມ ແລະ ກວດກາເຄື່ອງຝາກໄປສະນີ. ໄລຍະປີ 2021-2025 ຂະແໜງການໄປສະນີ ສາມາດກວດພົບ ແລະ ສະກັດກັ້ນການລັກລອບຝາກ-ສົ່ງ ຢາເສບຕິດ ແລະ ສິ່ງຜິດກົດໝາຍ ຜ່ານຕາໜ່າງໄປສະນີພາຍໃນ-ຕ່າງປະເທດ ຫຼາຍລາຍການ. ໃນນັ້ນ, ມີຢາໄອ ຈຳນວນ 46,629 ກຣາມ, ຢາບ້າ 13,553 ກຣາມ, ເຮໂລອິນ 72,170 ກຣາມ, ເຄຕາມິນ 7,939 ກຣາມ, ຢາອີ 891 ກຣາມ, ຢາຝິ່ນ 13,858 ກຣາມ, ຢາຊູກຳລັງ (ຢາໂດບ) 8,548 ກຣາມ, ຢາເສບຕິດກະຕຸ້ນປະສາດ 362 ຊອງ, ຢາເສບຕິດ (ໃສ່ຊອງຄໍລາເຈັນ) ຈຳນວນ 282 ຊອງ, ກັນຊາແຫ້ງ 93,680 ກຣາມ, ໃບກະທ້ອມ ແລະ ນ້ຳກະທອມ 4,000 ລາຍການ, ນ້ຳຢາຫົວເຊື້ອກະທອມ ຈຳນວນ 5 ກ່ອງ, ນໍແຮດ ແລະ ໜັງສັດ 21,796 ກຣາມ (38 ອັນ), ອາວຸດເສິກ (ປືນ+ອາໄຫຼ່ປືນ+ລູກປືນ) 800 ລາຍການ, ຢາສູບໄຟຟ້າ 2,120 ຫຼອດ, ຢາສູບທີ່ບໍ່ໄດ້ເສຍພາສີ 411 ລາຍການ, ຈັກສະຕິນ 50 ລາຍການ.

ພາຍຫຼັງມີການກວດພົບ ແມ່ນໄດ້ປະສານສົມທົບກັບເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ເພື່ອສົ່ງມອບສິ່ງຂອງດັ່ງກ່າວ, ພ້ອມທັງສະໜອງຂໍ້ມູນ ແລະ ອຳນວຍຄວາມສະດວກໃນການປະຕິບັດແຜນການຈັບກຸມຜູ້ກະທຳຜິດໄດ້ຫຼາຍກໍລະນີ.

## IV. ຜົນສຳເລັດ 4 ວຽກ ບູລິມະສິດສຳຄັນໃນການຫັນເປັນທັນສະໄໝດ້ວຍດິຈິຕອນ

### 1. ສ້າງລັດຖະບານດິຈິຕອນ

- ປະທານປະເທດໄດ້ອອກລັດຖະດຳລັດ ສະບັບເລກທີ 082/ປປທ, ລົງວັນທີ 02 ມິຖຸນາ 2023 ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ໂດຍທ່ານນາຍົກລັດຖະ

ມົນຕີ ເປັນປະທານ ແລະ ປະກອບມີບັນດາທ່ານ ຮອງນາຍົກລັດຖະມົນຕີ ແລະ ບັນດາທ່ານລັດຖະມົນຕີ ກະຊວງຂະແໜງການທີ່ກ່ຽວຂ້ອງ ເພື່ອຊີ້ນໍາ-ນໍາພາ ການຈັດຕັ້ງປະຕິບັດວຽກງານການຫັນເປັນດີຈີຕອນ ຂອງ ສປປ ລາວ;

- ສໍາເລັດການຕິດຕັ້ງ, ເຊື່ອມໂຍງເຄືອຂ່າຍອິນຕຣາເນັດພາກລັດ ຫາ 18 ກະຊວງ/ອົງການ ຢູ່ສູນກາງ ແລະ 18 ແຂວງ/ນະຄອນຫຼວງ, ຕິດຕັ້ງເຄືອຂ່າຍອິນຕຣາເນັດ/ອິນເຕີເນັດ ເຊື່ອມໂຍງທຸກຫ້ອງການກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເພື່ອເປັນພື້ນຖານການສ້າງຫັນເປັນກະຊວງທັນສະໄໝ;
- ສໍາເລັດການສ້າງລະບົບບໍລິຫານລັດດີຈີຕອນຫຼາຍລະບົບ ເຊັ່ນ: ຫ້ອງການທັນສະໄໝ (e-office),ຈົດໝາຍເອເລັກໂຕຼນິກ (Email), ລະບົບເວັບໄຊພາກລັດ (G-Web), ລະບົບສື່ສານພາກລັດ (G-Chat), ລະບົບຈັດເກັບ ແລະ ນໍາໃຊ້ເອກະສານຮ່ວມກັນຂອງພາກລັດ (G-Share/G-Drive), ລະບົບກອງປະຊຸມທາງໄກ (Video Conference) ແລະ ບັນດາລະບົບບໍລິຫານລັດອື່ນໆ ເພື່ອຮັບໃຊ້ວຽກງານຕ່າງໆ ດ້ວຍລະບົບເອເລັກໂຕຼນິກ.
- ສໍາເລັດການສ້າງລະບົບບໍລິການລັດດີຈີຕອນ ຫຼາຍລະບົບສົມທົບກັບ ຂະແໜງການກ່ຽວຂ້ອງ ເຊັ່ນ: Gov-X, Vaccine ID, LaoPedia, L-MOOCs, V-Card, QRcode, e-Vote ແລະ ອື່ນໆ.
- ໄດ້ສໍາເລັດ ດໍາເລັດວ່າດ້ວຍການບໍລິຫານ ແລະ ບໍລິການລັດດີຈີຕອນ ແລະ ໄດ້ຄົ້ນຄວ້າ ແລະ ສ້າງແຜນຍຸດທະສາດການບໍລິຫານລັດດີຈີຕອນໄລຍະ 10 ປີ (2026-2035).
- ກໍາລັງສຶກສາຄົ້ນຄ້ວາ ແລະ ຮ່າງດໍາລັດວ່າດ້ວຍການຄຸ້ມຄອງຂໍ້ມູນພາກລັດ ແລະ ຮ່າງດໍາລັດວ່າດ້ວຍ ການເຊື່ອມໂຍງລະບົບພາກລັດ (e-GIF);
- ສໍາເລັດ ສ້າງຄວາມອາດສາມາດ ແລະ ຄວາມເຂັ້ມແຂງດ້ານດີຈີຕອນ, ຝຶກອົບຮົມການນໍາໃຊ້, ຝຶກການເປັນຄູຝຶກ ຂອງບັນດາລະບົບຕ່າງໆ ໃຫ້ກັບຫ້ອງການລັດ ສູນກາງ ແລະ ທ້ອງຖິ່ນ.
- ສໍາເລັດເຊັນສັນຍາຮ່ວມມືກັບບໍລິສັດ ເອກະຊົນ ພາຍໃນປະເທດ ໃນການພັດລະນາລະບົບເຊື່ອມຕໍ່-ແລກປ່ຽນຂໍ້ມູນ LaoLink; ເຊັນສັນຍາຮ່ວມມືພັດທະນາໂຄງລ່າງພື້ນຖານກຸ່ມຂໍ້ມູນຜູກພັນ ແລະ ສ້າງແວດລ້ອມດ້ານການເງິນ-ທະນາຄານດີຈີຕອນ.
- ໄດ້ຮ່ວມຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ບົດບັນທຶກຄວາມເຂົ້າໃຈ ແລະ ຊຸກຍູ້ວຽກງານຫັນເປັນລັດດີຈີຕອນ ຂອງ ອົງການຈັດຕັ້ງພັກ ແລະ ອົງການຈັດຕັ້ງມະຫາຊົນ ຈໍານວນ 5 ພາກສ່ວນ ເປັນຕົ້ນ ຈັດກອງປະຊຸມຝຶກອົບຮົມການນໍາໃຊ້ບັນດາລະບົບຫ້ອງການທັນສະໄໝ ແລະ ຄວາມຮູ້ດ້ານດີຈີຕອນ ໃຫ້ຫ້ອງວ່າການສູນກາງພັກ, ຄະນະໂຄສະນາອົບຮົມສູນກາງພັກ, ຄະນະພົວພັນຕ່າງປະເທດສູນກາງພັກ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສູນກາງສະຫະພັນແມ່ຍິງລາວ.

**2. ພັດທະນາລະບົບການຊໍາລະສະສາງດີຈີຕອນ**

- ສໍາເລັດການພັດທະນາແອັບພລິເຄຊັນ ແບບລວມສູນດີຈີຕອນ: ລະບົບ M-Money, U-Money ແລະ E2Pay ເປັນລະບົບຊໍາລະເງິນ ຜ່ານລະບົບມືຖື ແລະ ອິນເຕີເນັດ;
- ຊຸກຍູ້ສົ່ງເສີມບໍລິສັດໂທລະຄົມມະນາຄົມຂະຫຍາຍການນໍາໃຊ້ລະບົບຊໍາລະສະສາງຜ່ານລະບົບໂທລະສັບມືຖື, ປັດຈຸບັນມີຜູ້ລົງທະບຽນນໍາໃຊ້ເຖິງ 2.3 ລ້ານກວ່າບັນຊີ ແລະ ມີຜູ້ຊົມໃຊ້ຢ່າງເປັນປົກກະຕິຫຼາຍກວ່າ 5 ແສນບັນຊີຕໍ່ວັນ, ໄດ້ຮ່ວມມືກັບກະຊວງການເງິນປັບປຸງພັດທະນາ ແລະ ນໍາໃຊ້ລະບົບຄຸ້ມຄອງການເງິນ ແບບດີຈີຕອນ, ເຮັດໃຫ້ເກັບລາຍຮັບເພີ່ມຂຶ້ນ 26% ທຽບໃສ່ປີຜ່ານມາ.

**3. ຊຸກຍູ້ສົ່ງເສີມສະຕາດອັບ (Start up) ຫຼື ທຸລະກິດນໍາໃຊ້ນະວັດຕະກໍາໃໝ່ ແລະ ພັດທະນາລະບົບນິເວດ ດີຈີຕອນ (Ecosystem).**

- ສໍາເລັດສ້າງແຜນແມ່ບົດສົ່ງເສີມ ແລະ ພັດທະນາທຸລະກິດລິເລີ່ມ (Start Up) ໄລຍະກ້າວເຂົ້າສູ່ເສດຖະກິດດີຈີຕອນ ແລະ ຮ່າງດໍາລັດ ວ່າດ້ວຍ ການສົ່ງເສີມທຸລະກິດ Start Up ແລະ ສໍາເລັດການສ້າງດໍາລັດ ຂອງລັດຖະບານ ວ່າດ້ວຍການສົ່ງເສີມທຸລະກິດ Start Up;

- ສຳເລັດການສົ່ງເສີມ MSME ແລະ Startup ໃນງານສັປປະດາດິຈິຕອນ ປະຈຳປີ; ລັດຖະບານ ອອກດຳລັດ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນພັດທະນາ MSME (2021-2025) ໃນເດືອນມິຖຸນາ 2022. ໃນນີ້, ໄດ້ລະບຸນະ ໂຍບາຍສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ສຳລັບດຳລັດ E-commerce, ລັດຖະບານ ໄດ້ຮັບຮອງ ແລະ ປະກາດໃຊ້ໃນເດືອນເມສາ 2021;
- ຊຸກຍູ້ສົ່ງເສີມໃຫ້ຜູ້ປະກອບການທຸລະກິດພາຍໃນປະເທດມີຄວາມເຂັ້ມແຂງ ໂດຍສະເພາະຜູ້ປະກອບການຂະໜາດກາງ, ນ້ອຍ, ຈຸນລະວິສາຫະກິດ ແລະ Start Up ໃຫ້ມີການນຳໃຊ້ເຕັກໂນໂລຊີດິຈິຕອນ ແລະ ການຄ້າເອເລັກໂຕຼນິກ ຈຳນວນ 1 ເທື່ອຄັ້ງ, ມີຜູ້ເຂົ້າຮ່ວມ 15 ເທື່ອຄົນ; ຈັດເວທີສົນທະນາ ເປີດກວ້າງການພັດທະນານະວັດຕະກຳ ໃຫ້ແກ່ລະບົບນິເວດ ທຸລະກິດສະຕາດອັບ ຂອງລາວ ຈຳນວນ 4 ເທື່ອຄັ້ງ, ມີຜູ້ເຂົ້າຮ່ວມ 726 ເທື່ອຄົນ; ລົງເຜີຍແຜ່ການສົ່ງເສີມ ແລະ ໃຫ້ຄວາມຮູ້ຄວາມເຂົ້າໃຈ ການສ້າງແນວຄວາມຄິດ, ການສ້າງໂອກາດການລົງທຶນໃນທຸລະກິດສະຕາດອັບ ຈຳນວນ 11 ເທື່ອຄັ້ງ, ມີຜູ້ເຂົ້າຮ່ວມ 970 ເທື່ອຄົນ; ຈັດຝຶກອົບຮົມໃນການສົ່ງເສີມການນຳໃຊ້ສື່ສັງຄົມອອນລາຍ ເຂົ້າໃນການສົ່ງເສີມທຸລະກິດ Start up, ທຸລະກິດຂະ ໜາດນ້ອຍ ແລະ ກາງ (SMEs) ຈຳນວນ 3 ເທື່ອຄັ້ງ, ມີຜູ້ເຂົ້າຮ່ວມ 300 ເທື່ອຄົນ; ສ້າງຄວາມຮັບຮູ້ໃຫ້ແກ່ສັງຄົມ ເຫັນໄດ້ເຖິງໂອກາດ ແລະ ທ່າແຮງຂອງການເຮັດທຸລະກິດສະຕາດອັບ ໂດຍສະເພາະແມ່ນຂົງເຂດທີ່ມີຄວາມຕ້ອງ ການທາງດ້ານຜະລິດຕະພັນ ແລະ ການບໍລິການທີ່ມີນະວັດຕະກຳສູງ ຈຳນວນ 2 ເທື່ອຄັ້ງ, ມີຜູ້ເຂົ້າຮ່ວມ 652 ເທື່ອຄົນ;
- ສ້າງໂຄງການພັດທະນາ ແລະ ສ້າງສູນບົ່ມເພາະລະບົບນິເວດທຸລະກິດລິເລີ່ມ (Start Up) ແຫ່ງທຳອິດຂອງ ສປປ ລາວ ເພື່ອກະກຽມຄວາມພ້ອມທັນສູ່ເສດຖະກິດດິຈິຕອນ ແລະ ໂຄງການເກັບກຳຂໍ້ມູນໃນການສົ່ງເສີມການພັດທະນາທຸລະກິດສະຕາດອັບ 4 ແຂວງ ໃນ ສປປ ລາວ; ແລະ ການສ້າງ Digital Park ເພື່ອຊຸກຍູ້ການເຄື່ອນໄຫວ ຫົວຂໍ້ "GMS Economic Corridor Collaboration Through Digital Park along China-Laos Railway to Determine Digital Economy Cooperation in Oudomxay Province, Lao PDR".

**4. ພັດທະນາບຸກຄະລາກອນ ດິຈິຕອນ.**

ສຳເລັດເຊັນບົດບັນທຶກຄວາມເຂົ້າໃຈ (MOU) 2 ສະບັບ ເພື່ອເປັນການສະໜັບສະໜູນ ແລະ ພັດທະນາຊັບພະຍາກອນດິຈິຕອນ ຮ່ວມກັບບໍລິສັດ ລາຍລາວແລັບ ໄອຊີທີ ໂຊລູເຊິນ ຈຳກັດ ເປັນຕົ້ນການສ້າງຫຼັກສູດໄລຍະສັ້ນ ແລະ ໄລຍະຍາວ ທາງດ້ານໄອຊີທີ, ຈັດຝຶກອົບຮົມໃຫ້ແກ່ພະນັກງານຄູອາຈານ, ນັກສຶກສາ ແລະ ພາກສ່ວນພາຍນອກທີ່ມີຄວາມສົນໃຈຕ້ອງການຍົກລະດັບທັກສະຄວາມຮູ້ທາງດ້ານດິຈິຕອນ; ຮ່ວມມືກັນຄົ້ນຄ້ວາທາງດ້ານວິຊາການ ແລະ ການນຳໃຊ້ເຕັກໂນໂລຊີ, ຮ່ວມກັນຈັດງານການແຂ່ງຂັນຂຽນໂປຣແກຣມລະດັບປະເທດ, ຮ່ວມກັນຈັດງານຜະລິດຕະພັນດ້ານໄອຊີທີ ໃນລະດັບສະຖາບັນການສຶກສາ, ລະດັບປະເທດ, ພາກພື້ນ ແລະ ສາກົນ; ແລະ ຮ່ວມກັບບໍລິສັດ ຮົວເວ້ເທັກໂນໂລຢີ ໃນການຮ່ວມມືດ້ານການພັດທະນາຫຼັກ ສູດ Huawei ICT Academy, ໃນການສ້າງຫຼັກສູດການຮຽນທາງດ້ານໄອຊີທີ, ຝຶກອົບຮົມໃຫ້ແກ່ບັນດານັກຮຽນ, ຍົກລະດັບມາດຕະຖານຂອງຄູສອນ, ສະໜັບສະໜູນການຝຶກງານ, ການສຳມະນາ, ການນຳໃຊ້ Platforms online, ເຂົ້າຮ່ວມການແຂ່ງຂັນດ້ານໄອຊີທີ, ມອບທຶນການສຶກສາ, ຮ່ວມມືຄົ້ນຄ້ວາທາງດ້ານວິຊາການ, ຝຶກອົບຮົມໃຫ້ແກ່ພະນັກງານພາກລັດ ທີ່ຮັບຜິດ ຊອບທາງດ້ານວຽກງານບໍລິການການສຶກສາ ແລະ ສົ່ງເສີມພັດທະນາພະນັກງານທ້ອງຖິ່ນ ທີ່ມີພອນສະຫວັນທາງດ້ານໄອຊີທີ. ຮ່ວມກັບມະຫາວິທະຍາໄລຂອນແກ່ນ (KKU) ໃນການສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ດ້ານເຕັກໂນໂລຊີນະວັດຕະກາ, ເຕັກໂນໂລຊີ AI ເພື່ອສັງຄົມ ທັງໄລຍະສັ້ນ ແລະ ໄລຍະຍາວ, ສຳເລັດການລົງເຄື່ອນໄຫວຈັດຝຶກອົບຮົມການລຶບລ້າງການກົກດິຈິຕອນໃຫ້ແກ່ໄວໜຸ່ມລາວໃຫ້ແກ່ພະແນກການຂັ້ນທ້ອງຖິ່ນຈຳນວນ 03 ຄັ້ງ, ມີຜູ້ເຂົ້າຮ່ວມຫຼາຍກວ່າ400ເທື່ອຄົນ.

## V. ຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດດິຈິຕອນແຫ່ງຊາດ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ແຜນງານທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດດິຈິຕອນແຫ່ງຊາດ 14 ແຜນງານ ຄື:

**ແຜນງານ 1 - ສ້າງ ແລະ ປັບປຸງນະໂຍບາຍ, ກົດໝາຍ ແລະ ນິຕິກຳ:** ເພື່ອສ້າງສະພາບແວດລ້ອມໃຫ້ເອື້ອອຳນວຍໃນການຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມ ການພັດທະນາເສດຖະກິດດິຈິຕອນ ແລະ ການຫັນເປັນດິຈິຕອນຂອງ ສປປ ລາວ ເຊັ່ນ: ສຳເລັດປັບປຸງກົດໝາຍ ວ່າດ້ວຍ ການໂທລະຄົມມະນາຄົມ, ສຳເລັດການສ້າງກົດໝາຍວ່າດ້ວຍ ເຕັກໂນໂລຊີລະດັບສູງ, ສຳເລັດປັບປຸງກົດໝາຍ ວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ, ສຳເລັດສ້າງດຳລັດ ວ່າດ້ວຍ ການບໍລິການ ແລະ ບໍລິຫານລັດດິຈິຕອນ, ສຳເລັດສ້າງດຳລັດ ວ່າດ້ວຍ ບັນຊີເຕັກໂນໂລຊີ, ສ້າງດຳລັດ ວ່າດ້ວຍ ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ; ສຳເລັດສ້າງແຜນຍຸດທະສາດ ແຫ່ງຊາດກ່ຽວກັບຄື້ນຄວາມຖີ່ວິ ທະຍຸສື່ສານ 2021-2025, ແຜນຍຸດທະສາດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 10 ປີ (2021-2030), ແຜນຍຸດທະສາດການພັດທະນາໂທລະຄົມ ມະນາຄົມ ແລະ ອິນເຕີເນັດ ແຫ່ງຊາດ ໄລະຍະປີ 2026-2040, ແຜນຍຸດທະສາດການພັດທະນາຄວາມປອດໄພໄຊເບີ ແຫ່ງຊາດ ຮອດປີ 2035, ແຜນຜັງແຫ່ງຊາດຄື້ນຄວາມຖີ່ວິທະຍຸສື່ສານ; ສຳເລັດການສ້າງຂໍ້ຕົກລົງ ວ່າດ້ວຍ ການເຮັດທົດລອງທຸລະກຳຊັບສິນດິຈິຕອນຢູ່ ສປປ ລາວ; ສຳເລັດການສ້າງ ແລະ ປັບປຸງບັນດາຂໍ້ຕົກລົງ ແລະ ນິຕິກຳລຸ່ມກົດໝາຍຫຼາຍສະບັບຕິດພັນກັບວຽກງານຕ່າງໆໃນຂະແໜງເຕັກໂນໂລຊີ ແລະ ການສື່ສານ ແລະ ການຫັນເປັນດິຈິຕອນ, ໂດຍສະເພາະ ວຽກງານຄຸ້ມຄອງອິນເຕີເນັດ, ຄຸ້ມຄອງໂທລະຄົມມະນາຄົມ, ລະບົບບໍລິຫານລັດດິຈິຕອນ, ຄຸ້ມຄອງແອັບພລິເຄຊັນ, ຄຸ້ມຄອງວຽກງານໄປສະນີ, ການຢັ້ງຢືນຕົວຕົນທາງດິຈິຕອນ, ການເຮັດທົດລອງທຸລະກຳຊັບສິນດິຈິຕອນ ຢູ່ ສປປ ລາວ.

**ແຜນງານ 2 - ປັບປຸງ ແລະ ຂະຫຍາຍໂຄງລ່າງພື້ນຖານເຕັກໂນໂລຊີດິຈິຕອນ:** ໄດ້ສຸມໃສ່ປັບປຸງ, ຂະຫຍາຍລະບົບເຕັກນິກສູນຂໍ້ມູນ (Data Center) ໃຫ້ສາມາດຮອງຮັບຄວາມຕ້ອງການໃນການຫັນເປັນດິຈິຕອນ; ສຳເລັດການສະໜອງລະບົບໂຄງລ່າງພື້ນຖານສູນຂໍ້ມູນ, ເປັນຕົ້ນລະບົບຄຣາວ, ລະບົບເຄືອຂ່າຍ ເພື່ອຮັບປະກັນການເຮັດວຽກຂອງລະບົບ ແລະ ຮອງຮັບການຕິດຕັ້ງລະບົບການບໍລິຫານລັດ ດ້ວຍດິຈິຕອນ; ສົມທົບກະຊວງການເງິນໃນການນຳໃຊ້ລາຍເຊັນເອເລັກໂຕຼນິກ (CA) ເຂົ້າໃນການເກັບລາຍຮັບເຂົ້າງົບປະມານ. ໄດ້ຂະຫຍາຍສາຍກາບໄຍແສງ (Optic Fiber) ໄດ້ 36,543 ກິໂລ ແມັດ ເພີ່ມຂຶ້ນ 265% (ທຽບໃສ່ແຜນ 5 ປີ ແມ່ນ 10,000 ກິໂລແມັດ), ສາຍສົ່ງປະເພດ DWDM, STM, PTN ແລະ PDH ໄດ້ຈຳນວນ 5,763 ສະຖານີ (ເພີ່ມຂຶ້ນ 1,608 ສະຖານີ ຫຼື 39% ທຽບໃສ່ປີ 2022), ຈຸດເຊື່ອມຕໍ່ອອກຕ່າງປະເທດ ຈຳນວນ 67 ຈຸດ(ເພີ່ມຂຶ້ນ 18 ຈຸດ ຫຼື 36.7%), ເສົາຮັບ-ສົ່ງ ສັນຍານໂທລະສັບຈຳນວນ 5,728 ຕົ້ນ, ສະຖານີຮັບສົ່ງສັນຍານໂທລະສັບມືຖື 22,134 ສະຖານີ (ເພີ່ມຂຶ້ນ 363 ສະຖານີ, ຄິດເປັນ 22.1% ທຽບໃສ່ທ້າຍປີ 2022), ຄອບຄຸມໄດ້ທຸກແຂວງ, ທຸກເມືອງ, ສັນຍານໂທລະ ສັບມືຖືແຍກຕາມລະບົບເຄືອຂ່າຍ 2G ຄອບຄຸມ 97%, 3G ຄອບຄຸມ 86% ແລະ 4G ຄອບຄຸມໄດ້ 78% ແລະ 5G ໃຫ້ບໍລິການໃນຕົວເມືອງໃຫຍ່ຂອງແຕ່ລະແຂວງ ສາມາດຄອບຄຸມໄດ້ 4% ຂອງຈຳນວນບ້ານທັງໝົດ, ຈຳນວນເລກໝາຍໂທລະສັບຕັ້ງໂຕະ ແລະ ມືຖື ທີ່ໄດ້ຂຶ້ນທະບຽນນຳໃຊ້ໃນລະບົບຮອດເດືອນ ມິຖຸນາ 2025 ມີທັງໝົດ 7,516,005 ເລກໝາຍ, ອິນເຕີເນັດ 4,452,651 ບັນຊີ.

**ແຜນງານ 3 - ເຊື່ອມໂຍງເຊື່ອມຈອດ:** ໄດ້ເຊັນສັນຍາຮ່ວມມື ກັບບໍລິສັດ ເອກະຊົນພາຍໃນປະເທດເພື່ອຮ່ວມກັນພັດທະນາ ແລະ ໃຫ້ບໍລິການລະບົບບໍລິຫານລວມສູນການເຊື່ອມຕໍ່ ແລະ ການຄຸ້ມຄອງຄວາມປອດໄພ ທາງອິນເຕີເນັດແຫ່ງຊາດ ແລະ ລະບົບຄຸ້ມຄອງເລກໝາຍໂທລະສັບ.

**ແຜນງານ 4 - ສ້າງລັດຖະບານດິຈິຕອນ:** ສຳເລັດການຕິດຕັ້ງ ເຊື່ອມໂຍງ ເຄືອຂ່າຍອິນຕຣາເນັດພາກລັດ (G-Net) ຄອບຄຸມ ຈຳນວນ 18 ກະຊວງ-ອົງການ ແລະ 18 ແຂວງ ທົ່ວປະເທດ; ສ້າງລະບົບຫ້ອງການທັນສະໄໝ (e-office) 44 ຫ້ອງການ (ຢູ່ສູນກາງ 27 ພາກສ່ວນ ແລະ ຢູ່ທ້ອງຖິ່ນ ຈຳນວນ 17 ຫ້ອງວ່າການແຂວງ); ສ້າງລະບົບຫ້ອງການຫັນເປັນທັນສະໄໝ (e-office) ໄດ້ 44 ຫ້ອງການ (ຢູ່ສູນກາງ ຈຳນວນ 27 ພາກສ່ວນ ແລະ ທ້ອງຖິ່ນ ຈຳນວນ 17 ຫ້ອງວ່າການແຂວງ) ຈຳນວນທັງໝົດ 13,258 ບັນຊີ , ສ້າງ ແລະ ຂະຫຍາຍການນຳໃຊ້ລະບົບອີເມວ (e-mail) ໃຫ້ບັນດາຫ້ອງການລັດທັງສູນກາງ ແລະ ທ້ອງຖິ່ນ ທັງໝົດ ຈຳນວນ 41 ພາກສ່ວນ ເທົ່າກັບ 60.29% ຂອງແຜນການ, ມີ 49 ໂດເມນ ແລະ ມີບັນຊີຜູ້ຊົມໃຊ້ທັງໝົດ 5,589 ບັນຊີລາຍຊື່ ເທົ່າກັບ 29.35% ຂອງແຜນການ; ພັດທະນາລະບົບຈັດເກັບ ແລະ ນຳໃຊ້ເອກະສານຮ່ວມກັນຂອງພາກລັດ (G-share/G-drive) ຈຳນວນທັງໝົດ 15,261 ບັນຊີ (ຂັ້ນສູນກາງ

6,959 ບັນຊີ, ຂັ້ນທ້ອງຖິ່ນ: 8,302 ບັນຊີ); ພັດທະນາລະບົບກອງປະຊຸມທາງໄກ (TrueConf) ເພື່ອຮັບໃຊ້ວຽກງານຕ່າງໆດ້ວຍລະບົບເອເລັກໂຕຼນິກ ໃຫ້ແກ່ບັນດາຫ້ອງການພັກ-ລັດ ທັງສູນກາງ ແລະ ທ້ອງຖິ່ນ ທັງໝົດຈຳນວນ 97 ພາກສ່ວນ ລວມທັງໝົດ 20,893 ບັນຊີ; ຂະຫຍາຍການນຳໃຊ້ລະບົບເວັບໄຊພາກລັດ (G-web plateform) ໄດ້ 57 ພາກສ່ວນ (ສູນກາງ 26 ພາກສ່ວນ ແລະ ທ້ອງຖິ່ນ 31 ພາກ ສ່ວນ); ພັດທະນາ ແລະ ຂະຫຍາຍບັນຊີລາຍຊື່ລະບົບສື່ສານພາກລັດ (G-chat) ຮອງຮັບໄດ້ທັງໝົດ 15,000 ບັນຊີ ເທົ່າກັບ 30% ຂອງແຜນການ, ຂະຫຍາຍການນຳໃຊ້ທັງໝົດ ຈຳນວນ 24,231 ລາຍຊື່ (ສູນກາງ 10,561 ບັນຊີ ແລະ ທ້ອງຖິ່ນ 23,688 ບັນຊີ); ສ້າງ ແລະ ພັດທະນາລະບົບ e-portal, e-Vote, e-Registration, QR-vCard, ລະບົບ Gov-X, ລະບົບ G-helpdesk ລະບົບການຮຽນ ການສອນແບບເປີດ (L-MOOCs), ລະບົບ Laopedia, ແລະ ລະບົບ G-form. ພ້ອມນັ້ນ, ກໍ່ໄດ້ຄົ້ນຄວ້າ ແລະ ສ້າງແຜນຍຸດທະສາດການບໍລິຫານລັດດິຈິຕອນໄລຍະ 10 ປີ (2026-2035). ໄດ້ຮ່ວມຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍປຶ້ມບັນທຶກຄວາມເຂົ້າໃຈ ແລະ ຊຸກຍູ້ວຽກງານຫັນເປັນລັດດິຈິຕອນ ຂອງອົງການຈັດຕັ້ງພັກ ແລະ ອົງການຈັດຕັ້ງມະຫາຊົນ ຈຳນວນ 5 ພາກສ່ວນ ເປັນຕົ້ນ ຝຶກອົບຮົມການນຳໃຊ້ບັນດາລະບົບຫ້ອງການທັນສະໄໝ ແລະ ຄວາມຮູ້ດ້ານດິຈິຕອນໃຫ້ຫ້ອງວ່າການສູນກາງພັກ, ຄະນະໂຄສະນາອົບຮົມສູນກາງພັກ, ຄະນະພົວພັນຕ່າງປະເທດສູນກາງພັກ, ສູນກາງຊາວໜຸ່ມປະ ຊາຊົນປະຕິວັດລາວ ແລະ ສູນກາງສະຫະພັນແມ່ຍິງລາວ.

**ແຜນງານ 5 - ສ້າງລະບົບການຊຳລະດ້ວຍດິຈິຕອນ:** ສຳເລັດການພັດທະນາແອັບພລິເຄຊັນ ແບບລວມສູນດິຈິຕອນ ເປັນຕົ້ນ ລະບົບ Mobile Money (ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ M-Money, ບໍລິສັດ ສະຕາໂທລະຄົມ U-Money, ບໍລິສັດ ອີທີແອລ E2Pay) ເປັນລະບົບຊຳລະເງິນຜ່ານລະບົບມືຖື ແລະ ອິນເຕີເນັດ; ໄດ້ຊຸກຍູ້ ສົ່ງເສີມບໍລິສັດໂທລະຄົມມະນາຄົມຂະຫຍາຍການນຳໃຊ້ລະບົບຊຳລະສະສາງຜ່ານລະບົບໂທລະສັບມືຖື, ປັດຈຸບັນມີຜູ້ລົງທະບຽນ ນຳໃຊ້ເຖິງ 2.3 ລ້ານກວ່າບັນຊີ ແລະ ມີຜູ້ຊົມໃຊ້ຢ່າງເປັນປົກກະຕິຫຼາຍກວ່າ 5 ແສນບັນຊີຕໍ່ວັນ, ໄດ້ຮ່ວມມືກັບກະຊວງການເງິນປັບປຸງພັດທະນາ ແລະ ນຳໃຊ້ລະບົບຄຸ້ມຄອງການເງິນແບບດິຈິຕອນ, ເຮັດໃຫ້ເກັບລາຍຮັບເພີ່ມຂຶ້ນ 26% ທຽບໃສ່ປີຜ່ານມາ. ສຳລັບພລັດຟອມລະບົບການເງິນ (FinTech) ມີຄື: ລະບົບແຈ້ງພາສີປະຕູດຽວແຫ່ງຊາດ NSWA+ (Lao National Single Windows/ASYCUDA); ລະບົບ FINLINK (ຮອງຮັບການຈ່າຍ Road-Tax, Land-Tax ແລະ ອື່ນໆ); ລະບົບເກັບຄ່າທຳນຽມ ແລະ ຄ່າບໍລິການ (Easy Pass); ລະບົບເກັບອາກອນ TaxRIS; ລະບົບ LAPNET ເຊື່ອມຕໍ່ ຊຳລະສະສາງ ຂອງ ທຫລ; ລະບົບແລກປ່ຽນເງິນ Crypto (ປະຈຸບັນ ມີ Bitqik ທີ່ເປີດໃຫ້ບໍລິການແລ້ວ).

**ແຜນງານ 6 - ການພັດທະນາຊັບພະຍາກອນມະນຸດດ້ານດິຈິຕອນ:** ສຳເລັດການສ້າງສູນຝຶກ ໄອຊີທີ ດ້ວຍທຶນຊ່ວຍ ເຫຼືອລ້າຈາກລັດຖະບານ ສປ ຈີນ ຊຶ່ງມີພິທີເປີດນຳໃຊ້ໃນວັນທີ 20 ພຶດສະພາ 2024. ສຳເລັດການສ້າງສູນຊອບແວ Software Center ດ້ວຍທຶນຊ່ວຍເຫຼືອລ້າຈາກລັດຖະບານ ສ.ເກົາຫຼີ, ມີສູນພັດທະນາ ແລະ ຝຶກອົບຮົມຊອບແວລາວ-ອິນເດຍ, ສູນພາສາຫວຽດນາມ, ສູນຝຶກອົບຮົມເກົາຫຼີ-ອາຊຽນ ແນ່ໃສ່ສ້າງບຸກຄະລາກອນຮອງຮັບການຫັນເປັນສັງຄົມດິຈິຕອນ. ສ້າງປຶ້ມຮຽນວິຊາການ “ຄວາມຮູ້ພື້ນຖານການຫັນເປັນດິຈິຕອນ” ຈຳນວນ 5 ເຫຼັ້ມ, ແລະ ໄດ້ມີການຈັດກອງປະຊຸມເຜີຍແຜ່ຝຶກອົບຮົມ, ສຳມະນາໃນສູນກາງ ແລະ ທ້ອງຖິ່ນ, ມີຜູ້ເຂົ້າຮ່ວມຫຼາຍກວ່າ 700 ເທື່ອຄົນ.

**ແຜນງານ 7 - ສົ່ງເສີມການດຳເນີນທຸລະກິດ MSME ແລະ ການບໍລິການ:** ສຳເລັດການສົ່ງເສີມ MSME ແລະ Startup ໃນງານສັບປະດາດິຈິຕອນ ໃນທ້າຍປີ 2022 ແລະ ຕົ້ນປີ 2025; ລັດຖະບານອອກດຳລັດ ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ແຜນພັດທະນາ MSME (2021-2025) ໃນເດືອນມິຖຸນາ 2022.ໃນນີ້, ໄດ້ລະບຸນະໂຍບາຍສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳສຳລັບດຳລັດ E-commerce, ລັດຖະບານໄດ້ຮັບຮອງ ແລະ ປະກາດໃຊ້ໃນເດືອນເມສາ 2021. ສຳເລັດການສົ່ງເສີມສ້າງກິດຈະກຳສົ່ງເສີມພາກທຸລະກິດດ້ວຍການຈັດງານ ສັບປະດາດິຈິຕອນລາວ (Lao Digital Week) ຈຳນວນ 3 ຄັ້ງ ມີຜູ້ເຂົ້າຮ່ວມວາງສະແດງຫຼາຍກວ່າ 250 ພາກສ່ວນ, ພາຍໃນງານມີການຈັດກອງປະຊຸມສຳມະນາທາງດ້ານວິຊາການ, ການແຂ່ງຂັນ (ການໂຕ້ວາທີ, Hacking challenge, Innovation ICT awards, Data science Hackatone lao, Makertone ແລະ ອື່ນໆ) ມີຜູ້ເຂົ້າຮ່ວມງານຫຼາຍກວ່າ 10,000 ຄົນ; ຈັດ

ງານວາງສະແດງ ແລະ ຊອກຄູ່ຮ່ວມມື ດ້ານເຕັກໂນໂລຊີນະວັດຕະກໍາ, ມີຜູ້ເຂົ້າຮ່ວມງານຫຼາຍກວ່າ 600 ທ່ານ; ສໍາເລັດຈັດກອງປະຊຸມສົ່ງເສີມ ແລະ ໃຫ້ຄວາມຮູ້ ຄວາມເຂົ້າໃຈ ການສ້າງແນວຄວາມຄິດ, ການສ້າງໂອກາດການລົງທຶນ ໃນທຸລະກິດສະຕາດອັບ, ທຸລະກິດຂະໜາດນ້ອຍ ແລະ ກາງ (SMEs) ມີຜູ້ເຂົ້າຮ່ວມຫຼາຍກວ່າ 3,000 ເທື່ອຄົນ. ສໍາເລັດຈັດກອງປະຊຸມພົບປະ ຜູ້ປະກອບກິດຈະການທຸລະກິດສະຕາດອັບ ຮູບແບບໂຕະມົນ (Startup Round Table Meeting 2025) ຂອງງານມະຫະກໍາເຕັກໂນໂລຊີ ກຸ່ມຂໍ້ມູນຜູກພັນຂອງລາວ 2025 (Lao Blockchain Fest 2025) ມີຜູ້ເຂົ້າຮ່ວມຫຼາຍກວ່າ 3,000 ເທື່ອຄົນ. ນອກຈາກນັ້ນແລ້ວ ສໍາເລັດການຈັດກອງປະຊຸມປະຖົມມະລຶກ ແລະ ຜ່ານແຜນ Startup Ecosystem Roadmap ຂອງ ໂຄງການ ແມ່ນໍ້າຂອງ-ແມ່ນໍ້າລ້ານຊ້າງ ພາຍໃຕ້ຫົວຂໍ້ໂຄງການ: ການຮ່ວມມືລະດັບພາກພື້ນເພື່ອເສີມສ້າງລະບົບນິເວດສະຕາດອັບ ໃນ ສປປ ລາວ, ສສ ຫວຽດນາມ ແລະ ລາຊະອານາຈັກໄທ ຢູ່ທີ່ແຂວງວຽງຈັນ ແລະ ສະຫວັນນະເຂດ, ມີຜູ້ເຂົ້າຮ່ວມ 170 ເທື່ອຄົນ. ນອກຈາກນັ້ນແລ້ວ ຍັງສ້າງການເຊື່ອມໂຍງການຮ່ວມມືລະດັບພາກພື້ນເພື່ອເສີມສ້າງລະບົບນິເວດ Startup ໃນ ສປປ ລາວ, ຫວຽດນາມ ແລະ ໄທ; ພາຍໃຕ້ທຶນຂອງໂຄງການ ແມ່ນໍ້າຂອງ-ແມ່ນໍ້າລ້ານຊ້າງ.

**ແຜນງານ 8 - ສົ່ງເສີມການເພີ່ມປະສິດທິພາບການຜະລິດດ້ວຍເຕັກໂນໂລຊີດີຈີຕອນ:** ໄດ້ຍາດແຍ່ງໂຄງການຊ່ວຍ ເຫຼືອລ້າຈາກ ສ.ເກົາຫຼີ ເພື່ອສະໜັບສະໜູນການສ້າງອຸທິຍານດີຈີຕອນຂອງ ສປປ ລາວ (Laos Digital Park) ແລະ ຝຶກອົບຮົມຊ່ຽວຊານໄອທີ ເປັນມູນຄ່າ 6 ລ້ານໂດລາສະຫະລັດ ໂດຍມີຈຸດປະສົງເພື່ອສ້າງເປັນເຂດນິຄົມອຸດສາຫະກໍາດີຈີຕອນ ແນ່ໃສ່ດຶງດູດບັນດາບໍລິສັດເຕັກໂນໂລຊີຈາກທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນໃນເຂດດັ່ງກ່າວ, ເຮັດໃຫ້ ສປປ ລາວ ກາຍເປັນແຫຼ່ງຜະລິດ ຫຼື ແຫຼ່ງບໍລິການ ຂອງວຽກງານດີຈີຕອນ ຢູ່ໃນພາກພື້ນ ແລະ ສາກົນ. ໃນໄລຍະຜ່ານມາໂຄງການດັ່ງກ່າວ ສາມາດນໍາພາຫົວໜ່ວຍທຸລະກິດຂອງລາວ ເຂົ້າຮ່ວມງານວາງສະແດງເຕັກໂນໂລຊີ ແລະ ຖອດຖອນແລກປ່ຽນບົດຮຽນ ຢູ່ຕ່າງປະເທດ ຈໍານວນ 12 ຄັ້ງ (ຈໍານວນ 120 ບໍລິສັດ), ຈັດສໍາມະນາ ແລະ ຝຶກອົບຮົມດ້ານໄອທີ ຢູ່ພາຍໃນປະເທດ ຈໍານວນ 16 ຄັ້ງ (ຈໍານວນ 700 ຄົນ), ຝຶກອົບຮົມຢູ່ຕ່າງປະເທດ ຈໍານວນ 3 ຄັ້ງ (ຈໍານວນ 46 ຄົນ).

**ແຜນງານ 9 - ສົ່ງເສີມການພັດທະນາກະສິກໍາໃໝ່ດ້ວຍລະບົບເຕັກໂນໂລຊີດີຈີຕອນ:** ໄດ້ຄົ້ນຄວ້າພັດທະນາລະບົບໃຫ້ອາຫານພືດ (ໃສ່ປຸ໋ຍ) ແບບອັດຕະໂນມັດ, ໄດ້ຄົ້ນຄວ້ານໍາໃຊ້ເຮືອບິນບໍ່ມີຄົນຂັບ (ໂດຼນ) ເພື່ອຮັບໃຊ້ໃນວຽກກະສິກໍາ, ການສໍາຫຼວດ ແລະ ຖ່າຍພາບ.

**ແຜນງານ 10 - ສ້າງລະບົບໂລຊິດສະຕິກສໍາລັບການພັດທະນາເສດຖະກິດດີຈີຕອນ:** ສົ່ງເສີມການນໍາໃຊ້ຕາໜ່າງໂລຊິດສະຕິກ ແລະ ໄປສະນີ ໃນການຈັດສົ່ງ ແລະ ແຈກຢາຍສິນຄ້າທີ່ຊື້ຂາຍຜ່ານທາງເອເລັກໂຕຣນິກ ລະຫວ່າງເຈົ້າຂອງຮ້ານ ແລະ ຜູ້ຊື້ ໄດ້ 60%; ປັດຈຸບັນມີຜູ້ໃຫ້ການບໍລິການໄປສະນີ ທັງໝົດ 63 ບໍລິສັດ. ໃນນັ້ນ, ໃຫ້ບໍລິການລະຫວ່າງປະເທດ 11 ບໍລິສັດ, ໃຫ້ບໍລິການພາຍໃນປະເທດ 7 ບໍລິສັດ ແລະ ໃຫ້ບໍລິການພາຍໃນແຂວງ 52 ບໍລິສັດ.

ໄດ້ຂະຫຍາຍລະບົບຕາໜ່າງໂລຊິດສະຕິກການບໍລິການຂົນສົ່ງເຄື່ອງຝາກພັດສະດຸໄປສະນີແບບທົ່ວເຖິງ ຈໍານວນປ່ອງບໍລິການໄປສະນີເພີ່ມຂຶ້ນຈາກ 160 ປ່ອງ ໃນປີ 2022 ເປັນ 1,172 ປ່ອງ ໃນປີ 2025 (ສະເລ່ຍເພີ່ມຂຶ້ນ 732.5%) ກວມເອົາທຸກເມືອງໃນຂອບເຂດທົ່ວປະເທດ, ສ້າງສິ່ງອໍານວຍຄວາມສະດວກໃຫ້ແກ່ສັງຄົມໄດ້ຊົມໃຊ້ການບໍລິການຝາກ-ສົ່ງພັດສະດຸທັງພາຍໃນ ແລະ ລະຫວ່າງປະເທດ, ການບໍລິການຊື້-ຂາຍສິນຄ້າ, ບໍລິການຈັດສົ່ງອາຫານ, ເຄື່ອງອຸປະໂພກ-ບໍລິໂພກຈົນເຖິງບ່ອນຢູ່ ຜ່ານແພັດຟອມການຄ້າເອເລັກໂຕຼນິກ, ມີຜະລິດຕະພັນການບໍລິການທາງເລືອກທີ່ຫຼາກຫຼາຍຂຶ້ນເປັນຕົ້ນແມ່ນການບໍລິການຊໍາລະເງິນປາຍທາງ (COD, Cash on Delivery), ລະບົບຕິດຕາມສະຖານະຂອງເຄື່ອງຝາກ (Tracking), ລະບົບການແຈ້ງຂໍ້ມູນເຄື່ອງຝາກ ແລະ ແຈ້ງພາສີລ່ວງໜ້າທາງເອເລັກໂຕຼນິກ ຂອງເຄື່ອງຝາກທາງໄປສະນີລະຫວ່າງປະເທດ ແລະ ອື່ນໆ. ອັນເຮັດໃຫ້ມີການຈໍລະຈອນສິນຄ້າ-ເຄື່ອງຝາກໃນລະບົບໂລຊິດສະຕິກໄປສະນີ ເພີ່ມຂຶ້ນເປັນຈໍານວນຫຼາຍ, ສະແດງອອກຈໍານວນຜູ້ປະກອບການໄປສະນີໃນຂອບເຂດທົ່ວປະເທດ ມີການຂະຫຍາຍຕົວເພີ່ມຂຶ້ນຈາກ 32 ບໍລິສັດ ໃນປີ 2022 ເປັນ 63 ບໍລິສັດ ໃນປີ 2025 ສະເລ່ຍເພີ່ມຂຶ້ນ 96.8%, ບໍລິມາດການຮັບຝາກເຄື່ອງເພີ່ມຂຶ້ນຈາກ 663 ໂຕນ/ປີ ເປັນ 7,263 ໂຕນ/ປີ.

**ແຜນງານ 11 - ສ້າງຄວາມປອດໄພທາງດ້ານດິຈິຕອນ:** ໄດ້ຮ່ວມມືກັບ ກະຊວງປ້ອງກັນຄວາມສະຫງົບ ໃນການພັດທະນາລະບົບຖານຂໍ້ມູນ ບັດປະຈໍາຕົວແບບເອເລັກໂຕຣນິກ (e-ID), ຮ່ວມມືກັບ ສູນສະຖິຕິແຫ່ງຊາດ ໃນການສ້າງລະບົບສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ (PHC2025). ພ້ອມນັ້ນ, ກໍ່ໄດ້ພັດທະນາ ແລະ ປັບປຸງເວັບໄຊເວີ ແລະ ເມວເຊີເວີຂອງກົມຄວາມປອດໄພໄຊເບີ; ປະກອບຂໍ້ມູນຫຼັກຖານການນໍາໃຊ້ສື່ສັງຄົມອອນລາຍໃຫ້ເຈົ້າໜ້າທີ່ຕໍາຫຼວດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງຈໍານວນຫຼາຍກໍລະນີ; ສໍາເລັດການຕິດຕັ້ງສູນເຝົ້າລະວັງຄວາມປອດໄພ SOC; ສໍາເລັດການສ້າງແຜນຍຸດທະສາດຄວາມປອດໄພໄຊເບີແຫ່ງຊາດ, ສໍາເລັດການຮ່າງນິຕິກໍາລຸ່ມກົດໝາຍ 2 ສະບັບ; ສໍາເລັດການສ້າງລະບົບວິເຄາະພຶດຕິກໍາການໂຈມຕີທາງໄຊເບີ; ຕິດຕາມເຝົ້າລະວັງຄວາມປອດໄພ website, email ແລະ e-office ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ.

**ແຜນງານ 12 - ສ້າງຄວາມພ້ອມເພື່ອສ້າງເມືອງອັດສະລິຍະ:** ໄດ້ຂຽນບົດຄົ້ນຄວ້າຄວາມໝາຍ, ຮູບແບບ, ຄຸນລັກສະນະ ແລະ ອົງປະກອບຂອງຕົວເມືອງອັດສະລິຍະ. ໃນໄລຍະຜ່ານມາ ສປປ ລາວ ໄດ້ກໍານົດເອົານະຄອນຫຼວງວຽງຈັນ ແລະ ນະຄອນຫຼວງພະບາງ ເຂົ້າໃນໂຄງການຕົວເມືອງອັດສະລິຍະຂອງອາຊຽນ (ASEAN Smart Cities Framework) ແລ້ວ. ນອກຈາກນັ້ນ, ບັນດານະຄອນ (ນະຄອນໄກສອນພົມວິຫານ, ນະຄອນປາກເຊ) ແລະ ເຂດເສດຖະກິດຕ່າງໆ ທີ່ມີເງື່ອນໄຂ ກໍ່ສາມາດສ້າງຕົວເມືອງອັດສະລິຍະຂອງຕົນໄດ້.

**ແຜນງານ 13 - ສ້າງກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ:** ສໍາເລັດການສ້າງ ດໍາລັດ ວ່າດ້ວຍ ກອງທຶນໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ສະບັບເລກທີ 278/ລບ, ລົງວັນທີ 22/05/2024, ແນ່ໃສ່ພັດທະນາລະບົບໂຄງລ່າງພື້ນຖານທາງດ້ານດິຈິຕອນ ໃຫ້ມີການຂະຫຍາຍຕົວ, ກ້າວໜ້າ, ທັນສະໄໝ, ຍືນຍົງ ແລະ ຂະຫຍາຍເຄືອຂ່າຍໄປສູ່ຊົນນະບົດຫ່າງໄກສອກຫຼີກ.

**ແຜນງານ 14 - ການຮ່ວມມື ດ້ານດິຈິຕອນກັບຕ່າງປະເທດ:** ໄດ້ຕາງໜ້າລັດຖະບານລາວລົງນາມການເປັນຄູ່ຮ່ວມດິຈິຕອນກັບ ສສ. ຫວຽດນາມ; ຮ່ວມກັບ ກະຊວງ ຖະແຫຼງຂ່າວ ແລະ ການສື່ສານ (MIC) ສສ.ຫວຽດນາມ ສ້າງ ແລະ ເປີດນໍາໃຊ້ລະບົບ SOC ແລະ LMOOC; ໄດ້ເຊັນສັນຍາການຮ່ວມດ້ານໄອຊີທີ ກັບ ກະຊວງອຸດສາຫະກໍາ ແລະ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (MIIT) ສປ ຈີນ ແລະ ກະຊວງດິຈິຕອນ ເພື່ອເສດຖະກິດ ແລະ ສັງຄົມ ຂອງຣາຊະອານາຈັກໄທ; ໄດ້ຮ່ວມມື ກັບ UNDP ດໍາເນີນໂຄງການ RFF ເພື່ອຄົ້ນຄວ້າເກັບກໍາຂໍ້ມູນຄວາມພ້ອມ ໃນການຫັນເປັນລັດດິຈິຕອນ ທົ່ວປະເທດ (DMA); ຄົ້ນຄວ້າສ້າງມາດຕະຖານຂອບວຽກ ແລະ ແຜນແມ່ບົດລັດດິຈິຕອນ (Digital Government Master Plan, Standard Framework) ແລະ ດໍາເນີນໂຄງການຕົວແບບ (Pilot project) (G-Room, Super App, Skill Assessment), ໄດ້ຮ່ວມມືກັບ NIA ຂອງ ສ.ເກົາຫຼີ ຈັດຕັ້ງປະຕິບັດ ສໍາເລັດໂຄງການ ສູນການຮ່ວມມືລັດຖະບານດິຈິຕອນ (Digital government Cooperation Center, DGCC) ໃນການຄົ້ນຄວ້າສ້າງແຜນພັດທະນາລັດຖະບານດິຈິຕອນ,ມາດຕະຖານໂຄງການຕົວແບບທີ່ຫຼວງພະບາງ, ໄດ້ຮັບການສະໜັບສະໜູນ ຈາກ APT (Asia-Pacific Telecommunity) ຈໍານວນ 2 ໂຄງການ ຄື: 1). “Enhancing the development of telecommunications and internet network dimension and testing systems in service of quality assurance and security.” ແລະ 2). “Implementation of a quality inspection center for mobile broadband services”.

## VI. ຜົນສໍາເລັດການຈັດຕັ້ງປະຕິບັດແຜນວຽກຈຸດສຸມ ໃນແຕ່ລະດ້ານຂອງຂະແໜງ ເຕັກໂນໂລຊີ ແລະ ການສື່ສານ

ນັບແຕ່ປີ 2021 ເປັນຕົ້ນມາ, ຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ໄດ້ສຸມໃສ່ຈັດຕັ້ງຜັນຂະຫຍາຍບັນດາ 9 ແຜນວຽກຈຸດສຸມ, 56 ແຜນງານ ແລະ 151 ໂຄງການ ທີ່ໄດ້ກໍານົດໄວ້ໃນແຜນພັດທະນາ 5 ປີ ຄັ້ງທີ III (2021-2025) ມາເປັນແຜນລະອຽດໃນແຕ່ລະປີ ຢ່າງຕັ້ງໜ້າຊຶ່ງສາມາດຍາດໄດ້ຜົນສໍາເລັດທີ່ພົ້ນເດັ່ນຕາມກອບຂອງແຜນວຽກຈຸດສຸມດັ່ງນີ້:

### 1.1 ແຜນວຽກຈຸດສຸມທີ 1: ການພັດທະນາບຸກຄະລາກອນ

**ການປັບປຸງກົງຈັກການຈັດຕັ້ງ:** ສຳເລັດການປັບປຸງພາລະບົດບາດຂອງກະຊວງ, ຂອງບັນດາກົມ/ທຽບເທົ່າ ແລະ ບໍລິສັດທີ່ຂຶ້ນກັບເປັນຕົ້ນ ບໍລິສັດ ໄປສະນີລາວ ຈຳກັດ ແລະ ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ໂດຍໄດ້ສຳເລັດການປັບ ປຸງກົງຈັກໃຫ້ກະທັດຮັດ, ສອດຄ່ອງຕາມລະບຽບການ ແລະ ມີປະສິດທິພາບທີ່ສູງຂຶ້ນ ດ້ວຍການໂຮມເອົາຫຼາຍພາກສ່ວນເຂົ້າກັນ ຕາມການກຳນົດຕຳແໜ່ງງານຄືນໃໝ່ໃນຂອບເຂດທົ່ວປະເທດ. ຮອດປັດຈຸບັນໄດ້ສຳເລັດກວດຜ່ານການກຳນົດຕຳແໜ່ງງານຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ຈຳນວນ 4 ແຂວງ ແລະ 1 ບໍລິສັດລັດວິສາຫະກິດຄື: ແຂວງຊຽງຂວາງ, ແຂວງບໍ່ແກ້ວ, ແຂວງໄຊສົມບູນ ແລະ ແຂວງຫຼວງນ້ຳທາ ແລະ ບໍລິສັດ ດາວທຽມລາວ-ເອເຊຍປາຊີຟິກ ຈຳກັດ, ສຳເລັດປັບປຸງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງບັນດາພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ. ມາຮອດປັດຈຸບັນໄດ້ສຳເລັດ ການປັບປຸງກົງຈັກການຈັດຕັ້ງ ຂັ້ນສູງກາງ ແລະ ທ້ອງຖິ່ນ ສາມາດສະຫຼຸບໄດ້ດັ່ງນີ້:

+ **ຂັ້ນສູນກາງ:** ໃນໄລຍະຜ່ານ ລັດຖະບານໄດ້ອອກດຳລັດ ສະບັບເລກທີ 625/ນຍ, ລົງວັນທີ 10 ຕຸລາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເຊິ່ງປະກອບມີ 15 ກົມ/ທຽບເທົ່າ ແລະ ໄດ້ປັບປຸງພາລະບົດບາດຂອງບັນດາກົມ/ທຽບເທົ່າ, ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ແລະ ບໍລິສັດລັດວິສາຫະກິດ ທີ່ຂຶ້ນກັບອົງຄະນະພັກກະຊວງໃຫ້ກະທັດຮັດ, ສອດຄ່ອງຕາມລະບຽບການ ແລະ ມີປະສິດທິພາບທີ່ສູງຂຶ້ນ ດ້ວຍການໂຮມເອົາຫຼາຍພາກສ່ວນເຂົ້າກັນຕາມການກຳນົດຕຳແໜ່ງງານຄືນໃໝ່ໃນຂອບເຂດທົ່ວປະເທດ. ເພື່ອໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ ກໍ່ຄືການຮອງຮັບການຫັນເປັນດິຈິຕອນ ຂອງ ສປປ ລາວ, ຄະນະພັກໄດ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ແລະ ສັບຊ້ອນພະນັກງານພາຍໃນກະຊວງ ໂດຍໄດ້ປະສານສົມທົບກັບ ກະຊວງພາຍໃນ ຄົ້ນຄວ້າສ້າງຕັ້ງກອງເລຂາກອງທຶນພັດທະນາໂທລະຄົມມະນາຄົມ ແລະ ຫັນເປັນດິຈິຕອນ ຕາມ ດຳລັດຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍ ກອງທຶນພັດທະນາໂທລະຄົມະນາຄົມ ແລະ ການຫັນເປັນດິຈິຕອນ, ສະບັບເລກທີ 278/ລບ, ລົງວັນທີ 22 ພຶດສະພາ 2024 ແລະ ສ້າງຕັ້ງສູນຂໍ້ມູນແຫ່ງຊາດ ເປັນກົງ ຈັກຂັ້ນກົມທີ່ຂຶ້ນກັບກະຊວງເຕັກໂນໂລຊີ ແລະ ການສື່ສານ ຕາມດຳລັດ ຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍ ສ້າງສູນຂໍ້ມູນແຫ່ງຊາດ ສະບັບເລກທີ 113/ນຍ, ລົງວັນທີ 14 ກຸມພາ 2025. ສະນັ້ນ, ປະຈຸບັນກົງຈັກຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຈຶ່ງປະກອບມີ 1 ຫ້ອງການ, 8 ກົມ, 4 ສູນ, 1 ອົງການ, 2 ສະຖາບັນ ແລະ 1 ກອງທຶນ. ພ້ອມດຽວກັນນີ້ ກໍ່ໄດ້ປັບປຸງພາລະບົດບາດ ແລະ ກົງຈັກການຈັດຕັ້ງຄືນໃໝ່ຂອງ ບັນດາກົມ/ທຽບເທົ່າ ແລະ ມີກົງຈັກຂັ້ນພະແນກທັງໝົດ 101 ພະແນກ.
+ **ຂັ້ນທ້ອງຖິ່ນ:**

- **ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ແລະ ນະຄອນຫຼວງ:** ຄະນະປັບປຸງກົງຈັກການຈັດຕັ້ງຂັ້ນກະຊວງໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ກົມວິຊາການ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ນະຄອນຫຼວງ ປະກອບຄຳຄິດຄຳເຫັນ, ຄົ້ນຄວ້າ ແລະ ປັບປຸງ ໂດຍປະຕິບັດຕາມແຈ້ງການຂອງກະຊວງພາຍໃນ ສະບັບເລກທີ 175/ພນ, ລົງວັນທີ 24 ກັນຍາ 2021 ແລະ ໄດ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວວຽກງານຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ, ສະບັບເລກທີ 732/ກຕສ, ລົງວັນທີ 28 ກຸມພາ 2022. ພ້ອມນີ້, ກໍ່ຍັງໄດ້ອອກແຈ້ງການໃຫ້ບັນດາພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ/ ນະຄອນຫຼວງ ຜັນຂະຫຍາຍການກຳນົດຈຳນວນກົງຈັກຊ່ວຍວຽກໃຫ້ສອດຄ່ອງກັບສະພາບຕົວຈິງຂອງແຂວງຕົນ ໃນເດືອນມິຖຸນາ 2022.
- **ຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ເມືອງ:** ສຳລັບການປັບປຸງກົງຈັກຂອງຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ເມືອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໄດ້ສຳເລັດການອອກຂໍ້ຕົກລົງ ວ່າດ້ວຍ ການຈັດ ຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ປະຈຳເມືອງ, ເທດສະບານ, ນະຄອນ

ສະບັບເລກທີ 2060/ກຕສ, ລົງວັນທີ 03 ມິຖຸນາ 2022 ເຊິ່ງໄດ້ກຳນົດແຕ່ພາລະບົດບາດໜ້າທີ່ລວມ ແລະ ຂອບເຂດສິດໄວ້ເທົ່ານັ້ນ, ສ່ວນກົງຈັກ ແມ່ນມອບໃຫ້ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ລົງລືມທີ່ບອິງການປົກຄອງພະແນກພາຍໃນ ແລະ ຄະນະຈັດຕັ້ງຂັ້ນທ້ອງຖິ່ນຂອງຕົນ ເພື່ອກຳນົດກົງຈັກການຈັດຕັ້ງໂດຍອີງໃສ່ສະພາບຈຸດພິເສດຂອງແຕ່ລະທ້ອງຖິ່ນ.

ປັດຈຸບັນ ກົງຈັກການຈັດຕັ້ງຂັ້ນກະຊວງເຕັກໂນໂລຊີ ແລະ ການສື່ສານ ປະກອບມີ 17 ກົມ/ທຽບເທົ່າ; ໃນຂັ້ນທ້ອງຖິ່ນ: ປະກອບມີ 18 ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ແລະ 62 ຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ເມືອງ, ໃນນັ້ນ ເມືອງ 3 ສ້າງມີທັງໝົດ 23 ເມືອງ;

**ການຄຸ້ມຄອງ ພະນັກງານ-ລັດຖະກອນ:** ໃນໄລຍະ 5 ປີ ຜ່ານມາສາມາດຄົ້ນຄວ້າ, ແຕ່ງຕັ້ງພະນັກງານໃນຕຳແໜ່ງບໍລິຫານ ປະເພດຕ່າງໆ ແລະ ການນຳຂັ້ນສູງ ທັງໝົດ 141 ທ່ານ, ຍິງ 52 ທ່ານ, ໃນນັ້ນ ຮອງລັດຖະມົນຕີ 3 ທ່ານ (ຍົກຍ້າຍມາຈາກພາກສ່ວນອື່ນ ແລະ ໄດ້ຮັບການແຕ່ງຕັ້ງ ເປັນ ຮອງລັດຖະມົນຕີ 1 ທ່ານ), ຫົວໜ້າກົມ/ທຽບເທົ່າ 12 ທ່ານ, ຍິງ 2 ທ່ານ, ຮອງຫົວໜ້າກົມ/ທຽບເທົ່າ 13 ທ່ານ, ຍິງ 3 ທ່ານ, ຫົວໜ້າພະແນກ 23 ທ່ານ, ຍິງ 12 ທ່ານ, ຮອງຫົວໜ້າພະແນກ 90 ທ່ານ, ຍິງ 35 ທ່ານ; ພ້ອມນີ້ ກໍ່ໄດ້ສັບຊ້ອນ, ຍົກຍ້າຍພະນັກງານ ພາຍໃນກະຊວງ ຈຳນວນ 15 ທ່ານ, ຍິງ 5 ທ່ານ; ຍົກຍ້າຍພະນັກງານ ຈາກສູນກາງລົງທ້ອງຖິ່ນ ມີ 15 ທ່ານ, ຍິງ 5 ທ່ານ, ຍົກຍ້າຍພະນັກງານຕາມສາຍຕັ້ງຢູ່ຂັ້ນທ້ອງຖິ່ນ ໄປພາກສ່ວນອື່ນ ຈຳນວນ 25 ທ່ານ, ຍິງ 7 ທ່ານ; ຮັບພະນັກງານ-ລັດຖະກອນໃໝ່ ຈຳນວນ 10 ທ່ານ, ຍິງ 5 ທ່ານ, ພະນັກງານພັກການ-ຮັບອຸດໜູນບຳນານທັງຢູ່ສູນກາງ ແລະ ທ້ອງຖິ່ນ ຈຳນວນ 97 ທ່ານ, ຍິງ 25 ທ່ານ ໃນນັ້ນ ຢູ່ກະຊວງ 35 ທ່ານ, ຍິງ 10 ທ່ານ, ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ແລະ ຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ເມືອງ 62 ທ່ານ, ຍິງ 15 ທ່ານ. ພ້ອມດຽວກັນນີ້ ກໍ່ໄດ້ປົດປ່ອຍພະນັກງານທີ່ປະລະໜ້າທີ່ອອກຈາກການເປັນລັດຖະກອນຈຳ ນວນ 7 ທ່ານ, ຍິງ 2 ທ່ານ ແລະ ພະນັກງານອອກສ້າງເສດຖະກິດຄອບຄົວ ຈຳນວນ 62 ທ່ານ, ຍິງ 29 ທ່ານ; ປະຈຸບັນທົ່ວຂະແໜງເຕັກໂນໂລຊີ ແລະ ການສື່ສານ ມີລັດຖະກອນທັງໝົດ ຈຳນວນ 1,379 ທ່ານ, ຍິງ 552 ທ່ານ ລາຍລະອຽດດັ່ງລຸ່ມນີ້:

- ❖ ຂັ້ນສູນກາງ: ມີລັດຖະກອນທັງໝົດຈຳນວນ 596 ທ່ານ, ຍິງ 255 ທ່ານ ທຽບເທົ່າ 43.21% ຂອງລັດຖະກອນທັງໝົດ ຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ໃນນີ້ ມີລັດຖະມົນຕີ, ມີຮອງລັດຖະມົນຕີ ຈຳນວນ 5 ທ່ານ ແລະ ມີຜູ້ຊ່ວຍຄະນະນຳກະຊວງ ຈຳນວນ 3 ທ່ານ, ຕຳແໜ່ງບໍລິຫານປະເພດ 2 ມີ 20 ທ່ານ, ຍິງ 3 ທ່ານ, ຕຳແໜ່ງບໍລິຫານປະເພດ 3 ມີ 45 ທ່ານ, ຍິງ 14 ທ່ານ, ຕຳແໜ່ງບໍລິຫານປະເພດ 4 ມີ 88 ທ່ານ, ຍິງ 32 ທ່ານ, ຕຳແໜ່ງບໍລິຫານປະເພດ 5 ມີ 98 ທ່ານ, ຍິງ 50 ທ່ານ.
- ❖ ຂັ້ນທ້ອງຖິ່ນ: ມີລັດຖະກອນທັງໝົດຈຳນວນ 781 ທ່ານ, ຍິງ 297 ທ່ານ ທຽບເທົ່າ 56.63% ຂອງລັດຖະກອນທັງໝົດຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ, ໃນນີ້ ຂັ້ນແຂວງມີ 506 ທ່ານ, ຍິງ 199 ທ່ານ ທຽບເທົ່າ 64.79% ຂອງພະນັກງານທັງໝົດທ້ອງຖິ່ນ, ຂັ້ນເມືອງມີ 275 ທ່ານ, ຍິງ 98 ທ່ານ ທຽບເທົ່າ 35.21% ຂອງພະນັກງານທັງໝົດທ້ອງຖິ່ນ, ຫົວໜ້າພະແນກມີ 18 ທ່ານ, ຮອງຫົວໜ້າພະແນກມີ 48 ທ່ານ, ຍິງ 6 ທ່ານ, ຫົວໜ້າຂະແໜງມີ 68 ທ່ານ, ຍິງ 20 ທ່ານ, ຮອງຫົວໜ້າຂະແໜງມີ 99 ທ່ານ, ຍິງ 38 ທ່ານ. ຫົວໜ້າຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ປະຈຳເມືອງມີ 55 ທ່ານ, ຍິງ 09 ທ່ານ, ຮອງຫົວໜ້າຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ເມືອງມີ 64 ທ່ານ, ຍິງ 17 ທ່ານ, ຫົວໜ້າໜ່ວຍງານມີ 46 ທ່ານ, ຍິງ 21 ທ່ານ ແລະ ຮອງຫົວໜ້າໜ່ວຍງານມີ 29 ທ່ານ, ຍິງ 09 ທ່ານ.

**ການກໍ່ສ້າງຍົກລະດັບບຸກຄະລາກອນ ເຕັກໂນໂລຊີ ແລະ ການສື່ສານ**: ໄດ້ສາເລັດການນຳສົ່ງພະນັກງານຂັ້ນນຳພາຄຸ້ມຄອງຂັ້ນສູງ ໄປຄົ້ນຄວ້າ ແລະ ແລກປ່ຽນບົດຮຽນຫົວຂໍ້ສະເພາະ ໄລຍະ 14 ວັນ ຊຸດທີ I ແລະ II ປະຈຳປີ 2025 ຈຳນວນ 02 ສະຫາຍ (ທີ່ ສສ ຫວຽດນາມ), ສຳເລັດການໄປບຳລຸງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄລຍະ 64 ວັນ ຊຸດທີ XXI ທີ່ວິທະຍາຄານປ້ອງກັນຊາດໄກສອນ ພົມວິຫານ ປະຈຳປີ 2025 ຈຳນວນ 01 ສະຫາຍ. ສຳເລັດບຳລຸງຍົກລະດັບ ດ້ານທິດສະດີການເມືອງ-ການປົກຄອງ ພາຍໃນ ແລະ ຕ່າງປະເທດ ທັງໝົດ 188 ສະຫາຍ, ຍິງ 77 ສະຫາຍ ເທົ່າກັບ 107.42% ຂອງແຜນການ 5 ປີ (ແຜນການ 175) ໃນນັ້ນ, ລະດັບຂັ້ນສູງ (ໄລຍະ 4 ເດືອນ, 5 ເດືອນ ລະບົບເລັ່ງລັດ ແລະ ລະບົບ 9 ເດືອນ) ທັງພາຍໃນ ແລະ ຕ່າງປະເທດ ຈຳນວນ 19 ສະຫາຍ, ເປັນຍິງ 7 ສະຫາຍ; ບຳລຸງທິດສະດີການເມືອງຂັ້ນກາງ ລະບົບ 6 ເດືອນ 8 ສະຫາຍ, ຍິງ 4 ສະຫາຍ; ຍົກລະດັບທິດສະດີການເມືອງ-ການປົກຄອງ

ໄລຍະສັ້ນ (45 ວັນ) ໄດ້ທັງໝົດ 3 ຊຸດ ຈຳນວນ 161 ສະຫາຍ, ເປັນຍິງ 66 ສະຫາຍ; ຈັດຝຶກອົບຮົມວຽກງານກໍ່ສ້າງພັກ ຊຸດທີ IV, V ໃຫ້ສະຫາຍເລຂາ, ຮອງເລຂາຄະນະໜ່ວຍພັກ, ຄະນະຮາກຖານ ແລະ ສະຫາຍກອງເລຂາໜ່ວຍພັກ ທີ່ຂຶ້ນກັບອົງຄະນະພັກ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຈຳນວນ 190 ສະຫາຍ, ຍິງ 66 ສະຫາຍ ແລະ ການຝຶກອົບຮົມວຽກງານໂຄສະນາ-ປາຖະກະຖາ ຊຸດທີ V ຈຳນວນ 40 ສະຫາຍ, ຍິງ 14 ສະຫາຍ; ນຳສົ່ງພະນັກງານໄປຄົ້ນຄວ້າປະລິນຍາໂທ ຢູ່ສະຖາບັນການເມືອງການປົກຄອງແຫ່ງຊາດຈຳນວນ 7 ສະຫາຍ, ຍິງ 3 ສະຫາຍ; ສຳເລັດການຈັດກອງປະຊຸມຝຶກອົບຮົມວຽກງານກວດກາພັກ-ລັດ ຊຸດທີ 1 ໃຫ້ສະມາຊິກພັກ-ພະນັກງານ ແລະ ຜູ້ເຮັດວຽກງານກວດກາຂອງບັນດາໜ່ວຍພັກຮາກຖານກົມ/ທຽບເທົ່າ ແລະ ຄະນະພັກຮາກຖານບັນ ດາບໍລິສັດ ວິສາຫະກິດ ທີ່ຂຶ້ນກັບອົງຄະນະພັກກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຊຶ່ງມີຜູ້ເຂົ້າຮ່ວມຈຳນວນທັງໝົດ 41 ສະຫາຍ, ຍິງ 21 ສະຫາຍ.

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໄດ້ສົ່ງພະນັກງານໄປຍົກລະດັບທາງດ້ານວິຊາສະເພາະໄລຍະຍາວພາຍໃນ ແລະ ຕ່າງປະເທດ ຈຳນວນ 75 ຄົນ, ຍິງ 26 (ລະດັບປະລິນຍາເອກ 3 ຄົນ, ຍິງ 1 ຄົນ ເທົ່າກັບ 60% ຂອງແຜນການ (ແຜນການ 5 ຄົນ); ລະດັບປະລິນຍາໂທ 62 ຄົນ, ຍິງ 22 ຄົນ ປະຕິບັດໄດ້ລື່ນແຜນ 60%. ໃນນັ້ນ, ພະນັກງານຄູ ກຳລັງສຶກສາ ໃນລະດັບປະລິນຍາໂທ 5 ຄົນ ເທົ່າກັບ 33.33% ຂອງແຜນການ (ແຜນການ 15 ຄົນ); ສຳເລັດຍົກລະດັບປະລິນຍາຕີ ພາຍໃນ ແລະ ຕ່າງປະເທດ 10 ຄົນ, ຍິງ 3 ຄົນ ເທົ່າກັບ 25% ຂອງແຜນການ (ແຜນການ 40 ຄົນ); ແລະ ນຳສົ່ງພະນັກງານ-ລັດຖະກອນ ເຂົ້າຮ່ວມຝຶກອົບຮົມ ແລະ ສຳມະນາໄລຍະສັ້ນ ທັງພາຍໃນ ແລະ ຕ່າງປະເທດ ຈຳນວນ 1,225 ເທື່ອຄົນ, ຍິງ 605 ຄົນ ເທົ່າກັບ 123% ຂອງແຜນການ (ແຜນການ 1,000 ຄົນ).

ຄຽງຄູ່ກັນນັ້ນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຍັງໄດ້ໃຫ້ຄວາມສຳຄັນໃນການສ້າງແມ່ຍິງໃນຕຳແໜ່ງນຳພາ-ຄຸ້ມຄອງ ຂັ້ນຄະນະກົມ, ຂັ້ນຄະນະພະແນກ ຢູ່ສູນກາງ ໄດ້ທັງໝົດ 99 ຄົນ ທຽບໃສ່ພະນັກງານຕຳແໜ່ງບໍລິຫານ ກວມເອົາ 38.22%; ຂັ້ນທ້ອງຖິ່ນ ໄດ້ທັງໝົດ 120 ຄົນ ທຽບໃສ່ພະນັກງານທີ່ມີຕຳແໜ່ງບໍລິຫານ ກວມເອົາ 28.10 %; ສ້າງພະນັກງານເພດຍິງ ໄດ້ຮັບຍົກລະດັບທິດສະດີການເມືອງ-ການປົກຄອງ 77 ສະຫາຍ ກວມເອົາ 41%.

**ການປັບປຸງ ສະຖາບັນເຕັກໂນໂລຊີ ແລະ ການສື່ສານຂໍ້ມູນຂ່າວສານເພື່ອເປັນບ່ອນສ້າງຊັບພະຍາກອນມະນຸດ:** ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ມີເປົ້າໝາຍຈະຍົກລະດັບສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໃຫ້ກາຍເປັນສະຖາບັນທຽບເທົ່າມະຫາວິທະຍາໄລ ຫຼື ມະຫາວິທະຍາໄລ ເພື່ອສ້າງບຸກຄະລາກອນດ້ານແຮງງານທີ່ມີທັກສະດ້ານດີຈີຕອນຕອບສະໜອງໃຫ້ແກ່ສັງຄົມເຊິ່ງປັດຈຸບັນສະຖາບັນມີນັກສຶກສາທັງໝົດ 274 ຄົນ, ຍິງ 86 ຄົນ.

ໃນໄລຍະ 5 ປີ ຜ່ານມາ ໄດ້ເອົາໃຈໃສ່ ປັບປຸງໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆໃນສະຖາບັນ ເປັນຕົ້ນ: 1) ສຳເລັດການສ້າງສູນພາສາຫວຽດ 1 ສູນ (B1-B6) ມີຜູ້ເຂົ້າຮ່ວມ 51 ຄົນ ແລະ ເປີດນຳໃຊ້ເປັນທາງການໂດຍໄດ້ຮັບການຊ່ວຍເຫຼືອ ຈາກ ສສ ຫວຽດນາມ; 2) ສຳເລັດການກໍ່ສ້າງສູນຝຶກອົບຮົມ ໄອຊີທີ ໂດຍໄດ້ຮັບການຊ່ວຍເຫຼືອລ້າຈາກລັດຖະບານແຫ່ງ ສປ ຈີນ ໃນມູນຄ່າ 85.72 ລ້ານຢວນ (ປະມານ 150 ຕື້ກວ່າກີບ); 3) ສຳເລັດການສ້າງສູນຝຶກອົບຮົມເກົາຫຼີ-ອາຊຽນ ໂດຍໄດ້ຮັບການຊ່ວຍເຫຼືອ ຈາກໜ່ວຍງານສົ່ງເສີມອຸດສາຫະກຳໄອທີ ແຫ່ງຊາດ (NIPA) ສ.ເກົາຫລີ, 4) ສຸມໃສ່ສ້າງ ແລະ ປັບປຸງ ຫຼັກສູດການຮຽນ-ການສອນເປັນຕົ້ນ ໄດ້ນຳໃຊ້ລະບົບ E-Testing, E-Score, Online Learning ແລະ ໄດ້ພັດທະນາລະບົບການສອບເສັງຮັບນັກສຶກສາເຂົ້າຮຽນໃໝ່ ເປັນຮູບແບບອອນລາຍ (ທາງໄກ); ປັບປຸງ ບັນດາຫຼັກສູດຊັ້ນສູງ 4 ຫຼັກສູດທີ່ມີຢູ່ໃຫ້ເປັນລະດັບປະລິນຍາຕີ ສຳເລັດ 70% ແລະ ສຳເລັດສ້າງ ແລະ ນຳໃຊ້ຫຼັກສູດປະລິນຍາຕີ 2 ສາຂາ, ຕີລາຄາການຈັດຕັ້ງປະຕິບັດ 50%; ປັບປຸງລາຍວິຊາ ແລະ ເນື້ອໃນຫຼັກສູດສຳເລັດ 7 ວິຊາ, ສ້າງລາຍວິຊາໃໝ່ໄດ້ 16 ລາຍວິຊາຈາກແຜນ 36 ລາຍວິຊາ ຕີລາຄາການຈັດຕັ້ງປະຕິບັດ 44.4%; ສ້າງນັກສຶກສາດ້ານໂທລະຄົມ/ໄອຊີທີ ທີ່ມີຄຸນນະພາບຕາມແຜນແມ່ນ 250 ຄົນ/ປີ, ຕົວຈິງສາມາດປະຕິບັດໄດ້ 837 ຄົນ ກວມເອົາ 66.96%; ສ້າງບຸກຄະລາກອນໃນຫຼັກສູດໃນໄລຍະສັ້ນ ໂດຍມີພະນັກງານພາຍໃນກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ບໍລິສັດຜູ້ໃຫ້ບໍລິການທາງດ້ານໂທລະຄົມ ແລະ ໄອທີ, ບຸກຄົນທົ່ວໄປເຂົ້າຮ່ວມ ຈຳນວນ 1,276 ຄົນ.

### 1.2 ແຜນວຽກຈຸດສຸມທີ 2: ສ້າງ ແລະ ປັບປຸງນິຕິກຳ ຮອງຮັບການຫັນເປັນດີຈີຕອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ສຳເລັດສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທັງໝົດ 43 ສະບັບ ເທົ່າກັບ 86% ຂອງແຜນການ (ແຜນການ 50 ສະບັບ) ໃນນັ້ນສຳເລັດສ້າງແຜນຍຸດ ຈຳນວນ 5 ສະບັບຄື: 1) ແຜນຍຸດທະສາດການພັດທະນາເສດຖະກິດດີຈີຕອນແຫ່ງຊາດ ໄລຍະ 10 ປີ (2021-2030), 2) ຍຸດທະສາດແຫ່ງຊາດ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ 2021-2025, 3) ແຜນຍຸດທະສາດການພັດທະນາຄວາມປອດໄພໄຊເບີແຫ່ງຊາດ ຮອດປີ 2035, 4) ແຜນຜັງແຫ່ງຊາດກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ແລະ 5) ແຜນຍຸດທະສາດການບໍລິຫານລັດ ແບບດີຈີຕອນ 10 ປີ (2026-2035). ສຳເລັດແຜນພັດທະນຳຈຳນວນ 2 ສະບັບຄື: 1) ແຜນພັດທະນາເສດຖະກິດດີຈີຕອນ ແຫ່ງຊາດ ໄລຍະ 10 ປີ (2021-2025) ແລະ 2) ແຜນພັດທະນາເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ III (2021-2025). ນອກຈາກນີ້, ສຳເລັດກົດໝາຍຈຳນວນ 4 ສະບັບ ຄື: 1) ສຳເລັດປັບປຸງກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ), 2) ສຳເລັດສ້າງກົດໝາຍວ່າດ້ວຍ ເຕັກໂນໂລຊີລະດັບສູງ, 3) ສຳເລັດປັບປຸງກົດໝາຍ ວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ, 4) ກົດໝາຍວ່າດ້ວຍ ຄວາມປອດໄພໄຊເບີ. ສຳເລັດດຳລັດຈຳນວນ 3 ສະບັບຄື: 1) ດຳລັດວ່າດ້ວຍ ບັນຊີເຕັກໂນໂລຊີ, 2) ການສ້າງດາລັດ ວ່າດ້ວຍ ການບໍລິການ ແລະ ບໍລິຫານລັດດີຈີຕ໋ອນ, 3) ດຳລັດວ່າດ້ວຍ ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ແລະ 4) ດຳລັດວ່າດ້ວຍລະບົບສາຍສົ່ງໂທລະຄົມ, ແລະ ສຳເລັດຂໍ້ຕົກລົງ 28 ສະບັບ ແລະ ລະບຽບການຈຳນວນ 1 ສະບັບຄື: 1) ຂໍ້ຕົກລົງ ວ່າດ້ວຍມາດຕະຖານເຕັກນິກເວັບໄຊຂອງພາກລັດ, 2) ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ລະຫັດຊື່ອິນເຕີເນັດ, 3) ສາເລັດຂໍ້ຕົກລົງ ວ່າດ້ວຍ ການນາໃຊ້ລາຍເຊັນເອເລັກໂຕຣນິກ, 4) ຂໍ້ຕົກລົງ ວ່າດ້ວຍການດຳເນີນກິດຈະການລາຍເຊັນເອເລັກໂຕຣນິກ, 5) ຂໍ້ຕົກລົງ ວ່າດ້ວຍການປົກປ້ອງຜູ້ໃຊ້ບໍລິການດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ, 6) ຂໍ້ຕົກລົງ ວ່າດ້ວຍລະບົບຫ້ອງການທັນສະໄໝ (e-office), 7) ຂໍ້ຕົກລົງ ວ່າດ້ວຍການຢັ້ງຢືນຄື້ນຄວາມຖີ່ວິທະຍຸສື່ສານ ສຳລັບເຄື່ອງບິນບໍ່ມີຄົນຂັບ, 8) ຂໍ້ຕົກລົງ ວ່າດ້ວຍຄຸນນະພາບເຄືອຂ່າຍໂທລະສັບມືຖື, ອິນເຕີເນັດ ແລະ ການບໍລິການ, 9) ຂໍ້ຕົກລົງ ວ່າດ້ວຍການເຊື່ອມຕໍ່ລະບົບເຄືອຂ່າຍອິນເຕີເນັດ, 10) ຂໍ້ຕົກລົງ ວ່າດ້ວຍລະບົບສື່ສານຜ່ານສະຖານີດາວທຽມຂະໜາດນ້ອຍ, 11) ຂໍ້ຕົກລົງ ວ່າດ້ວຍການກວດກາຄື້ນຄວາມຖີ່ວິທະຍຸສື່ສານ, 12) ຂໍ້ຕົກລົງ ວ່າດ້ວຍການເຮັດທົດລອງທຸລະກຳຊັບສິນດີຈີຕອນ, 13) ຂໍ້ຕົກລົງ ວ່າດ້ວຍມາດຕະຖານເຕັກນິກການເຊື່ອມໂຍງຂໍ້ມູນຂອງລະບົບບໍລິຫານລັດດ້ວຍດີຈີຕອນ, 14) ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງເລກໝາຍໂທລະສັບ, 15) ຂໍ້ຕົກລົງ ວ່າດ້ວຍສະຖານີດາວທຽມພາກພື້ນດິນ, 16) ຂໍ້ຕົກລົງ ວ່າດ້ວຍການຮັບຝາກ, ຈັດສົ່ງ ແລະ ແຈກຢາຍ ເຄື່ອງຝາກທາງໄປສະນີ, 17) ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ເລກໝາຍອິນເຕີເນັດ, 18) ຂໍ້ຕົກລົງ ວ່າດ້ວຍລະບົບການສື່ສານພາກລັດ , 19) ຂໍ້ຕົກລົງ ວ່າດ້ວຍການສ້າງ ແລະ ພັດທະນາແອັບພິເຄຊັນໃຫ້ມີຄວາມປອດໄພ, 20) ຂໍ້ຕົກລົງ ວ່າດ້ວຍການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ, 21) ຂໍ້ຕົກລົງ ວ່າດ້ວຍການພິສູດ ແລະ ຢັ້ງຢືນຕົວຕົນທາງດີຈີຕອນ, 22) ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງຄວາມປອດໄພດ້ານຄວາມແຮງທົ່ງແມ່ເຫຼັກໄຟຟ້າຂອງສະຖານີຮັບສົ່ງສັນຍານໂທລະສັບເຄື່ອນທີ່, 23) ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງອຸປະກອນ ໂທລະຄົມມະນາຄົມ ແລະ ໄອຊີທີ (ICT), 24) ຂໍ້ຕົກລົງ ວ່າດ້ວຍລະບົບຈັດເກັບ ແລະ ນຳໃຊ້ເອກະສານຮ່ວມກັນຂອງພາກລັດ (G-share/G-Drive), 25) ຂໍ້ຕົກລົງ ວ່າດ້ວຍມາດຕະຖານສະຖານທີ່ໃຫ້ບໍລິການໄປສະນີ, 26) ຂໍ້ຕົກລົງ ວ່າດ້ວຍ ເລກໝາຍໂທລະສັບພິເສດ, 27) ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນເລກໝາຍໂທລະສັບ, 28) ຂໍ້ຕົກລົງ ວ່າດ້ວຍ ມາດຕະຖານຄວາມປອດໄພຂອງເຄື່ອງຝາກ ແລະ ຄວາມໄວຂອງການບໍລິການ, 29) ສຳເລັດການສ້າງລະບຽບການຄຸ້ມຄອງການການໃຫ້ບໍລິການສູນຂໍ້ມູນ.

### 1.3 ແຜນວຽກຈຸດສຸມທີ 3: ພັດທະນາລະບົບບໍລິຫານລັດໃຫ້ເປັນທັນສະໄໝ

❖ **ລະບົບຫ້ອງການລັດ:**

- ພັດທະນາລະບົບ ບໍລິການພາກລັດຜ່ານປະຕູດຽວ (Government Single Sign On): ສຳເລັດການສ້າງລະບົບເຊີເວີຈຳລອງ (VM) ໃນລະບົບ Mini G-Cloud ເພື່ອສ້າງຖານຂໍ້ມູນການເຊື່ອມຕໍ່ລະບົບ Gov-X ກັບລະບົບ

ຖານຂໍ້ມູນໃບຂັບຂີ່ຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ, ສຳເລັດການສະໜອງ Disk ຊ່ອງ E: ເພີ່ມໃຫ້ກັບລະບົບເຊີເວີ ຖານຂໍ້ມູນໃບຂັບຂີ່ຂອງກະຊວງ ໂຍທາທິການ ແລະ ຂົນສົ່ງທີ່ເຊື່ອມຕໍ່ກັບລະບົບ Gov-X;

- ສຳເລັດການຕິດຕັ້ງ, ພັດທະນາ ແລະ ນຳໃຊ້ລະບົບຈັດເກັບ ແລະ ນຳໃຊ້ເອກະສານຮ່ວມກັນຂອງພາກລັດ G-Share/G-Drive ຮອງຮັບ 16,000 ບັນຊີ, ຂະຫຍາຍການນຳໃຊ້ໃຫ້ບັນດາກະຊວງ ແລະ ອົງການຈັດຕັ້ງທຽບເທົ່າທັງສູນກາງ ແລະ ທ້ອງຖິ່ນຈຳນວນທັງໝົດ 15,261 ບັນຊີ (ຂັ້ນສູງກາງ 6,959 ບັນຊີ, ຂັ້ນທ້ອງຖິ່ນ 8,302 ບັນຊີ);
- ສຳເລັດຕິດຕັ້ງລະບົບກອງປະຊຸມທາງໄກ (VC) ໃຫ້ 42 ພາກສ່ວນ (ອຸປະກອນຈຳນວນ 68 ຊຸດ), ໃນຊ່ວງການແຜ່ລະບາດ ຂອງເຊື້ອພະຍາດໂຄວິດ-19 ໄດ້ປະກອບສ່ວນ ຮັບໃຊ້ໃຫ້ກັບກອງປະຊຸມທີ່ສຳຄັນຕ່າງໆ ຂອງພັກຂອງຊາດຫຼາຍກອງປະຊຸມ ເປັນຕົ້ນ: ກອງປະຊຸມຄະນະເລຂາທິການສູນກາງພັກກັບບັນດາກະຊວງ ແລະ ບັນດາຕ່າງແຂວງທົ່ວປະເທດ, ກອງປະຊຸມທ່ານນາຍົກ ແລະ ຮອງນາຍົກ ກັບ ກະຊວງ ແລະ ບັນດາແຂວງ ທົ່ວປະເທດ, ກອງປະຊຸມສຸດຍອດແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ, ກອງປະຊຸມທ່ານນາຍົກສາມປະເທດ ສປປ ລາວ, ສສ ຫວຽດນາມ ແລະ ກຳປູເຈຍ ແລະ ອື່ນໆ;
- ລະບົບອີເມວ (e-mail): ສາເລັດ ການຂະຫຍາຍການນຳໃຊ້ ໂດຍສຳເລັດສ້າງບັນຊີລາຍຊື່ຜູ້ນຳໃຊ້ ລະບົບຈົດໝາຍເອເລັກໂຕຣນິກ (e-Mail) ໃຫ້ແກ່ບັນດາອົງການຈັດຕັ້ງພັກ-ລັດ ມີບັນຊີລາຍຊື່ຜູ້ນຳໃຊ້ລະບົບ ຈຳນວນ 6,562 ບັນຊີ (ສູນກາງ 4,491 ແລະ ທ້ອງຖິ່ນ 2,071 ບັນຊີລາຍຊື່);
- ເວັບໄຊພາກລັດ (G-Web Platform): ສຳເລັດການສ້າງເວັບໄຊ ໃຫ້ແກ່ບັນດາອົງການຈັດຕັ້ງພັກ-ລັດ ທັງສູນກາງ ແລະ ທ່ອງຖິ່ນ ໃນການສ້າງເວັບໄຊຂອງຕົນເອງ ດ້ວຍການນຳໃຊ້ເວັບໄຊພາກລັດ (G-Web Platform) ໄດ້ ຈຳນວນ 11 ເວັບໄຊ. ພ້ອມກັນນັ້ນກໍ່ໄດ້ຝຶກອົບຮົມການຕິດຕັ້ງ, ຄຸ້ມຄອງ ແລະ ນຳໃຊ້ໃຫ້ກັບຫ້ອງວ່າການສູນກາງພັກ ແລະ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ. ປະຈຸບັນມີ 55 ເວັບໄຊ (ສູນກາງ 23 ເວັບໄຊ, ທ້ອງຖິ່ນ 32 ເວັບໄຊ) ທີ່ນຳໃຊ້ລະບົບເວັບໄຊພາກລັດ (G-Web Platform v2).

❖ **ລະບົບບໍລິການລັດ:**

- ໄດ້ສຳເລັດການພັດທະນາລະບົບກະດານຂໍ້ມູນຊຸມຊົນພາກລັດ (LaoPedia) ເພື່ອເປັນບ່ອນຈັດຕັ້ງໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ຂອງກະຊວງ/ອົງການພັກ-ລັດ ສູ່ປະຊາຊົນ ແລະ ສັງຄົມ ຜ່ານເວັບໄຊ http://www.laopedia.gov.la ປະຈຸບັນມີຂໍ້ມູນຫຼາຍກວ່າ 355 ເອກະສານ;
- ໄດ້ສຳເລັດການອອກແບບພື້ນຖານ ແລະ ເພີ່ມການບໍລິການ ແລະ ເຊື່ອມກັບ ການບໍລິການອອນລາຍຂອງບັນດາກະຊວງ ແລະ ອົງການທຽບເທົ່າຂອງພັກ-ລັດເຊິ່ງໄດ້ສາມາດເຂົ້າຜ່ານ www.laoportal.gov.la, ມີຂໍ້ມູນບໍລິການຂອງ 14 ກະຊວງ ແລະ 18 ແຂວງ/ນະຄອນຫຼວງ;
- ສ້າງແຜນພັດທະນາລະບົບເຊື່ອມໂຍງຂໍ້ມູນພາກລັດ (GDX) ເພື່ອແລກປ່ຽນ ແລະ ລວມສູນຂໍ້ມູນພາກລັດ, ລະບົບຂໍ້ມູນເປີດພາກລັດ (OGD) ເພື່ອໃຫ້ທຸກພາກສ່ວນສາມາດນຳໃຊ້ເພື່ອພັດທະນາບໍລິການ ໃຫ້ແກ່ປະຊາຊົນ, ລວມທັງລະບົບ Dashboard ເພື່ອເປັນມາດຕະຖານໃນການບໍລິຫານຂໍ້ມູນສະຖິຕິພາກລັດ ໃຫ້ເປັນເອກະພາບ;
- ສຳເລັດການພັດທະນາລະບົບສູນຮຽນຮູ້ທາງໄກແບບເປີດ (L-MOOC) ຮ່ວມກັບ ສສ ຫວຽດນາມ ເພື່ອໃຫ້ສະຖາບັນ ເຕັກໂນໂລຊີ ແລະ ການສື່ສານ ນຳໃຊ້ເປີດຫຼັກສູດຝຶກອົບຮົມເປີດກວ້າງແບບອອນລາຍ ໃຫ້ບັນດາພະນັກງານ ແລະ ບຸກຄົນທົ່ວໄປ.
- ສຳເລັດການພັດທະນາລະບົບນາມບັດເອເລັກໂຕນິກ V-card ເພື່ອຄວາມສະດວກ, ວ່ອງໄວ ແລະ ທັນສະໄໝ, ມີການນຳໃຊ້ຈຳນວນ 32 ຄັ້ງ.
- ສຳເລັດການພັດທະນາລະບົບ ລົງຄະແນນສຽງ (e-Vote) ເພື່ອໃຊ້ລົງທະບຽນແບບອອນລາຍ ທີ່ມີຄວາມຖືກຕ້ອງໂປ່ງໃສ ແລະ ວ່ອງໄວ ມີການນຳໃຊ້ 84 ຄັ້ງ.

- ສຳເລັດການພັດທະນາລະບົບ QR Link ເພື່ອຄວາມສະດວກໃນການສົ່ງ link ເອກະສານຕ່າງໆໃຫ້ທັນສະໄໝ ແລະ ປອດໄພ ມີການນຳໃຊ້ ຫຼາຍກວ່າ 816 ຄັ້ງ.
- ສ້າງລະບົບແລກປ່ຽນ ແລະ ຢັ້ງຢືນຂໍ້ມູນພາກລັດ (Information Sharing System, Lao KYC) ປະຈຸບັນ ມີຜູ້ນຳໃຊ້ລະບົບທັງໝົດ 3,386,686 ບັນຊີ;
- ສົ່ງເສີມ ແລະ ຮ່ວມມືກັບພາກທຸລະກິດໃນການພັດທະນາລະບົບບໍລິການສັງຄົມຕ່າງໆ ໃຫ້ມີຄຸນນະພາບ, ມີຄວາມຍຸຕິທຳ ແລະ ປອດໄພ ເຊັ່ນ: ສຳເລັດການພັດທະນາຕໍ່ຍອດແອັບ LaoKYC ເປັນ Super App (Gov-X), ປະຈຸບັນໄດ້ເຊື່ອມຕໍ່ລະບົບປະກັນສັງຄົມ, ລະບົບຖານຂໍ້ມູນວິສາຫະກິດແຫ່ງຊາດ ແລະ ລະບົບຄັງປັນຍາລາວ.
- ໄດ້ພັດທະນາລະບົບຊ່ວຍເຫຼືອການຄຸ້ມຄອງລະບົບຂອງພາກລັດ (G-HelpDesk) ຊ່ວຍເຫຼືອ ສິ່ງຂ່າວ, ສິ່ງບັນຫາການນຳໃຊ້ລະບົບບໍລິການໂປຼແກຼມ, ຖານຂໍ້ມູນ, ເວັບໄຊ ແລະ ອື່ນໆ (Service Desk ແລະ ChatBot) ຂອງພາກລັດ. ເພື່ອເປັນສູນລວມຮັບແຈ້ງບັນຫາ ຈາກຜູ້ໃຊ້ງານເພື່ອປັບປຸງ ແລະ ຖາມ-ຕອບ ຕ່າງໆ;
- ປະກອບສ່ວນເຂົ້າໃນວຽກງານການຕ້ານ ແລະ ສະກັດກັ້ນກັບພະຍາດໂຄວິດ-19 ສາມາດສັງລວມໄດ້ຄື: ສຳເລັດການສ້າງ, ພັດທະນາ ແລະ ຄຸ້ມຄອງເຕັກນິກຂອງເວັບໄຊຂອງຄະນະສະເພາະກິດ, ສຳເລັດການພັດທະ ນາລະບົບບໍລິການ ລາວ ສູ້ສູ້, Vaccine ID, Vaccine Passport, ລະບົບປິ່ນປົວຢູ່ເຮືອນ (Home Isolation);
- ສຳເລັດສ້າງສູນບໍລິການຂໍ້ມູນຂ່າວສານ ແບບເອເລັກໂຕຣນິກ ຢູ່ທ້ອງຖິ່ນ (ປະຈຳແຂວງ ຫຼື ເມືອງ) ຈຳນວນ 1 ພາກ ຢູ່ແຂວງສະຫວັນນະເຂດ;
- ໄດ້ຮ່ວມມືພັດທະນາ ແລະ ທົດລອງນຳໃຊ້ລະບົບໂປຣແກຣມ Office ພາສາລາວ ກັບບໍລິສັດ HanCom ແລະ ບໍລິສັດ SB-Lab (OnlyOffice) ທັງລະບົບອອນລາຍ ແລະ ລະບົບ Desktop (Word, Cell, Show and PDF).
- ສຳເລັດການປັບປຸງ ເວັບໄຊເພັດຊະລາດ www.phetsarath.gov.la ຮອງຮັບສະຖິຕິການດາວໂຫຼດບັນດາເຕັກໂນໂລຊີພາສາລາວ ແລະ ຟອນເພັດຊະລາດ; ໄດ້ປັບປຸງລະບົບໂປຣແກຣມວັດຈະນານຸກົມ (Dictionary) ອອນລາຍ ໃຫ້ສາມາດແລ່ນໃນລະບົບ Cloud ເຮັດໃຫ້ເຂົ້າເຖິງໄດ້ໄວ ແລະ ນຳໃຊ້ສະດວກຂຶ້ນກວ່າເກົ່າ;

❖ **ລະບົບເຄືອຂ່າຍ ແລະ ຄວາມປອດໄພ:**

ສຳເລັດການສ້າງ ແລະ ຂະຫຍາຍລະບົບເຄືອຂ່າຍພາຍໃນພາກລັດ ເຄືອຂ່າຍອິນຕຣາເນັດພາກລັດ (G-net) ຄອບຄຸມ ຈຳນວນ 18 ກະຊວງ-ອົງການ ແລະ 18 ແຂວງ ທົ່ວປະເທດ ພ້ອມສຳເລັດການຝຶກອົບຮົມໃຫ້ພະນັກງານລັດຖະກອນທັງສູນກາງ ແລະ ທ້ອງຖິ່ນ ຈຳນວນ 36 ຄັ້ງ ສາມາດເຊື່ອມໂຍງເຂົ້າຫາລະບົບລັດຖະບານດິຈິຕອນ ເປັນຕົ້ນລະບົບກອງປະຊຸມທາງໄກ, ລະບົບສູນຂໍ້ມູນພາກລັດ ແລະ ລະບົບຫ້ອງການທັນສະໄໝ ໄດ້ຢ່າງສະດວກ, ວ່ອງໄວ ແລະ ປອດໄພ.

## 1.4 ແຜນວຽກຈຸດສຸມທີ 4: ພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ, ໄອຊີທີ ແລະ ດິຈິຕອນ

ໄດ້ເອົາໃຈໃສ່ສ້າງ ແລະ ປັບປຸງບັນດາໂຄງລ່າງພື້ນຖານໂທລະຄົມມະນາຄົມ, ໄອຊີທີ ແລະ ດິຈິຕອນ ທີ່ຈຳເປັນໃຫ້ຮັບປະກັນວຽກງານການລວມສູນການສື່ສານໂທລະຄົມມະນາຄົມ ແລະ ອິນເຕີເນັດ ເຊັ່ນ: ລະບົບສູນກາງອິນເຕີເນັດພາຍໃນປະເທດ (NIX), ລະບົບສູນກາງອິນເຕີເນັດ ຕ່າງປະເທດ (IIG), ລະບົບສູນກາງໂທລະສັບພາຍໃນ (NVX), ລະບົບສູນກາງໂທລະສັບຕ່າງປະເທດ (IVG), ລະບົບສູນກາງຂໍ້ຄວາມສັ້ນ (SMSC), ສ້າງສູນຂໍ້ມູນແຫ່ງຊາດ (NDC), ສ້າງສູນຢັ້ງຢືນລາຍເຊັນເອເລັກໂຕນິກແຫ່ງຊາດ (NRCA), ສ້າງລະບົບພິສູດຕົວຕົນຜ່ານທາງເອເລັກໂຕນິກ (LaoKYC) ເພື່ອຮັບປະກັນການນຳໃຊ້, ການບໍລິການມີຄວາມຖືກຕ້ອງ ແລະ ມີມາດຕະຖານເຕັກນິກທົ່ວຂະແໜງການໂດຍສະເພາະຂະແໜງການເງິນ, ການທະນາຄານ ແລະ ວຽກງານດ້ານການຄ້າ.

**ວຽກນິຕິກຳ ທີ່ຕິດພັນກັບໂຄງລ່າງພື້ນຖານ:** ສຳເລັດຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ລະຫັດຊື່ອິນເຕີເນັດ ສະບັບເລກທີ 687/ປທສ, ລົງວັນທີ 20 ກຸມພາ 2020; ສຳເລັດຂໍ້ຕົກລົງ ວ່າດ້ວຍ ການເຊື່ອມຕໍ່ລະບົບເຄືອຂ່າຍອິນເຕີເນັດ ສະບັບເລກທີ 2321/ປທສ, ລົງວັນທີ 17 ທັນວາ 2020; ສຳເລັດຂໍ້ຕົກລົງ ວ່າດ້ວຍ ການນຳໃຊ້ລາຍເຊັນເອ

ເລັກໂຕຣນິກ ສະບັບເລກທີ 664/ກຕສ, ລົງວັນທີ 28 ກັນຍາ 2021; ສຳເລັດການສ້າງລະບຽບການຄຸ້ມຄອງການໃຫ້ບໍລິການສູນຂໍ້ມູນ, ສະບັບເລກ 055/ສອຊ, ລົງວັນທີ 18 ມັງກອນ 2022 ແລະ ເຜີຍແຜ່ລະບຽບດັ່ງກ່າວໃຫ້ແກ່ຜູ້ໃຊ້ບໍລິການ; ສຳເລັດຂໍ້ຕົກລົງ ວ່າດ້ວຍ ການພິສູດ ແລະ ຢັ້ງຢືນຕົວຕົນທາງດິຈິຕອນ ສະບັບເລກທີ 2596/ກຕສ, ລົງວັນທີ 12 ສິງຫາ 2022; ສຳເລັດຂໍ້ຕົກລົງ ວ່າດ້ວຍ ການເຊື່ອມຕໍ່ ແລະ ໃຫ້ບໍລິການຂໍ້ຄວາມສັ້ນ ສະບັບເລກທີ 2597/ກຕສ, ລົງວັນທີ 12 ສິງຫາ 2022; ສຳເລັດຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ ເລກໝາຍອິນເຕີເນັດ ສະບັບເລກທີ 2600/ກຕສ, ລົງວັນທີ 12 ສິງຫາ 2022.

**ການຮັບປະກັນບັນດາລະບົບເຕັກນິກ ແລະ ໂຄງລ່າງພື້ນຖານ:** ສອຊ ຈັດຕັ້ງປະຕິບັດຕາມການຢັ້ງຢືນມາດຕະຖານດ້ານການຄຸ້ມຄອງຄວາມປອດໄພ ຂໍ້ມູນຂ່າວສານ ISO27001 ແລະ ໄດ້ແຕ່ງຕັ້ງພະນັກງານເຂົ້າປະຈຳການເຝົ້າລະວັງ, ຕິດຕາມ, ກວດກາ ໂຄງລ່າງພື້ນຖານ ແລະ ລະບົບເຕັກນິກຕະຫລອດ 24/7; ສຳເລັດການກວດກາ, ຕິດຕາມ, ປັບປຸງ, ສ້ອມແປງ ແລະ ປ່ຽນຖ່າຍ ລະບົບໄຟຟ້າຫຼັກ ແລະ ລະບົບໄຟຟ້າສຳຮອງ ຢູ່ ສູນອິນເຕີເນັດແຫ່ງຊາດ ເຂດສາຍລົມ ແລະ ເຂດດົງໂພສີ ໃຫ້ມີຄວາມຮັບປະກັນ; ບຳລຸງຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍ ບັນດາອຸປະກອນຮາດແວ ແລະ ລະບົບຊອບແວ ຂອງລະບົບເຕັກນິກ ແລະ ໂຄງລ່າງພື້ນຖານໂທລະຄົມມະນາຄົມ, ໄອຊີທີ ແລະ ດິຈິຕອນ; ໃນໄລຍະການແຜ່ລະບາດຂອງພະຍາດ COVID-19 ໃນປີ 2020-2022, ໄດ້ປະກອບສ່ວນວຽກ ຄະນະສະເພາະກິດຕ້ານພະຍາດ COVID-19, ຊຶ່ງໃນນັ້ນໄດ້ ສຳ ເລັດການສະໜອງ ລະບົບຄລາວ ເຊີເວີ, ເປີດນຳໃຊ້ລະຫັດຊື່ອິນເຕີເນັດ ທັງພາສາລາວ ແລະ ພາສາອັງກິດ (https://www.covid19.gov.la ແລະ http://ໂຄວິດ19.ລາວ) ເພື່ອເປັນເວັບໄຊ້ຂອງ ຄະນະສະເພາະກິດລະດັບຊາດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ COVID-19, ຄຸ້ມຄອງ, ຕິດຕາມ ການເຮັດວຽກລະບົບເຕັກນິກ, ກວດກາ ແລະ ປັບປຸງ ຄຸນນະພາບການເຊື່ອມຕໍ່ອິນເຕີເນັດ ໃນການຈັດກອງປະຊຸມທາງໄກ ຂອງລັດຖະບານ, ເປີດໃຫ້ບໍລິການສາຍດ່ວນ 165, 166, ຮ່ວມກັບບັນດາບໍລິສັດໂທລະຄົມ ຕິດຕັ້ງ ແລະ ເປີດການເຊື່ອມ ຕໍ່ໂທລະສັບຕ່າງປະເທດ ຂາອອກ ຮັບໃຊ້ວຽກງານ ກອງປະຊຸມທາງໄກ ລະຫວ່າງ ລັດຖະບານລາວ ແລະ ສາກົນ.

**ການຄຸ້ມຄອງການລວມສູນການສື່ສານ:** ສຳເລັດການເຊື່ອມຕໍ່ລະບົບສູນກາງອິນເຕີເນັດພາຍໃນ (NIX) ກັບບັນດາຜູ້ໃຫ້ບໍລິການອິນເຕີເນັດ, ສູນຂໍ້ມູນແຫ່ງຊາດ ສົ່ງເສີມໃຫ້ມີການນຳໃຊ້ແລກປ່ຽນຂໍ້ມູນຂ່າວສານຜ່ານອິນເຕີເນັດພາຍໃນປະເທດ; ສຳເລັດການໂອນຍ້າຍ ສັນຍານອິນເຕີເນັດຕ່າງປະເທດ ຂອງບັນດາບໍລິສັດຜູ້ໃຫ້ບໍລິການອິນເຕີເນັດເຊື່ອມຕໍ່ພາຍໃນນະຄອນຫຼວງວຽງຈັນ ຜ່ານລະບົບສູນກາງອິນເຕີເນັດ ຕ່າງປະເທດ (IIG) ທີ່ ສອຊ, ພ້ອມດຽວກັນນັ້ນກໍ່ມີການຕິດຕາມ ກວດກາຄຸນນະພາບ ແລະ ພັດທະນາການເຊື່ອມຕໍ່ສັນຍານອິນເຕີເນັດ ຕ່າງປະເທດ ເປັນແຕ່ລະໄລຍະຕາມຄວາມຕ້ອງການເຊື່ອມຕໍ່ຂອງບໍລິສັດ; ສຳເລັດການໂອນຍ້າຍ ສາຍສົ່ງເຊື່ອມຕໍ່ລະບົບສູນກາງອິນເຕີເນັດ ພາຍໃນ ແລະ ຕ່າງປະເທດ ລະຫວ່າງອຸປະກອນລະບົບສູນກາງອິນເຕີເນັດ ຕ່າງປະເທດ (IIG) ທີ່ ສອຊ ກັບລະບົບສູນກາງອິນເຕີເນັດ ຂອງບັນດາບໍລິສັດຜູ້ໃຫ້ບໍລິການອິນເຕີເນັດ ເຊື່ອມຕໍ່ພາຍໃນ ແລະ ຕ່າງປະເທດ ໂດຍນຳໃຊ້ລະບົບສາຍສົ່ງຂອງບັນດາບໍລິສັດເອງ ເພື່ອຮັບປະກັນວຽກງານລວມສູນການສື່ສານໂດຍການມີສ່ວນຮ່ວມຂອງບໍລິສັດ; ສຳເລັດການຢັ້ງຢືນເຕັກນິກ ແລະ ເຊັນສັນຍາຄ່າທາງຜ່ານ ການເຊື່ອມຕໍ່ລະບົບສູນກາງອິນເຕີເນັດ ພາຍໃນ ແລະ ຕ່າງປະເທດ ໂດຍອີງຕາມລັດຖະບັນຍັດຂອງປະທານປະເທດ ເລກທີ 002/ປປທ; ສຳເລັດການ ຈັດຕັ້ງປະຕິບັດ ເກັບຄ່າທາງຜ່ານ ສັນຍານອິນເຕີເນັດ ກັບບັນດາບໍລິສັດ ຜູ້ໃຫ້ບໍລິການອິນເຕີເນັດ ໂດຍອີງຕາມອັດຕາຄ່າທາງຜ່ານ ທີ່ລະບຸໃນລັດຖະບັນຍັດຂອງປະທານປະເທດ ເລກທີ 002/ປປທ; ສຳເລັດການເຊື່ອມຕໍ່ ແລະ ທົດລອງລະບົບ ຮັກສາຄວາມປອດໄພສະເພາະ ຂອງກະຊວງປ້ອງກັນປະເທດ ແລະ ກະຊວງ ປ້ອງກັນຄວາມສະຫງົບກັບບັນດາຜູ້ໃຫ້ບໍລິການອິນເຕີເນັດ; ສຳເລັດ ການເຊື່ອມຕໍ່, ເຊັນສັນຍາ ແລະ ເກັບຄ່າທາງຜ່ານຂໍ້ຄວາມສັ້ນຂາເຂົ້າຕ່າງປະເທດ ກັບ ບັນດາບໍ ລິສັດ; ສຳເລັດ ການເຊື່ອມຕໍ່ ແລະ ທົດລອງສັນຍານໂທລະສັບຂາອອກຕ່າງປະເທດ ກັບ ບັນດາບໍລິສັດ ມາຜ່ານ ສອຊ; ສຳເລັດການຕິດຕັ້ງລະບົບກວດກາສັນຍານຂໍ້ຄວາມສັ້ນ (SMS Firewall) ທັງພາຍໃນ ແລະ ຕ່າງປະເທດ; ສຳເລັດການຕິດຕັ້ງ ແລະ ເຊື່ອມຕໍ່ລະບົບສູນກາງໂທລະສັບຕ່າງປະເທດ (IVG03 ແລະ IVG04) ຜ່ານສັນຍານອິນເຕີເນັດ VoIP ໃໝ່ທີ່ສູນກາງສາຍລົມ ແລະ ສູນກາງດົງໂພສີ; ສຳເລັດການເຊື່ອມຕໍ່ສູນກາງຂໍ້ຄວາມສັ້ນພາຍໃນ SMSC ກັບ Application Lao KYC ເພື່ອສົ່ງ-ຮັບລະຫັດ 6 ຕົວເລກທີ່ຈະເປັນໃນການຢັ້ງຢືນຕົວຕົນຮັບໃຊ້ວຽກງານລົງທະບຽນເລກໝາຍໂທລະສັບ; ສຳເລັດເຊັນສັນຍາ ແລະ

ການເຊື່ອມຕໍ່ລະບົບສູນກາງໂທລະສັບ ແລະ ຂໍ້ຄວາມສັ້ນ 5G ຂອງບໍລິສັດ ເບສ ເທເລຄອມ ຈຳກັດ; ສຳເລັດການສະໜອງສັນຍານອິນເຕີເນັດ ແລະ ປະຈຳການເຕັກນິກໃຫ້ກອງປະຊຸມໃຫຍ່ສຸດຍອດອາຊຽນ 2024 ທີ່ ສປປລາວ ເປັນປະທານ ແລະ ບັນດາກອງປະຊຸມທີ່ປິ່ນອ້ອມ.

**ວຽກງານລະຫັດຊື່ອິນເຕີເນັດຂັ້ນສູງສຸດແຫ່ງຊາດ** .LA **ແລະ .ລາວ**: ສຳເລັດການປັບຮູບແບບການໃຫ້ບໍລິ ການລະຫັດຊື່ອິນເຕີເນັດ .LA ແລະ .ລາວ ໃຫ້ແທດເໝາະກັບ ສະພາບຕົວຈິງ. ສອຊ ເປັນຜູ້ຄຸ້ມຄອງລະບົບ ແລະ ນະໂຍບາຍ , ສ່ວນວຽກງານການຕະຫຼາດ ແມ່ນມອບໃຫ້ນາຍທະບຽນ (Registrars) ເປັນຜູ້ໃຫ້ບໍລິການ; ສຳເລັດການສົ່ງເສີມຂະຫຍາຍການບໍລິການ ແລະ ການນຳໃຊ້ລະຫັດຊື່ອິນເຕີເນັດ .LA ແລະ (.ລາວ) ທັງພາຍໃນ ແລະ ຕ່າງປະເທດ ຈາກຈຳນວນ 50,000 ມາເປັນ 52,000 ລະຫັດຊື່; ສຳເລັດການຂໍນຳໃຊ້ ລະຫັດຊື່ອິນເຕີເນັດ ພາສາທ້ອງຖິ່ນ (.ລາວ) ຈາກອົງການ ICANN; ສຳເລັດການກວດກາ ແລະ ສະຫຼຸບຄືນຕາຕະລາງ LGR (Label Generation Rules) ຂອງພາສາລາວ ໃຫ້ອົງການ ICANN ເອົາເຂົ້າໃນ Root zone ເພື່ອໃຫ້ພາສາລາວສາມາດສະແດງໄດ້ໃນເວບບຣາວເຊີ; ສຳເລັດການເປີດນຳໃຊ້ລະຫັດຊື່ອິນເຕີເນັດພາສາທ້ອງຖິ່ນ (.ລາວ) ໃຫ້ນາຍທະບຽນສາມາດລົງທະບຽນນຳໃຊ້ໃຫ້ແກ່ບັນດາອົງການ, ບຸກຄົນ, ນິຕິບຸກຄົນ ພ້ອມຈັດກອງປະຊຸມແລກປ່ຽນປຶກສາຫາລືຮ່ວມກັບນາຍທະບຽນພາຍໃນ ກ່ຽວກັບສະພາບການບໍລິການລະຫັດຊື່ອິນເຕີເນັດ, ສຳເລັດ ການຕິດຕັ້ງ M-root Server ທີ່ ສອຊ.

**ວຽກລາຍເຊັນເອເລັກໂຕຣນິກ**: ສຳເລັດການເຂົ້າຮ່ວມເປັນຄະນະປັບປຸງກົດໝາຍ ວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ ປີ 2022; ໄດ້ເຊັນສັນຍາຮ່ວມມື ກັບກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ, ກະຊວງ ການເງິນ ໃນການພັດທະນານຳໃຊ້ລາຍເຊັນເອເລັກໂຕຣນິກ (Certificate Authority/Digital Signature) ຂອງສູນອິນເຕີເນັດ ແຫ່ງຊາດ ເຂົ້າລະບົບຄຸ້ມຄອງງົບປະມານແຫ່ງລັດ(ລາຍຮັບ-ລາຍຈ່າຍ), ປະຈຸບັນສຳເລັດ 50% ຂອງກອບການຮ່ວມມື; ສຳເລັດການພັດທະນານຳໃຊ້ລາຍເຊັນເອເລັກໂຕຣນິກເຂົ້າໃນລະບົບຫ້ອງການທັນສະໄໝ (E-Office) ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ 100% ສາມາດນຳໃຊ້ໄດ້ທັງຮູບແບບ USB token ແລະ Softkey; ສຳເລັດການສ້າງໃບຮັບຮອງ ແລະ ຝຶກອົບຮົມການນຳໃຊ້ລາຍເຊັນເອເລັກໂຕຣນິກ ໃຫ້ພະນັກງານ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຂັ້ນຄະນະພະແນກຂຶ້ນໄປ 2 ຄັ້ງ ໄດ້ 100%; ສຳເລັດ ການສ້າງໃບຮັບຮອງລາຍເຊັນເອເລັກໂຕຣນິກ ໃຫ້ພະນັກງານຂັ້ນພະແນກ ແລະ ຂະແໜງຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ທົ່ວປະເທດ ສ້າງໄດ້ 100% ແລະ ສຳເລັດການເຝິກອົບຮົມ ການນຳໃຊ້ລາຍເຊັນເອເລັກໂຕຣນິກໃຫ້ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ທົ່ວປະເທດໄດ້ 100%; ໄດ້ເຜີຍແຜ່ຄວາມໝາຍຄວາມສຳຄັນ ແລະ ສົ່ງເສີມການນຳໃຊ້ລາຍເຊັນເອເລັກໂຕຣນິກ ໃຫ້ແກ່ພາກລັດ ແລະ ເອກະຊົນ ຫຼາຍກວ່າ 20 ຄັ້ງ.

**ໂຄງລ່າງພື້ນຖານໂທລະຄົມມະນາຄົມ:** ໄດ້ຂະຫຍາຍສາຍກາບໄຍແສງ (Optic Fiber) ໄດ້ 36,543 ກິໂລແມັດ ເພີ່ມຂຶ້ນ 265% (ທຽບໃສ່ແຜນ 5 ປີ ແມ່ນ 10,000 ກິໂລແມັດ), ສາຍສົ່ງປະເພດ DWDM, STM, PTN ແລະ PDH ໄດ້ຈຳ ນວນ 5,763 ສະຖານີ (ເພີ່ມຂຶ້ນ 1,608 ສະຖານີ ຫຼື 39% ທຽບໃສ່ປີ 2022), ຈຸດເຊື່ອມຕໍ່ອອກຕ່າງປະເທດ ຈຳນວນ 67 ຈຸດ (ເພີ່ມຂຶ້ນ 18 ຈຸດ ຫຼື 36.7%), ເສົາຮັບ-ສົ່ງ ສັນຍານໂທລະສັບຈຳນວນ 5,728 ຕົ້ນ, ສະຖານີຮັບສົ່ງສັນຍານໂທລະສັບມືຖື 22,134 ສະຖານີ (ເພີ່ມຂຶ້ນ 363 ສະຖານີ, ຄິດເປັນ 22.1% ທຽບໃສ່ທ້າຍປີ 2022), ຄອບຄຸມໄດ້ທຸກແຂວງ, ທຸກເມືອງ, ຄອບຄຸມໄດ້ 18 ແຂວງ, 148 ເມືອງ ແລະ 8,245 ບ້ານ, ເຮັດໃຫ້ທົ່ວປະເທດມີສັນຍານມືຖື ແຍກຕາມລະບົບ 2G ຄອບຄຸມ 97%, 3G ຄອບຄຸມ 85% ແລະ 4G ຄອບຄຸມໄດ້ 78% ແລະ 5G ໃຫ້ບໍລິການໃນຕົວເມືອງໃຫຍ່ຂອງແຕ່ລະແຂວງ ສາມາດ ຄອບຄຸມໄດ້ 18%, ຈຳນວນເລກໝາຍໂທລະສັບຕັ້ງໂຕະ ແລະ ມືຖື ທີ່ໄດ້ຂຶ້ນທະບຽນນຳໃຊ້ໃນລະບົບຮອດເດືອນ ທັນວາ 2025 ມີທັງໝົດ 8,934,594 ເລກໝາຍ, ອັດຕາການນຳໃຊ້ອິນເຕີເນັດ 7,826,319 ບັນຊີ

**ວຽກງານສູນຂໍ້ມູນແຫ່ງຊາດ:** ປັບປຸງຫ້ອງເຄື່ອງທີ່ດົງໂພສີ ໃຫ້ກາຍເປັນສູນຂໍ້ມູນສຳຮອງ; ສຳເລັດການຈັດສັນ, ປັບປຸງ ແລະ ຂະຫຍາຍລະບົບເຕັກນິກສູນຂໍ້ມູນໃຫ້ສາມາດຮອງຮັບຄວາມຕ້ອງການໃນການຫັນເປັນດີຈິຕອນ; ສຳເລັດການກະກຽມ, ສະໜອງ ແລະ ຕິດຕາມເຝົ້າລະວັງການໃຫ້ບໍລິການສູນຂໍ້ມູນ ໃຫ້ກັບບັນດາກະຊວງ ເປັນຕົ້ນ ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງສາທາລະນາສຸກ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງ

ອຸດສະຫະກຳ ແລະ ການຄ້າ, ກະຊວງສຶກສາທິການ ແລະ ກິລາ ແລະ ຄະນະໂຄສະນາອົບຮົມສູນກາງພັກ; ສຳເລັດການສະໜອງ ແລະ ຄຸ້ມຄອງລະບົບໂຄງລ່າງພື້ນຖານສູນຂໍ້ມູນ ເປັນຕົ້ນ ລະບົບຄລາວ, ລະບົບເນັດເວີກ ເພື່ອຮອງຮັບການຕິດຕັ້ງລະບົບການບໍລິຫານລັດດ້ວຍດິຈິຕອນ ຊຶ່ງລວມມີ ລະບົບຫ້ອງການທັນສະໄໝ (E-Office), ລະບົບ ລາວສູ້ສູ້ (LaoKYC), ລະບົບອີເມລ, ລະບົບເວັບໄຊ, ລະບົບກອງປະຊຸມທາງໄກ, ລະບົບ G-Chat, ລະບົບ G-Share, ລະບົບລາຍງານແບບທັນສະໄໝ (Minister Dashboard), ລະບົບ CA ແລະ ລະບົບຕ່າງໆ; ສຳເລັດການສະໜອງ, ຄຸ້ມຄອງ ແລະ ຕິດຕາມ ລະບົບເຕັກນິກການຂຶ້ນທະບຽນເລກໝາຍໂທລະສັບ ເພື່ອຮັບປະກັນວຽກງານການຂຶ້ນທະບຽນເລກໝາຍໂທລະສັບທົ່ວປະເທດ.

**ການຈັດຕັ້ງປະຕິບັດໂຄງການ:** ສຳເລັດໂຄງການ ບຳລຸງຮັກສາລະບົບໄລ່ລຽງຄ່າທາງຜ່ານສູນສາຍລົມ; ສຳເລັດໂຄງການພັດທະນາ ແລະ ຕິດຕັ້ງລະບົບລົງທະບຽນເລກໝາຍໂທລະສັບ; ສຳເລັດໂຄງການບຳລຸງຮັກສາໂຄງລ່າງພື້ນຖານ ແລະ ລະບົບເຕັກນິກສູນອິນເຕີເນັດແຫ່ງຊາດ ປີ 2021-2023; ສຳເລັດການສະເໜີ ແລະ ຈັດປະມູນໂຄງການຈັດຊື້ ແລະ ຕິດຕັ້ງລະບົບເຕັກນິກຕິດຕາມ ແລະ ປ້ອງກັນຄວາມປອດໄພສູນຂໍ້ມູນແຫ່ງຊາດ, ເນື່ອງຈາກການຜັນຜວນສູງຂອງເສດຖະກິດເຮັດໃຫ້ມູນຄ່າຂອງການປະມູນສູງກວ່າ ແຜນງົບປະມານຂອງໂຄງການຈຶ່ງເຮັດໃຫ້ບໍ່ສາມາດຈັດຕັ້ງປະຕິບັດໂຄງການໄດ້; ສຳເລັດການຈັດຕັ້ງປະຕິບັດໂຄງການ ODA ຈາກ ສ ເກົາຫຼີ ໃນຫົວຂໍ້: ທີ່ປຶກສາເພື່ອຍົກລະດັບລະບົບອອກໃບຮັບຮອງລາຍເຊັນເອເລັກໂຕຣນິ (CA) ຂອງ ສປປ ລາວ ໃນສົກປີ 2023-2024; ສຳເລັດການຈັດຕັ້ງປະຕິບັດໂຄງການຂະຫຍາຍລະບົບຄລາວ (Cloud) ຮອງຮັບການເຫັນເປັນທັນສະໄໝ; ຕິດຕາມໂຄງການຊ່ວຍເຫຼືອລ້າຈາກລັດຖະບານ ສປຈີນ “ໂຄງການພັດທະນາໂຄງຂ່າຍຂໍ້ມູນຂ່າວສານ ຄວາມໄວສູງ ແລະ ເສັ້ນທາງສາຍໄໝດິຈິຕອນ”.ໃນກາງປີ 2023 ໄດ້ຮ່ວມກັບຄະນະຂອງສະຖາບັນ CAICT ສປ ຈີນ ເພື່ອສຳຫລວດ ທີ່ນະຄອນຫຼວງວຽງຈັນ, ທີ່ແຂວງອຸດົມໄຊ ແລະ ທີ່ແຂວງຈຳປາສັກ, ພ້ອມທັງໄດ້ເຊັນ ບົດບັນທຶກການສຳຫຼວດ ແລະ ອອກແບບເບື້ອງຕົ້ນ Pre-FS, ໃນເດືອນຕຸລາ 2024 ໄດ້ເຊັນບົດບັນທຶກການສຳຫລວດໂຄງການ ລະ ຫວ່າງລັດຖະມົນຕີກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ຫົວໜ້າອົງການ CIDCA ສປ ຈີນ ໂດຍຊອງໜ້າການເປັນປະທານຮ່ວມຂອງ ສອງທ່ານ ນາຍົກລັດຖະມົນຕີຂອງ ສປປ ລາວ ແລະ ສປ ຈີນ, ໃນເດືອນ ມີນາ 2025 ໄດ້ສຳເລັດການເຊັນສານແລກປ່ຽນ; ໄດ້ເຊັນສັນຍາວ່າດ້ວຍການຮ່ວມມືພັດທະນາ ແລະ ໃຫ້ບໍລິການລະບົບບໍລິຫານລວມສູນການເຊື່ອມຕໍ່ ແລະ ຄຸ້ມຄອງຄວາມປອດໄພອິນເຕີເນັດແຫ່ງຊາດ ລະຫວ່າງ ສອຊ ແລະ ກຸ່ມບໍລິສັດ ເອໄອເອັຟ ຈຳກັດ;

**ສູນຂໍ້ມູນດິຈິຕອນ:** ສຳເລັດການໃຫ້ບໍລິການຝາກຂໍ້ມູນເວັບໄຊ, ບໍລິການອີເມວ, ບໍລິການຝາກຖານຂໍ້ມູນແອັບພິເຄເຊິນ ແລະ ບໍລິການເຊົ່ານຳໃຊ້ລະບົບໜ່ວຍແມ່ຂ່າຍ ແລະ ເຄືອຂ່າຍ ຈຳນວນ 23 ພາກສ່ວນ ຄື: ພາກລັດຈຳນວນ 13 ພາກສ່ວນ ແລະ ພາກເອກະຊົນຈຳນວນ 9 ພາກສ່ວນ; ຄົ້ນຄ້ວາສ້າງລະບົບຂໍ້ມູນດິຈິຕອນພາກລັດ (Digital Data Government) ເພື່ອຫັນຂໍ້ມູນຂ່າວສານພາກລັດ ໃຫ້ເປັນທັນສະໄໝແບບດິຈິຕອນ. ພ້ອມທັງເປັນຕົວແທນຂອງ ສປປ ລາວ ເຂົ້າຮ່ວມເຮັດວຽກ ກັບບັນດາປະເທດອາຊຽນໃນກຸ່ມວຽກງານດັ່ງກ່າວ (ASEAN DDG-WG).

ສະໜອງໂຄງລ່າງພື້ນຖານສູນຂໍ້ມູນດິຈິຕອນແຫ່ງຊາດ ກໍຄືໂຄງລ່າງພື້ນຖານລະບົບຄລາວ ເພື່ອຮອງຮັບບັນດາໂຄງການຫັນເປັນດິຈິຕອນທັນສະໄໝ ຂອງພາກລັດ ເປັນຕົ້ນແມ່ນລະບົບແຈ້ງພາສີປະຕູດຽວ (LNSW) ຂອງກະຊວງການເງິນ, ລະບົບຄຸ້ມຄອງພົນລະເມືອງ (eCVRS) ຂອງກະຊວງພາຍໃນ, ລະບົບຂໍ້ມູນຂ່າວສານຄຸ້ມຄອງການສຶກສາ ແລະ ກິລາ (LESMIS) ຂອງກະຊວງສຶກສາທິການ ແລະ ກິລາ, ລະບົບຂໍ້ມູນຂ່າວສານສິນເຊື່ອ ຂອງ ສປປ ລາວ. ສຳເລັດການພັດທະນາໂຄງລ່າງພື້ນຖານກຸ່ມຂໍ້ມູນຜູກພັນແຫ່ງຊາດ (Lao National Blockchain) ເພື່ອຮອງຮັບການດຳເນີນທຸລະກຳຊັບສິນດິຈິຕອນ ຢູ່ ສປປ ລາວ, ການພັດທະນາ ແລະ ນຳໃຊ້ Web 3 ແລະ DApp

## 1.5 ແຜນວຽກຈຸດສຸມທີ 5: ຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ

**ການຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ:** ສຳເລັດການຈັດສັນຄື້ນຄວາມຖີ່ ສຳລັບເຕັກໂນໂລຊີການສື່ສານ ທີ່ທັນສະໄໝເຊັ່ນ: 4G, 5G, IoT ແລະ ອື່ນໆ ໂດຍການຈັດສັນຄື້ນ 400Mhz, 700Mhz, 850Mhz, 900MHz, 1800Mhz, 2100MHz, 2300MHz, 2600MHz, C-band ແລະ ໃນປີ 2024 ສາມາດອອກອະນຸຍາດນຳໃຊ້ຄື້ນຄວາມຖີ່

700MHz ແລະ C-band ເພື່ອນຳໃຊ້ໃນການໃຫ້ບໍລິການ 5G ຢ່າງເປັນທາງການ; ສຳເລັດການອອກອະນຸຍາດທົດລອງນຳໃຊ້ຄື້ນຄວາມຖີ່ 5G ເພື່ອການຮັບໃຊ້ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45. ນອກນັ້ນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມຄື້ນຄວາມຖີ່ວິທະຍຸສື່ສານໂລກຂອງ ITU (WRC-23) ທີ່ເມືອງ Dubai, ປະເທດ U.A.E ຊຶ່ງໄດ້ສຳເລັດໃນການສະເໜີປັບປຸງລະບຽບການຄື້ນຄວາມຖີ່ວິທະຍຸສື່ສານໂລກ (ITU Radio Regulations) ເພື່ອຮັບຮອງໃຫ້ ສປປ ລາວ ສາມາດນຳໃຊ້ຄື້ນຄວາມຖີ່ 600MHz ແລະ 6GHz ເພື່ອນຳໃຊ້ເຂົ້າໃນເຕັກໂນໂລຊີການສື່ສານໃໝ່ໃນອານາຄົດ ໂດຍສະເພາະແມ່ນ 6G. ກອງປະຊຸມ WRC-23 ຮັບຮອງ ແລະ ສ້າງເງື່ອນໄຂທາງດ້ານເຕັກນິກເພື່ອປ້ອງກັນບໍ່ໃຫ້ປະເທດອ້ອມຂ້າງສົ່ງຄື້ນຄວາມຖີ່ລົບກວນການນຳໃຊ້ຄື້ນຄວາມຖີ່ພາກລັດຂອງ ສປປ ລາວ.

ຊຸກຍູ້ການຂຶ້ນທະບຽນການນຳໃຊ້ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານໂຟນີອອກ ແລະ ຕໍ່ໃບອະນຸຍາດຕ່າງໆ ໃຫ້ບັນດາບໍລິສັດຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ ຈຳນວນ 1,741 ຊຸດ ເປັນຕົ້ນ: ໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ 180 ຊຸດ; ໃບອະນຸຍາດນຳໃຊ້ຢັ້ງຢືນຄື້ນຄວາມຖີ່ ສຳລັບເຄື່ອງບິນບໍ່ມີຄົນຂັບ (Drone) ຈຳນວນ 139 ຊຸດ; ໃບອະນຸຍາດຢັ້ງຢືນມາດຕະຖານເຕັກນິກຂອງອຸປະກອນຄື້ນຄວາມຖີ່ ຈຳນວນ 1,364 ຊຸດ ແລະ ໃບອະນຸຍາດນຳເຂົ້າອຸປະກອນຄື້ນຄວາມຖີ່ ຈຳນວນ 14 ຊຸດ; ນອກຈາກນັ້ນ, ຍັງໄດ້ສະໜອງອຸປະກອນວິທະຍຸສື່ສານ (ໂຟນີ) ເພື່ອຮັບໃຊ້ສັງຄົມຕ່າງໆ ຈຳນວນ 162 ຊຸດ ໂດຍສະເພາະ ງານມະຫະກຳກິລາແຫ່ງຊາດຄັ້ງທີ XI ທີ່ແຂວງຊຽງຂວາງ ຈຳນວນ 150 ຊຸດ, ມອບໂຟນີຈຳນວນ 12 ເຄື່ອງ ໃຫ້ແກ່ຫ້ອງການຊາວໜຸ່ມກອງທັບ, ກົມໃຫຍ່ການເມືອງກອງທັບ ກະຊວງປ້ອງກັນປະເທດ.

**ການກວດກາຕິດຕາມການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໃຫ້ຮັບປະກັນຄວາມປອດໄພ**: ສຳເລັດການກວດກາຄວາມແຮງຂອງສັນຍານໂທລະສັບແບບເຄື່ອນທີ່ 2G, 3G, 4G ທີ່ກະຈາຍລຽບຕາມຊາຍແດນ ລາວ-ໄທ ຢ່າງເປັນປົກກະຕິ; ລົງຮື້ຖອນອຸປະກອນທວນສັນຍານ (Repeater) ທີ່ບໍ່ໄດ້ຮັບອະນຸຍາດ ຈຳນວນ 02 ຄັ້ງ, ສຳເລັດແກ້ໄຂບັນຫາຄື້ນຄວາມຖີ່ວິທະຍຸສື່ສານ ລົບກວນໃນນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຈຳນວນ 10 ຄັ້ງ; ລົງກວດກາຄື້ນຄວາມຖີ່ວິທະຍຸສື່ສານ ຮັບໃຊ້ວັນສຳຄັນຕ່າງໆຂອງຊາດ ຈຳນວນ 5 ຄັ້ງ ເປັນຕົ້ນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ທີ່ຫໍປະຊຸມແຫ່ງຊາດ, ກອງປະຊຸມຄັ້ງປະຖົມມະລຶກຂອງສະພາ ສະໄໝທີ IX ທີ່ ສະພາແຫ່ງຊາດ, ກອງປະຊຸມສຸດຍອດຄະນະກຳມາທິການແມ່ນ້ຳຂອງສາກົນ ຄັ້ງທີ 4 ສປປ ລາວ ເປັນເຈົ້າພາບ, ງານມະຫະກຳກິລາແຫ່ງຊາດ ຄັ້ງທີ XI ປະຈຳປີ 2022 ທີ່ແຂວງຊຽງຂວາງ ແລະ ງານວັນບຸນນະມັດສະການພຣະທາດຫຼວງວຽງຈັນ. ສຳເລັດ ປະສານສົມທົບກັບກຳລັງປ້ອງກັນຄວາມສະຫງົບ ແລະ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ, ລົງກູ້ອຸປະກອນ ທວນສັນຍານມືຖືຢູ່ ST VIGAS (ຂົວມິດຕະພາບ), ສຳເລັດ ການກຳນົດຈຸດທີ່ຕັ້ງສະຖານີກວດກາຄື້ນຄວາມຖີ່ວິທະຍຸສື່ສານ ແບບມີຄົນປະຈຳ ແລະ ແບບບໍ່ມີຄົນປະຈຳ ໃນຂອບເຂດທົ່ວປະເທດ ລວມທັງໝົດ 56 ສະຖານີ, ສຳເລັດ ມອບອຸປະກອນໂຟນີ ຈຳນວນ 35 ເຄື່ອງ ໃຫ້ຫ້ອງການສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ.

### 1.6 ແຜນວຽກຈຸດສຸມທີ 6: ພັດທະນາລະບົບຄວາມປອດໄພດ້ານໄຊເບີ

ການຄຸ້ມຄອງຄວາມປອດໄພທາງໄຊເບີ ແລະ ການຄຸ້ມຄອງສື່ສັງຄົມອອນລາຍ ໄດ້ຮັບການຊີ້ນຳຈາກຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ. ໄດ້ສຳເລັດການພັດທະນາ ແລະ ຕິດຕັ້ງລະບົບວິເຄາະພຶດຕິກຳການໂຈມຕີທາງໄຊເບີ ເພື່ອຍົກລະດັບການຮັກສາຄວາມປອດໄພໃຫ້ມີປະສິດທິພາບທີ່ສູງຂຶ້ນຫຼີກລ້ຽງຄວາມເສຍຫາຍຂອງຂໍ້ມູນ ແລະ ລະບົບຈາກການໂຈມຕີທັງພາຍໃນ ແລະ ພາຍນອກ; ສຳເລັດສ້າງສູນປະຕິບັດການຄວາມປອດໄພໄຊເບີແຫ່ງຊາດ (SOC) ທີ່ມີໜ້າທີ່ຫຼັກໃນການເຝົ້າລະວັງ, ກວດກາ, ຕິດຕາມລະບົບເຄືອຂ່າຍຄອມພິວເຕີ, ເຄື່ອງແມ່ຂ່າຍທີ່ໃຫ້ບໍລິການຂໍ້ມູນຂ່າວສານຕ່າງໆ ຂອງພາກລັດ ໂດຍສະເພາະຂໍ້ມູນຈາກບັນດາກະຊວງທີ່ໄດ້ມາຝາກໄວ້ໃນສູນຂໍ້ມູນແຫ່ງຊາດ; ສຳເລັດລົງຕິດຕັ້ງໂປຣແກມເຝົ້າລະວັງຜ່ານລະບົບເຄືອຂ່າຍ (End-point Detection and Response) ໃຫ້ກັບສູນບໍລິຫານລັດດີຈີຕອນ ແລະ ກົມຄື້ນຄວາມຖີ່ວິທະຍຸສື່ສານ; ສຳເລັດພັດທະນາການສ້າງແອັບລະບົບປະຕິບັດການມືຖື ຂອງສູນລາວເຊີດໃນລະບົບປະຕິບັດການ Android ແລະ IOS; ສຳເລັດການຕິດຕັ້ງເວັບເຊີເວີ ສຳລັບແອັບພິເຄຊັ່ນ (Mobile App)

ຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານ; ສຳເລັດການແຈ້ງເຕືອນ ພົບເຫັນເວັບໄຊມີຊ່ອງວ່າງ ຂອງບັນດາອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ເອກະຊົນ ມີຄວາມສ່ຽງທີ່ອາດຈະເກີດໄພຄຸກຄາມທາງໄຊເບີ 26 ເວັບໄຊ; ໃຫ້ຄາປຶກສາ, ແນະນຳວິທີການປ້ອງກັນ ແລະ ແກ້ໄຂບັນຫາ ດ້ານຄວາມປອດໄພທາງໄຊເບີ 70 ຄັ້ງ; ສຳເລັດການຄົ້ນຫາ, ສະໜອງຂໍ້ມູນ ການສໍ້ໂກງຊັບຜ່ານລະບົບອິນເຕີເນັດຮູບແບບເງິນດິຈິຕອນ Crypto currency wallet); ສະໜອງຂໍ້ມູນບຸກຄົນ ນຳໃຊ້ໝາຍເລກໄອພີ ທີ່ພົວພັນກັບການສໍ້ໂກງທາງອິນເຕີເນັດ ໃຫ້ກັບເຈົ້າໜ້າທີ່ຕຳຫຼວດ 50 ຄັ້ງ ແລະ ສະໜອງຂໍ້ມູນ ຫຼັກຖານທາງລະບົບຄອມພິວເຕີ ຕາມການສະເໜີຂອງເຈົ້າໜ້າທີ່ຕຳຫຼວດ ຈຳນວນ 117 ຄັ້ງ.

ການຄຸ້ມຄອງສື່ສັງຄົມອອນລາຍ: ຄຄອຊ ໄດ້ສ້າງຕັ້ງໜ່ວຍງານສະເພາະ ໃນການຕິດຕາມກວດກາ ຕອບຕ້ານທາງສຽງບໍ່ດີໃນສັງຄົມ ແລະ ກຳລັງຄົ້ນຄວ້າສ້າງໜ່ວຍງານກວດກາ ຕິດຕາມ, ປ້ອງກັນ ແລະ ແກ້ໄຂບັນຫາຕົວະຍົວະ ຫຼອກຫຼວງທາງອອນລາຍ. ໃນປີ 2023 ສປປ ລາວ ມີຜູ້ນຳໃຊ້ສື່ສັງຄົມອອນລາຍ 4.22 ລ້ານຄົນ , ເທົ່າກັບ 54.4% ຂອງປະຊາກອນ. ໃນນີ້, ມີ 2.95 ລ້ານຄົນ ຜູ້ທີ່ມີອາຍຸ 18 ປີຂຶ້ນໄປ ຫຼື ເທົ່າກັບ 61.1% ຂອງປະຊາກອນ. ຖ້າເບິ່ງໃນວົງກ້ວາງຫຼາຍຂຶ້ນແມ່ນ 71.3% ຂອງຖານຜູ້ໃຊ້ອິນເຕີເນັດທັງໝົດຂອງລາວ ໂດຍບໍ່ຄຳນຶງເຖິງອາຍຸ ແມ່ນມີການນຳໃຊ້ພຣັດຟອມໃດໜຶ່ງ ໃນນີ້ເຫັນວ່າ 47.4% ແມ່ນເພດຍິງ ແລະ 52.6% ແມ່ນເພດຊາຍ. ໃນໄລຍະຜ່ານມາ ໄດ້ມີຫຼາຍປະກົດການທີ່ເກີດຂຶ້ນ ໂດຍສະເພາະກໍ່ແມ່ນການສ້າງຂ່າວປອມ, ຂ່າວບິດເບືອນຄວາມເປັນຈິງ, ໂຄສະນາຊວນເຊື່ອ, ໂຈມຕີ ແລະ ຕໍ່ຕ້ານແນວທາງການນຳພາຂອງພັກ-ລັດ ດ້ວຍຫຼາຍຮູບ ເຫັນໄດ້ຈາກສະຖິຕິຜູ້ຖືກເສຍຫາຍ ສະເພາະກໍລະນີທີ່ແຈ້ງມາຍັງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ມາຮອດປັດຈຸບັນ ຖືກແອບອ້າງ ແລະ ແຮັກບັນຊີສື່ສັງຄົມອອນລາຍ 39 ຄັ້ງ; ຕົວະຍົວະ, ຂົ່ມຂູ່ໃຫ້ໂອນເງິນ (ສໍ້ໂກງຊັບ) 103 ຄັ້ງ; ໃສ່ຮ້າຍປ້າຍສີ, ໝິ່ນປະໝາດ ແລະ ນຳໃຊ້ຄຳບໍ່ສຸພາບ 56 ຄັ້ງ ແລະ ຄວາມເສຍຫາຍອື່ນໆ 17 ຄັ້ງ, ລວມທັງໝົດມີ 215 ຄັ້ງ. ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໄດ້ເອົາໃຈໃສ່ໃນການສ້າງ ແລະ ປັບປຸງນິຕິກຳ ຫຼາຍສະບັບທີ່ກ່ຽວຂ້ອງກັບການຄຸ້ມຄອງຂໍ້ມູນຂ່າວສານ ແລະ ສື່ສັງຄົມອອນລາຍ. ຄຽງຄູ່ກັບການເຜີຍແຜ່ນິຕິກຳ, ແຈ້ງເຕືອນໄພຕ່າງໆ ທີ່ເກີດຂຶ້ນໃນສື່ສັງຄົມອອນລາຍ ດ້ວຍຫຼາຍຮູບແບບ ເປັນຕົ້ນ: ການເຜີຍແຜ່ໃນແຕ່ລະສະຖານທີ່ຕ່າງໆ ໂດຍການຈັດສຳມະນາ ທັງສູນກາງ ແລະ ທ້ອງຖິ່ນ; ເຜີຍແຜ່ຜ່ານເວັບໄຊລາວເຊີດ ບໍ່ວ່າຈະເປັນບົດຄວາມ, ການແຈ້ງເຕືອນ ແລະ ວິທີການປ້ອງກັນໄພຄຸກຄາມຕ່າງໆ ຜ່ານການນຳໃຊ້ ສື່ສັງຄົມອອນລາຍ ປະມານ 13 ກວ່າສະບັບ.

## 1.7 ແຜນວຽກຈຸດສຸມທີ 7: ພັດທະນາ ແລະ ນຳໃຊ້ນະວັດຕະກຳ ໄອຊີທີ

ເພື່ອສົ່ງເສີມໃຫ້ເກີດມີການຄົ້ນຄວ້າ ແລະ ມີຫົວຄິດໃນການປະດິດສ້າງນະວັດຕະກຳດ້ານ ໄອຊີທີ ອອກມາຮັບໃຊ້ສັງຄົມຢ່າງແຜ່ຫຼາຍເປັນຕົ້ນ: ໄດ້ມີການສົ່ງເສີມໂດຍການຈັດງານສັບປະດາດິຈິຕອນ (Digital week) ຂຶ້ນໃນແຕ່ລະປີ (2021-2025) ໄດ້ສົ່ງເສີມການພັດທະນາ ແລະ ນາໃຊ້ບັນດາຊອບແວເປີດ (Open Source) ແລະ ຊອບແວພາສາລາວ; ສົ່ງເສີມນັກພັດທະນາໂປຣແກຣມ ແລະ Start up ຄົນລາວ; ສຳເລັດການຄົ້ນຄວ້າ ແລະ ພັດທະນາລະບົບ QR Code ຂອງພາກລັດ; ສຳເລັດການປັບປຸງລະບົບໂປຣແກຣມວັດຈະນານຸກົມ (Dictionary) ອອນລາຍໃຫ້ສາມາດແລ່ນໃນລະບົບ Cloud ເຮັດໃຫ້ເຂົ້າເຖິງໄດ້ໄວ ແລະ ນຳໃຊ້ສະດວກຂຶ້ນກວ່າເກົ່າ; ສົ່ງເສີມການພັດທະນາເຕັກໂນໂລຊີ ແລະ ຊອບແວໃໝ່ສາລັບ ສປປ ລາວ ເຊັ່ນ: Lao Office, ສ້າງກິດຈະກຳຄັດເລືອກຜູ້ທີ່ມີພອນສະຫວັນ ແລະ ຄວາມສາມາດທາງດ້ານ ICT ເພື່ອສົ່ງເຂົ້າຮ່ວມງານ MakerThon; ສຳເລັດຈັດການແຂ່ງຂັນນະວັດຕະກຳ ໄອຊີທີ ປະຈຳປີ 2022; ສຳເລັດເຊັນ MOU ກັບ Unitel ເພື່ອປັບປຸງອັກສອນພາສາລາວ ທີ່ນຳໃຊ້ໃນລາວຮອງຮັບພາສາລາວ ແລະ ບັນຈຸເອົາແບບອັກສອນພາສາລາວທາງການເພັດຊະລາດເຂົ້າໃນລະບົບ ແລະ ເຄື່ອງອຸປະກອນເລັກໂຕຣນິກຂອງບໍລິສັດຜູ້ຜະລິດ ເພື່ອໃຫ້ມີການນຳໃຊ້ທີ່ສະດວກສະບາຍ ແລະ ລິມບູນແບບ;

ສ້າງນະວັດຕະກຳ ເພື່ອສົ່ງເສີມການທ່ອງທ່ຽວສີຂຽວ; ສົ່ງເສີມການຜະລິດກະສິກຳແບບທັນສະໄໝ (Smart farm), ໂດຍສະເພາະໄດ້ສຳເລັດການຄົ້ນຄວ້າ ແລະ ພັດທະນາລະບົບບໍລິຫານຈັດການນໍ້າຢ່າງມີປະສິດທິພາບສຳລັບວຽກງານການກະເສດໂດຍນຳໃຊ້ລະບົບ IOT ເຂົ້າຊ່ວຍ; ສຳເລັດການຄົ້ນຄວ້າພັດທະນາລະບົບໃຫ້ອາຫານພືດ (ໃສ່ປຸ໋ຍ) ແບບອັດຕະໂນມັດ ແລະ ສຳເລັດການຄົ້ນຄວ້າລະບົບການຄວບຄຸມອຸນຫະພູມໃນໂຮງເຮືອນປູກເຫັດ; ໄດ້ຄົ້ນຄວ້ານຳໃຊ້

ເຮືອບິນບໍ່ມີຄົນຂັບ (ໂດຼນ) ລຸ້ນ Q10 (2020) ແລະ A16 (2020) ເພື່ອຮັບໃຊ້ໃນວຽກງານກະສິກຳ, ວຽກງານການສຳຫຼວດ ແລະ ຖ່າຍພາບ.

ປັບປຸງບັນດາໂປຣແກຣມຄືນໃໝ່ ໃຫ້ມີຄວາມທັນສະໄໝ ເຊັ່ນ: E-book ຖານຂໍ້ມູນບຸກຄະລາກອນ, ໂປຣແກຣມ ຖານຂໍ້ມູນບ້ານ ແລະ ຖານຂໍ້ມູນດິຈິຕອນ ເພື່ອສົ່ງເສີມການພັດທະນາເສດຖະກິດ-ສັງຄົມ.

ສຳເລັດການເປີດໂຕການນຳໃຊ້ລະບົບບໍລິການ Vaccine ID/Vaccince Passport ແລະ ລະບົບການປິ່ນປົວຕົນເອງຢູ່ບ້ານ (Home Isolation) ແລະ ໄດ້ສະເໜີຫາບໍລິສັດລົດໄຟລາວ-ຈີນ ເພື່ອສົ່ງເສີມໃຫ້ມີການໃຊ້ QR code Vaccine ID ພາຍໃນສະຖານີລົດໄຟ ປັດຈຸບັນມີຜູ້ນຳໃຊ້ລະບົບ LaoKYC ທັງໝົດຈຳນວນ 3,386,686 ແລະ ໄດ້ພັດທະນາຕໍ່ຍອດແອັບ LaoKYC ເປັນ Super App ແລະ ໄດ້ເຊື່ອມຕໍ່ເຂົ້າລະບົບປະກັນສັງຄົມ, ລະບົບຖານຂໍ້ມູນວິສາຫະກິດແຫ່ງຊາດ ແລະ ລະບົບຄັງປັນຍາລາວ ໃນຮູບແບບ Webview.

ສຳເລັດ ການຈັດງານມະຫະກຳທາງດ້ານເຕັກໂນໂລຊີ ກຸ່ມຂໍ້ມູນຜູກພັນຂອງລາວ (Laos Blockchain Fest) 2025. ພາຍໃຕ້ຄຳຂວັນ ສ້າງອະນາຄົດທີ່ຍືນຍົງ ດ້ວຍເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ “Building Resilient Future-Chain” ຮ່ວມກັບ Bitqik ບໍລິສັດ ເຊິ່ງມີຜູ້ເຂົ້າຮ່ວມງານສະແດງຈຳນວນ 26 ພາກສ່ວນ ມີຜູ້ເຂົ້າຮ່ວມງານຫຼາຍກວ່າ 500 ເທື່ອຄົນ, ສາເລັດການຈັດງານສັບປະດາດິຈິຕອນ (Digital week) ປະຈາປີ 2022, 2023, 2024 ເພື່ອສົ່ງເສີມ ແລະ ພັດທະນາ ດ້ານເຕັກໂນໂລຊີນະວັດຕະກຳ, ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (ໄອຊີທີ), ໂທລະຄົມມະນາຄົມ ແລະ ດິຈິຕອນທີ່ທັນສະໄໝເຂົ້າໃນທຸກຂະແໜງການເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຕ່ສູນກາງລົງຮອດທ້ອງຖິ່ນ ແລະ ເພື່ອຊຸກຍູ້ຂະບວນການຜະລິດສິນຄ້າ, ການບໍລິການໃຫ້ກາຍເປັນຜະລິດຕະພັນທີ່ມີຄວາມຫຼາກຫຼາຍສ້າງມູນຄ່າເພີ່ມ ສາມາດແຂ່ງຂັນ ໃນຕະຫຼາດພາຍໃນ ແລະ ຕ່າງປະເທດ ການແຂ່ງຂັນ Lao ICT Awards 2022, ການແຂ່ງຂັນຄວາມປອດໄພທາງໄຊເບີ, Start-up , Hackathon, ນະວັດຕະກຳ Innovation Awards, Post Mart ເຊິ່ງມີຜູ້ເຂົ້າຮ່ວມງານສະແດງຈຳນວນ 55 ພາກສ່ວນ ແລະ ມີຜູ້ເຂົ້າຮ່ວມງານທັງໝົດ 1,536 ເທື່ອຄົນ; ສຳເລັດການຈັດວາງສະແດງ ແລະ ສ້າງຄູ່ຮ່ວມມືດ້ານເຕັກໂນໂລຊີນະວັດຕະກຳ ລາວ-ຫວຽດນາມ (Tech Innovation Laos-Vietnam) ເຊິ່ງມີຜູ້ເຂົ້າຮ່ວມງານສະແດງຈຳນວນ 54 ພາກສ່ວນ ຝ່າຍລາວ 31 ພາກສ່ວນ, ຫວຽດນາມ 24 ພາກສ່ວນ ແລະ ມີຜູ້ເຂົ້າຮ່ວມງານທັງໝົດ 634 ເທື່ອຄົນ; ນອກຈາກນັ້ນ, ຍັງໄດ້ລົງຈັດງານວາງສະແດງ ໄອຊີທີ ໃນກິດຈະກຳຂອງສະຖາບັນການເມືອງການປົກຄອງແຫ່ງຊາດ ປະຈຳປີ 2022 ເຊິ່ງປະກອບມີ 8 ພາກສ່ວນບໍລິສັດ ເຂົ້າຮ່ວມຈັດງານດັ່ງກ່າວ.

### 1.8 ແຜນວຽກຈຸດສຸມທີ 8: ການພັດທະນາໄປສະນີ ຫັນເປັນທັນສະໄໝ

ໄປສະນີມີບົດບາດ ແລະ ຄວາມສຳຄັນໃນຍຸກການຫັນເປັນເສດຖະກິດດິຈິຕອນຂອງປະເທດ ຍ້ອນມີການບໍລິການຂອງຂະແໜງການໄປສະນີ, ຈຶ່ງພາໃຫ້ຮ້ານຄ້າອອນລາຍ ຢູ່ ສປປ ລາວ ມີການຂະຫຍາຍຕົວຢ່າງກ້າວກະໂດດ, ສັງຄົມມີວຽກເຮັດງານທຳຫຼາຍຂຶ້ນ, ອຳນວຍຄວາມສະດວກໃຫ້ແກ່ການຜະລິດສິນຄ້າພາຍໃນປະເທດຂະຫຍາຍຕົວ ແລະ ເຊື່ອມໂຍງກັບສາກົນ. ບໍລິສັດ ໄປສະນີລາວ ຈຳກັດ ເປັນສະມາຊິກຂອງສະຫະພາບໄປສະນີສາກົນ ສາມາດນຳໃຊ້ສັນຍາລັກ, ເຄື່ອງໝາຍການຄ້າ, ມາດຕະຖານ ແລະ ຕາໜ່າງຂອງລະບົບໄປສະນີໂລກ ຊຶ່ງສົ່ງເຄື່ອງຝາກໄປສະນີໄປໄດ້ 192 ປະເທດໃນທົ່ວໂລກ,ປະຈຸບັນມີຜູ້ປະກອບການນັບທັງພາກລັດແລະເອກະຊົນເພີ່ມຫຼາຍຂຶ້ນທັງໝົດ 63 ຫົວໜ່ວຍ. ຕາໜ່າງໄປສະນີຂະຫຍາຍຕົວໃນທຸກແຂວງ ຊຶ່ງກວມເອົາ 100% ຂອງຕົວເມືອງໃນທົ່ວປະເທດ; ອີງການຄຸ້ມຄອງໄປສະນີ ມີແອັບພຼີເຄຊັນ L-Tracking ຊຶ່ງເປັນລະບົບສູນລວມການກວດກາ ແລະ ຕິດຕາມເຄື່ອງຝາກໄປສະນີພາຍໃນປະເທດ ສະໜອງໃຫ້ແກ່ຜູ້ປະກອບການ ແລະ ສັງຄົມ, ແອັບພຼີເຄຊັນດັ່ງກ່າວ ສາມາດນຳໃຊ້ໄດ້ໃນສະມາດໂຟນທັງລະບົບແອນດຼອຍ, ໄອໂອເອັສ ແລະ ໃນເວັບໄຊ. ລັດ ແລະ ເອກະຊົນ ໄດ້ຮ່ວມມືກັນ ໂດຍມີການລົງນາມບົດບັນທຶກຄວາມເຂົ້າໃຈ ເພື່ອສຶກສາຄວາມເປັນໄປໄດ້ໃນການພັດທະນາລະຫັດໄປສະນີ ຫັນເປັນດິຈິຕອນ;ຫົວໜ່ວຍບໍລິການຂະແໜງ ການໄປສະນີມີການນຳໃຊ້ນະວັດຕະກຳ ແລະ ເຕັກໂນໂລຊີໃໝ່ໆ ຫຼາກຫຼາຍຮູບແບບ ເພື່ອໃຫ້ບໍລິການທີ່ຄຸນນະພາບທີ່ສູງຂຶ້ນບົນພື້ນຖານມາດຕະຖານ ທີ່ອີງການຄຸ້ມຄອງວາງອອກ ເຊັ່ນ:

- ວິສະຫະກິດໄປສະນີຂອງລັດໄດ້ຂະຫຍາຍເວລາໃຫ້ການບໍລິການ ທັງວັນເສົາ ແລະ ວັນອາທິດ. ໃນນັ້ນ, ເປີດໃຫ້ບໍລິການວັນເສົາ 23 ຈຸດບໍລິການທົ່ວປະເທດ ແລະ ເປີດໃຫ້ບໍລິການວັນອາທິດ 2 ຈຸດບໍລິການໃນນະຄອນຫຼວງວຽງຈັນ, ສ່ວນຫົວໜ່ວຍເອກະຊົນ ກໍມີການເປີດບໍລິການທັງວັນເສົາ ແລະ ອາທິດໃນຂອບເຂດທົ່ວປະເທດ.
- ຜູ້ໃຫ້ບໍລິການມີການຕິດຕັ້ງລະບົບຕິດຕາມ (GPS) ໃສ່ພາຫະນະຂົນສົ່ງ ແລະ ແຈກຢາຍ ເພື່ອຄຸ້ມຄອງ ແລະບໍລິຫານ ການບໍລິການໃຫ້ມີປະສິດທິພາບ.
- ວິສະຫະກິດຂອງລັດມີການນໍາໃຊ້ລະບົບ IPS.Post ຂອງສະຫະພາບໄປສະນີສາກົນ ບັນທຶກທຸກຂໍ້ມູນໃນການເຄື່ອນໄຫວກິດຈະກໍາໃນການຮັບຝາກ, ຈັດສົ່ງ ແລະ ແຈກຢາຍ ແລະ ສາມາດກວດສອບ ສະຖານະເຄື່ອງຝາກຈາກຕົ້ນທາງຫາປາຍທາງລະຫວ່າງປະເທດ (Trace and Track), ສໍາຫຼັບພາຍໃນປະເທດຜູ້ໃຫ້ບໍລິການທັງພາກລັດ ແລະ ເອກະຊົນກໍ່ໄດ້ມີການນໍາໃຊ້ບັນດາແອບພລິເຄຊັນຕິດຕາມກວດກາສະຖານະເຄື່ອງຝາກ ແລະ ແພລດດິຊິຕອນທີ່ຫຼາກຫຼາຍ ເຂົ້າໃນການບໍລິການໂດຍເຊື່ອມເຂົ້າກັບແພດຟອມການຄ້າ ແລະ ລະບົບຊໍາລະແບບເອເລັກໂຕຼນິກ ຊຶ່ງມັນໄດ້ສ້າງເງື່ອນໄຂ ແລະ ຂໍ້ສະດວກໃຫ້ການຄ້າເອເລັກໂຕຼນິກຂະຫຍາຍຕົວສູງຂຶ້ນ.
- ບໍລິການໄປສະນີລະຫວ່າງປະເທດມີການນໍາໃຊ້ລະບົບແຈ້ງພາສີລ່ວງໜ້າແບບອີເລັກໂຕນິກ ITTIMAT ແລະ CDS ເພື່ອເຊື່ອມຕໍ່ຂໍ້ມູນເຂົ້າ ກັບລະບົບພາສີຂອງປະເທດສະມາຊິກສະຫະພາບໄປສະນີສາກົນທີ່ມີການສົ່ງຫໍ່ເຄື່ອງ ແລະ ສິນຄ້າຫາກັນ.
- ວິສະຫະກິດໄປສະນີ ຂອງລັດໄດ້ຫັນລະບົບການບັນຊີແບບເກົ່າ ມານໍາໃຊ້ເປັນຫຼັກການບັນຊີແບບໃໝ່ ທີ່ທັນສະໄໝ (Accounting Program 2020).
- ມີການຮ່ວມມືລະຫວ່າງຜູ້ປະກອບການພາກລັດ ແລະ ເອກະຊົນຫຼາຍຂຶ້ນ ເພື່ອຂະຫຍາຍຈຸດໃຫ້ບໍລິການລະຫວ່າງ ໄປສະນີລາວ ແລະ ບໍລິສັດມີໄຊ Express ແລະ Flash Express. ການຮ່ວມມືລະຫວ່າງໄປສະນີລາວ ແລະ ຮຸ່ງອາລຸນຂົນສົ່ງດ່ວນ ເພື່ອສຶກສາຄວາມເປັນໄປໄດ້ ໃນການສ້າງສູນກວດກາເຄື່ອງຝາກລະຫວ່າງປະເທດ.
- ຂະຫຍາຍຊ່ອງທາງການຂົນສົ່ງ ບໍລິການໄປສະນີລະຫວ່າງປະເທດໂດຍໄປສະນີລາວໄດ້ເປີດໃຫ້ຫລາຍບໍລິສັດຂົນສົ່ງເຂົ້າມາປະມູນການຂົນສົ່ງຖົງເມໄປຕ່າງປະເທດ (LEO, LAKO, Air Aviation & Triple i) ເຊິ່ງເຮັດໃຫ້ການຂົນສົ່ງທີ່ເປັນຕົ້ນທຶນຫລັກຫລຸດລົງເຖິງ 50% ເພື່ອເພີ່ມຄວາມສາມາດແຂ່ງຂັນໃນຕະຫຼາດ ແລະ ດຶງດູດລູກຄ້າມາໃຊ້ບໍລິການໃຫ້ຫຼາຍຂຶ້ນ.
- ວິສະຫະກິດໄປສະນີ ຂອງລັດຫັນການບໍລິການແບບໃໝ່ໄປຍັງຂອບເຂດຊາຍແດນເປັນຕົ້ນການບໍລິການ e-Commerce (Cross-border) ກັບປະເທດໄທ, ຫວຽດນາມ ແລະ ສປ ຈີນ.

### 1.9 ແຜນວຽກຈຸດສຸມທີ 9: ການຮ່ວມມື ແລະ ການເຊື່ອມໂຍງ ຕ່າງປະເທດ

ການຮ່ວມມືເພື່ອການພັດທະນາບົນພື້ນຖານຂະຫຍາຍການຮ່ວມມືຫຼາຍຝ່າຍ, ຫຼາຍຮູບແບບ, ຫຼາຍລະດັບ, ເພີ່ມທະວີການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງຮ່ວມມືອັນເປັນພື້ນຖານກັບບັນດາປະເທດເພື່ອນມິດຍຸດທະສາດ, ສືບຕໍ່ເສີມຂະຫາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານໃຫ້ເຂົ້າສູ່ລວງເລິກກັບ ສສ ຫວຽດນາມ, ເສີມຂະຫາຍສາຍພົວພັນ ຄູ່ຮ່ວມມືຍຸດທະສາດຮອບດ້ານ ໝັ້ນຄົງຍາວນານກັບ ສປ ຈີນ ຕິດພັນກັບການຈັດຕັ້ງປະຕິບັດແຜນແມ່ບົດຄູ່ຮ່ວມຊະຕາກໍາ ລາວ-ຈີນ ບົນພື້ນຖານການຮ່ວມມື ທີ່ຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ ໂດຍເລີ່ມຈາກຄວາມຕ້ອງການ ແລະ ສະພາບຄວາມເປັນຈິງຂອງປະເທດເຮົາເປັນຫຼັກ, ໄດ້ລົງນາມເຊັນສັນຍາຮ່ວມມືລົງທຶນ ກັບຄູ່ຮ່ວມພັດທະນາ ຈໍານວນ 36 ສະບັບ ປະກອບມີ: MOU ຈໍານວນ 6 ສະບັບ, MOA ຈໍານວນ 9 ສະບັບ, MOC ຈໍານວນ 3 ສະບັບ ແລະ ສັນຍາການຮ່ວມມືໃນການສ້າງກິດຈະກໍາຕ່າງໆ ຈໍານວນ 18 ສະບັບ; ໄດ້ລົງນາມເອກະສານຮ່ວມມືປະກອບດ້ວຍ: ບົດບັນທຶກຄວາມເຂົ້າໃຈ (MOU), ສັນຍາການຮ່ວມມື ແລະ ບົດບັນທຶກການສໍາຫຼວດພາກສະໜາມ ລະດັບກະຊວງ ກັບບັນດາປະເທດຕ່າງໆ ຈໍານວນ 22 ສະບັບ ຄື: ການຮ່ວມມືກັບ ສສ ຫວຽດນາມ 4 ສະບັບ, ສປ ຈີນ 12 ສະບັບ, ໄທ 1 ສະບັບ, ປະເທດສິງກະໂປ 1 ສະບັບ, ສ.ເກົາຫຼີ 2 ສະບັບ ແລະ ກໍາປູເຈຍ 2 ສະບັບ; ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໄດ້ຍາດແຍ່ງທຶນຊ່ວຍເຫຼືອ ຈໍານວນ 4 ໂຄງການ ຄື: 1) ໂຄງການກໍ່ສ້າງຕຶກຂອງ

ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (ຊ່ວຍເຫຼືອລ້າຈາກ ລັດຖະບານ ສປ ຈີນ); 2) ໂຄງການຕິດຕັ້ງລະບົບຊອບແວຣປະຕິບັດການຄວາມປອດໄພໄຊເບີ (ຊ່ວຍເຫຼືອຈາກ ສສ ຫວຽດນາມ); 3) ໂຄງການຕິດຕັ້ງຊອບແວຣລະບົບການຮຽນອອນລາຍແບບເປີດກວ້າງ (ຊ່ວຍເຫຼືອຈາກ ສສ ຫວຽດນາມ) ແລະ 4) ໂຄງການເປີດສູນພາສາຫວຽດນາມມິດຕະພາບ ຮ່ວມມືກັບ ມະຫາວິທະຍາໄລກິວລ໋ອງ (ຊ່ວຍເຫຼືອຈາກ ສສ ຫວຽດນາມ); ໄດ້ຮັບທຶນຊ່ວຍເຫຼືອຈາກອົງການ APT ຈຳນວນ 7 ກິດຈະກຳ/ໂຄງການ (ໃນນັ້ນ ພາຍໃຕ້ທຶນສະໜັບສະໜູນພິເສດຈາກ ສປ ຈີນ (EBC-C) 2 ໂຄງການ, ທຶນສະໜັບສະໜູນພິເສດຈາກ ຍີ່ປຸ່ນ (EBC-J) 2 ໂຄງການ, ທຶນສະໜັບ ສະໜູນພິເສດຈາກ ສ. ເກົາຫຼີ (EBC-K) 1 ໂຄງການ, ພາຍໃຕ້ໂຄງການພະນັກງານ ແລະ ນັກສຶກສາໜຸ່ມນ້ອຍ (APTYPS) 2 ກິດຈະກາ); ການຊ່ວຍເຫຼືອຈາກອົງການ ITU ຈຳນວນ 3 ກິດຈະກຳ ແລະ ການຊ່ວຍເຫຼືອຈາກອົງການ **UN** APCICT/ESCAP ຈຳນວນ 6 ກິດຈະກຳ, ໃນຂອບການຮ່ວມມືອະນຸພາກພື້ນ ໄດ້ຍາດແຍ່ງທຶນຈາກກອງທຶນພິເສດແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງໄດ້ 1 ໂຄງການ, ໄດ້ຮັບການຊ່ວຍ ເຫຼືອຈາກ APT (Asia-Pacific Telecommunity) ຈຳນວນ 2 ໂຄງການ ຄື: 1. "Enhancing the development of telecommunications and internet network dimension and testing systems in service of quality assurance and security." ແລະ 2. "Implementation of a quality inspection center for mobile broadband services"; ພ້ອມດຽວກັນນັ້ນກໍ່ໄດ້ປະສານງານກັບສະຫະພາບໂທລະຄົມມະນາຄົມ (ITU) ກ່ຽວກັບໂຄງການສະໜອງການເຊື່ອມຕໍ່ອິນເຕີເນັດຜ່ານດາວທຽມໃຫ້ກັບໂຮງຮຽນ 05 ແຫ່ງ ໃນເຂດຫ່າງໄກຊອກຫຼີກຂອງ ສປປ ລາວ;

ສຳເລັດຈັດກອງປະຊຸມເຈົ້າໜ້າທີ່ອາວຸໂສດິຈິຕອນອາຊຽນ ຄັ້ງທີ 2, ກອງປະຊຸມເຈົ້າໜ້າທີ່ອາວຸໂສດັດສົມໂທລະຄົມອາຊຽນ ຄັ້ງທີ 30 ແລະ ກອງປະຊຸມປິ່ນອ້ອມ ປະຈຳປີ 2024; ໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນອາຊຽນ ICT ແລະ ບັນດາກອງທຶນອາຊຽນ-ຍີ່ປຸ່ນ ຈຳນວນ 7 ກິດຈະກຳ. ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືດ້ານການສື່ສານ ແລະ ເຕັກໂນໂລຊີດິຈິຕອນ ລະຫວ່າງອາຊຽນ ແລະ ສປ ຈີນ ໃນລະຫວ່າງເຂົ້າຮ່ວມກອງປະຊຸມລັດຖະມົນຕີດິຈິຕອນອາຊຽນ ຄັ້ງທີ 4 (4th ADGMIN) ເຊິ່ງຈັດຂຶ້ນໃນເດືອນກຸມພາ 2024 ທີ່ ປະເທດສິງກະໂປ ເປັນເຈົ້າພາບຮ່ວມກັບອົງການສື່ສານອາວະກາດສາກົນ ອິນເຕີສະປຸກນິກ ຈັດກອງປະຊຸມຮ່ວມສະພາບໍລິຫານຄັ້ງທີ 53 ແລະ ຄະນະກຳມະການປະຕິບັດງານຄັ້ງທີ 28 ປະຈຳປີ 2025 ທີ ແຂວງ ຫຼວງພະບາງ;

ນອກຈາກນັ້ນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຍັງໄດ້ຮັບທຶນຊ່ວຍເຫຼືອໃນການພັດທະນາທາງດ້ານຊັບພະຍາກອນມະນຸດໃນຫຼາຍໆດ້ານ ຈຳນວນ 415 ກວ່າທຶນ ໃນຫຼາຍຫົວຂໍ້ເປັນຕົ້ນ: ທຶນເຂົ້າຮ່ວມກອງປະຊຸມສຳມະນາ , ຝຶກອົບຮົມຈາກອົງການໂທລະຄົມມະນາຄົມອາຊີ-ປາຊີຟິກ (APT) ໃນຮູບແບບເຊິ່ງໜ້າ ແລະ ທາງໄກ ຫຼາຍກວ່າ 130 ຄັ້ງ; ຈາກອົງການ ITU ໃນຮູບແບບເຊິ່ງໜ້າ ແລະ ທາງໄກ ຫຼາຍກວ່າ 110 ຄັ້ງ; ໃນຂອບອາຊຽນ ແລະ ອານຸພາກພື້ນ 158 ຄັ້ງ (ພາຍໃນ 110 ຄັ້ງ ແລະ ຕ່າງປະເທດ ຜ່ານລະບົບອອນລາຍ 42 ຄັ້ງ ແລະ ແບບອອບລາຍ 6 ຄັ້ງ) ແລະ ກັບບັນດາປະເທດຕ່າງໆ 17 ຄັ້ງ (ອອນລາຍ 6 ຄັ້ງ ແລະ ອອບລາຍ 9 ຄັ້ງ) ລວມທັງໝົດ 35 ຫຼັກສູດ.

**ການຮ່ວມມືດ້ານດິຈິຕອນກັບຕ່າງປະເທດ:**

ໄດ້ລົງນາມການເປັນຄູ່ຮ່ວມດິຈິຕອນກັບ ສສ. ຫວຽດນາມ, ຮ່ວມກັບ ກະຊວງຖະແຫຼງຂ່າວ ແລະ ການສື່ສານ (MIC) ສສ. ຫວຽດນາມ ສ້າງ ແລະ ເປີດນຳໃຊ້ລະບົບ SOC ແລະ ລະບົບການຮຽນການສອນແບບເປີດກວ້າງ (LMOOC), ໄດ້ເຊັນສັນຍາການຮ່ວມມືດ້ານ ໄອຊີທີ ກັບກະຊວງອຸດສາຫະກຳ ແລະ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (MIIT) ສປ ຈີນ ແລະ ກະຊວງ ດິຈິຕອນ ເພື່ອເສດຖະກິດ ແລະ ສັງຄົມ ຂອງຣາຊະອານາຈັກໄທ; ວຽກຮ່ວມມືຕ່າງປະເທດ ໃນຂົງເຂດວຽກບໍລິຫານລັດດິຈິຕອນ ປະກອບມີ:

- ໄດ້ຮ່ວມມືກັບ UNDP ດຳເນີນໂຄງການ RFF ເພື່ອສຳຫຼວດ ແລະ ເກັບກຳຂໍ້ມູນການປະເມີນຄວາມພ້ອມດ້ານດິຈິຕອນ ທົ່ວປະເທດ (Digital Maturity Assessment-DMA) ຄົ້ນຄວ້າສ້າງມາດຕະຖານຂອບວຽກ ແລະ ແຜນແມ່ບົດລັດຖະບານດິຈິຕອນ (Digital Government Master Plan, Standard Framework) ແລະ ໂຄງການໂຕແບບ (Pilot project) (G-Room, Super App, Skill Assessment);

- ໄດ້ຮ່ວມມືກັບ WorldBank ດຳເນີນການປະເມີນສະພາບການພັດທະນາ ແລະ ກາລະໂອກາດດ້ານດີຈີຕອນ ຢູ່ ສປປ ລາວ (Positioning the Lao PDR for a Digital Future);
- ໄດ້ຮ່ວມກັບອົງການ UNESCAP ດຳເນີນການໂຄງການການເຊື່ອມໂຍງທາງດ້ານດີຈີຕອນ ແລະ ການຂົນສົ່ງ ເພື່ອຄວາມໝັ້ນຄົງດ້ານເສດຖະກິດ-ສັງຄົມໃນຊ່ວງວິກິດ ຫຼັງໄລຍະລະບາດຂອງພະຍາດ COVID-19 ໃນ ຂົງເຂດອາຊີ-ປາຊີຟິກ ຈັດທີ່ນະຄອນຫຼວງວຽງຈັນ ໃນປີ 2023 ແລະ ປີ 2024;
- ຮ່ວມມືກັບ ສ.ເກົາຫຼີ ໃນການສ້າງສູນຮ່ວມມືລັດດີຈີຕອນ (Digital Government Cooperation Center-DGCC) ສຳລັບປີ 2023-2025;
- ຮ່ວມກັບອົງການ NIPA ສ.ເກົາຫຼີ ພາຍໃຕ້ກິດຈະກຳ World Friend Korea NIPA Advisor ປີ 2023-2024 ແລະ ຮ່ວມກັບອົງການ NIA ສ.ເກົາຫຼີ ພາຍໃຕ້ກິດຈະກຳ World Friends Korea IT Volunteer Program 2023;
- ຮ່ວມກັບປະເທດອາຊຽນສ້າງກິດຈະກຳ 3 ຫົວຂໍ້:
- ສ້າງມາດຕະຖານເພື່ອແລກປ່ຽນຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບໄພພິບັດໃນພາກພື້ນອາຊຽນ (Establishment of the Standard to Exchange Data and Information Related to Disaster in the ASEAN Region) ປີ 2023;
- ການສຶກສາການພັດທະນາ ລະບົບຢັ້ງຢືນຕົວຕົນດີຈີຕອນ (Digital Identification in ASEAN – Baseline Study on How ASEAN Leverage the Digitization of ID) ປີ 2024;
- ການສຶກສາການພັດທະນາພລາດຟອມຂອງພາກລັດ (ASEAN Guideline on digital platform development) 2025;
- ສຳເລັດ ການຈັດສຳມະນາ ແລະ ການສະເຫຼີມສະຫຼອງ ການຍອມຮັບລະຫັດຊື່ອິນເຕີເນັດພາສາລາວ (.ລາວ) ແລະ ທຸກພາສາໃນທົ່ວໂລກ (Celebration of the Universal Acceptance (UA) Day) ຮ່ວມກັບອົງການ UASG ທີ່ ນະ ຄອນຫຼວງວຽງຈັນ, ປີ 2023 ຫາ ປີ 2025;
- ສຳເລັດການເຊັນບົດບັນທຶກຄວາມເຂົ້າໃຈ (MoU) ວ່າດ້ວຍການຮ່ວມມືໃນຂົງເຂດວຽກງານພັດທະນາ ຊັບພະຍາກອນ ອິນເຕີເນັດ ລະຫວ່າງ ສູນອິນເຕີເນັດ ແຫ່ງຊາດ ສປປ ລາວ (LANIC) ແລະ ສູນອິນເຕີເນັດ ແຫ່ງຊາດ ສສ ຫວຽດນາມ (VNNIC) ໃນຄັ້ງວັນທີ 10 ມັງກອນ 2024 ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງ ວຽງຈັນ;
- ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ກັບ ສູນຮັບຮອງເອເລັກໂຕຣນິກ ສສ ຫວຽດນາມ (NEAC) ວ່າດ້ວຍ ການ ຮ່ວມມືໃນວຽກງານ ລາຍເຊັນດີຈີຕອນ, ການຮັບຮອງທາງເອເລັກໂຕຣນິກ ແລະ ໄດ້ຈັດການຝຶກອົບຮົມຍົກ ລະດັບດ້ານເຕັກນິກວິຊາການ ເພື່ອສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນ ທີ່ ສປປ ລາວ ຈຳນວນ 4 ຄັ້ງ ແລະ ທັດສະນະຢ້ຽມຢາມແລກປ່ຽນບົດຮຽນ ທີ່ ສສ ຫວຽດນາມ ຈຳນວນ 3 ຄັ້ງ.

### 1.10 ການຄຸ້ມຄອງລາຍຮັບ-ງົບປະມານແລະ ການລົງທຶນ:

#### 1) ດ້ານການເງິນ-ງົບປະມານ:

ໃນໄລຍະ 2021-2025 ກະຊວງໄດ້ຮັບແຜນອະນຸມັດຈາກກະຊວງການເງິນ ຕົວຈິງ ທັງໝົດ 406.1 ຕື້ກວ່າກີບ (406,103,512,575 ກີບ), ປະຕິບັດຈ່າຍຕົວຈິງ 390.92 ຕື້ກວ່າກີບ (390,925,603,858 ກີບ). ເທົ່າກັບ 96.25% ຂອງ ແຜນທີ່ໄດ້ຮັບອະນຸມັດ. (ຂໍ້ມູນ 03/03/2026).

ສາມາດເກັບລາຍຮັບວິຊາການ ໃນໄລຍະ 2021-2025 ສາມາດເກັບລາຍຮັບວິຊາການໄດ້ທັງໝົດ 795.39 ຕື້ກວ່າ ກີບ (795,391,417,355 ກີບ) ທຽບໃສ່ແຜນການ 5 ປີເທົ່າກັບ 115.34% (ແຜນການ 689,608,192,500 ກີບ). ໃນນີ້, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເກັບໄດ້ຄ່າທຳນຽມ ແລະ ຄ່າບໍລິການ 63.19 ຕື້ກວ່າກີບ (63,191,172,262 ກີບ) ເທົ່າກັບ 102.72% (ແຜນການ 61,515,876,000 ກີບ), ກະຊວງການເງິນ, ກົມຊັບສິນຮັບຊ່ວຍປະຕິບັດເກັບໄດ້

ຈຳນວນ 732.2 ຕື້ກວ່າກີບ (732,200,245,093 ກີບ), ທຽບໃສ່ແຜນການ 5 ປີເທົ່າກັບ 116,58% (ແຜນການ 628,092,316,500 ກີບ). (ຂໍ້ມູນວັນທີ 03/03/2026).

**2) ດ້ານການລົງທຶນຂອງລັດ:**

ສຳລັບໂຄງການລົງທຶນຂອງລັດ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໄດ້ຮັບໂຄງການລົງທຶນລັດ (ເປັນທຶນພາຍໃນ 100%) ຈຳນວນທັງໝົດ 57 ໂຄງການ ມູນຄ່າ 84 ຕື້ກວ່າກີບ ທຽບໃສ່ແຜນການ 5 ປີ ເທົ່າກັບ 62.2% (ແຜນການ 135 ຕື້ກີບ) ໃນນີ້, ປະກອບມີໂຄງການບ້ວງງົບປະມານປົກກະຕິ ຈຳນວນ 29 ໂຄງການ ມູນຄ່າ 12 ຕື້ກວ່າກີບ ແລະ ໂຄງການບ້ວງລົງທຶນ ອື່ນໆ ຈຳນວນ 23 ໂຄງການ ມູນຄ່າ 71 ຕື້ກວ່າກີບ, ທຸກໂຄງການທີ່ໄດ້ຮັບຕາມແຜນລົງທຶນລັດໃນແຕ່ລະປີແມ່ນໄດ້ຖືກຈັດຕັ້ງປະຕິບັດສຳເລັດ.

**3) ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA):**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໄດ້ເອົາໃຈໃສ່ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ຈຳນວນ 8 ໂຄງການຄື: ໂຄງການກໍ່ສ້າງຕຶກສະຖາບັນ ເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ ໂດຍໄດ້ຮັບການຊ່ວຍເຫຼືອຈາກລັດຖະບານ ສປປ ຈີນ ໃນມູນຄ່າ 85,289,720 ຢວນ (ໄລຍະປະຕິບັດໂຄງການ 2022-2024), 2) ໂຄງການຊ່ວຍເຫຼືອໂທລະພາບດິຈິຕອນ 100 ໝູ່ບ້ານ, ມູນຄ່າ 8,000,000 ລ້ານໂດລາສະຫະລັດ, 3) ໂຄງການຊ່ວຍເຫຼືອລ້າ ຈາກ ສ.ເກົາຫຼີ ເພື່ອສະໜັບສະໜູນການສ້າງອຸທິຍານດິຈິຕອນ ຂອງ ສປປ ລາວ (Laos Digital Park) ແລະ ຝຶກອົບຮົມຊ່ຽວຊານໄອທີ ເປັນມູນຄ່າ 6,000,000 ລ້ານໂດລາສະຫະລັດ, 4) ໂຄງການສ້າງສູນຮ່ວມມືລັດດິຈິຕອນ (DGCC) ໄລຍະປີ 2023-2025 ເປັນມູນຄ່າ 1,000,000 ລ້ານໂດລາສະຫະລັດ, 5) ໂຄງການພັດທະນາເພື່ອການສ້າງກົນໄກການແຊຂໍ້ມູນເພື່ອຊີ້ວັດ ແລະ ສົ່ງເສີມເປົ້າໝາຍການພັດທະນາແບບຍືນຍົງ 2023-2025 ໄດ້ຮັບການຊ່ວຍເຫຼືອໃນຂອບການຮ່ວມມືອານຸພາກພື້ນແມ່ນ້ຳຂອງ ມູນຄ່າ 150,000 ໂດລາສະຫະລັດ, 6)ໂຄງການອຳນວຍຄວາມສະດວກດ້ານການເງິນແບບດິຈິຕອນ (RFF) (ໄລຍະປະຕິບັດ 2021-2022) ມູນຄ່າ 600,000 ໂດລາສະຫະລັດ ໄດ້ຮັບການຊ່ວຍເຫຼືອຈາກທຶນ UNDP; 7)ໂຄງການຕິດຕັ້ງລະບົບຊອບແວປະຕິບັດການຄວາມປອດໄພໄຊເບີ ຊ່ວຍເຫຼືອລ້າ ຈາກ ສສ ຫວຽດນາມ, 8)ໂຄງການແລກປ່ຽນຂໍ້ມູນ Knowledge Sharing Program (KSP) ມູນຄ່າ 310,000 ລ້ານໂດລາສະຫະລັດ, 9) ໂຄງການສຶກສາຄວາມເປັນໄປໄດ້ໃນການພັດທະນາປະຕູ້ຂໍ້ມູນພາກລັດ ຂອງ ສປປ ລາວ ມູນຄ່າ 59.954 ລ້ານໂດລາສະຫະລັດ.

ນອກຈາກນັ້ນຍັງໄດ້ຍາດແຍ່ງທຶນຊ່ວຍເຫຼືອທີ່ເປັນກິດຈະກຳໃນຂອບອາຊຽນ ຈຳນວນ 6 ກິດຈະກຳ ມູນຄ່າ 271,900 ໂດລາສະຫະລັດ ພາຍໃຕ້ກອງທຶນອາຊຽນ ໄອຊີທີ ແລະ ກອງທຶນອາຊຽນ ຍີ່ປຸ່ນ ໄອຊີທີ ແລະ ຍາດແຍ່ງການຊ່ວຍເຫຼືອຈາກ ຍີ່ປຸ່ນ ເພື່ອຮ່ວມກະກຽມ ການເປັນເຈົ້າພາບກອງປະຊຸມສຸດຍອດອາຊຽນ ຂອງ ສປປ ລາວ ໃນ ມູນຄ່າ: 206,300,000 Japanese Yen.

**4) ດ້ານກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ສູ້ຊົນເພື່ອສ້າງເງື່ອນໄຂທາງດ້ານງົບປະມານ ແລະ ຄວາມອາດສາມາດໃນການເກັບລາຍຮັບເຂົ້າໃນກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ເຊິ່ງໃນປີ 2025 ປະຕິບັດໄດ້ທັງໝົດ ຈຳນວນ 211,688,204,023 ກີບ, ພ້ອມດຽວກັນນັ້ນກໍ່ສຳເລັດສະໜອງດ້ານງົບປະມານຮັບໃຊ້ວຽກງານຂອງກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ຈຳນວນ 186,841,331,757 ກີບ

### 1.11 ດ້ານຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ:

ສຳເລັດການຄົ້ນຄວ້າເນື້ອໃນກ່ຽວກັບການປົກປ້ອງເດັກ ຈາກການນຳໃຊ້ອິນເຕີເນັດ ເຂົ້າໃນການປັບປຸງດຳລັດວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ "ມາດຕາ 11 ການປົກປ້ອງເດັກຈາການນຳໃຊ້ອິນເຕີເນັດ" ໃນກອງປະຊຸມເປີດກວ້າງທີ່ວກະຊວງເຕັກໂນໂລຊີ ແລະ ການສື່ສານ, ສຳເລັດສ້າງລະບົບ ຫ້ອງສະໝຸດແບບດີຈິຕອນ ເຊິ່ງໄດ້ລວບລວມຄັງຂໍ້ມູນ ທາງດ້ານວິທະຍາສາດ, ເຕັກໂນ ໂລຊີ, ປຶ້ມຕຳລາຮຽນສຳລັບນັກສຶກສາ ແບບເອເລັກໂຕຼນິກ ເພື່ອເຜີຍແຜ່ຂໍ້ມູນຄວາມຮູ້ໃຫ້ແກ່ສັງຄົມ ຜ່ານເວັບໄຊສ https://ebooklao.gov.la, ສາເລັດຈັດຂະບວນການລະນຶກວັນສາກົນເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ພາຍໃຕ້ຫົວຂໍ້: "ກ້າວໄປສູ່ 30 ປີແຫ່ງການຈັດຕັ້ງປະຕິບັດຖະແຫຼງການ ແລະ ແຜນປະຕິບັດງານປັກກິ່ງຮ່ວມກັນເພື່ອຢຸດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ", ມີຜູ້ເຂົ້າຮ່ວມ ຈານວນ 300 ກວ່າທ່ານ; ພ້ອມກັນນີ້ເນື່ອງໃນໂອກາດລະນຶກວັນສາກົນເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງໃນປີນີ້ ຍັງໄດ້ພະຍາຍາມ ສົ່ງຂໍ້ຄວາມສັ້ນ (SMS) ພາຍໃນເຄືອຂ່າຍຂອງບັນດາບໍລິສັດຜູ້ທີ່ໃຫ້ບໍລິການດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໂດຍຍົກເວັ້ນຄ່າບໍລິການຊຶ່ງມີເນື້ອໃນຂໍ້ຄວາມສະບັບພາສາລາວ: ຮ່ວມກັນຢຸດຕິຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ເພາະມັນເປັນການລະເມີດສິດທິມະນຸດ ແລະ ເປັນເລື່ອງທີ່ຍອມຮັບບໍ່ໄດ້ ແລະ ພາສາອັງກິດ: UNITE in End violence against women and girls, It is a violation of human rights and unacceptable. ໂດຍຜ່ານເຄືອຂ່າຍຂອງບໍລິສັດຜູ້ໃຫ້ບໍລິການໂທລະຄົມເປັນຕົ້ນ: ບໍລິສັດ ອີທີແອລ ຈຳກັດ ຈຳນວນ 1,719,890 ຂໍ້ຄວາມ ມູນຄ່າ 171,989,000 ກີບ, ບໍລິສັດ ສະຕາໂທລະຄົມຈຳກັດ ສົ່ງຂໍ້ຄວາມສັ້ນ ຈຳນວນ 604,717 ຂໍ້ຄວາມ ມູນຄ່າ 60,471,700 ກີບ, ບໍລິສັດ ທີພລັດດິຈິຕອນ ຈຳກັດຜູ້ດຽວ ສົ່ງຂໍ້ຄວາມສັ້ນ ຈຳນວນ 500,000 ຂໍ້ຄວາມ ມູນຄ່າ 50,000,000 ກີບ, ບໍລິສັດ ດາວທຽມລາວອາຊີ-ປາຊີຟິກ ເຜີຍແຜ່ຂໍ້ຄວາມໃນຮູບແບບແລ່ນໂຕໜັງສືຜ່ານຈໍຊ່ອງໂທລະພາບ LAOSAT (OSD) ຈຳນວນ 56 ຄັ້ງ ມູນຄ່າ 11,200,000 ກີບ, ບໍລິສັດລາວໂທລະຄົມມະນາຄົມ ມະຫາຊົນ ສົ່ງຂໍ້ຄວາມສັ້ນ ຈຳນວນ 39,000 ຂໍ້ຄວາມ ມູນຄ່າ 3,900,000 ກີບ, ບໍລິສັດ ເບສ ເທເລຄອມ ຈຳກັດ ສົ່ງຂໍ້ຄວາມສັ້ນ ຈຳນວນ 17,235 ຂໍ້ຄວາມ ມູນຄ່າ 2,585,250 ກີບ; ລວມມູນຄ່າທັງໝົດ 300,145,950 ກີບ (ສາມຮ້ອຍລ້ານໜຶ່ງແສນສີ່ສິບຫ້າພັນເກົ້າຮ້ອຍຫ້າສິບກີບ), ສຳເລັດກິດຈະກຳສະເຫຼີມສະຫຼອງວັນເດັກສາກົນ 01 ມິຖຸນາ ຄົບຮອບ 100 ປີ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ຄົບຮອບ 44 ປີ, ມີຜູ້ເຂົ້າຮ່ວມທັງໝົດ 170 ກວ່າທ່ານ, ໄດ້ຄົ້ນຄວ້າ, ສ້າງບົດຄວາມ, ແຈ້ງເຕືອນ, ໂພສເຕີ, ແຜ່ນພັບ, ປຶ້ມຄູ່ມື, ວິດີໂອ ໂຄສະນາເຕືອນໄພກ່ຽວກັບການປົກປ້ອງເດັກໃຫ້ປອດໄພຈາກການນຳໃຊ້ສື່ສັງຄົມອອນລາຍ ແລະ ການເຂົ້າເຖິງຂໍ້ມູນທີ່ບໍ່ປອດໄພ ເພື່ອແຈ້ງເຕືອນຜ່ານທາງເວັບໄຊ ແລະ ເພສຂອງກົມຄວາມປອດໄພໄຊເບີ ກະຊວງເຕັກໂນໂລຊີ ແລະ ການສື່ສານ.

### 1.12 ການກວດກາ ແລະ ຕິດຕາມປະເມີນຜົນ

ການຕິດຕາມກວດກາໂຄງການລົງທຶນຂອງລັດ: ສຳເລັດລົງເຄື່ອນໄຫວຕິດຕາມ ແລະ ເກັບກຳຂໍ້ມູນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ທັງໝົດ 38 ໂຄງການ ມູນຄ່າ 126,089,681,000 ກີບ ປະກອບມີ: ໂຄງການປີ 2017 ມີ 3 ໂຄງການ ມູນຄ່າ 1,935,000,000 ກີບ, ປີ 2018 ມີ 3 ໂຄງການ ມູນຄ່າ 6,918,200,000 ກີບ, ປີ 2019 ມີ 8 ໂຄງການ ມູນຄ່າ 25,000,000,000 ກີບ, ປີ 2020 ມີ 5 ໂຄງການ ມູນຄ່າ 24,463,791,000 ກີບ, ປີ 2022 ມີ 7 ໂຄງການ ມູນຄ່າ 15,716,890,000 ກີບ, ປີ 2023 ມີ 7 ໂຄງການ ມູນຄ່າ 50,388,680,000 ກີບ, ປີ 2024 ມີ 5 ໂຄງການ ມູນຄ່າ 1,667,120,000 ກີບ ແລະ ໄດ້ສະຫຼຸບປິດໂຄງການໄດ້ທັງ ໝົດ 24 ໂຄງການ; ສຳເລັດກວດກາຄືນໂຄງການລົງທຶນລັດ ປີ 2019 ທີ່ມີມູນຄ່າ 10 ຕື້ຂຶ້ນໄປ ແລະ 10 ຕື້ລົງມາ; ສຳເລັດການເຄື່ອນໄຫວຕິດຕາມກວດກາໂຄງການລົງທຶນຂອງລັດທີ່ບໍ່ຜ່ານການປະເມີນຕາມຜົນການກວດສອບສົກປີ 2015-2016 ແລະ ໂຄງການບໍ່ໄດ້ຄ້ຳປະກັນສັນຍາໂຄງການຕາມຜົນການກວດສອບ ປີ 2019 ຮ່ວມກັບໜ່ວຍງານກວດກາ ອົງການກວດສອບແຫ່ງລັດ.

ການເກັບກູ້ໜີ້ສິນ ບໍລິສັດ ໄປສະນີລາວ ຈຳກັດ, ອີງຕາມການຈັດຕັ້ງປະຕິບັດຜົນຂອງການກວດກາ ຕາມມະຕິສະພາແຫ່ງຊາດ ແລະ ຜົນການກວດສອບ ຂອງອົງການກວດກາແຫ່ງລັດ ຄື: ການແກ້ໄຂຜົນການເກັບກູ້ຜົນເສຍຫາຍ ຈາກການກວດ ກາລະບົບເງິນຝາກ, ເງິນກູ້ບັນດາໂຄງການ ແລະ ການມອບພັນທະຕ່າງໆ ຂອງບໍລິສັດ ລັດວິສາຫະກິດ ໄປສະນີລາວ (ໃນເມື່ອກ່ອນ) ເປັນຈຳນວນເງິນທັງໝົດ 100,481,007,785 ກີບ; ຮອດເດືອນ 12/2022 ສາມາດເກັບກູ້ ແລະ ປິດ

ບັນຊີໄດ້ ຈຳນວນ 128 ບັນຊີ ເປັນເງິນຈຳນວນທັງໝົດ 19,282,087,469 ກີບ ແລະ ຍັງຄ້າງເກັບກູ້ ຈຳນວນທັງໝົດ 1,248 ບັນຊີ ເປັນຈຳນວນເງິນ 58,932,227,134 ກີບ. ປັດຈຸບັນຮອດເດືອນ ທັນວາ 2025 ສາມາດເກັບກູ້ ເປັນເງິນຈຳນວນ 45,721,38,603.99 ກີບ ແລະ ຍັງຄ້າງເກັບກູ້ ເປັນເງິນຈຳນວນທັງໝົດ 54,759,619,180.61 ກີບ. ໃນນັ້ນ, ຜົນເສຍຫາຍທີ່ເກັບກູ້ບໍ່ໄດ້ 22,948,051,267 ກີບ, ຜົນເສຍຫາຍທີ່ລໍ້ຖ້າຄຳຕັດສິນຂອງສານ ຈຳນວນ 26,697,435,214.80 ກີບ ແລະ ຜົນເສຍຫາຍທີ່ໃຊ້ໄລຍະເວລາຍາວນານໃນການເກັບກູ້ ຈຳນວນ 5,114,132,698.81 ກີບ.

ໄດ້ເຄື່ອນໄຫວຕິດຕາມ, ກວດກາການແກ້ໄຂບັນຫາຕາມການແນະນຳປີທີ່ຜ່ານມາ ຈຳນວນ 3 ບັນຫາ ແລະ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງແຜນງົບປະມານແຫ່ງລັດ ປະຈຳປີ 2021 ຈຳນວນ 5 ບັນຫາ, ເຊິ່ງຕິດພັນກັບບັນດາກົມ/ທຽບເທົ່າທີ່ກ່ຽວຂ້ອງຄື:

1. **ບັນຫາທີ່ໄດ້ຮັບການປັບປຸງແກ້ໄຂຂາດຕົວ ມີ 2 ບັນຫາຄື:**

1).ການຄຸ້ມຄອງໜີ້ຕ້ອງຮັບ (ກົມແຜນການ ແລະ ການເງິນ) ການເກັບໜີ້ໃນປີ 2022 ຕາມຄຳແນະນຳຂອງຄະນະກວດກສອບ, ອົງການກວດກາແຫ່ງລັດ (ສຳເລັດ); 2).ການລວມສູນລະບົບການສື່ສານອິນເຕີເນັດ (ສູນອິນເຕີເນັດແຫ່ງຊາດ) (ສຳເລັດ)

2. **ບັນຫາທີ່ບໍ່ໄດ້ຮັບການປັບປຸງແກ້ໄຂ ຈຳນວນ 1 ບັນຫາຄື:**

1). ລາຍຮັບເງິນອຸປະຖຳ (ກົມແຜນການ ແລະ ການເງິນ); (ບໍ່ສາມາດຄາດຄະເນແຜນລາຍຮັບ-ລາຍຈ່າຍ ປະຈຳປີໄດ້)

3. **ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021 ມີ 5 ບັນຫາຄື:**

1).ການຄຸ້ມຄອງໜີ້ຕ້ອງຮັບ (ກົມແຜນການ ແລະ ການເງິນ) ແມ່ນໄດ້ຈັດຕັ້ງປະຕິບັດຕາມຄາແນະນາຂອງຄະນະກວດສອບປີ 2021 ແລະ ຕາມຂໍ້ 4 ມາດຕາ 61 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015 ທີ່ໄດ້ກຳນົດໄວ້; 2).ການບຳລຸງ ແລະ ສ້ອມແປງພາຫະນະ (ຫ້ອງການກະຊວງ) (ສຳເລັດ); 3).ລາຍຮັບເງິນອຸປະທາ (ກົມແຜນການ ແລະ ການເງິນ) (ບໍ່ສາມາດຄາດຄະເນແຜນລາຍຮັບ-ລາຍຈ່າຍ ປະຈາປີໄດ້); 4).ການຄຸ້ມຄອງ ແລະ ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ (ກົມຄື້ນຄວາມຖີ່ວິທະຍຸສື່ສານ) ຍັງບໍ່ໄດ້ຄຸ້ມຄອງຕິດຕາມການນຳໃຊ້ ເຊັ່ນ: ບັນດາສະຖາ ນີໂທລະພາບ, ວິທະຍຸກະຈາຍສຽງ ແລະ ການສື່ສານການບິນ.(ຍັງບໍ່ທັນສຳເລັດ) ແລະ 5).ການຄຸ້ມຄອງການບໍລິການຂໍ້ຄວາມສັ້ນ ຂາເຂົ້າ-ຂາອອກຕ່າງປະເທດ (SMS Oversea) ກັບບໍລິສັດ ອິທີແອວ ຈຳກັດ (ສູນອິນເຕີເນັດແຫ່ງຊາດ) (ສຳເລັດ)

❖ ອີງຕາມ ແຈ້ງການ ຂອງອົງການກວດກາແຫ່ງລັດ ກ່ຽວກັບການແກ້ໄຂຜົນຂອງການກວດກາ ຢູ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ສະບັບເລກທີ 614/ຫກ, ລົງວັນທີ 24 ມິຖຸນາ 2025.

1. ການແກ້ໄຂຜົນການກວດກາ ຂອງບໍລິສັດ ໄປສະນີລາວ ຈຳກັດ.
2. ຜົນການກວດກາໂຄງການລົງທຶນຂອງລັດ ຕາມແຈ້ງການ 130/ຫສມຍ, ລົງວັນທີ 22 ມັງກອນ 2019 ຄື:

1).ໂຄງການທີຖືກຫັກລົບມູນຄ່າອອກຈາກສາລະບານແຜນການລົງທຶນ ຂອງລັດ ຈຳນວນ 1 ໂຄງການ ມູນຄ່າຫັກລົບ 492.57 ລ້ານກີບ ແລະ 2).ໂຄງການສືບຕໍ່ທວງ ແລະ ເກັບກູ້ເງິນຄືນ ຈຳນວນ 1 ໂຄງການ ມູນຄ່າທີ່ຕ້ອງເກັບກູ້ຄືນ 1,178.65 ລ້ານກີບ (ປັດຈຸບັນສຳເລັດເອກະສານລາຍງານຕາມແຈ້ງການ);

ສຳເລັດການແຈ້ງຊັບສິນ ແລະ ລາຍຮັບ (ຮອບພິເສດ) ຂອງພະນັກງານ-ລັດຖະກອນ ບັນດາກົມ/ທຽບເທົ່າ ແລະ ບໍລິສັດວິສາຫະກິດ ທີ່ຂຶ້ນກັບກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຈຳນວນທັງໝົດ 179 ທ່ານ, ຍິງ 50 ທ່ານ (ຂັ້ນສູນກາງຄຸ້ມຄອງ 26 ທ່ານ, ຍິງ 1 ທ່ານ, ຂັ້ນກະຊວງຄຸ້ມຄອງຈຳນວນ 171 ທ່ານ, ຍິງ 49 ທ່ານ). ໃນນັ້ນ, ພະນັກງານ-ລັດຖະກອນ ອອກພັກການຮັບອຸດໜູນບຳນານ ຈຳນວນ 1 ທ່ານ ແລະ ການແຈ້ງຊັບສິນ ແລະ ລາຍຮັບ (ຮອບພະນັກງານທີ່ໄດ້ເລື່ອນຕຳແໜ່ງ ແລະ ອອກພັກການຮັບອຸດໜູນບຳນານ) ມີທັງໝົດຈຳນວນ 158 ທ່ານ, ຍິງ 61 ທ່ານ (ຂັ້ນສູນກາງຄຸ້ມຄອງ 13 ທ່ານ ແລະ ຂັ້ນກະຊວງ ຄຸ້ມຄອງ 145 ທ່ານ/ຍິງ 61 ທ່ານ). ໃນນັ້ນ, ພະນັກງານ-ລັດຖະກອນ ອອກພັກການຮັບອຸດໜູນບຳນານ ຈຳນວນທັງໝົດ 6 ທ່ານ.

### 1.13 ດ້ານການຄຸ້ມຄອງພາກທຸລະກິດ/ຈຸລະພາກ

**1). ດ້ານໄປສະນີ:**

ເລີ່ມແຕ່ ເດືອນສິງຫາ 2022 ລັດຖະບານໄດ້ມີການຂາຍຮຸ້ນ ຂອງບໍລິສັດ ລັດວິສາຫະກິດໄປສະນີລາວ ໃຫ້ບໍລິສັດ ໂລ ຈິສຕິກ ເອັນເຈີ ຈໍາກັດ ຖືຮຸ້ນ ເທົ່າກັບ 51% ແລະ ລັດຖະບານຖືຮຸ້ນ ເທົ່າກັບ 49%; ຕະຫຼອດໄລຍະ 5 ປີ ຜ່ານມາ ໄປສະນີລາວ ໄດ້ເອົາໃຈໃສ່ ພັດທະນາ ແລະ ປັບປຸງການດໍາເນີນທຸລະກິດ ໃຫ້ມີບາດກ້າວຂະຫຍາຍຕົວດີຂຶ້ນກວ່າເກົ່າ ເປັນຕົ້ນ: ປັບປຸງພາບລັກອົງກອນ ດ້ວຍການປ່ຽນກາໝາຍໃໝ່ (Logo) ແລະ ສ້ອມແປງ-ປັບປຸງຫ້ອງການ ໃຫ້ມີເອກະລັກສີສັນສະເພາະ 21ແຫ່ງ, ລວມມູນຄ່າ 30,66 ຕື້ກີບ; ວຽກງານພົວພັນຕ່າງປະເທດ ສະຫະພາບໄປສະນີສາກົນ ໃຫ້ການຊ່ວຍເຫຼືອ ປນລ ໃນການປັບປຸງ ແລະ ພັດທະນາໂຄງການຕ່າງໆ ລວມຈໍານວນມູນຄ່າ 291.200 USD ເປັນຕົ້ນ: ປັບປຸງຄຸນນະພາບການຂົນສົ່ງ (ຊ່ວຍເຫຼືອດ້ານພາຫະນະ) ແລະ ດ້ານໄອທີ;

ຜູ້ປະກອບການຂະແໜງໄປສະນີ ມີທັງໝົດ 63 ບໍລິສັດ, ຈໍານວນຫ້ອງການໄປສະນີ 1,172 ແຫ່ງ. ໃນນັ້ນ, ພາກລັດ 167 ແຫ່ງ, ພາກເອະຊົນ 1,005 ແຫ່ງ ແລະມີຫ້ອງການໄປສະນີ ທີ່ນໍາໃຊ້ລະບົບປ່ອງອັດຕະໂນມັດ 62 ແຫ່ງ,ຕູ້ໄປສະນີນໍາໃຊ້ 4,229 ຕູ້, ຈ່າມໄປສະນີ 49 ແຫ່ງ, ສາມາດຕອບສະໜອງການບໍລິການ ຮັບຝາກ, ຈັດສົ່ງ ແລະ ແຈກຢາຍເຄື່ອງຝາກທາງໄປສະນີທັງພາຍໃນ ແລະ 192 ປະເທດ ເຊັ່ນ: ໄປສະນີພາຍໃນ 762,914.89 ກິໂລ ແລະ ຕ່າງປະເທດ 172,000.90 ກິໂລ, ພັດສະດຸພາຍໃນ 7,424,695.04 ກິໂລ ແລະ ຕ່າງປະເທດ 544,009.41 ກິໂລ.

**2). ດ້ານໂທລະຄົມມະນາຄົມ ແລະ ການບໍລິການອິນເຕີເນັດ:**

ປັດຈຸບັນມີ 4 ບໍລິສັດ ທີ່ໃຫ້ການບໍລິການດ້ານໂທລະຄົມ ແລະ ອິນເຕີເນັດ, ໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ 1 ບໍລິສັດ ທີ່ໃຫ້ບໍລິການດ້ານໂທລະຄົມ ແລະ ອິນເຕີເນັດ ທີ່ບໍ່ມີໂຄງລ່າງພື້ນຖານໄດ້ມີການຂະຫຍາຍແຕ່ສູນກາງລົງຮອດທ້ອງຖິ່ນເຂດຫ່າງໄກສອກຫຼີກ, ເຮັດໃຫ້ປະຊາຊົນສາມາດເຂົ້າເຖິງ ແລະ ນໍາໃຊ້ໄດ້ສະດວກສະບາຍເຮັດໃຫ້ມີຈໍານວນຜູ້ນໍາໃຊ້ໂທລະສັບຕັ້ງໂຕະມີສາຍ ແລະ ບໍ່ມີສາຍມີທັງໝົດ 1,237,964 ເລກໝາຍ, ໂທລະສັບມືຖື 4,950,894 ເລກໝາຍ, ລວມຈໍານວນເລກໝາຍໂທລະສັບຕັ້ງໂຕະ ແລະ ມືຖື ທີ່ໄດ້ຂຶ້ນທະບຽນນໍາໃຊ້ໃນລະບົບຮອດເດືອນ ມິຖຸນາ 2025 ມີທັງໝົດ 7,516, 005 ເລກໝາຍ, ລົງທະບຽນນໍາໃຊ້ອິນເຕີເນັດ (ລະບົບມີສາຍ ແລະ ຜ່ານຊິມ 3G) ທັງໝົດ 4,452,651 ບັນຊີ, ມີອັດຕາການຊົມໃຊ້ອິນເຕີເນັດ 63.60% ຂອງປະຊາກອນ (ປະຊາກອນ 7 ລ້ານຄົນ).

**3). ດ້ານດາວທຽມລາວ:**

ໄດ້ຄຸ້ມຄອງດາວທຽມລາວໃຫ້ເຄື່ອນທີ່ຢູ່ໃນວົງໂຄຈອນ ຊຶ່ງນັບຕັ້ງແຕ່ມື້ສົ່ງດາວທຽມສື່ສານ “ລາວແຊັດ-1” ຂຶ້ນສູ່ວົງໂຄຈອນໃນເດືອນ ພະຈິກ 2015 ເຖິງປັດຈຸບັນເປັນເວລາ 10 ປີ, ດາວທຽມລາວ ໄດ້ເຄື່ອນໄຫວໃນວົງໂຄຈອນປົກກະຕິ. ເລີ່ມຕັ້ງແຕ່ມື້ທີ່ສົ່ງດາວທຽມຂຶ້ນສູ່ວົງໂຄຈອນ ໄດ້ດໍາເນີນງານຮັກສາຕໍາແໜ່ງຢ່າງປອດໄພ 333 ຄັ້ງ ແລະ ໂຄຈອນດ້ວຍຄວາມໝັ້ນຄົງຜ່ານ 16 ລະດູການທີ່ເງົາດວງຕາເວັນບົດບັງ;

- ດາວທຽມລາວ ປະກອບດ້ວຍຊ່ອງສັນຍານ (Transponders) ທັງໝົດ 22 ຊ່ອງສັນຍານ ໃນນັ້ນຊ່ອງສັນຍານໃນຢ່ານຄື້ນຄວາມຖີ່ C-Band ມີ 14 ຊ່ອງ (14X36MHz) ໄດ້ນໍາໃຊ້ແລ້ວ 8 ຊ່ອງສັນຍານ ສໍາລັບການສື່ສານໂທລະຄົມມະນາຄົມ, ໂທລະສັບ ແລະ ອິນເຕີເນັດ; ຊ່ອງສັນຍານໃນຢ່ານຄື້ນຄວາມຖີ່ Ku-Band ມີ 8 ຊ່ອງ (8x54MHz) ໄດ້ນໍາໃຊ້ສໍາລັບບໍລິການດ້ານໂທລະພາບ ແລະ ວິທະຍຸ ທັງໝົດແລ້ວ. ພ້ອມກັນນັ້ນ ໄດ້ຍົກລະດັບການບໍລິການອິນເຕີເນັດຜ່ານລະບົບດາວທຽມ ໃຫ້ມີຄວາມຫຼາກຫຼາຍເພີ່ມເຕີມຈາກຮູບແບບເດີມຄື: B2B ໄປເປັນ B2C.
- ໄດ້ຕອບສະໜອງສັນຍານໂທລະພາບໃຫ້ບັນດາສະຖານີໂທລະພາບຢູ່ສູນກາງ ແລະ ທ້ອງຖິ່ນທັງໝົດ 11 ສະຖານີຄື: ສະຖານີໂທລະພາບແຫ່ງຊາດ ຊ່ອງ 1 ແລະ ຊ່ອງ 3, ສະຖານີໂທລະພາບກອງທັບ, ໂທລະພາບ ປກສ, ໂທລະພາບສຶກສາ ແລະ ກິລາ, ໂທລະພາບ Lao Star, ໂທລະພາບ ທີວີລາວ, ໂທລະພາບນະຄອນຫຼວງວຽງຈັນ, ໂທລະພາບແຂວງຈໍາປາສັກ, ໂທລະພາບແຂວງຫຼວງພະບາງ ແລະ ໂທລະພາບແຂວງຊຽງຂວາງ.

ນອກຈາກນັ້ນຍັງຕອບສະໜອງການກະຈາຍສຽງຂອງສະຖານີວິທະຍຸກະຈາຍສຽງ ແຫ່ງຊາດລາວ, ສະຖານີວິທະຍຸກອງທັບ, ສະຖານີວິທະຍຸ ປກສ, ບັນດາເຄື່ອນໄຟຟ້າ, ກອງຄຸ້ມຄອງການຈາລະຈອນທາງອາກາດ, ບໍລິສັດໂທລະຄົມ ລວມທັງລູກຄ້າເອກະຊົນຢູ່ພາຍໃນ ແລະ ຕ່າງປະເທດອີກຈຳນວນໜຶ່ງ;

- ໄດ້ຂະຫຍາຍທຸລະກິດໂທລະພາບຜ່ານດາວທຽມ (DTH) ຢູ່ພາຍໃນ ແລະ ຕ່າງປະເທດ ຊຶ່ງສາມາດພັດທະນາລູກຄ້າໄດ້ທັງໝົດ 800,000 Users, ໃນນີ້ລວມມີລູກຄ້າພາຍໃນ 570,000 ລາຍ ແລະ ລູກຄ້າຕ່າງປະເທດຈຳນວນ 230,000 ລາຍ. ນອກຈາກນັ້ນ ຍັງໄດ້ພັດທະນາ Platform ຮອງຮັບການໃຫ້ບໍລິການໂທລະພາບເທິງມືຖື (OTT Box) ເພື່ອຕໍ່ຍອດການບໍລິການໂທລະພາບໃນຮູບແບບດາວທຽມ (DTH) ຕາມການປ່ຽນແປງຂອງກົນໄກຕະຫຼາດ ແລະ ພຶດຕິກຳຂອງຜູ້ຊົມໃຊ້ ໃນຍຸກດີຈີຕອນ;

**4). ດ້ານຜົນປະກອບການ ແລະ ພັນທະຕໍ່ງົບປະມານ:**

ການດຳເນີນທຸລະກິດຂອງບັນດາຜູ້ປະກອບການດ້ານໄປສະນີ ແລະ ໂທລະຄົມມະນາຄົມມາຮອດປະຈຸບັນ ແມ່ນສາມາດສ້າງລາຍຮັບໄດ້ທັງໝົດປະມານ 19,291.94 ຕື້ກີບ, ລາຍຈ່າຍ ປະຕິບັດໄດ້ປະມານ 17.772.69 ຕື້ກີບ, ກຳໄລ ປະຕິບັດໄດ້ ປະມານ 2,413.27 ຕື້ກີບ, ມອບພັນທະເຂົ້າງົບປະມານ: ລາຍຮັບດັ່ງກ່າວໄດ້ປະກອບສ່ວນສຳຄັນເຂົ້າ GDP ແຫ່ງຊາດ, ມອບພັນທະເຂົ້າງົບປະມານແຫ່ງລັດປະຕິບັດໄດ້ປະມານ 2,439.25 ຕື້ກີບ. **(ຕົວເລກ 2021-2024)**

## VII. ການສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນ

### 1. ດ້ານດີ

1) ມີແນວທາງນະໂຍບາຍ, ມະຕິ ແລະ ຄຳສັ່ງ, ຂໍ້ກຳນົດ, ບົດແນະນຳຕ່າງໆຂອງພັກ-ລັດ ເປັນບ່ອນອີງໃນການຈັດຕັ້ງປະຕິບັດຂອງຄະນະນຳແຕ່ລະຂັ້ນ, ມີການຊີ້ນຳຢ່າງໃກ້ສິດຕິດແທດ ຈາກຄະນະພັກຂັ້ນເທິງເປັນປະຈຳ.
2) ກົງຈັກການຈັດຕັ້ງ ແລະ ການຊັບຊ້ອນບຸກຄະລາກອນ ໄດ້ຮັບການປັບປຸງ ຕາມທິດກະທັດຮັດສົມເຫດສົມຜົນ ແລະ ມີປະສິດທິພາບ.
3) ບັນດາກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ເປັນເຄື່ອງມືໃນການຄຸ້ມຄອງມະຫາພາກ ຕໍ່ກັບວຽກງານເຕັກໂນໂລຊີ ແລະ ການສື່ສານໄດ້ຮັບການປັບປຸງ ແລະ ສ້າງໃໝ່.
4) ໂຄງລ່າງພື້ນຖານເຕັກໂນໂລຊີ ແລະ ການສື່ສານ ໄດ້ຮັບການຂະຫຍາຍແຕ່ສູນກາງລົງຮອດທ້ອງຖິ່ນ ແລະ ເຊື່ອມໂຍງກັບສາກົນ.
5) ເພື່ອນມິດສາກົນໄດ້ໃຫ້ການສະໜັບສະໜູນຊ່ວຍເຫລືອຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຢ່າງຕໍ່ເນື່ອງ ແລະ ເພີ່ມຂຶ້ນ.
6) ທຸກພາກສ່ວນສັງຄົມ, ອົງການຈັດຕັ້ງລັດ, ພາກສ່ວນທຸລະກິດ ກໍ່ໄດ້ປະກອບສ່ວນເຂົ້າໃນວຽກງານດັ່ງກ່າວຢ່າງແຂງແຮງ.

### 2. ດ້ານຂໍ້ຄົງຄ້າງ:

ຄຽງຄູ່ກັບຜົນສຳເລັດນັ້ນ ພວກເຮົາຍັງມີຂໍ້ຄົງຄ້າງຈຳນວນໜຶ່ງ ທີ່ບໍ່ທັນໄດ້ຈັດຕັ້ງປະຕິບັດສຳເລັດ ຫຼື ເຮັດຍັງບໍ່ທັນໄດ້ດີເທົ່າທີ່ຄວນເຊັ່ນ:

1). ການເຜີຍແຜ່ມະຕິ, ຄຳສັ່ງ, ແຜນພັດທະນາ, ບັນດາກົດໝາຍ ແລະ ນິຕິກຳ ທີ່ຕິດພັນກັບ 2 ວາລະແຫ່ງຊາດຍັງບໍ່ທັນທົ່ວເຖິງ. ແຜນພັດທະນາຂອງກະຊວງວາງອອກແລ້ວ ແຕ່ຂອດການຈັດຕັ້ງຜັນຂະຫຍາຍ ເປັນແຜນງານ, ແຜນປະຕິບັດງານ ແລະ ການກຳນົດຕົວຊີ້ບອກ ຂອງແຕ່ລະວຽກງານຈຸດສຸມ ຢູ່ຂັ້ນກົມ/ທຽບເທົ່າ ແລະ ບັນດາພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ໃນບາງດ້ານຍັງບໍ່ທັນຈະແຈ້ງ ເທົ່າທີ່ຄວນ, ການຈັດຕັ້ງປະຕິບັດແຜນວຽກສ່ວນຫຼາຍໄປຕາມວຽກປົກກະຕິປະຈຳວັນເປັນສ່ວນຫຼາຍ, ການຄົ້ນຄວ້າເພື່ອເຮັດວຽກມະຫາພາກຕາມແຜນການທີ່ກຳນົດໄວ້ຍັງເຮັດບໍ່ທັນໄດ້ດີ, ການຕິດຕາມ ແລະ ລາຍງານ ຍັງບໍ່ເປັນລະບົບປົກກະຕິແຕ່ຫົວທີ.

2). ການປັບປຸງກົງຈັກການຈັດຕັ້ງອົງການບໍລິຫານລັດຕາມມະຕິ, ຄຳສັ່ງ, ຂອງຂັ້ນເທິງຢ່າງເປັນລະບົບຄົບຊຸດກໍ່ຕາມ, ແຕ່ດ້ານບຸກຄະລາກອນ ແລະ ການປະຕິບັດໜ້າທີ່ວຽກງານຍັງພົບຄວາມຫຍຸ້ງຍາກ, ການປະສານສົມທົບລະຫວ່າງສາຍຕັ້ງ ແລະ ສາຍຂວາງບໍ່ທັນໄດ້ດີ, ໂດຍສະເພາະແມ່ນບັນດາພະແນກການສາຍຕັ້ງມີຫຼາຍອັນບໍ່ໄດ້ປະສານສົມທົບ.

3). ໄດ້ມີການເຊັນສັນຍາຮ່ວມມືກັບຫຼາຍບໍລິສັດ ແຕ່ຂອດການຈັດຕັ້ງປະຕິບັດຍັງບໍ່ມີຄວາມຄືບໜ້າເທົ່າທີ່ຄວນ.

4). ການຊຸກຍູ້ສົ່ງເສີມການນຳໃຊ້ເຕັກໂນໂລຊີດີຈີຕອນ (Digital) ເຂົ້າໃນວຽກງານຂອງທຸກຂະແໜງການ ແຕ່ສູນກາງລົງຮອດທ້ອງຖິ່ນ ຍັງບໍ່ທັນກວ້າງຂວາງເທົ່າທີ່ຄວນ, ບຸກຄະລາກອນ ທີ່ມີທັກສະດ້ານເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ ແລະ ດີຈີຕອນ ທັງປະລິມານ ແລະ ຄຸນນະພາບ ຍັງບໍ່ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານການຫັນເປັນດີຈີຕອນ ຂອງປະເທດ. ການຮັບຮູ້ຂອງສັງຄົມກ່ຽວກັບການນຳໃຊ້ ໄອຊີທີ ໃຫ້ເກີດປະໂຫຍດ ແລະ ມີຄວາມປອດໄພຍັງບໍ່ທັນກວ້າງຂວ້າງເລິກເຊິ່ງເທົ່າທີ່ຄວນ, ຍັງເກີດມີປະກົດການຫຍໍ້ທໍ້ຈຳນວນຫຼາຍຜ່ານສື່ສັງຄົມອອນລາຍ.

5). ໂຄງການລົງທຶນຂອງລັດໂດຍສະເພາະໂຄ່ງລ່າງພື້ນຖານເຕັກນິກຫຼາຍໂຄງການບໍ່ສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກງົບປະມານບໍ່ພຽງພໍ.

6). ລະບົບຄວາມປອດໄພທາງດ້ານອິນເຕີເນັດ ຍັງບໍ່ທັນຮັບປະກັນໄດ້ໝົດໂດຍສະເພາະແມ່ນການຄຸ້ມຄອງສື່ສັງຄົມອອນລາຍ, ຄວາມປອດໄພທາງໄຊເບີ ແລະ ວິທີການຕອບໂຕ້ຍັງບໍ່ທັນກັບສະພາບການ ເນື່ອງຍັງຂາດເຄື່ອງມືຄຸ້ມຄອງ ແລະ ກວດກາ. ການເຊື່ອມໂຍງ-ເຊື່ອມຕໍ່ລະບົບຖານຂໍ້ມູນ-ຂ່າວສານ ຍັງບໍ່ລວມສູນ, ບັນດາກະຊວງຍັງມີການນຳໃຊ້ລະບົບພໍໃຜພໍລາວ.

## VIII. ສາເຫດຂໍ້ຄົງຄ້າງ:

1). ແບບແຜນນຳພາ ແລະ ວິທີເຮັດວຽກຂອງບາງສະຫາຍຍັງເຮັດບໍ່ທັນໄດ້ດີຕາມທີ່ຄາດໝາຍໄວ້, ການນາໃຊ້ທ່າແຮງຂອງພະນັກງານວິຊາການຍັງບໍ່ທັນໄດ້ຮັບຄວາມເອົາໃຈໃສ່ເທົ່າທີ່ຄວນ.

2). ຄວາມຮັບຮູ້ ແລະ ເຂົ້າໃຈ ຄວາມສະດຸ້ງໄວຕໍ່ການປ່ຽນແປງດ້ານເຕັກໂນໂລຊີ ແລະ ນະວັດຕະກຳຂອງໂລກ ຍັງບໍ່ທັນສະພາບ ຂອງພະນັກງານຢູ່ສູນກາງ ແລະ ທ້ອງຖິ່ນ; ຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບ ຂອງບາງພາກສ່ວນຍັງບໍ່ທັນສູງ; ຂອດການປະສານງານກັນຍັງບໍ່ທັນກົມກຽວກັນດີ; ການແບ່ງຂັ້ນຄຸ້ມຄອງຍັງບໍ່ທັນຊັດເຈນ.

3). ການຈັດຕັ້ງປະຕິບັດແຜນການແມ່ນຢູ່ໃນສະພາບການແຜ່ລະບາດໂຄວິດ-19 ເຮັດໃຫ້ການລົງທຶນຂອງບັນດາຜູ້ປະກອບຍັງເຮັດບໍ່ໄດ້ເຕັມສ່ວນໄດ້ສົ່ງຜົນເຮັດໃຫ້ບັນດາບາງຕົວເລກການຜະລິດບໍ່ບັນລຸຕາມຄາດໝາຍ, ງົບປະມານນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາ, ແຜນເສດຖະກິດດີຈີຕອນ ແລະ ແຜນວຽກວາລະແຫ່ງຊາດມີຈຳກັດ. ຄວາມຮຽກຮ້ອງຕ້ອງການຂອງການພັດທະນາດ້ານເຕັກໂນໂລຊີ ມີສູງແຕ່ງົບບໍ່ພຽງພໍ.

4). ບຸກຄະລາກອນຍັງມີຂໍ້ຈຳກັດໃນດ້ານຄວາມຮູ້ຄວາມສາມາດ ບົດຮຽນ ແລະ ປະສົບການໃນການປະຕິບັດໜ້າທີການເມືອງຍັງບໍ່ທັນສູງເທົ່າທີ່ຄວນ.

5). ການພັດທະນາລະບົບການເກັບຂໍ້ມູນຂອງພາກລັດຍັງບໍ່ລວມສູນ ເຮັດໃຫ້ມີການນຳໃຊ້ລະບົບເຕັກໂນໂລຊີ ຍັງເປັນໃນຮູບແບບພໍໃຜພໍລາວ, ເກີດມີການລົງທຶນຊ້ຳຊ້ອນ ແລະ ຫຼາຍລະບົບເຮັດວຽກຮ່ວມກັນບໍ່ໄດ້ ເປັນ ຕົ້ນລະບົບເກັບຂໍ້ມູນ, ລະບົບຖານຂໍ້ມູນ ຊຶ່ງທຸກກະຊວງໄດ້ຊອກງົບປະມານມາບຳລຸງຮັກສາພໍໃຜພໍລາວ, ບາງລະບົບຢູ່ພາຍໃຕ້ການຊ່ວຍເຫຼືອຂອງຕ່າງປະເທດຈຶ່ງຄ້ອນຂ້າງບໍ່ມີຄວາມຍືນຍົງພາຍຫຼັງສິ້ນສຸດການຊ່ວຍເຫຼືອຍ້ອນບັນຫາເຕັກນິກ ແລະ ຂາດບຸກຄະລາກອນທີ່ມີຄວາມຊຳນານເຮັດໃຫ້ລະບົບແມ່ນບໍ່ສາມາດເຊື່ອມຕໍ່ກັນໄດ້ເນື່ອງຈາກມາດຕະຖານເຕັກນິກບໍ່ກົງກັນ ຈຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການເຊື່ອມໂຍງແລກປ່ຽນ ແລະ ນຳໃຊ້ຂໍ້ມູນຮ່ວມກັນໄດ້.

6). ນິຕິກຳ ຊຶ່ງເປັນເຄື່ອງມືຄຸ້ມຄອງມະຫາພາກ ຈຳນວນໜຶ່ງ ເຫັນວ່າຍັງບໍ່ທັນຕອບສະໜອງ, ບໍ່ແທດເໝາະກັບຄວາມຮຽກຮ້ອງຕ້ອງການຕົວຈິງໃນປັດຈຸບັນ ແລະ ຍຸກທີ່ມີການນຳໃຊ້ນະວັດຕະກຳ ທີ່ເກີດຂຶ້ນໃໝ່.

## IX. ບົດຮຽນທີ່ຖອດຖອນ ແລະ ວິທີແກ້ໄຂ:

1). ເພີ່ມທະວີເຮັດຢ່າງຕໍ່ເນື່ອງ ແລະ ເປັນປະຈຳວຽກງານການເມືອງ-ແນວຄິດ ໃຫ້ພະນັກງານທຸກລະດັບ ມີຄຸນທາດການເມືອງໜັກແໜ້ນມີຄວາມຮັບຜິດຊອບສູງຕໍ່ໜ້າທີການງານ, ມີຄວາມສາມັກຄີ,ປະຕິບັດລະບຽບວິໃນດີ.

2). ປັບປຸງການຈັດຕັ້ງ ໃຫ້ມີປະສິດທິຜົນ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນ ແລະ ເອົາໃຈໃສ່ກໍ່ ສ້າງພະນັກງານໃຫ້ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ.

3). ຊຸກຍູ້ຂະແໜງການແຕ່ສູນກາງລົງຮອດທ້ອງຖິ່ນ ໃຫ້ເຫັນຄວາມສຳຄັນຂອງວຽກງານການຫັນເປັນດີຈີຕອນຂອງ ສປປ ລາວ; ໂດຍເອົາໃຈໃສ່ໃນການໂຄສະນາເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບວຽກງານດັ່ງກ່າວ.

4). ການພັດທະນາວຽກງານບໍລິຫານລັດດ້ວຍດີຈີຕອນຕ້ອງລວມສູນ, ມີມາດຕະຖານດຽວກັນໂດຍເລັ່ງໃສ່ການສ້າງມາດຕະຖານທີ່ເປັນອັນດຽວກັນ, ສ້າງສູນກາງເຊື່ອມໂຍງເພື່ອເຊື່ອມໂຍງ ແລະ ແລກປ່ຽນຂໍ້ມູນພາກລັດ.

5). ເພີ່ມທະວີການ ປັບປຸງ ແລະ ສ້າງນິຕິກຳ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ, ຜັນຂະຫາຍ ແລະ ປົກປ້ອງຜົນປະໂຫຍດຂອງພາກລັດ, ພາກທຸລະກິດ ແລະ ຜູ້ຊົມໃຊ້ ບໍ່ຖືກເອົາປຽບເພື່ອໃຫ້ແທດເໝາະ ແລະ ຕອບສະໜອງກັບຂະຫຍາຍຕົວແບບກ້າວກະໂດດຂອງວຽກງານດ້ານ ໄອຊີທີ ແລະ ເພີ່ມທະວີໃຫ້ຄວາມຮູ້ເພື່ອສ້າງຄວາມເຂົ້າໃຈໃຫ້ແກ່ສັງຄົມຮູ້ຈັກນຳໃຊ້ສື່ສັງຄົມອອນລາຍໃນທາງທີ່ສ້າງສັນ ແລະ ເກີດປະໂຫຍດ, ເພື່ອຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ໃຫ້ຫຼຸດໜ້ອຍຖອຍລົງ.

6). ເພີ່ມທະວີການຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ແລະ ການຍາດແຍ່ງເອົາການຊ່ວຍເຫຼືອຈາກບັນດາອົງການຈັດຕັ້ງທັງພາຍໃນ ແລະ ສາກົນ.

# ພາກທີ II
# ແຜນພັດທະນາເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ IV (2026-2030)

## I. ຄາດຄະເນສະພາບລວມ

### 1.1 ຄາດຄະເນສະພາບແວດລ້ອມພາກພື້ນ ແລະ ສາກົນ

ການປ່ຽນແປງແບບກ້າວກະໂດດ ຂອງເຕັກໂນໂລຊີດິຈິຕອນ ແລະ ປັນຍາປະດິດ AI, ການສື່ສານທີ່ມີຄວາມໄວ ແລະ ຄຸນນະພາບສູງຈະຖືກພັດທະນາ ແລະ ນໍາໃຊ້ຫຼາຍຂຶ້ນ ເປັນຕົ້ນ ອຸປະກອນເຊື່ອມຕໍ່ເຄື່ອນທີ່ ໃນຮູບແບບອິນເຕີເນັດທຸກທີ່ທຸກເວລາ, ການປະເມີນຜົນແບບ Cloud Computing, ລະບົບການວິເຄາະຂໍ້ມູນຂະໜາດໃຫຍ່, ການເຊື່ອມຕໍ່ຂອງທຸກອຸປະກອນ, ການສື່ສານໃນຍຸກ 5G ແລະ ຄວາມປອດໄພໄຊເບີ. ໄພຄຸກຄາມທາງໄຊເບີ ເກີດຄວາມສ່ຽງດ້ານຄວາມປອດໄພໃນຫລາຍຮູບແບບ ເຊັ່ນ: ການກໍ່ກວນສັງຄົມ, ການໂຈມຕີຂໍ້ມູນທາງໂຄງລ່າງພື້ນຖານ ທີ່ມີຄວາມສໍາຄັນທີ່ສາມາດທໍາລາຍລະບົບເສດຖະກິດ ໃຫ້ໄດ້ຮັບຄວາມເສຍຫາຍ ຊຶ່ງມັນຮຽກຮ້ອງໃຫ້ມີການກະກຽມຄວາມພ້ອມໃນການຮັບມື ແລະ ການແກ້ໄຂ ຈຶ່ງເປັນສິ່ງຈໍາເປັນ ແລະ ທ້າທາຍສໍາຫຼັບທຸກປະເທດ.

ການຫັນປ່ຽນບາງກິດຈະການ ຈາກຮູບແບບດັ່ງເດີມມາເປັນຮູບແບບໃໝ່ ຖືກຍ້າຍມາຢູ່ເທິງໂລກອອນລາຍຫຼາຍຂຶ້ນເຊັ່ນ: ການສື່ສານ, ການຊື້ຂາຍສິນຄ້າ, ລະບົບການເງິນ, ການສຶກສາ, ສາທາລະນະສຸກ ແລະ ການບໍລິການຂອງພາກລັດໂດຍຜ່ານແອັບພລິເຄຊັນ.

ການຫັນເປັນດິຈິຕອນ ແລະ ອຸດສະກະກໍາ 4.0 ບົນພື້ນຖານການນໍາໃຊ້ ເຕັກໂນໂລຊີ ຈະສົ່ງຜົນປະໂຫຍດ ແລະ ຜົນກະທົບຕໍ່ສັງຄົມ, ເສດຖະກິດ, ການເມືອງ ແລະ ຄວາມປອດໄພ. ບັນດາສິ່ງທ້າທາຍ ທີ່ຫຼາຍປະເທດໃນພາກພື້ນ ແລະ ສາກົນ ໃນປັດຈຸບັນແມ່ນ ຄວາມເຂົ້າໃຈການປະຕິວັດອຸດສະຫະກໍາ ແລະ ຜົນກະທົບຕໍ່ເສດຖະກິດໃນຍຸກແຫ່ງການເຊື່ອມໂຍງ, ຄວາມສາມາດໃນການປັບຕົວຕໍ່ການປ່ຽນແປງໃໝ່ຂອງປະຊາຊົນ, ຄວາມຮູ້ຄວາມສາມາດ ແລະ ຄວາມຊໍານານດ້ານໄອຊີທີຂອງຊັບພະຍາກອນມະນຸດ, ການລົງທຶນ ແລະ ງົບປະມານໃນການພັດທະນາບັນດາຂະແໜງການກ່ຽວຂ້ອງ ແລະ ຄວາມສາມາດຮັບປະກັນຄວາມປອດໄພທາງອິນເຕີເນັດ ແລະ ການປ້ອງກັນບຸກຄົນບໍ່ດີ.

### 1.2 ຄາດຄະເນສະພາບແວດລ້ອມພາຍໃນປະເທດ

ໃນສະພາບທີ່ປະເທດເຮົາມີຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງເປັນຕົ້ນ: ບັນຫາໄພພິບັດທາງທໍາມະຊາດເກີດຄວາມແຫ້ງແລ້ງ, ນໍ້າຖ້ວມ, ຄວາມຫຍຸ້ງຍາກດ້ານງົບປະມານຂອງລັດ, ໜີ້ສິນຄຸມເຄືອ ລວມເຖິງສະພາບການຂອງໂລກທີ່ຜັນຜວນ ບໍ່ວ່າຈະເປັນສົງຄາມການຄ້າ, ຫຼາຍຂະແໜງການຕ້ອງຮ່ວມມືເອກະພາບກັນໃນການພັດທະນາໄປສູ່ຄວາມທັນສະໄໝ ຫຼື ການຫັນເປັນດິຈິຕອນ.

ຄວາມທ້າທາຍຈາກກໍາລັງແຮງຂອງເຕັກໂນໂລຊີ ດິຈິຕອນ ທີ່ມີການພັດທະນາແບບກ້າວກະໂດດ, ນະໂຍບາຍ ແລະ ລະບຽບການຫຼາຍສະບັບ ແມ່ນຍັງບໍ່ສາມາດນໍາທັນນະວັດຕະກໍາທີເກີດຂຶ້ນໃໝ່, ເຕັກໂນໂລຊີ ການສື່ສານ ໄອຊີທີ ຫຼື ດິຈິຕອນ ມີອິດທິພົນ ຕໍ່ກັບການດໍາລົງຊີວິດຂອງປະຊາຊົນ ລວມເຖິງ ການດໍາເນີນງານຂອງພາກທຸລະກິດ-ພາກລັດ. ໄອຊີທີ ທີ່ມີການປ່ຽນແປງຢ່າງວ່ອງໄວຢູ່ຕະຫລອດເວລາ ແລະ ຍາກຕໍ່ການຄາດເດົາໃນໄລຍະຍາວ ວ່າຈະມີນະວັດຕະກໍາ ແລະ ການນໍາໃຊ້ຫຍັງເກີດຂຶ້ນໃໝ່.

ການພັດທະນາຍັງມີຄວາມແຕກໂຕນກັນຫຼາຍລະຫວ່າງໃນເມືອງ ແລະ ຊົນນະບົດ ຊຶ່ງມັນຮຽກຮ້ອງໃຫ້ຕ້ອງໄດ້ສຸມໃສ່ການພັດທະນາຊົນນະບົດ ໂດຍນໍາໃຊ້ທ່າແຮງທີ່ມີ ໂດຍສະເພາະ ແມ່ນການນໍາໃຊ້ ໄອຊີທີ ເຂົ້າໃນການພັດທະນາ.

### 1.3 ທ່າແຮງການພັດທະນາວຽກງານ ເຕັກໂນໂລຊີ ແລະ ການສື່ສານ

ຂະແໜງເຕັກໂນໂລຊີ ແລະ ການສື່ສານ ເປັນຂະແໜງເສດຖະກິດທີ່ມີຄວາມສໍາຄັນ ແລະ ເປັນທ່າອ່ຽງລວມຂອງໂລກໃນການສົ່ງເສີມ ການພັດທະນາອຸດສາຫະກໍາຍຸກ 4.0 ແລະ ສ້າງມູນຄ່າເພີ່ມໃຫ້ແກ່ເສດຖະກິດໃນຫຼາຍປະເທດ. ຂະ ແໜງເຕັກໂນໂລຊີກໍາລັງກາຍເປັນຂະແໜງການສະໜັບສະໜູນທີ່ສໍາຄັນຕໍ່ການຂະຫຍາຍຕົວຂອງຂະແໜງການ

ເສດຖະກິດປາຍແຫຼມທີ່ໄດ້ສະເໜີຂຶ້ນ, ພ້ອມທັງສາມາດສ້າງລາຍຮັບ ໃຫ້ແກ່ເສດຖະກິດ ແລະ ງົບປະມານລັດ. ເຖິງວ່າ ປະເທດເຮົາ ຍັງພັດທະນາໃນໄລຍະເລີ່ມຕົ້ນ, ແຕ່ລັດຖະບານກໍ່ໄດ້ເອົາໃຈໃສ່ຊຸກຍູ້ ແລະ ພັດທະນາຂະແໜງເສດຖະກິດ ດິຈິຕອນໃຫ້ມີການຂະຫຍາຍຕົວ ເປັນຕົ້ນ: ທຸລະກິດສະຕາດອັບ (Start-up), ທຸລະກິດການຄ້າເອເລັກໂຕຼນິກ (E-commerce), ທຸລະກຳຊັບສິນດິຈິຕອນ (ເຊັ່ນ ເງິນບິດຄອຍ-ເງິນຄຼິບໂຕ), ແອັບພິລເຄຊັນຕ່າງໆ ແລະ ລະບົບຫ້ອງການ ທັນສະໄໝ ໄດ້ຮັບການພັດທະນາໃຫ້ຫຼາຍຂຶ້ນ. ໃນຕໍ່ໜ້າຈະໄດ້ສືບຕໍ່ພັດທະນາໂຄງລ່າງພື້ນຖານດ້ານດິຈິຕອນ ໃຫ້ ແຂງແຮງ ເພື່ອສະໜັບສະໜູນການພັດທະນາຂະແໜງເສດຖະກິດປາຍແຫຼມໂດຍສະເພາະການຜະລິດກະສິກຳສະອາດ, ການບໍລິການທ່ອງທ່ຽວ, ການບໍລິການຂົນສົ່ງ ແລະ ໂລຈິສຕິກ, ການພັດທະນາພະລັງງານສະອາດ ແລະ ອື່ນໆ ຜ່ານຊ່ອງ ທາງແອບພລິເຄຊັນຕ່າງໆ ແລະ ການນຳໃຊ້ຂໍ້ມູນຂະໜາດໃຫ່ຍ ໃຫ້ກ້ວາງຂວາງ ແລະ ມີໝາກຜົນສູງ

## II. ຈຸດໝາຍລວມ, ທິດທາງ, ເປົ້າໝາຍ, ຄາດໝາຍ, ວຽກສຳຄັນບູລິມະສິດ ແລະ ແຜນວຽກຈຸດສຸມ ຂອງແຜນພັດທະນາ 5 ປີ ຄັ້ງທີ IV (2026-2030)

ແຜນພັດທະນາ 5 ປີ ຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ແມ່ນແຜນຈັດຕັ້ງຜັນຂະຫຍາຍມະຕິ ຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ,ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ Xຂອງລັດຖະບານ, ມະຕິວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງໃນໄລຍະໃໝ່, ໂຄງການການເມືອງ ສະບັບທີ III ວ່າດ້ວຍການ ບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ, ການຈັດຕັ້ງປະບັດ 2 ວາລະແຫ່ງຊາດ ວ່າດ້ວຍການ ແກ້ໄຂຢາເສບຕິດ ແລະ ວາລະແຫ່ງຊາດ ວ່າດ້ວຍ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເວົ້າລວມ, ເວົ້າສະເພາະແມ່ນການຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ ການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 10 ປີ (2021-2030) ມາເປັນແຜນພັດທະນາ 5 ປີ ຄັ້ງທີ IV (2026-2030) ຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານ ພາຍໃຕ້ຄຳຂວັນ **"ນຳໃຊ້ເຕັກໂນໂລຊີດິຈິຕອນໃຫ້ກາຍເປັນກຳລັງແຮງຂັບເຄື່ອນການພັດທະນາປະເທດຊາດ ທັນເປັນ ລັດຖະບານດິຈິຕອນ, ສ້າງເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ ໃຫ້ມີການຂະຫຍາຍຕົວຢ່າງເຂັ້ມແຂງ, ໝັ້ນທ່ຽງ ແລະ ຍືນຍົງ"** ເພື່ອໃຫ້ບັນລຸຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້ ຈຶ່ງໄດ້ກຳນົດຈຸດໝາຍລວມ, ທິດທາງ, ໜ້າທີ່ລວມ, ແຜນ ງານ ແລະ ໂຄງການ ດັ່ງນີ້:

### 2.1 ຈຸດໝາຍລວມ

ຊຸກຍູ້ການພັດທະນາ ເຕັກໂນໂລຊີ, ການສື່ສານ ແລະ ນະວັດຕະກຳ ໃຫ້ມີການຂະຫຍາຍຕົວແບບກ້າວກະໂດດ; ສົ່ງເສີມ ແລະ ນຳໃຊ້ໂທລະຄົມມະນາຄົມ, ເຕັກໂນໂລຊີ ການສື່ສານ ຂໍ້ມູນຂ່າວສານ (ໄອຊີທີ), ປັນຍາປະ ດິດ ແລະ ດິຈິ ຕອນ ທີ່ທັນສະໄໝ, ມີຄວາມປອດໄພສູງ ເຂົ້າໃນທຸກຂະແໜງການເສດຖະກິດ-ສັງຄົມ ແຕ່ສູນກາງລົງຮອດທ້ອງຖິ່ນ; ນາ ໃຊ້ຜົນສຳເລັດຂອງການຄົ້ນຄ້ວາ ແລະ ຖ່າຍທອດເຕັກໂນໂລຊີ ແລະ ນະວັດຕະກຳ ເພື່ອຍູ້ແຮງຂະ ບວນການຜະລິດ ສິນຄ້າ, ການບໍລິການໃຫ້ກາຍເປັນຜະລິດຕະພັນທີ່ມີຄວາມຫຼາກຫຼາຍ ສາມາດສ້າງມູນຄ່າເພີ່ມ ແລະ ມີຄວາມອາດສາມາດ ໃນການແຂ່ງຂັນ; ພັດທະນາຊັບພະຍາກອນມະນຸດທາງດ້ານ ດິຈິຕອນ ແລະ ປັນຍາປະດິດ ໃຫ້ມີຄຸນນະພາບສູງ, ສ້າງ ສະພາບແວດລ້ອມທີ່ດີໃຫ້ແກ່ການພັດທະນາ ແລະ ສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ ທີ່ປະຢັດ ພະລັງງານ, ປະຢັດວັດຖຸດິບຕາມທິດຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ເຂົ້າສູ່ຍຸກອຸດສາຫະກຳ 4.0, ທັນເປັນລັດຖະບານດິຈິຕອນ ແລະ ສ້າງເສດຖະກິດ-ສັງຄົມດິຈິຕອນ ໂດຍນຳໃຊ້ ປັນຍາປະດິດ ເປັນກົນໄກຫຼັກ ຊຶ່ງໄດ້ກຳນົດວິໄສທັດໃນການພັດທະນາ ຮອດປີ 2030 ຄື: **"ທັນວຽກງານໄປສະນີ, ເຕັກ ໂນໂລຊີ ແລະ ໂທລະຄົມໃຫ້ກາຍເປັນອຸດສາຫະກຳ ແລະ ທັນສະໄໝ, ເປັນເຄື່ອງມືທີ່ສຳຄັນໃນການຂັບເຄື່ອນການ ພັດທະນາເສດຖະກິດ-ສັງຄົມ ໃຫ້ເຂັ້ມແຂງຍືນຍົງ, ເປັນຈຸດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະຊາຊົນມີສ່ວນຮ່ວມ ຢ່າງກວ້າງຂວາງ"**.

## 2.2 ທິດທາງ ແລະ ໜ້າທີ່ລວມ

ເພື່ອບັນລຸຈຸດໝາຍລວມຂ້າງເທິງນີ້ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຈະໄດ້ອອກແຮງສືບຕໍ່ປະຕິບັດ 10 ໜ້າທີ່ຫຼັກດັ່ງນີ້:

1). ສ້າງ ແລະ ຍົກລະດັບບຸກຄະລາກອນ ໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ຍົກລະດັບວິຊາສະເພາະ, ມີທັກສະໃນການນຳໃຊ້ເຕັກໂນໂລຊີ ເຂົ້າໃນວຽກງານວິຊາສະເພາະຢ່າງມີຄຸນນະພາບ ແລະ ພຽງພໍກັບຄວາມຕ້ອງການຂອງສັງຄົມ, ພັດທະນາ ແລະ ສົ່ງເສີມໃຫ້ປະຊາຊົນລາວ ແລະ ການຈັດຕັ້ງທຸກຂະແໜງການຂອງພັກ-ລັດ ໃຫ້ມີຄວາມຮູ້ພື້ນຖານ-ທັນຍຸກສະໄໝ ໃນການນຳໃຊ້ເຕັກໂນໂລຊີລວມທັງປັນຍາປະດິດ ແລະ ສື່ສານ.

2). ປັບປຸງ ແລະ ສ້າງນິຕິກຳໃຫ້ເປັນລະບົບ ແລະ ພຽງພໍ ຮັບປະກັນການຈັດຕັ້ງປະຕິບັດ ບັນດານິຕິກຳທີ່ປະກາດໃຊ້ໃຫ້ມີຜົນສັກສິດເພື່ອສົ່ງເສີມ ແລະ ຄຸ້ມຄອງດ້ານໄປສະນີ, ໂທລະຄົມມະນາຄົມ, ໄອຊີທີ, ປັນຍາປະດິດ ແລະ ດິຈິຕອນ.

3). ພັດທະນາ ໂຄງລ່າງພື້ນຖານເພື່ອເຊື່ອມໂຍງ ບັນດາອົງການຈັດຕັ້ງລັດ ຢ່າງໂລ່ງລ່ຽນ ແນ່ໃສ່ການພັດທະນາ ແລະ ຊຸກຍູ້ການນຳໃຊ້ ລະບົບບໍລິຫານລັດ ເຂົ້າໃນທຸກຂະແໜງການ ແລະ ທ້ອງຖິ່ນ. ພ້ອມກັນນັ້ນ, ກໍ່ຊຸກຍູ້ ໃຫ້ທຸກຂະແໜງການລິເລີ່ມການໃຫ້ບໍລິການແບບອອນລາຍ ແລະ ປະຍຸກໃຊ້ປັນຍາປະດິດ ເທື່ອລະກ້າວ ໂດຍສຸມໃສ່ການບໍລິການທີ່ມີທ່າແຮງທາງດ້ານເສດຖະກິດ ເພື່ອຊຸກຍູ້ການເກັບລາຍຮັບຂອງລັດເພີ່ມຂຶ້ນ.

4). ສ້າງເງື່ອນໄຂການພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ, ໄອຊີທີ, ປັນຍາປະດິດ ແລະ ດິຈິຕອນ ໃຫ້ເປັນທັນສະໄໝ ເພື່ອກາຍເປັນເຄື່ອງມືທີ່ສຳຄັນ ແລະ ພື້ນຖານໃຫ້ທຸກຂະແໜງການ ເສດຖະກິດ-ສັງຄົມ ແຕ່ສູນກາງລົງຮອດທ້ອງຖິ່ນ, ຮອງຮັບເຕັກໂນໂລຊີທີ່ມີການພັດທະນາແນ່ໃສ່ຮັບປະກັນການສະໜອງໂຄງລ່າງພື້ນຖານໃນການສ້າງເສດຖະກິດດິຈິຕອນ (Digital Economy), ມີລະບົບສຳຮອງທີ່ແຂງແຮງ/ແຂງແກ່ນ, ລວມສູນ ແລະ ນຳໃຊ້ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ແບບປະສົມປະສານ ໃຊ້ຮ່ວມກັນໄດ້ຢ່າງມີປະສິດທິຜົນ ແນ່ໃສ່ການປະຢັດຕົ້ນທຶນ ຫລີກລ້ຽງການລົງທຶນຊ້ຳຊ້ອນ.

5). ພັດທະນາເຄືອຂ່າຍອິນເຕີເນັດ ຄວາມໄວສູງ ແບບມີສາຍ ແລະ ບໍ່ມີສາຍລົງສູ່ຕົວເມືອງ, ຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ, ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບການບໍລິການ, ປົກປ້ອງສິດຜົນປະໂຫຍດຂອງຜູ້ຊົມໃຊ້ ແລະ ຜູ້ໃຫ້ບໍລິການ, ການບໍລິການດ້ວຍລາຄາທີ່ເໝາະສົມ ໃຫ້ທຸກຄົນສາມາດເຂົ້າເຖິງການນຳໃຊ້ຂໍ້ມູນຂ່າວສານ ເພື່ອຍົກສູງຊີວິດການເປັນຢູ່ໃຫ້ດີຂຶ້ນ, ພ້ອມທັງສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ, ສ້າງລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ຈຸດເຊື່ອມຕໍ່ທີ່ຊາຍແດນ ເພື່ອຮອງຮັບການຫັນປະເທດ ໃຫ້ເປັນປະຕູເຊື່ອມຕໍ່ອິນເຕີເນັດ ລະຫວ່າງຈີນ ແລະ ອາຊຽນ ແລະ ກາຍເປັນປະເທດບໍລິການທາງຜ່ານ ດ້ານໂທລະຄົມມະນາຄົມ.

6). ເພີ່ມທະວີການຄຸ້ມຄອງ, ຈັດສັນ ແລະ ຕິດຕາມກວດກາ ການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ສ້າງຜົນປະໂຫຍດສູງສຸດໃຫ້ພາກລັດ ແລະ ສັງຄົມ.

7). ສ້າງລະບົບຕິດຕາມກວດກາ ແລະ ປ້ອງກັນ ລະບົບໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ດິຈິຕອນໃຫ້ມີຄວາມປອດໄພສູງເພື່ອຮັບປະກັນ ແລະ ສະກັດກັ້ນການໂຈມຕີທຳລາຍ ໂຄງລ່າງພື້ນຖານຂໍ້ມູນຂ່າວ ສານທີ່ສຳຄັນ (Critical Information Infrastructure, CII), ປົກປ້ອງຂໍ້ມູນສ່ວນບຸກຄົນ, ສະກັດກັ້ນການໂຈລະກຳຂໍ້ມູນຂ່າວສານທຸກຮູບແບບ ແລະ ສະກັດກັ້ນຂໍ້ມູນທີ່ເປັນໄພ.

8). ສະໜັບສະໜູນສົ່ງເສີມໃຫ້ມີການຄົ້ນຄິດປະດິດສ້າງ ແລະນຳໃຊ້ນະວັດຕະກຳດ້ານໂທລະຄົມມະນາຄົມ, ໄອຊີທີ, ປັນຍາປະດິດ ແລະ ດິຈິຕອນ ທີ່ເປັນປະໂຫຍດຕໍ່ການພັດທະນາເສດຖະກິດ ແລະ ສັງຄົມ ສ້າງເງື່ອນໄຂໃນການຫັນເປັນທັນສະໄໝທາງດ້ານດິຈິຕອນ (Digital Transformation) ຮອງຮັບຜົນກະທົບຈາກການທຳລາຍລ້າງ ຈາກເຕັກໂນໂລຊີດິຈິຕອນ (Digital Disruption).

9). ນໍາໃຊ້ທຸກທ່າແຮງສັງລວມຂອງປະເທດ ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານໄປສະນີ ເພື່ອຂັບເຄື່ອນ ແລະ ຍົກລະດັບ ການຜະລິດສິນຄ້າພາຍໃນປະເທດ ເຊື່ອມໂຍງກັບຕະຫຼາດສາກົນຢ່າງກວ້າງຂວາງຕາມທິດຫັນເປັນເສດຖະກິດດິຊິຕອນ ຕິດພັນກັບການຄ້າເອເລັກໂຕຼນິກ, ພັດທະນາລະບົບໂລຊິດສະຕິກໄປສະນີ, ສະໜອງສິ່ງອໍານວຍຄວາມສະດວກ, ນະວັດຕະກໍາ ແລະ ຂະຫຍາຍຕາໜ່າງໄປສະນີໃຫ້ສາມາດເຂົ້າເຖິງທຸກພື້ນທີ່ຂອງບ້ານ ເພື່ອຍົກລະດັບການດໍາເນີນທຸລະກິດຂອງປະຊາຊົນໃຫ້ດີຂຶ້ນ ແລະ ນໍາໃຊ້ທຸກທ່າແຮງຂອງຂະແໜງການໄປສະນີໃຫ້ເປັນສູນກາງເຊື່ອມໂຍງ ແລະ ຄ່ຽນຖ່າຍຖົງໄປສະນີຂອງພາກພື້ນເພື່ອໃຫ້ທຸກພາກສ່ວນເສດຖະກິດສາມາດນໍາໃຊ້ປະໂຫຍດຮ່ວມກັນໄດ້.

10). ສະໜັບສະໜູນສົ່ງເສີມໃຫ້ການພົວພັນ ແລະ ຍາດແຍ່ງການຮ່ວມມື ກັບຕ່າງປະເທດໃນຂອບສອງຝ່າຍ, ອາຊຽນ, ອານຸພາກພື້ນ ແລະ ອົງການຈັດຕັ້ງສາກົນ, ປະຕິບັດນະໂຍບາຍ ເປີດກວ້າງການພົວພັນຮ່ວມມື ແບບຫຼາຍທິດ, ຫຼາຍຝ່າຍ ແລະ ຫຼາຍຮູບແບບ ເພື່ອຜັນຂະຫຍາຍບັນດາແຜນວຽກ ແລະ ຍົກສູງບົດບາດຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ.

## III. ເປົ້າໝາຍໃຫ່ຍຮອດປີ 2030

ສ້າງບາດກ້າວໃໝ່ດ້ວຍການນໍາໃຊ້ເຕັກໂນໂລຊີດີຈິຕອນ ເຂົ້າໃນບັນດາຂະແໜງການຕົ້ນຕໍ ໃນການພັດທະນາເສດຖະກິດ-ສັງຄົມ ເພື່ອເຮັດໃຫ້ ສປປ ລາວ ກາຍເປັນປະເທດກໍາລັງພັດທະນາທີ່ມີລາຍຮັບປານກາງສູງ ຕາມເສດຖະກິດພູມປັນຍາ, ສີຂຽວ ແລະ ຍືນຍົງ. ສ້າງໂຄງລ່າງພື້ນຖານໂທລະຄົມມະນາຄົມ, ອິນເຕີເນັດ ແລະ ເຕັກໂນໂລຊີດີຈິຕອນທີ່ເຂັ້ມແຂງ ຮອງຮັບເຕັກໂນໂລຊີໃຫມ່ ເປັນຕົ້ນແມ່ນປັນຍາປະດິດ (AI), ສ້າງລະບົບອິນເຕີເນັດຄວາມໄວສູງ ແລະ ຮັບປະກັນໃຫ້ສັນຍານມືຖື ລະບົບ 5G ຄອບຄຸມໃຫ້ໄດ້ ຕົວເມືອງໃຫຍ່ໃນ 18 ແຂວງ, ຮັບປະກັນໃຫ້ ທຸກເມືອງ ແລະ ທຸກຕາແສງ ທີ່ຖືກສ້າງຕັ້ງຂຶ້ນ ມີສັນຍານໂທລະສັບ ແລະ ສັນຍານອິນເຕີເນັດ, ເລັ່ງແກ້ໄຂບ້ານທີ່ບໍ່ມີສັນຍາໂທລະສັບ ຈໍານວນ 670 ບ້ານ ໃຫ້ຫລຸດລົງເຄິ່ງໜຶ່ງ ໃນປີ 2030, ຫັນການບໍລິຫານ ແລະ ການບໍລິການຂອງລັດດ້ວຍລະບົບອອນລາຍໃຫ້ໄດ້ 50%, ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງ ແລະ ມີຈໍານວນແຮງງານດ້ານດີຈິຕອນກວມເອົາ 2% ຂອງແຮງງານທັງໝົດ, ເຮັດໃຫ້ເສດຖະກິດດີຈິຕອນ ສ້າງລາຍຮັບໃຫ້ໄດ້ 7% ຂອງ GDP. ສ້າງໃຫ້ປະເທດລາວກາຍເປັນປະເທດເຊື່ອມໂຍງເຊື່ອມຈອດທາງດ້ານດີຈິຕອນ.

### 3.1 ເປົ້າໝາຍຂອງແຜນພັດທະນາຂະແໜງເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ IV (2026-2030)

**ເປົ້າໝາຍ 1:** ບຸກຄະລາກອນ ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ ແລະ ໄດ້ຮັບການຍົກລະດັບວິຊາສະເພາະທີ່ມີມາດຕະຖານ, ມີຄວາມຮູ້, ມີທັກສະໃນການນໍາໃຊ້ເຕັກໂນໂລຊີດີຈິຕອນ ເຂົ້າໃນວຽກງານ ແລະ ສົ່ງເສີມໃຫ້ມີຫົວຄິດປະດິດສ້າງທີ່ທັນສະໄໝ ຮັບປະກັນ ເປັນເຈົ້າການກຽມຄວາມພ້ອມທີ່ຈະກ້າວໄປສູ່ຍຸກສະໄໝໃໝ່, ມີສ່ວນຮ່ວມຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຫຼາຍຂຶ້ນ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ສູງຂຶ້ນ.

**ເປົ້າໝາຍ 2:** ມີນິຕິກໍາເພື່ອຮອງຮັບ ແລະ ສອດຄ່ອງກັບ ການຫັນເປັນດີຈິຕອນ (Digital Transformation), ລັດຖະບານດີຈິຕອນ (Digital Government), ເສດຖະກິດດີຈິຕອນ (Digital Economy) ແລະ ສັງຄົມດີຈິຕອນ (Digital Society); ເຜີຍແຜ່, ເຊື່ອມຊຶມ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດບັນດາລະບຽບການຮັບປະກັນໃນການບັງຄັບໃຊ້ກົດໝາຍ ໃຫ້ມີປະສິດທິຜົນ.

**ເປົ້າໝາຍ 3:** ພັດທະນາ ແລະ ສົ່ງເສີມການບໍລິຫານລັດແບບດີຈິຕອນ ເຂົ້າໃນທຸກຂະແໜງການ ອົງການຈັດຕັ້ງລັດທັງສູນກາງ ແລະ ທ້ອງຖິ່ນ ໃຫ້ທັນເປັນທັນສະໄໝ. ຍົກລະດັບປະສິດທິພາບຂອງການບໍລິຫານ ແລະ ຄຸ້ມຄອງລັດ ໃຫ້ມີຄວາມສະດວກ, ວ່ອງໄວ, ປະຢັດ ແລະ ຮັບປະກັນຄວາມປອດໄພ ສ້າງລາຍຮັບເຂົ້າງົບປະມານແຫ່ງລັດໄດ້ຫຼາຍຂຶ້ນ ກ້າວໄປສູ່ລັດຖະບານດີຈິຕອນ ແລະ ສັງຄົມດີຈິຕອນ.

**ເປົ້າໝາຍ 4:** ໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ດີຈິຕອນ ໃຫ້ໄດ້ຮັບການພັດທະນາ ແລະ ສ້າງຢ່າງເປັນລະບຽບຕາມມາດຕະຖານສາກົນ ແລະ ມີຄວາມປອດໄພ, ສົ່ງຮັບຂໍ້ມູນໄດ້ວ່ອງໄວ, ສາມາດສະໜອງບໍລິການທຸກ

ເມືອງ ແລະ ທຸກຕາແສງທົ່ວປະເທດ ເພື່ອຮອງຮັບການຫັນເປັນດິຈິຕອນ (Digital Transformation), ລັດຖະບານດິຈິຕອນ (Digital Government), ເສດຖະກິດດິຈິຕອນ (Digital Economy) ແລະ ສັງຄົມດິຈິຕອນ (Digital Society) ຂອງ ສປປ ລາວ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**ເປົ້າໝາຍ 5:** ຮັບປະກັນການນຳໃຊ້ ແລະ ເກັບລາຍຮັບ ຈາກຊັບພະຍາກອນໂທລະຄົມມະນາຄົມໃຫ້ມີປະສິດທິພາບ, ປະສິດທິຜົນ, ຖືກເປົ້າໝາຍ, ທົ່ວເຖິງ ພັດທະນາຢ່າງຕໍ່ເນື່ອງ ແລະ ຫັນເປັນທັນສະໄໝ.

**ເປົ້າໝາຍ 6:** ເພີ່ມທະວີລະບົບຄວາມປອດໄພ ໃຫ້ແກ່ບັນດາໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ດິຈິຕອນ, ມີລະບົບຕິດຕາມກວດກາ, ເຝົ້າລະວັງທາງໄຊເບີ ແລະ ແຈ້ງເຕືອນ ຄວາມປອດໄພທີ່ໄດ້ມາດຕະຖານຮ່ວມກັນພາຍໃນ ແລະ ສາກົນ ເພື່ອປ້ອງກັນ ແລະ ສະກັດກັ້ນການໂຈມຕີທາງໄຊເບີ, ການນຳໃຊ້ເຄື່ອຂ່າຍໂທລະຄົມເຂົ້າໃນການກໍ່ອາດສະຍາກຳໄຊເບີ, ມີການຕິດຕາມ ຂໍ້ມູນຂ່າວສານຜ່ານອິນເຕີເນັດ, ສະກັດກັ້ນ ແລະ ຕອບຕ້ານ ບັນດາຂ່າວປອມ ເທິງສື່ສັງຄົມອອນລາຍ ແລະ ອິນເຕີເນັດ.

**ເປົ້າໝາຍ 7:** ຊຸກຍູ້ ແລະ ສົ່ງເສີມການພັດທະນາອຸດສະຫະກຳດິຈິຕອນ, ການຄົ້ນຄວ້ານຳໃຊ້ເຕັກໂນໂລຊີລະດັບສູງ ແລະ ອັດສະລິຍະ, ສົ່ງເສີມການສ້າງຫົວໜ່ວຍວິສາຫະກິດທີ່ນຳໃຊ້ນະວັດຕະກຳໃໝ່ (Start Up), ສ້າງນະວັດຕະກຳດ້ານດິຈິຕອນ, ການໃຫ້ບໍລິການ ການເງິນເອເລັກໂຕຣນິກເທິງໂທລະສັບມືຖື (Mobile Money), ເພື່ອສະໜັບສະໜູນການຂະຫຍາຍ ຕົວທາງດ້ານເສດຖະກິດ ໃນຍຸກແຫ່ງດິຈິຕອນ, ຮອງຮັບການຫັນເປັນດິຈິຕອນ, ເສດຖະກິດດິຈິຕອນ, ສົ່ງເສີມບັນດາຂະແໜງການ ສ້າງນະວັດຕະກຳຮັບໃຊ້ຂະແໜງການຂອງຕົນ, ຜ່ານໂຄງລ່າງພື້ນຖານ ແລະ ການບໍລິການໂທລະຄົມມະນາຄົມ ແລະ ດິຈິຕອນ, ນະວັດຕະກຳດ້ານໄອຊີທີ ຂອງຄົນລາວສູ່ສາກົນ ແລະ ຫຼຸດຜ່ອນຄວາມແຕກໂຕນທາງດ້ານດິຈິຕອນ.

**ເປົ້າໝາຍ 8:** ຍູ້ແຮງການພັດທະນາ ແລະ ນຳໃຊ້ປັນຍາປະດິດ (AI) ເພື່ອເປັນກຳລັງຂັບເຄື່ອນທີ່ສຳຄັນໃນການຫັນເປັນລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ, ສັງຄົມດິຈິຕອນ ພ້ອມທັງສ້າງຄວາມອາດສາມາດໃນການແຂ່ງຂັນ ແລະ ສ້າງມູນຄ່າເພີ່ມ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

**ເປົ້າໝາຍ 09:** ສັງຄົມໄດ້ນຳໃຊ້ການບໍລິການໄປສະນີຢ່າງກວ້າງຂວາງ, ທັນສະໄໝ, ມີມາດຕະຖານ ແລະ ຄຸນນະພາບໃນລາຄາທີ່ເໝາະສົມ ມີບໍລິການໃນທຸກເມືອງ ແລະ ທຸກຕາແສງ ທົ່ວປະເທດ; ເປັນອົງປະກອບທີ່ສຳຄັນຊຸກຍູ້ການຄ້າເອເລັກໂຕຣນິກ, ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ (ສອຈ) ແລະ ຫຼຸດຜ່ອນຄວາມແຕກໂຕນລະຫວ່າງສູນກາງ ແລະ ທ້ອງຖິ່ນ ແກ້ໄຂບັນຫາເສດຖະກິດ ເພື່ອຫຼຸດຜ່ອນຄວາມທຸກຍາກ.

**ເປົ້າໝາຍ 10:** ເສີມຂະຫຍາຍການພົວພັນ ແລະ ຍາດແຍ່ງການຮ່ວມມື ກັບຕ່າງປະເທດ ໃນຂອບສອງຝ່າຍ, ອາຊຽນ, ອານຸພາກພື້ນ ແລະ ອົງການຈັດຕັ້ງສາກົນ ອີງຕາມແນວທາງການຕ່າງປະເທດຂອງ ສປປ ລາວ ສັນຕິພາບ ເອກະລາດມິດຕະພາບ ແລະ ການຮ່ວມມື ຢ່າງສະເໝີຕົ້ນສະເໝີປາຍ; ແລະ ປະຕິບັດນະໂຍບາຍ ເປີດກວ້າງການພົວພັນຮ່ວມມື ແບບຫຼາຍທິດ, ຫຼາຍຝ່າຍ ແລະ ຫຼາຍຮູບແບບ ເພື່ອຜັນຂະຫຍາຍບັນດາແຜນວຽກ ແລະ ຍົກສູງບົດບາດຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ.

## 3.2 ຄາດໝາຍ ແລະ ຕົວຊີ້ບອກ

1) ສູ້ຊົນສ້າງ ແລະ ປັບປຸງນະໂຍບາຍ, ນິຕິກຳ ເພື່ອຮອງຮັບການຫັນເປັນດິຈິຕອນ, ເສດຖະກິດດິຈິຕອນ ໃຫ້ໄດ້ຕື່ມ 50 ສະບັບ (ຍຸດທະສາດ 6 ສະບັບ, ແຜນແມ່ບົດ 5 ສະບັບ, ສ້າງ ແລະ ປັບປຸງກົດໝາຍ 9 ສະບັບ, ດຳລັດ 21 ສະບັບ ແລະ ຂໍ້ຕົກລົງ 9 ສະບັບ);
2) ສູ້ຊົນຍົກລະດັບສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ຈາກສະຖາບັນໃຫ້ກາຍເປັນສະຖາບັນທຽບເທົ່າມະຫາວິທະຍາໄລ ຫຼື ມະຫາວິທະຍາໄລ ເພື່ອສ້າງບຸກຄະລາກອນດ້ານແຮງງານທີ່ມີທັກສະດ້ານດິຈິຕອນ ໃນໄລຍະສັ້ນ ແລະ ໄລຍະຍາວ ໃຫ້ໄດ້ 2,500 ຄົນ;
3) ສູ້ຊົນສ້າງສູນສາທິດສົ່ງເສີມ ແລະ ຖ່າຍທອດການນຳໃຊ້ເຕັກໂນໂລຊີໂດຍສອດຄ່ອງກັບທ່າແຮງການພັດທະນາຂອງທ້ອງຖິ່ນ ໃຫ້ໄດ້ 1 ແຫ່ງ;

4) ສູ້ຊົນ ສ້າງເຂດພັດທະນາເຕັກໂນໂລຊີ ລະດັບສູງ ໃຫ້ໄດ້ 1 ແຫ່ງ ເມື່ອຮອດປີ 2030;
5) ສູ້ຊົນ ສ້າງສູນນະວັດຕະກໍາປັນຍາປະດິດ (AI Innovation Center);
6) ສູ້ຊົນ ສ້າງອຸທິຍານດິຈິຕອນ ໃຫ້ໄດ້ຕື່ມອີກ 03 ແຫ່ງ (ພາກເໜືອ, ພາກກາງ ແລະ ພາກໃຕ້);
7) ສູ້ຊົນ ສ້າງສູນຂໍ້ມູນປັນຍາປະດິດ (AI Data Center);
8) ຊຸກຍູ້ສົ່ງເສີມໃຫ້ທຸກຂະແໜງການທັງພາກລັດ ແລະ ເອກະຊົນ ສາມາດນໍາໃຊ້ສູນຂໍ້ມູນດິຈິຕອນ ໃຫ້ເພີ່ມຂຶ້ນ 40 %;
9) ຫັນທຸກບໍລິການພື້ນຖານທີ່ຈໍາເປັນຂອງພາກລັດ ເປັນການບໍລິການຜ່ານອອນລາຍ ໃຫ້ສໍາເລັດ 50%ໃນການບໍລິຫານຂັ້ນ3;
10) ພັດທະນາໃຫ້ຜູ້ປະກອບການທຸລະກິດພາຍໃນປະເທດມີຄວາມເຂັ້ມແຂງ ໂດຍສະເພາະຜູ້ປະກອບການຂະໜາດກາງ, ນ້ອຍ, ຈຸນລະວິສາຫະກິດ ແລະ Start Up ໃຫ້ມີການນໍາໃຊ້ເຕັກໂນໂລຊີດິຈິຕອນ ແລະ ການຄ້າເອເລັກໂຕຣນິກ;
11) ສູ້ຊົນປັບປຸງໂຄງສ້າງເສດຖະກິດ ໃຫ້ມີເສດຖະກິດດິຈິຕອນປະກອບເຂົ້າ, ເຮັດໃຫ້ມີເສດຖະກິດໃໝ່ ບົນພື້ນຖານເສດຖະກິດດິຈິຕອນ ເຊິ່ງສາມາດສ້າງລາຍຮັບປະກອບເຂົ້າໃນ GDP ເພີ່ມຂຶ້ນຈາກ 3% ເປັນ 5%;
12) ສູ້ຊົນຄົ້ນຄວ້າ ແລະ ພັດທະນາ ຖ່າຍທອດເຕັກໂນໂລຊີ ນະວັດຕະກໍາ ອິນເຕີເນັດແຫ່ງສັບພະສິ່ງ, ລະບົບອັດຕະໂນມັດ ແລະ ຫຸ່ນຍົນ ເຂົ້າສູ່ຂະບວນການຜະລິດ, ການບໍລິການ ຕິດພັນກັບການສົ່ງເສີມສ້າງຕົວແບບການຜະລິດສິນຄ້າ ແລະ ຄໍ້າປະກັນຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ ໃນຂົງເຂດຈຸດສຸມບູລິມະສິດຂອງລັດຖະບານ ໃຫ້ໄດ້ຢ່າງໜ້ອຍ 5 ຕົວແບບ;
13) ສ້າງແຜນແມ່ບົດການຊື້-ຂາຍ ເງິນຄຣິບໂຕ (ສະກຸນເງິນໃນຮູບແບບຂອງດິຈິຕ໋ອນ) ຢູ່ ສປປ ລາວ;
14) ໃຫ້ສໍາເລັດການປັບປຸງ ແລະ ຂະຫຍາຍ ລະບົບເຄືອຂ່າຍພາກລັດ ໃຫ້ໄດ້ຫ້ອງການເມືອງສໍາຄັນ ໃນຂອບເຂດທົ່ວປະເທດ (Government Network) ຢ່າງໜ້ອຍໃຫ້ໄດ້ 9 ຫ້ອງການ;
15) ສູ້ຊົນພັດທະນາລະບົບຕິດຕາມ ລະບົບບໍລິການພາກລັດໃຫ້ໄດ້ 1 ລະບົບ (Government NOS);
16) ສູ້ຊົນພັດທະນາລະບົບເຊື່ອມໂຍງຂໍ້ມູນພາກລັດ (Government Data Exchange) ເພື່ອແລກປ່ຽນ ແລະ ລວມສູນຂໍ້ມູນພາກລັດ ແລະ ສ້າງລະບົບຂໍ້ມູນເປີດພາກລັດ (Open Government Data);
17) ສູ້ຊົນພັດທະນາເຕັກໂນໂລຊີ ແລະ ນະວັດຕະກໍາໃໝ່ ເພື່ອນໍາໃຊ້ເຂົ້າໃນລະບົບບໍລິຫານ ແລະ ບໍລິການລັດແບບດິຈິຕອນ ໃຫ້ໄດ້ຢ່າງໜ້ອຍ 3 ລະບົບ;
18) ສູ້ຊົນສ້າງສູນບໍລິການຂໍ້ມູນຂ່າວສານແບບເອເລັກໂຕຣນິກຢູ່ທ້ອງຖິ່ນ (ປະຈໍາແຂວງ ຫຼື ເມືອງ) ໃຫ້ໄດ້ຕື່ມ ອີກ 2 ພາກ (ພາກເໜືອ ແລະ ພາກໃຕ້);
19) ສູ້ຊົນປັບປຸງ ແລະ ຂະຫຍາຍ ການນໍາໃຊ້ລະບົບບໍລິຫານລັດດິຈິຕອນ ໃຫ້ກວມເອົາຫ້ອງການສໍາຄັນໃນທົ່ວປະເທດ ຄື: ລະບົບອີເມວ (Email) ຂອງພາກລັດໃຫ້ໄດ້ 10,000 ບັນຊີ, ກວມເອົາ 53 ຫ້ອງການ/ພາກສ່ວນ, ລະບົບກອງປະຊຸມທາງໄກ (VC) ໃຫ້ໄດ້ຕື່ມ 50 ພາກສ່ວນ, ລະບົບຫ້ອງການທັນສະໄໝ (e-Office), ໃຫ້ໄດ້ 20,000 ບັນຊີ, ກວມເອົາ 53 ຫ້ອງການ, ລະບົບຈັດເກັບ ແລະ ນໍາໃຊ້ເອກະສານຮ່ວມກັນຂອງພາກລັດ G-Share/G-Drive ໃຫ້ໄດ້ 16,000 ບັນຊີ ກວມເອົາ 53 ພາກສ່ວນ, ລະບົບສື່ສານພາກລັດ G-Chat ໃຫ້ຮອງຮັບຕື່ມ 100,000 ບັນຊີ;
20) ປັບປຸງ ແລະ ຂະຫຍາຍ ການນໍາໃຊ້ລະບົບບໍລິການລັດດິຈິຕອນ ໃຫ້ສາມາດບໍລິການແກ່ສັງຄົມໄດ້ຢ່າງສະດວກ ຄື: ລະບົບເວັບໄຊຂອງພາກລັດ G-Web Platform ໃຫ້ໄດ້ຕື່ມ 35 ພາກສ່ວນ, ຊຸກຍູ້ການນໍາໃຊ້ ແລະ ສ້າງຂໍ້ມູນໃນລະບົບກະດານຂ່າວ Laopedia ໃຫ້ໄດ້ຕື່ມ 15 ພາກສ່ວນ, ລະບົບປະຕູຂໍ້ມູນ ໃຫ້ສາມາດເຊື່ອມໂຍງຂໍ້ມູນໃຫ້ໄດ້ 5 ພາກສ່ວນ;
21) ສູ້ຊົນປັບປຸງ ແລະ ຂະຫຍາຍລະບົບເຕັກນິກຄລາວ ໃຫ້ໄດ້ຕື່ມ 50% ເພື່ອຮັບຮອງການຕິດຕັ້ງລະບົບ ບໍລິຫານລັດ ດິຈິຕອນ ແລະ ລະບົບຊອບແວຕ່າງໆ ໃນການຫັນເປັນທັນສະໄໝ.

22) ສູ້ຊົນປັບປຸງ ແລະ ຂະຫຍາຍສູນກາງອິນເຕີເນັດພາຍໃນປະເທດ (NIX) ໃຫ້ມີຄວາມຮັບປະກັນເພີ່ມປະສິດທິພາບການເຊື່ອມຕໍ່ເຂົ້າຫາເນື້ອຫາສາລະ ແລະ ແລກປ່ຽນຂໍ້ມູນພາຍໃນປະເທດ, ຫຼຸດຜ່ອນການນໍາເຂົ້າສັນຍານອິນເຕີເນັດຈາກຕ່າງປະເທດ.

23) ສູ້ຊົນປັບປຸງ ແລະ ຂະຫຍາຍສູນກາງອິນເຕີເນັດຕ່າງປະເທດ (IIG) ໃຫ້ມີຄວາມຮັບປະກັນ, ສາມາດຮັບຮອງການລວມສູນສັນຍານອິນເຕີເນັດຈາກຕ່າງປະເທດ ເພື່ອຮັບປະກັນວຽກງານ ປກຊ-ປກສ;

24) ສູ້ຊົນພັດທະນາ ແລະ ຊຸກຍູ້ບັນດາລະບົບເຄືອຂ່າຍ ອິນເຕີເນັດຂອງ ສປປ ລາວ ຫັນໄປນໍາໃຊ້ IPV6.

25) ສູ້ຊົນ ຈັດຕັ້ງປະຕິບັດ ໂຄງການຊ່ວຍເຫຼືອຈາກ ລັດຖະບານ ສປ ຈີນ "ໂຄງການພັດທະນາໂຄງຂ່າຍຂໍ້ມູນຂ່າວສານຄວາມໄວສູງ ແລະ ເສັ້ນທາງສາຍໄຫມດີຈິຕອນ" ທີ່ໄດ້ສໍາເລັດການເຊັນສານແລກປ່ຽນແລ້ວສ້າງໃຫ້ປະເທດລາວ ກາຍເປັນປະເທດເຊື່ອມໂຍງເຊື່ອມຈອດທາງດ້ານດີຈິຕອນ.

26) ສູ້ຊົນ ປັບປຸງ ໂຄງລ່າງພື້ນຖານ ສູນອິນເຕີເນັດແຫ່ງຊາດ ຢູ່ນະຄອນຫຼວງວຽງຈັນ (ສາຍລົມ, ດົງໂພສີ) ໃຫ້ຮັບປະກັນ ແລະ ຮອງຮັບການຂະຫຍາຍຕົວຂອງເຕັກໂນໂລຊີ ແລະ ວຽກງານການຫັນເປັນດີຈິຕອນ.

27) ສູ້ຊົນສ້າງສູນອິນເຕີເນັດ ແຫ່ງຊາດ ທີ່ພາກເໜືອ (1 ແຫ່ງ), ພາກກາງ (1 ແຫ່ງ) ແລະ ພາກໃຕ້ (1 ແຫ່ງ);

28) ສູ້ຊົນປັບປຸງ ແລະ ຂະຫຍາຍ ລະບົບຄຸ້ມຄອງ ແລະ ໃຫ້ບໍລິການ ລະຫັດຊື່ອິນເຕີເນັດສູງສຸດແຫ່ງຊາດ .LA ແລະ .ລາວ, ຂະຫຍາຍການນໍາໃຊ້ ເຂົ້າໃນລະບົບເວັບໄຊ້ ຂອງພາກລັດ ແລະ ເອກະຊົນ ພາຍໃນປະເທດ ໃຫ້ເພີ່ມຂຶ້ນ 10%;

29) ສູ້ຊົນພັດທະນາ ແລະ ຂະຫຍາຍການນໍາໃຊ້ລາຍເຊັນເອເລັກໂຕຣນິກເຂົ້າໃນລະບົບການຫັນເປັນດີຈິຕອນຂອງພາກລັດ ແລະ ເອກະຊົນ, ໂດຍເລີ່ມຈາກບັນດາລະບົບສໍາຄັນ ເປັນຕົ້ນ: ລະບົບຄຸ້ມຄອງງົບປະມານແຫ່ງລັດກະຊວງການເງິນ, ລະບົບອອກໃບທະບຽນວິສາຫະກິດການຄ້າ, ລະບົບປະກັນໄພ, ລະບົບການເງິນ-ການທະນາຄານ, ລະບົບຄຸ້ມຄອງພົນລະເມືອງ ແລະ ບັດປະຈໍາຕົວ ແລະ ລະບົບອື່ນໆ ທັງພາກລັດ-ເອກະຊົນ;

30) ສູ້ຊົນລວມສູນການສື່ສານໂທລະຄົມມະນາຄົມ (ໂທລະສັບຂາອອກຕ່າງປະເທດ IVG, ໂທລະສັບພາຍໃນປະເທດ NVX ແລະ ສູນຂໍ້ຄວາມສັ້ນ ຂາອອກຕ່າງປະເທດ SMSC) ເພື່ອຮັບປະກັນວຽກງານ ປກຊ-ປກສ;

31) ສູ້ຊົນ ປັບປຸງ ແລະ ຂະຫຍາຍ ລະບົບຄຸ້ມຄອງການຂຶ້ນທະບຽນເລກໝາຍໂທລະສັບມືຖື ແລະ ເຊື່ອມຕໍ່ກັບຖານຂໍ້ມູນພົນລະເມືອງຂອງກະຊວງປກສ ເພື່ອກວດຄືນຂໍ້ມູນຢັ້ງຢືນຕົວຕົນຂອງຜູ້ຊົມໃຊ້ໃຫ້ມີຄວາມຖືກຕ້ອງຊັດເຈນ;

32) ສ້າງມາດຕະຖານເຕັກນິກຄຸນນະພາບຂອງການບໍລິການເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ຂອງ ສປປ ລາວ ໃຫ້ສອດຄ່ອງກັບມາດຕະຖານຂອງພາກພື້ນ ແລະ ສາກົນ, ຊຸກຍູ້ໃຫ້ບັນດາບໍລິສັດຜູ້ໃຫ້ບໍລິການແຂ່ງຂັນຢ່າງເປັນທໍາ, ປົກປ້ອງສິດຜົນປະໂຫຍດຂອງຜູ້ໃຊ້-ຜູ້ໃຫ້ບໍລິການ ແລະ ແກ້ໄຂຂໍ້ຂັດແຍ່ງ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;

33) ສູ້ຊົນເຮັດໃຫ້ເຄື່ອງອຸປະກອນ ແລະ ລະບົບໄອຊີທີ, ດີຈິຕອນ ທີ່ນໍາໃຊ້ໃນລາວຮອງຮັບພາສາລາວ ແລະ ບັນຈຸເອົາຟອນພາສາລາວທາງການເພັດຊະລາດເຂົ້າໃນລະບົບ ແລະ ເຄື່ອງອຸປະກອນເລັກໂຕຣນິກຂອງບໍລິສັດຜູ້ຜະລິດເພື່ອໃຫ້ມີການນໍາໃຊ້ທີ່ສະດວກສະບາຍ ແລະ ສົມບູນແບບ, ປັບປຸງຟອນເພັດສະລາດ ແລະ ແປ້ນພິມ, ການພິມເຂົ້າໃຫ້ມີຄວາມສົມບູນຂຶ້ນ;

34) ສູ້ຊົນສ້າງສະຖານີກວດກາຄື້ນຄວາມຖີ່ວິທະຍຸສື່ສານ ແບບມີຄົນປະຈໍາ (Fixed Monitoring Station) ຈໍານວນ 03 ສະຖານີ ແລະ ແບບບໍ່ມີຄົນປະຈໍາ (Remote Monitoring Station) ຈໍານວນ 11 ສະຖານີ, ສູນຄວບຄຸມລະບົບຕິດຕາມ 01 ສະຖານີ, ອຸປະກອນກວດກາຄື້ນຄວາມຖີ່ວິທະຍຸສື່ສານ ແບບພົກພາ ຈໍານວນ 04 ເຄື່ອງ, ລົດກວດກາຄື້ນຄວາມຖີ່ວິທະຍຸສື່ສານ (Mobile Monitoring Station) ຈໍານວນ 03 ຄັນ ແລະ ບໍາລຸງຮັກສາ, ສ້ອມແປງ ແລະ ຍົກລະດັບອຸປະກອນກວດກາຄື້ນຄວາມຖີ່ວິທະຍຸສື່ສານ,

35) ສູ້ຊົນສ້າງຫ້ອງ ກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກ, ການນໍາເຂົ້າອຸປະກອນ ໂທລະຄົມມະນາຄົມ ແລະ ດີຈິຕອນ ເພື່ອຮັບປະກັນຄຸນນະພາບ, ມາດຕະຖານ ແລະ ຄວາມປອດໄພ ຂອງອຸປະກອນສື່ສານທີ່ຈະນໍາມາໃຊ້ ຫຼື ຈໍາໜ່າຍໃນ ສປປ ລາວ;

36) ສູ້ຊົນສຳເລັດການຄຸ້ມຄອງການຂຶ້ນທະບຽນເລກໝາຍໂທລະສັບມືຖື ໃຫ້ບັນລຸ 100% ຂອງຈຳນວນເບີທີ່ນຳໃຊ້ທັງໝົດ;
37) ພັດທະນາການຈັດສັນ ແລະ ອະນຸຍາດຄື້ນຄວາມຖີ່ວິທະຍຸສື່ສານ, ຂຶ້ນທະບຽນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໃຫ້ສອດຄ່ອງກັບແຜນຜັງແຫ່ງຊາດ ວ່າດ້ວຍ ຄື້ນຄວາມຖີ່ວິທະຍຸສື່ສານ, ຈັດສັນຍ່ານຄື້ນຄວາມຖີ່ C-Band, 2300 MHz ແລະ 2600 MHz ເພື່ອຕອບສະໜອງການບໍລິການ 5G ແລະ ເຕັກໂນໂລຊີໃໝ່ໃນອະນາຄົດ, ພ້ອມທັງຊຸກຍູ້ການນຳໃຊ້ລະບົບການສື່ສານຜ່ານດາວທຽມ ເຊື່ອມໂຍງການສື່ສານໃນເຂດຫ່າງໄກສອກຫຼີກ, ກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກອຸປະກອນ ຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ດີຈີຕອນ, ໃຫ້ສອດຄ່ອງກັບລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ, ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ. ສູ້ຊົນສ້າງສະຖານີກວດກາຄື້ນຄວາມຖີ່ ຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ໄດ້ຕື່ມ 14 ແຫ່ງ;
38) ຊຸກຍູ້ສົ່ງເສີມໃຫ້ມີການຂະຫຍາຍ ແລະ ນຳໃຊ້ຕາໜ່າງອິນເຕີເນັດຄວາມໄວສູງແບບມີສາຍ FTTx ໃຫ້ໄດ້ 148 ເມືອງ ແລະ ທຸກຕາແສງ ທີ່ສ້າງຕັ້ງໃໝ່ ໃນທົ່ວປະເທດ ແລະ ຂະຫຍາຍສະຖານີຮັບ-ສົ່ງສັນຍານໂທລະສັບມືຖື ລະບົບເຕັກໂນໂລຊີ 4G ຄອບຄຸມໃຫ້ໄດ້ 80% ຂອງຈຳນວນປະຊາກອນ ໃນຂອບເຂດທົ່ວປະເທດ ແລະ 5G ຄອບຄຸມໃຫ້ໄດ້ ຕົວເມືອງໃຫຍ່ໃນ 18 ແຂວງ ທົ່ວປະເທດໃນປີ 2030. ເລັ່ງແກ້ໄຂບ້ານທີ່ບໍ່ມີສັນຍາໂທລະສັບ ຈຳນວນ 670 ບ້ານ ໃຫ້ຫລຸດລົງເຄິ່ງໜຶ່ງ ໃນປີ 2030. ຄົ້ນຄວ້າໃນການເປີດນຳໃຊ້ການສື່ສານຜ່ານດາວທຽມ ໄປຫາເຂດຫ່າງໄກສອກຫລີກ ແລະ ເຂດທີ່ເປັນເປົ້າຫມາຍບຸລິມະສິດ;
39) ຂະຫຍາຍເຄືອຂ່າຍສາຍສົ່ງໂທລະຄົມມະນາຄົມ ສາຍໃຍແກ້ວ (Optic Fiber) ໃຫ້ເຂົ້າເຖິງບັນດາແຂວງ, ເທດສະບານເມືອງ ໃຫ້ໄດ້ຕື່ມ 5,747 ກິໂລແມັດ, ປັບປຸງຈຸດເຊື່ອມຕໍ່ທີ່ຊາຍແດນ ແລະ ຂະຫຍາຍການເຊື່ອມຕໍ່ລະຫວ່າງປະເທດ ເພື່ອຫັນປະເທດລາວໃຫ້ກາຍເປັນປະເທດທາງຜ່ານດ້ານໂທລະຄົມມະນາຄົມ. ຄົ້ນຄວ້າໃນການຈັດສາຍສົ່ງໂທລະຄົມມະນາຄົມ ທີ່ເກາະຫ້ອຍຕາມເສົາໄຟຟ້າ ແລະ ຂຶ້ນແຜນເອົາລົງດິນ;
40) ສູ້ຊົນຂະຫຍາຍອັດຕາສ່ວນປະຊາຊົນຮູ້ນຳໃຊ້ຄອມພິວເຕີ ບັນລຸໄດ້ 70% ແລະ ຮູ້ນຳໃຊ້ອິນເຕີເນັດແບບມີສາຍ ແລະ ບໍ່ມີສາຍ ໄດ້ 60% ຂອງພົນລະເມືອງ, ອັດຕາສ່ວນຂອງຄົວເຮືອນນຳໃຊ້ຄອມພິວເຕີ, ສະມາດໂຟນ, ສະມາດທີວາຍ ບັນລຸ 60% ຂອງຄົວເຮືອນທັງໝົດ, ອັດຕາສ່ວນຂອງຜູ້ລົງທະບຽນນຳໃຊ້ໂທລະສັບຕັ້ງໂຕະແບບມີສາຍ ແລະ ບໍ່ມີສາຍໃຫ້ບັນລຸ 100% ຂອງປະຊາກອນທັງໝົດທີ່ມີການນຳໃຊ້, ນຳໃຊ້ອິນເຕີເນັດຄວາມໄວສູງແບບມີສາຍ ແລະ ບໍ່ມີສາຍໃຫ້ບັນລຸ 100% ຂອງປະຊາກອນທັງໝົດທີ່ຊົມໃຊ້;
41) ປະຕິຮູບລັດວິສາຫະກິດດາວທຽມລາວ (Lao Satellite Enterprise) ໃຫ້ສຳເລັດພາຍໃນປີ 2026 ແລະ ຄົ້ນຄ້ວາແນວທາງນຳສະເໜີ ລັດຖະບານພິຈາລະນາແຜນການນຳສົ່ງດາວທຽມລາວດວງທີສອງຂຶ້ນປະຈຳການໃນຕຳແໜ່ງວົງໂຄຈອນ 128.5 ອົງສາ ຕາເວັນອອກສ່ຽງໃຕ້ ປ່ຽນແທນດາວທຽມດວງປັດຈຸບັນພາຍຫຼັງທີ່ຖືກປົດປະຈຳການໃນປີ 2030;
42) ນຳໃຊ້ທຸກທ່າແຮງສັງລວມຂອງປະເທດ ສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການໄປສະນີ ເພື່ອຂັບເຄື່ອນ ແລະ ຍົກລະດັບ ການຜະລິດສິນຄ້າພາຍໃນປະເທດ ເຊື່ອມໂຍງກັບຕະຫຼາດສາກົນຢ່າງກວ້າງຂວາງຕາມທິດຫັນເປັນເສດຖະກິດດີຊິຕອນ ຕິດພັນກັບການຄ້າເອເລັກໂຕຼນິກ, ພັດທະນາລະບົບໂລຊິດສະຕິກໄປສະນີ, ສະໜອງສິ່ງອຳນວຍຄວາມສະດວກ, ນະວັດຕະກຳ ແລະ ຂະຫຍາຍຕາໜ່າງໄປສະນີໃຫ້ສາມາດເຂົ້າເຖິງທຸກພື້ນທີ່ຂອງບ້ານ ເພື່ອຍົກລະດັບການດຳເນີນທຸລະກິດຂອງປະຊາຊົນໃຫ້ດີຂຶ້ນ ແລະ ນຳໃຊ້ທຸກທ່າແຮງຂອງຂະແໜງການໄປສະນີໃຫ້ເປັນສູນກາງເຊື່ອມໂຍງ ແລະ ຄ່ຽນຖ່າຍຖົງໄປສະນີຂອງພາກພື້ນ ເພື່ອໃຫ້ທຸກພາກສ່ວນເສດຖະກິດສາມາດນຳໃຊ້ປະໂຫຍດຮ່ວມກັນໄດ້;
43) ສ້າງສູນຄ່ຽນຖ່າຍຖົງໄປສະນີລະຫວ່າງພາກພື້ນໃຫ້ໄດ້ 1 ແຫ່ງ;
44) ສ້າງສູນຂໍ້ມູນໂລຊິກສະຕິໄປສະນີໃຫ້ໄດ້ 1 ແຫ່ງ;
45) ສ້າງສູນກວດກາເຄື່ອງຝາກລະຫວ່າງປະເທດ, ສູນແຈກຢາຍ ໃຫ້ໄດ້ 1 ແຫ່ງ;

46) ສ້າງສູນພັດທະນາບຸກຄະກອນດ້ານໄປສະນີໃຫ້ໄດ້ 1 ແຫ່ງ;
47) ພັດທະນາໃຫ້ເກີດມີການຄ້າເອເລັກໂຕຣນິກ ເປັນຮູບປະທຳ ເຊິ່ງປະກອບດ້ວຍ ພລັດຟອມການຄ້າເອເລັກໂຕຣນິກ, ການຊຳລະຜ່ານເອເລັກໂຕຣນິກ, ໂລຊິດສະຕິກ, ຜະລິດຕະພັນ, ສິນຄ້າ ແລະ ການບໍລິການ;
48) ສູ້ຊົນຂຶ້ນແຜນງົບປະມານ ສົກປີ 2026-2030 ສະເໜີຫາກະຊວງການເງິນ ໃຫ້ໄດ້ 572 ຕື້ກີບ ແລະ ປະຕິບັດລາຍຈ່າຍໃຫ້ໄດ້ 571 ຕື້ກີບ;
49) ສູ້ຊົນສ້າງລາຍຮັບຂອງ ຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ໃຫ້ໄດ້ 25,000 ຕື້ກ່ວາກີບ (25,000,000,000,000 ກີບ). ໃນນັ້ນ ເກັບລາຍຮັບກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ໃຫ້ໄດ້ 830 ຕື້ກີບ (830,000,000,000 ກີບ)ເກັບລາຍຮັບວິຊາການຂອງກະຊວງ ໃຫ້ໄດ້ 810 ຕື້ກີບ (810,000,000,000 ກີບ). ໃນນີ້ກະຊວງ ຕສ ຈະສູ້ຊົນເກັບຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ໄດ້ 60 ຕື້ກວ່າກີບ (60,000,000,000 ກີບ), ກະຊວງການເງິນ ກົມຊັບສິນຮັບຊ່ວຍ ໃຫ້ໄດ້ 750 ຕື້ກີບ (750,000,000,000 ຕື້ກີບ). ສ້າງລາຍຮັບຂອງບັນດາຜູ້ປະກອບການດ້ານໄປສະນີ, ໂທລະຄົມມະນາຄົມ ໃຫ້ໄດ້ 24,000 ຕື້ກ່ວາກີບ (24,000,000,000,000 ກີບ).

## IV. ວຽກບູລິມະສິດ ແລະ ແຜນວຽກຈຸດສຸມ ຂອງແຜນພັດທະນາ ເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ IV (2026-2030).

ເພື່ອໃຫ້ບັນລຸໄດ້ຕາມຈຸດໝາຍ, ທິດທາງໜ້າທີ່ລວມ ແລະ ໝາກຜົນທີ່ຄາດວ່າຈະໄດ້ຮັບໃນແຜນການ 5 ປີ ຄັ້ງທີ IV, ບັນດາກົມ/ທຽບເທົ່າ ແລະ ບັນດາພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ທົ່ວປະເທດ ຕ້ອງໄດ້ຮ່ວມກັນຈັດຕັ້ງປະຕິບັດບັນດາ 5 ວຽກບູລິມະສິດ, 10 ແຜນວຽກຈຸດສຸມ ດັ່ງລຸ່ມນີ້:

### 4.1 ວຽກບູລິມະສິດສຳຄັນ ໃນການຫັນເປັນທັນສະໄໝດ້ວຍດິຈິຕອນ

ເພື່ອຜັກດັນ ແລະ ຂັບເຄື່ອນການພັດທະນາຫັນເປັນດິຈິຕອນ ຕ້ອງດຳເນີນຢ່າງເລິກເຊິ່ງໃນ 03 ດ້ານ ທີ່ກ່ຽວພັນຊຶ່ງກັນ ແລະ ກັນ ແບບກາຍອິນຊີ ຄື: ສ້າງເສດຖະກິດດິຈິຕອນ, ສ້າງສັງຄົມດິຈິຕອນ ແລະ ສ້າງການບໍລິຫານລັດແບບດິຈິຕອນ ໂດຍຕິດພັນກັບການພັດທະນາຊັບພະຍາກອນມະນຸດ ທີ່ມີຄຸນະພາບສູງ, ສ້າງໂຄງລ່າງພື້ນຖານ ICT ທີ່ທັນສະໄໝ,ປົກປັກຮັກສາສິ່ງແວດລ້ອມ ແລະ ຮັບປະກັນຄວາມປອດໄພດ້ານໄຊເບີຢ່າງໜັກແໜ້ນ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ເຂັ້ມແຂງຍືນຍົງ ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຈະສຸມໃສ່ 5 ວຽກບູລິມະສິດສຳຄັນ ເພື່ອຫັນເປັນທັນສະໄໝ ດ້ວຍເຕັກໂນໂລຊີດິຈິຕອນ ແລະ ໄດ້ກຳນົດຄາດໝາຍ ແລະ ຕົວຊີ້ບອກທີ່ສຳຄັນຈຳນວນຫນຶ່ງດັ່ງລຸ່ມນີ້:

➢ **ຄາດໝາຍ ແລະ ຕົວຊີ້ບອກ**

1. ພັດທະນາບຸກຄະລາກອນ ດິຈິຕອນ ໂດຍສ້າງສູນຝຶກອົບຮົມລັດດິຈິຕອນ 4 ແຫ່ງ (ສູນກາງ 1 ແຫ່ງ, ພາກເໜືອ 1 ແຫ່ງ, ພາກກາງ 1 ແຫ່ງ ແລະ ພາກໃຕ້ 1 ແຫ່ງ.
2. ຫັນການບໍລິຫານ ແລະ ການບໍລິການຂອງລັດດ້ວຍລະບົບອອນລາຍໃຫ້ໄດ້ 50% ທົ່ວປະເທດ ນຳໃຊ້ລະບົບຫ້ອງການທັນສະໄໝ, ລະບົບແບ່ງປັນເອກະສານ, ລະບົບກອງປະຊຸມທາງໄກ, ຈົດໝາຍເອເລັກໂຕຣນິກ, ລະບົບສື່ສານພາກລັດ, ຢັ້ງຢືນຕົວຕົນ, ລາຍເຊັນເອເລັກໂຕຣນິກ ແລະ ລະບົບລວມສູນບໍລິການພາກລັດ;
3. ພັດທະນາໂຄງລ່າງພື້ນຖານດິຈິຕອນ ໃຫ້ມີສັນຍານໂທລະສັບ ແລະ ອິນເຕີເນັດ ເຂົ້າເຖິງ 640 ຕາແສງທົ່ວປະເທດ. ສ້າງສູນຂໍ້ມູນແຫ່ງຊາດ ແລະ ໂຄງລ່າງພື້ນຖານລະບົບປັນຍາປະດິດ, ສ້າງລະບົບເຊື່ອມໂຍງຂໍ້ມູນ ເຊື່ອມຕໍ່ບັນດາກະຊວງ/ອົງການ/ແຂວງ/ນະຄອນຫຼວງ ທັງໝົດ ທົ່ວປະເທດ;
4. ຮັບປະກັນລວມສູນຄວາມປອດໄພດິຈິຕອນ ໃຫ້ມີສູນຄວາມປອດໄພ ເຊື່ອມຕໍ່ທຸກທະນາຄານ, ສະຖາບັນການເງິນ ແລະ ອົງການຈັດຕັ້ງລັດ ທົ່ວປະເທດ. ສ້າງສູນຕ້ານການຫຼອກລວງທາງອອນລາຍ;

5. ສ້າງລະບົບປັນຍາປະດິດລາວ ຮອງຮັບການນໍາໃຊ້ເຂົ້າໃນທຸກຂະແໜງການ ເພື່ອຊຸກຍູ້ສົ່ງເສີມທຸລະກິດສະຕາດອັບ, ທຸລະກິດນໍາໃຊ້ນະວັດຕະກໍາໃໝ່ ແລະ ພັດທະນາລະບົບນິເວດ ດີຈີຕອນ, ສ້າງເຂດພັດທະນາເຕັກໂນໂລຊີ ລະດັບສູງ ໃຫ້ໄດ້ 1 ແຫ່ງ ແລະ ສ້າງອຸທະຍານດີຈີຕອນ ໃຫ້ໄດ້ຕື່ມ 03 ແຫ່ງ (ພາກເໜືອ, ພາກກາງ ແລະ ພາກໃຕ້);

**1) ພັດທະນາບຸກຄະລາກອນ ດີຈີຕອນ.**

ການພັດທະນາຊັບພະຍາກອນມະນຸດດ້ານດີຈີຕອນແມ່ນ ຂະບວນການໃນການສົ່ງເສີມ ແລະ ພັດທະນາ ໃຫ້ບຸກຄະລາກອນ ມີຄວາມຮູ້, ຄວາມສາມາດ, ຄວາມເຂົ້າໃຈ, ມີທັກສະທາງດ້ານດີຈີຕອນ ແລະ ຈັນຍາບັນ ເພື່ອນໍາໃຊ້ເຂົ້າໃນການປະຕິບັດວຽກງານ, ນໍາໃຊ້ເຂົ້າໃນການດໍາລົງຊີວິດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ.ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາບຸກຄະລາກອນດີຈີຕອນທີ່ມີຄຸນນະພາບສູງ ແລະ ໃຫ້ພຽງພໍ ຕໍ່ຕະຫຼາດແຮງງານຂອງ ສປປ ລາວ ໃນປັດຈຸບັນ ແລະ ອະນາຄົດ ແລະ ເພື່ອຍົກລະດັບຄວາມຮູ້ ຄວາມສາມາດຂອງພະນັກງານ ແລະ ບຸກຄົນທົ່ວໄປໃນສັງຄົມ ໄປສູ່ທັກສະດີຈີຕອນລະດັບສູງ ເພື່ອຮອງຮັບ ການຫັນເປັນຈີຕອນ ຂອງ ສປປ ລາວ.

➢ **ວຽກງານຈຸດສຸມ:**

- ສຸມໃສ່ປັບປຸງໂຄງລ່າງພື້ນຖານສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໃຫ້ທັນສະໄໝຮອງຮັບການຮຽນການສອນ ໄອຊີທີ/ດີຈີຕອນ ທີ່ກ້າວໜ້າ.
- ນໍາເອົາຫຼັກສູດ ໄອຊີທີ ແລະ ເຕັກໂນໂລຊີດີຈີຕອນ ເຂົ້າໃນການຮຽນການສອນ ໃນຫຼັກສູດການສຶກສາຂັ້ນພື້ນຖານເປັນຕົ້ນໄປ.
- ສ້າງພະນັກງານໃຫ້ມີທັກສະໃນການນໍາໃຊ້ ດີຈີຕອນ ເຂົ້າໃນການບໍລິຫານວຽກງານ ແລະ ບໍລິການປະຊາຊົນ.
- ສ້າງນັກສຶກສາດ້ານໂທລະຄົມ/ໄອຊີທີ ທີ່ມີຄຸນນະພາບອອກໄປຮັບໃຊ້ສັງຄົມ ແລະ ໃຫ້ສາມາດເປັນຜູ້ປະກອບການໃນທຸລະກິດລິເລີ່ມ (Start up).
- ສົ່ງເສີມ ແລະ ພັດທະນາຄູສອນສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໃຫ້ມີຄວາມເຂັ້ມແຂງສາມາດຖ່າຍທອດຫຼັກວິຊາການທາງດ້ານເຕັກນິກ ອັນສະເພາະຂອງຂະແໜງ ໄອຊີທີ.

➢ ***ແຜນງານ ສະໜັບສະໜູນ:***

1) ແຜນງານ:ຍົກລະດັບບຸກຄະລາກອນ ແລະ ຝຶກອົບຮົມ-ກໍ່ສ້າງລັດຖະກອນທົ່ວຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ;
2) ແຜນງານ: ສົ່ງເສີມການບົ່ມເພາະບຸກຄະລາກອນ ແລະ ນັກສຶກສາໃນຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ໃຫ້ມີທັກສະແນວຄິດລິເລີ່ມ (Startup) ເປັນສູນກາງໃນການພັດທະນາ ແລະ ສ້າງຄວາມເປັນເລີດໃນດ້ານໄອຊີທີ;
3) ແຜນງານ: ສົ່ງເສີມໃຫ້ປະຊາຊົນສາມາດນໍາໃຊ້ ໄອຊີທີ ແລະ ອິນເຕີເນັດຄວາມໄວສູງຢ່າງແຜ່ຫຼາຍໃນທົ່ວສັງຄົມ.

**3.4.3 ໂຄງການສະໜັບສະໜູນແຜນງານບູລິມະສິດ:**

1. ໂຄງການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ໄປສູ່ 287 ຫມູ່ບ້ານ ໃນຂອບເຂດທົ່ວປະເທດ.
2. ໂຄງການຮ່ວມມືພັດທະນາ ແລະ ໃຫ້ບໍລິການລະບົບບໍລິຫານລວມສູນການເຊື່ອມຕໍ່ ແລະ ການຄຸ້ມຄອງອິນເຕີເນັດ ແຫ່ງຊາດ.
3. ໂຄງການຮ່ວມມືພັດທະນາລະບົບຄຸ້ມຄອງເລກໝາຍໂທລະສັບມືຖື.
4. ໂຄງການປັບປຸງ ແລະ ຂະຫຍາຍ ສະຖານີຄຸ້ມຄອງ ກວດກາ ຄົ້ນຄວາມຖີ່ວິທະຍຸສື່ສານ ທົ່ວປະເທດ.
5. ໂຄງການ ຄຸ້ມຄອງ ຄວາມປອດໄພຂໍ້ມູນຂ່າວສານຜ່ານອິນເຕີເນັດ, ຕ້ານການຫລອກລວງທາງອອນລາຍ, ປ້ອງກັນຄວາມປອດໄພທາງໄຊເບີ.
6. ໂຄງການພັດທະນາ ປັບປຸງ ນະໂຍບາຍເພື່ອຄຸ້ມຄອງ ແລະ ສົ່ງເສີມ ການພັດທະນາ ແລະ ການບໍລິການ ດ້ານດີຈີຕອນ.

7. ໂຄງການພັດທະນາທັກສະດິຈິຕອນທົ່ວປະເທດ,
8. ໂຄງການພັດທະນາລະບົບໂຄງລ່າງ ແລະ ການເຊື່ອມໂຍງແລກປ່ຽນຂໍ້ມູນພາກລັດ (G-Net, GDX, Dashboard).
9. ໂຄງການພັດທະນາລະບົບບໍລິຫານຫ້ອງການພາກລັດແບບດິຈິຕອນ (Digital Government Office).
10. ໂຄງການພັດທະນາປັນຍາປະດິດ ຂອງ ສປປ ລາວ (Lao AI).
1. ໂຄງການປັບປຸງ ແລະ ຂະຫຍາຍລະບົບກອງປະຊຸມທາງໄກ.
11. ໂຄງການປັບປຸງ ແລະ ຂະຫຍາຍລະບົບສື່ສານພາກລັດ G-Chat.
12. ໂຄງການພັດທະນາລະບົບສູນຂໍ້ມູນພາກລັດ G-Cloud ໃຫ້ສາມາດຮອງຮັບລະບົບບໍລິຫານແບບທັນສະໄໝ ຂອງບັນດາອົງການລັດທົ່ວໄປ;
13. ໂຄງການພັດທະນາລະບົບເຊື່ອມໂຍງຂໍ້ມູນພາກລັດ (Government Data Exchange) ເພື່ອແລກປ່ຽນ ແລະ ລວມສູນຂໍ້ມູນພາກລັດ;
14. ໂຄງການພັດທະນາ ແລະ ຊຸກຍູ້ການນຳໃຊ້ ລະບົບຢັ້ງຢືນເອກະສານອອນລາຍ (e-Vertification);
15. ໂຄງການປັບປຸງ ແລະ ຂະຫຍາຍລະບົບອີເມວ (Email) ຂອງພາກລັດ;
16. ໂຄງການປັບປຸງ ແລະ ຂະຫຍາຍລະບົບຫ້ອງການທັນສະໄໝ (E-office);
17. ໂຄງການປັບປຸງ ແລະ ຂະຫຍາຍລະບົບຈັດເກັບ ແລະ ນຳໃຊ້ເອກະສານຮ່ວມກັນຂອງພາກລັດ G-Share/G-Drive;
18. ໂຄງການພັດທະນາ ແລະ ຂະຫຍາຍລະບົບຕິດຕາມບໍລິການລັດ (G-HelpDesk);
19. ໂຄງການພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ອິນເຕີເນັດ ທົ່ວປະເທດ ຂອງບັນດາບໍລິສັດ ໂທລະຄົມມະນາຄົມ.
20. ໂຄງການພັດທະນາພື້ນໂຄງລ່າງສູນຂໍ້ມູນ ແລະ ລະບົບຄລາວ ແຫ່ງຊາດ.
21. ໂຄງການພັດທະນາພື້ນໂຄງລ່າງສູນຂໍ້ມູນປັນຍາປະດິດ.
22. ໂຄງການ ພັດທະນາໂຄງຂ່າຍຂໍ້ມູນຂ່າວສານຄວາມໄວສູງ ແລະ ເສັ້ນທາງສາຍໄຫມດິຈິຕອນ.
23. ໂຄງການສ້າງຕັ້ງສູນພັດທະນາບຸກຄະລາກອນລັດດ້ານດິຈິຕອນ.
24. ໂຄງການສ້າງສູນຝຶກອົບຮົມລັດຖະບານດິຈິຕອນໃນ ສປປລາວ.
25. ໂຄງການປັບປຸງລະບົບເຕັກນິກ ແລະ ຄວາມປອດໄພ ສຳລັບລະບົບຄຸ້ມຄອງລະຫັດຊື່ອິນເຕີເນັດ ສູງສຸດແຫ່ງຊາດ .LA ແລະ ລາວ.
26. ໂຄງການພັດທະນາໂຄງລ່າງພື້ນຖານກຸ່ມຂໍ້ມູນຜູກພັນແຫ່ງຊາດ (Lao National Blockchain).
27. ໂຄງການ ສ້າງສູນຄຸ້ມຄອງ ກວດກາ ແລະ ຕິດຕາມ ຄຸນະພາບການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ແຫ່ງຊາດ ຈຳນວນ 03 ສູນ (01 ສູນ ໃນແຕ່ລະພາກ).
28. ໂຄງການຄົ້ນຄ້ວາເລືອກເຟັ້ນມາດຕະຖານເຕັກນິກ ແລະ ຄວາມສາມາດໃຫ້ການບໍລິການປະເພດຕ່າງໆຂອງດາວທຽມຮຸ່ນໃໝ່ ທີ່ແທດເໝາະກັບຄວາມຕ້ອງການຂອງ ສປປ ລາວ ເພື່ອສັ່ງຜະລິດ ແລະ ກຳນົດເວລາການສົ່ງຂຶ້ນສູ່ຕຳແໜ່ງວົງໂຄຈອນ 128.5 ອົງສາຕາເວັນອອກສຽງໃຕ້ ປ່ຽນແທນດາວທຽມລາວດວງປັດຈຸບັນ.
29. ໂຄງການສ້າງສູນຂໍ້ມູນ ປັນຍາປະດິດ (AI) ນຳໃຊ້ພະລັງງານສະອາດ ຜ່ານໂຄງການສາທິດທີ່ໄດ້ຮ່ວມມື ແລະ ໃຫ້ທຶນຊ່ວຍເຫຼືອຂອງເອກະຊົນ.
30. ໂຄງການອອກແບບ ແລະ ສ້າງສູນຂໍ້ມູນແຫ່ງຊາດ ແລະ ສູນສຳຮອງ ໃຫ້ໄດ້ມາດຕະຖານ ແລະ ຄວາມປອດໄພ ຮອງຮັບວຽກງານ ພັດທະນາເສດຖະກິດດິຈິຕອນ ແລະ ການຫັນເປັນດິຈິຕອນ ແຫ່ງຊາດ;
31. ໂຄງການປັບປຸງ ແລະ ຊຸກຍູ້ການນຳໃຊ້ ລະບົບຢັ້ງຢືນລາຍເຊັນດິຈິຕອນ ເຂົ້າໃນລະບົບບໍລິຫານດິຈິຕອນ;
32. ໂຄງການພັດທະນາລະບົບຕິດຕາມ, ເຝົ້າລະວັງຄວາມປອດໄພໃຫ້ແກ່ລະບົບຫ້ອງການທັນສະໄຫມຂອງພາກລັດ (Cybersecurity for E-Government);

33. ໂຄງການພັດທະນາ ແລະ ປະຍຸກໃຊ້ ເຕັກໂນໂລຊີ ປັນຍາປະດິດ AI ເຂົ້າໃນລະບົບບໍລິຫານລັດດີຈິຕອນ;
34. ໂຄງການເຊື່ອມຕໍ່ສູນຂໍ້ມູນ ພາກລັດກັບ ສູນຂໍ້ມູນແຫ່ງຊາດ;
35. ໂຄງການພັດທະນາລະບົບວິເຄາະຂໍ້ມູນ, ການນໍາໃຊ້ປັນຍາປະດິດ ເພື່ອໝູນໃຊ້ປະໂຫຍດຈາກ ລະບົບຖານຂໍ້ມູນແຫ່ງຊາດ ໃຫ້ເກີດຜົນປະໂຫຍດ;
36. ໂຄງການຄົ້ນຄ້ວາສຶກສາ ບັນດາມາດຕະຖານດ້ານຄວາມປອດໄພ ເພື່ອໝູນໃຊ້ເຂົ້າໃນການປ້ອງກັນລະບົບຂໍ້ມູນ, ລະບົບໂຄງລ່າງພື້ນຖານ ແລະ ລະບົບເຕັກນິກ ຂອງສູນຂໍ້ມູນ.
37. ໂຄງການສຶກສາຄວາມເປັນໄປໄດ້ໃນການສ້າງຈຸດປະສານງານຄວາມປອດໄພທາງໄຊເບີ (CSIRT) ກັບພາກລັດ, ເອກະຊົນ, ສູນກາງ ແລະ ທ້ອງຖິ່ນ;
38. ໂຄງການສ້າງລະບົບຕິດຕາມ ແລະ ຄຸ້ມຄອງມາດຕະຖານຮັກສາຄວາມປອດໄພຂໍ້ມູນຂ່າວສານ ຂອງ ສປປ ລາວ (Evaluation and Hardening of hardware and Software in Laos;
39. ໂຄງການ Cyber Security Professional Certification Framework;
40. ໂຄງການພັດທະນາ ໂປຣແກຣມປ້ອງກັນໄວຣັສ;
41. ໂຄງການສົ່ງເສີມການພັດທະນາລະບົບສະໜັບສະໜູນການຄ້າ ແລະ ທຸລະກໍາອອນລາຍ (Digital Commerce) ເພື່ອສະໜັບສະໜູນໃຫ້ SMEs;
42. ໂຄງການສ້າງຄວາມເຂັ້ມແຂງການນໍາໃຊ້ເຕັກໂນໂລຊີດີຈິຕອນຜ່ານສື່ສັງຄົມອອນລາຍໃຫ້ມີຄວາມປອດໄພຕໍ່ແມ່ຍິງ ແລະ ເດັກ ໃນຂອບເຂດທົ່ວປະເທດ.
43. ໂຄງການສ້າງບຸກຄະລາກອນ ດ້ານການຄຸ້ມຄອງ ແລະ ໃຫ້ບໍລິການ ສູນຂໍ້ມູນແຫ່ງຊາດ.
44. ໂຄງການ ຝຶກອົບຮົມການນໍາໃຊ້ໂປຣແກມການຄຸ້ມຄອງວຽກງານກວດກາການຫັນເປັນດິຈິຕ໋ອນຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ

**2) ພັດທະນາບໍລິຫານລັດດີຈິຕອນ;**

ຊຸກຍູ້ ແລະ ສົ່ງເສີມການນໍາໃຊ້ເຕັກໂນໂລຊີ ດີຈິຕອນ ເຂົ້າໃນທຸກຂະແໜງການ ແຕ່ສູນກາງລົງຮອດທ້ອງຖິ່ນ ເພື່ອເຊື່ອມໂຍງລະຫວ່າງ ພາກລັດ, ພາກທຸລະກິດ ແລະ ປະຊາຊົນ ຢ່າງໂລ່ງລຽນ ແນ່ໃສ່ຕອບສະໜອງການບໍລິຫານ ແລະ ບໍລິການລັດ ຜ່ານເຄື່ອງມືດີຈິຕອນ ຢ່າງໂປ່ງໃສ, ວອງໄວ, ເຊື່ອຖືໄດ້ ແລະ ເປັນກໍາລັງຂັບເຄື່ອນເສດຖະກິດ-ສັງຄົມ ຫັນເປັນອຸດສາຫະກໍາທັນສະໄໝ ເທື່ອລະກ້າວ ຢ່າງມີຈຸດສຸມ .

- **ວຽກງານຈຸດສຸມ:**
- ຫັນທຸກບໍລິການພື້ນຖານທີ່ຈໍາເປັນຂອງພາກລັດ ເປັນການບໍລິການຜ່ານອອນລາຍ ເພື່ອຍົກລະດັບດັດສະນີຕົວຊີ້ວັດດ້ານການບໍລິຫານລັດດີຈິຕອນ ແລະ ດ້ານການພັດທະນາ ໄອຊີທີ ໃຫ້ດີຂຶ້ນ.
- ສຸມໃສ່ພັດທະນາ ແລະ ຂະຫຍາຍບັນດາໂປຣແກຣມການຫັນການບໍລິຫານ ແລະ ບໍລິການຂອງລັດໃຫ້ເປັນດີຈິຕອນ ແລະ ທັນສະໄໝ (e-Service) ແນ່ໃສ່ການບໍລິການແກ່ລັດຖະບານ (G2G), ພາກທຸລະກິດ (G2B) ແລະ ປະຊາຊົນ (G2C) ເຊັ່ນ: ລະບົບ e-Office, Email, Video Conference, e-Portal, G-Web, G-Share, G-Chat, G-Drive, e-Learning, e-Health, e-Disaster, e-Agriculture, Smart City ແລະ ອື່ນໆ.
- ສ້າງລະບົບປ້ອງກັນ ໄອຊີທີ/ດີຈິຕອນ ໃຫ້ມີຄວາມປອດໄພສູງເພື່ອຮັບປະກັນ ແລະ ສະກັດກັ້ນການທໍາລາຍເຄືອຂ່າຍເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ, ປົກປ້ອງຂໍ້ມູນສ່ວນບຸກຄົນ, ສະກັດກັ້ນການໂຈລະກໍາຂໍ້ມູນຂ່າວສານທຸກຮູບແບບ ແລະ ສະກັດກັ້ນຂໍ້ມູນທີ່ເປັນໄພ.

- **ແຜນງານ ສະໜັບສະໜູນ:**

1. ແຜນງານ: ຂະຫຍາຍການນໍາໃຊ້ລະບົບອີເມວ (Email) ແລະ ລະບົບກອງປະຊຸມທາງໄກ (Video conference) ຂອງລັດຖະບານ ໃຫ້ແກ່ອົງການຈັດຕັ້ງລັດຂັ້ນສູນກາງ ແລະ ທ້ອງຖິ່ນ.

2. ແຜນງານ: ປັບປຸງ ແລະ ຂະຫຍາຍລະບົບເຄືອຂ່າຍ ເຊື່ອມໂຍງບັນດາອົງການຈັດຕັ້ງພັກ-ລັດ ເຂົ້າຫາລະບົບບໍລິຫານ ແລະ ບໍລິການລັດ ດິຈິຕອນ ໃຫ້ສາມາດເຊື່ອມໂຍງ ກັນໄດ້ຢ່າງສະດວກ, ວ່ອງໄວ ແລະ ປອດໄພ ທັງສູນກາງ ແລະ ທ້ອງຖິ່ນ;
3. ແຜນງານ: ສ້າງ ແລະ ຂະຫຍາຍ ລະບົບເຊື່ອມໂຍງຂໍ້ມູນພາກລັດ (Government Data Exchange) ເພື່ອແລກປ່ຽນ ແລະ ລວມສູນຂໍ້ມູນພາກລັດ. ພ້ອມທັງພັດທະນາລະບົບແລກປ່ຽນ ແລະ ຢັ້ງຢືນຂໍ້ມູນພາກລັດ (Information Sharing System, Lao KYC), ແລະ ລະບົບ Dashboard ເພື່ອບໍລິຫານຂໍ້ມູນສະຖິຕິພາກລັດ ໃຫ້ເປັນເອກະພາບ;
4. ແຜນງານ: ສ້າງລະບົບຂໍ້ມູນເປີດ (Open Government Data) ເພື່ອໃຫ້ທຸກພາກສ່ວນ ສາມາດນໍາໃຊ້ໃນການພັດທະນາບໍລິການໃຫ້ປະຊາຊົນ;
5. ແຜນງານ: ພັດທະນາ, ປັບປຸງ ແລະ ຂະຫຍາຍການນໍາໃຊ້ ບັນດາໂປຣແກຣມການຫັນການບໍລິຫານ ແລະບໍລິການຂອງພາກລັດໃຫ້ເປັນດິຈິຕອນ ແລະ ທັນສະໄໝ ແນ່ໃສ່ການບໍລິການແກ່ລັດຖະບານ (G2G), ພາກທຸລະກິດ (G2B) ແລະ ປະຊາຊົນ (G2C);

**3) ພັດທະນາໂຄງລ່າງພື້ນຖານດິຈິຕອນ;**

ການພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ດິຈິຕອນ ໄດ້ຮັບການສ້າງ ແລະ ພັດທະນາ ໃຫ້ ໄດ້ຕາມມາດຕະຖານສາກົນ ຮັບປະກັນຄວາມຍືນຍົງ ແລະ ມີຄວາມປອດໄພ,ສະດວກວ່ອງໄວ, ມີເຄື່ອງມືຄຸ້ມຄອງທີ່ທັນສະໄໝ ແລະ ສະໜອງບໍລິການໃນທຸກເມືອງ ແລະ ຕາແສງທົ່ວປະເທດ ເພື່ອຮອງຮັບການຫັນເປັນດິຈິຕອນ (Digital Transformation), ຂອງ ສປປ ລາວ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

➢ **ວຽກງານຈຸດສຸມ:**

– ສ້າງໂຄງລ່າງພື້ນຖານໂຄງຂ່າຍຄວາມໄວສູງ ເພື່ອເຊື່ອມຕໍ່ລະຫວ່າງສູນອິນເຕີເນັດແຫ່ງຊາດທີ່ພາກເໜືອ, ພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ, ເຊື່ອມຕໍ່ລະຫວ່າງ ສປ ຈີນ ແລະ ບັນດາປະເທດສະມາຊິກອາຊຽນ ເພື່ອຕອບສະໜອງ ຂໍ້ລິເລີ່ມ ໜຶ່ງແລວ ໜຶ່ງເສັ້ນທາງ;
– ປັບປຸງ ແລະ ຂະຫຍາຍ ໂຄງລ່າງພື້ນຖານ ລະບົບສາຍແກ້ວໄຍນໍາແສງ ແລະ ລະບົບສື່ສານອິນເຕີເນັດຄວາມໄວສູງແບບມີສາຍ (FTTx) ແລະ ບໍ່ມີສາຍ ໄປສູ່ບັນດາໝູ່ບ້ານຕິດພັນກັບວຽກງານສາມສ້າງ;
– ສືບຕໍ່ ສ້າງແຜນຍຸດທະສາດການພັດທະນາໂຄງລ່າງພື້ນຖານ ດິຈິຕອນ ແຫ່ງຊາດ;
– ຄົ້ນຄວ້າ, ຊຸກຍູ້ການນໍາໃຊ້ໂຄງລ່າງພື້ນຖານດິຈິຕອນ ຮ່ວມກັນຢ່າງມີປະສິດທິພາບ ເປັນຕົ້ນການນໍາໃຊ້ສາຍສິ່ງ, ເສົາສົ່ງສັນຍານໂທລະຄົມມະນາຄົມ ສ້າງໃຫ້ມີບໍລິສັດຜູ້ສະໜອງໂຄງລ່າງພື້ນຖານ ດ້ານໂທລະຄົມມະນາ ຄົມ;
– ການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໄປສູ່ເຂດສາມສ້າງ, ເຂດຫ່າງໄກສອກຫຼີກ ແລະ ເຂດຈຸດສຸມຂອງລັດຖະບານ ນໍາໃຊ້ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ເພື່ອໃຫ້ປະຊາຊົນໃນເຂດດັ່ງກ່າວ ສາມາດເຂົ້າເຖິງການຊົມໃຊ້ ໂທລະຄົມມະນາຄົມ ແລະ ອິນເຕີເນັດໄດ້;
– ພັດທະນາ ແລະ ຂະຫຍາຍສູນອິນເຕີເນັດແຫ່ງຊາດ ໃຫ້ຮັບປະກັນດ້ານໂຄງລ່າງພື້ນຖານ, ລະບົບເຕັກນິກ ແລະລະບົບຄວາມປອດໄພ ເພື່ອເປັນບ່ອນຕິດຕັ້ງລະບົບຂອງ ສອຊ ເຊັ່ນ: ລະບົບສູນກາງອິນເຕີເນັດ ພາຍໃນ ແລະຕ່າງປະເທດ, ລະບົບສູນກາງໂທລະສັບ-ຂໍ້ຄວາມສັ້ນ ພາຍໃນ ແລະ ຕ່າງປະເທດ, ລະບົບລະຫັດຊື່ອິນເຕີເນັດສູງສຸດແຫ່ງຊາດ (.La, .ລາວ), ລະບົບອອກໃບຮັບຮອງລາຍເຊັນເອເລັກໂຕຣນິກ (CA);
– ກໍານົດແຜນຍຸດຕິການໃຫ້ບໍລິການລະບົບໂທລະສັບມືຖື 2G ກ່ອນປີ 2030;

➢ ***ແຜນງານສະໜັບສະໜູນ:***

1. ແຜນງານ: ສ້າງໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ດິຈິຕອນ ມີຄວາມໄວສູງ, ໄດ້ມາດຖານສາກົນ ແລະມີເຄື່ອງມືຄຸ້ມຄອງທີ່ທັນສະໄໝ ເພື່ອໃຫ້ມີຄວາມປອດໄພ, ສາມາດໃຫ້ບໍລິການທຸກແຂວງ, ທຸກເມືອງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນໃນຍຸກດິຈິຕອນ;

2. ແຜນງານ: ກຳນົດແຜນການຂະຫຍາຍລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ເຄືອຂ່າຍລະບົບໂທລະສັບມືຖື ແລະ ອິນເຕີເນັດ ໃຫ້ຄວບຄຸມພື້ນທີ່ຂອງຈຳນວນຕາແສງ ໃນຂອບເຂດທົ່ວປະເທດ, ພ້ອມທັງ ໃຫ້ຄວບຄຸມເຂດເທດສະບານເມືອງ, ເຂດເສດຖະກິດພິເສດ, ເຂດນິຄົມອຸດສະຫະກຳ, ແຫຼ່ງທ່ອງທ່ຽວທັນສະໄໝ ແລະ ຕົວເມືອງອັດສະລິຍະ ພ້ອມທັງສ້າງໂຄງລ່າງພື້ນຖານໃຫ້ຮອງຮັບເຕັກໂນໂລຊີໃໝ່;
3. ແຜນງານ: ການຄຸ້ມຄອງເລກໝາຍໂທລະຄົມມະນາຄົມ ເພື່ອຮັບປະກັນ ການນຳໃຊ້ໃຫ້ເກີດປະໂຫຍດສູງສຸດ, ຄວາມສະຫງົບ ແລະ ປອດໄພໃນສັງຄົມ;
4. ແຜນງານ: ການຕິດຕາມກວດກາຄຸນນະພາບການບໍລິການເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດໃນຂອບເຂດທົ່ວປະເທດ ໃຫ້ຮັບປະກັນໄດ້ມາດຕະຖານ ແລະ ຄຸນນະພາບສູງເພື່ອຮອງຮັບການເຊື່ອມໂຍງໃນຍຸກເສດຖະກິດດີຈິຕອນ;
5. ແຜນງານປະຕິບັດບັນດາກິດຈະກຳໂຄງການຊ່ວຍເຫຼືອຂອງ ສປປ. ຈີນ ເພື່ອພັດທະນາໂຄງລ່າງພື້ນຖານຮອງຮັບການຫັນເປັນດີຈິຕອນ ໂດຍການປັບປຸງໂຄງລ່າງພື້ນຖານສູນຂໍ້ມູນແຫ່ງຊາດ ສູນຫຼັກ ແລະ ສູນສຳຮອງ;
6. ແຜນງານ: ສ້າງໂຄງລ່າງພື້ນຖານໂຄງຂ່າຍຄວາມໄວສູງ ເພື່ອເຊື່ອມຕໍ່ລະຫວ່າງສູນອິນເຕີເນັດແຫ່ງຊາດ ທີ່ພາກເໜືອ, ພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ, ເຊື່ອມຕໍ່ລະຫວ່າງ ສປ ຈີນ ແລະ ບັນດາປະເທດສະມາຊິກອາຊຽນ ເພື່ອຕອບສະໜອງ ຂໍ້ລິເລີ່ມ ໜຶ່ງແລວ ໜຶ່ງເສັ້ນທາງ;

**4) ພັດທະນາລະບົບຄວາມປອດໄພດີຈິຕອນ;**

ໃນຍຸກສະໄໝທີ່ເຕັກໂນໂລຊີ ເຂົ້າມາມີບົດບາດສຳຄັນໃນການດຳລົງຊີວິດຂອງພວກເຮົາ ຄວາມປອດໄພໄຊເບີ ໄດ້ກາຍເປັນສິ່ງທ້າທາຍທີ່ສຳຄັນຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ. ການປົກປ້ອງຂໍ້ມູນລະບົບ ແລະ ເຄືອຂ່າຍດີຈິຕອນ . ການນຳໃຊ້ດີຈິຕອນ ມີການນຳໃຊ້ຢ່າງຫຼວງຫຼາຍ ແລະ ການເຊື່ອມຈອດເຖິງກັນໃນທົ່ວໂລກ ໄພຄຸກຄາມດ້ານຄວາມປອດໄພທາງໄຊເບີ ກໍ່ໃຫ້ເກີດຄວາມທ້າທາຍທີ່ສຳຄັນຕໍ່ບຸກຄົນ,ອົງການ ແລະ ປະເທດຊາດໃນບັນດາໄພຄຸກຄາມ ເປັນຕົ້ນຄື: ມັນແວ, ການໂຈມຕີແບບຟິດຊິ່ງ, ການໂຈມຕີແບບປະຕິເສດການໃຫ້ບໍລິການ (DoS) ແລະ ການໂຈມຕີແບບປະຕິເສດການໃຫ້ບໍລິການແບບກະຈາຍ (DDoS), ການໂຈມຕີແບບດັກຈັບການສື່ສານ (MITM) ແລະ ໄພຄຸກຄາມຂັ້ນແບບຂັ້ນສູງ (APT) ເປັນທີ່ແຜ່ຫຼາຍ ແລະ ເປັນອັນຕະລາຍຢ່າງຫຼວງຫຼາຍ. ດັ່ງນັ້ນການຮັກສາຄວາມປອດໄພທາງໄຊເບີໄດ້ກາຍເປັນສິ່ງສຳຄັນຢ່າງຍິ່ງ ໃນການປ້ອງກັນລະບົບເຄືອຂ່າຍ,ຂໍ້ມູນຂ່າວສານ ແລະ ລະບົບຕ່າງໆ ຈາກການເຂົ້າເຖິງ, ການນຳໃຊ້, ການເປີດເຜີຍ, ການລົບກວນ, ການປ່ຽນແປງ ຫຼື ການທຳ ທີ່ບໍ່ໄດ້ຮັບອະນຸຍາດ.

➢ **ວຽກງານຈຸດສຸມ:**

- ພັດທະນາສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ (ລາວເຊີດ) ໃຫ້ທຽບເທົ່າກັບສູນເຊີດ ຂອງບັນດາປະເທດໃນພາກພື້ນ ແລະ ສາກົນ;
- ສ້າງໂຄງລ່າງພື້ນຖານດີຈິຕອນ ໃຫ້ມີຄວາມປອດໄພ;
- ຄົ້ນຄວ້າສ້າງມາດຕະຖານຮັກສາຄວາມປອດໄພຂໍ້ມູນຂ່າວສານພາຍໃນອົງກອນໂດຍມີການກຳນົດໜ້າທີ່ຕ່າງໆຢ່າງຊັດເຈນ, ມີການສັງລວມຂໍ້ມູນເປັນລະບຽບ ເພື່ອສະດວກໃນການລາຍງານ;
- ຊຸກຍູ້ສົ່ງເສີມໃຫ້ບັນດາອົງກອນຈັດຕັ້ງປະຕິບັດຕາມມາດຕະຖານຄວາມປອດໄພຂໍ້ມູນຂ່າວສານ ຂອງ ສປປ ລາວ ແລະ ປະຕິບັດຕາມມາດຕະຖານຄວາມປອດໄພຂໍ້ມູນຂ່າວສານ ຈາກອົງການມາດຕະຖານສາກົນ, ເປັນຕົ້ນແມ່ນ ISO 27001/ISMS;
- ຊຸກຍູ້ໃຫ້ຂະແໜງການທີ່ນຳໃຊ້ເຕັກໂນໂລຊີດີຈິຕອນໃນການຂັບເຄື່ອນວຽກງານຂອງຕົນໃຫ້ມີໜ່ວຍງານເພື່ອຮັບຜິດຊອບວຽກງານຕອບໂຕ້ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ;
- ສ້າງກົນໄກແລກປ່ຽນຂໍ້ມູນຂ່າວສານ, ຄວາມເຂົ້າໃຈ ກ່ຽວກັບໄພຄຸກຄາມທາງໄຊເບີພາຍໃນປະເທດ ພ້ອມທັງຂັ້ນຕອນການຮັບມື, ການແກ້ໄຂບັນຫາ, ການລາຍງານເຫດການຕ່າງໆ ຢ່າງເປັນລະບົບ;

– ສ້າງສູນປະຕິບັດການຄວາມປອດໄພໄຊເບີແຫ່ງຊາດ (Security Operation Center (SOC) ແລະ ຊຸກຍູ້ ສົ່ງເສີມໃຫ້ມີໜ່ວຍງານຮັບຜິດຊອບ ວຽກງານຄວາມປອດໄພໄຊເບີເປັນອັນສະເພາະຂອງບັນດາຂະແໜງການ ທີ່ ນໍາໃຊ້ເຕັກໂນໂລຊີດິຈິຕອນ;
– ພັດທະນາທັກສະ, ເຕັກນິກວິຊາການສະເພາະດ້ານ ໃຫ້ສາມາດຄຸ້ມຄອງ ສູນປະຕິບັດການຄວາມປອດໄພແຫ່ງ ຊາດທາງໄຊເບີ ເພື່ອເຝົ້າລະວັງໄພຄຸກຄາມທາງໄຊເບີ ໃຫ້ບັນດາຂະແໜງທີ່ເປັນໂຄງປະກອບຂອງເສດຖະກິດ ແຫ່ງຊາດ ເປັນຕົ້ນແມ່ນ: ຂະແໜງການເຕັກໂນໂລຊີ ແລະ ການສື່ສານ, ຂະແໜງການພະລັງງານ, ຂະແໜງ ການ ກະສິກໍາ, ຂະແໜງການອຸດສາຫະກໍາ, ຂະແໜງການບໍລິການ, ສາທາລະນະສຸກ, ຄົມມະນາຄົມ-ຂົນສົ່ງ, ຂະແໜ ງການເງິນ ແລະ ຂະແໜງການອື່ນໆ ທີ່ນໍາໃຊ້ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເຂົ້າໃນການຄຸ້ມຄອງວຽກ ງານຂອງຕົນ ທັງພາກລັດ ແລະ ເອກະຊົນ;
– ໂຄສະນາເຜີຍແຜ່ນິຕິກໍາ ພ້ອມຄວາມຮູ້ກ່ຽວກັບວຽກງານ ຄວາມປອດໄພໄຊເບີ ສູ່ສັງຄົມ ແລະ ສ້າງກິດຈະກໍາ ຕ່າງໆ ກ່ຽວກັບວຽກງານຄວາມປອດໄພໄຊເບີ ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດ ທົ່ວປະເທດ.

➢ ***ແຜນງານ ສະໜັບສະໜູນ:***

1. ແຜນງານ: ພັດທະນາສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ (ລາວເຊີດ) ໃຫ້ທຽບເທົ່າກັບສູນ ເຊີດ ຂອງບັນດາປະເທດໃນພາກພື້ນ ແລະ ສາກົນ;
2. ແຜນງານ: ສ້າງໂຄງລ່າງພື້ນຖານດິຈິຕອນ ໃຫ້ມີຄວາມປອດໄພ;
3. ແຜນງານ:ຄົ້ນຄວ້າພາລະບົດບາດ ແລະ ອອກໃບຮັບຮອງ ມາດຕະຖານຮັກສາຄວາມປອດໄພຂໍ້ມູນຂ່າວສານ ພາຍໃນ ອົງກອນ;
4. ແຜນງານ: ສ້າງກົນໄກແລກປ່ຽນຂໍ້ມູນຂ່າວສານ, ຄວາມເຂົ້າໃຈກ່ຽວກັບໄພຄຸກຄາມທາງໄຊເບີພາຍໃນປະເທດ ພ້ອມທັງຂັ້ນຕອນການຮັບມື, ການແກ້ໄຂບັນຫາ, ການລາຍງານເຫດການຕ່າງໆ ຢ່າງເປັນລະບົບ;

5) **ຊຸກຍູ້ສົ່ງເສີມທຸລະກິດສະຕາດອັບ (Startup), ທຸລະກິດນໍາໃຊ້ນະວັດຕະກໍາໃໝ່ ແລະ ພັດທະນາລະບົບນິເວດດິ ຈິຕອນ (Ecosystem)**;

ສົ່ງເສີມ ແລະ ສະໜັບສະໜູນໃຫ້ເກີດການປະຫຍຸກນໍາໃຊ້ເຕັກໂນໂນໂລຊີ ແລະ ນະວັດຕະກໍາດິຈິຕອນ ໃນການ ສ້າງເງື່ອນໄຂ ແລະ ສິ່ງອໍານວຍຄວາມສະດວກໃນການກະຕຸ້ນໃຫ້ເກີດໜໍ່ແໜງວິສາຫະກິດໃໝ່ (Startup) ໃຫ້ມີສ່ວນ ຮ່ວມສໍາຄັນໃນການພັດທະນາ ແລະ ນໍາໃຊ້ລະບົບນິເວດ ດິຈິຕອນ ທົ່ວຂະແໜງການ. ການປັບປ່ຽນບົນພື້ນຖານຂອງ ເສດຖະກິດດິຈິຕອນ (Digital SMEs) ເປັນການຊ່ວຍໃຫ້ SMEs ສາມາດປ່ຽນແປງການດໍາເນີນທຸລະກິດແບບດັ່ງເດີມ ໄປສູ່ການດໍາເນີນທຸລະກິດແບບດິຈິຕອນ ໂດຍອາໄສການປະຍຸກເຕັກໂນໂລຊີດິຈິຕອນ, ການສ້າງຄວາມເຂັ້ມແຂງພາຍໃນ ປະເທດ ແລະ ເຊື່ອມໂຍງຕະຫຼາດພາຍໃນປະເທດກັບຕະຫຼາດຕ່າງປະເທດໄດ້ຢ່າງມີປະສິດຕິພາບ ດ້ວຍການສົ່ງເສີມສະ ໜັບສະໜູນ ໃຫ້ເກີດການປະຍຸກນໍາໃຊ້ເຕັກໂນໂລຊີດິຈິຕອນ ໃນທຸກຂະບວນການຂອງທຸລະກິດ ບົນພື້ນຖານຂອງການ ປ່ຽນແປງຮູບແບບ ແລະ ຂະບວນການດໍາເນີນງານ ຂອງທຸລະກິດ SMEs ຕະຫຼອດເຖິງ ICT ເພື່ອໃຫ້ SMEs ສາມາດນໍາ ໃຊ້ນະວັດຕະກໍາ ແລະ ມີຄວາມຊ່ຽວຊານໃນການນໍາໃຊ້ເຕັກໂນໂລຊີເພີ່ມຂຶ້ນ ເພື່ອເພີ່ມປະສິດຕິພາບ.

➢ **ວຽກງານຈຸດສຸມ:**

– ຍົກລະດັບຄວາມສາມາດແຂ່ງຂັນ ໂດຍການປັບປຸງໂຄງລ່າງພື້ນຖານໂທລະຄົມມະນາຄົມ, ອິນເຕີເນັດທີ່ມີຄຸນ ນະພາບ ແລະ ອັດຕາຄ່າບໍລິການທີ່ບໍ່ສູງ, ສ້າງນະໂຍບາຍ, ຍຸດທະສາດໃນການພັດທະນາ ແລະ ສົ່ງເສີມຜູ້ ປະກອບການໃໝ່ໃຫ້ມີຄວາມເຂັ້ມແຂງ, ຍືນຍົງ ແລະ ສາມາດແຂ່ງຂັນໄດ້ໃນລະດັບພາກພື້ນ ແລະ ສາກົນ.
– ສົ່ງເສີມການພັດທະນາລະບົບສະໜັບສະໜູນການຄ້າອອນລາຍ ສໍາລັບ SMEs ເຊັ່ນ: Digital Payment/ Micro Payment, Data Pool, e-Trade, e-Invoice, Cybersecurity.

- ສົ່ງເສີມການພັດທະນາ SMEs ໃນດ້ານການຄ້າດິຈິຕອນ (ທັງການຄ້າ ແລະ ການຕະຫຼາດ) ຜ່ານການຄ້າ ດິຈິຕອນ ແລະ ສັງຄົມອອນລາຍທັງຕະຫຼາດພາຍໃນ ແລະ ຂະຫຍາຍໄປສູ່ຕະຫຼາດສາກົນ.
- ຊຸກຍູ້ການຫັນ SMEs ໄປສູ່ການນຳໃຊ້ເຕັກໂນໂລຊີດິຈິຕອນ ໃນການເພີ່ມປະສິດທິພາບ, ຂະບວນການທາງທຸລະກິດ ແລະ ພັດທະນານະວັດຕະກຳສິນຄ້າ ແລະ ການບໍລິການທັງພາຍໃນ ແລະ ຂະຫຍາຍໄປສູ່ຕະຫຼາດສາກົນ.
- ກະຕຸ້ນ SMEs ໃຫ້ໃຊ້ເຕັກໂນໂລຊີດິຈິຕອນດ້ວຍການປະສານງານ ແລະ ຊຸກຍູ້ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ເຊັ່ນ: ການໃຫ້ສິດປະໂຫຍດທາງດ້ານພາສີ, ການໃຫ້ທຶນສະໜັບສະໜູນ, ການເຂົ້າແຫຼ່ງທຶນ.

➢ ***ແຜນງານ ສະໜັບສະໜູນ:***

1. ແຜນງານ: ສ້າງເງື່ອນໄຂການພັດທະນາອຸດສາຫະກຳ ໄອຊີທີ ແລະ ຜູ້ປະກອບການ ໄອຊີທີໃໝ່ (Startup) ໃຫ້ສາມາດເປັນທ່າແຮງຂອງການຂັບເຄື່ອນເສດຖະກິດ;
2. ແຜນງານ: ສົ່ງເສີມການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ (SMEs) ບົນພື້ນຖານເສດຖະກິດດິຈິຕອນ (Digital SMEs);
3. ແຜນງານ: ສ້າງເງື່ອນໄຂໃຫ້ວຽກງານການນຳໃຊ້ ແລະ ການບໍລິການ ໄອຊີທີ ແລະ ດິຈິຕອນ ຂະຫຍາຍຕົວ ທົ່ວສັງຄົມ ເພື່ອສົ່ງເສີມການສ້າງເງື່ອນໄຂພື້ນຖານໃຫ້ແກ່ການຫັນສູ່ສັງຄົມ ແລະ ເສດຖະກິດ ດິຈິຕອນ (ສ້າງຊຸມຊົນດິຈິຕອນ, ສ້າງຊ່ອງທາງການເຂົ້າເຖິງ digital ຂອງປະຊາຊົນ);
4. ແຜນງານ: ສ້າງ, ປັບປຸງ ແລະ ເຜີຍແຜ່ ກົດໝາຍ, ນະໂຍບາຍ, ນິຕິກຳ ແລະ ບັນດາລະບຽບການລຸ່ມກົດໝາຍຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ;

## 4.2 ແຜນວຽກຈຸດສຸມ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຮອດປີ 2030

### 4.2.1 ແຜນວຽກຈຸດສຸມ 1: ການພັດທະນາບຸກຄະລາກອນ

ແຜນວຽກນີ້ ແມ່ນສ້າງຂຶ້ນເພື່ອບັນລຸເປົ້າໝາຍທີ 1, ເຊິ່ງມີແຜນງານຮອງຮັບດັ່ງນີ້:

**1. ຄາດໝາຍ ແລະ ຕົວຊີ້ບອກ**

- ກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ກໍ່ສ້າງບຳລຸງຍົກລະດັບ ດ້ານທິດສະດີການເມືອງ-ການປົກຄອງ ຂັ້ນສູງໃຫ້ໄດ້ຢ່າງໜ້ອຍ 15 ຄົນ, ຂັ້ນກາງໃຫ້ໄດ້ ຢ່າງໜ້ອຍ 10 ຄົນ ແລະ ຈັດບຳລຸງທິດສະດີເມືອງ-ການປົກຄອງ ຂັ້ນຕົ້ນ ໄລຍະ 3 ເດືອນ ຢ່າງໜ້ອຍປີລະຄັ້ງ;
- ສ້າງພະນັກງານໃຫ້ໄດ້ປະລິນຍາເອກເພີ່ມຂຶ້ນ 8 ຄົນ, ປະລິນຍາໂທເພີ່ມຂຶ້ນ 57 ຄົນ ແລະ ປະລິນຍາຕີ 5 ຄົນ, ສ້າງຄູຝຶກໃຫ້ໄດ້ຢ່າງໜ້ອຍ 60 ຄົນ ເພື່ອກະກຽມສິດສອນໃນສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ພ້ອມທັງສ້າງຫຼັກສູດໄລຍະສັ້ນ ແລະ ໄລຍະຍາວການຝຶກອົບຮົມໃຫ້ສຳເລັດ;
- ສູ້ຊົນ ຍົກສູງຄຸນນະພາບວຽກງານການຮຽນ-ການສອນ ແລະ ວຽກງານວິຊາການອື່ນໆທີ່ກ່ຽວຂ້ອງ, ຈັດຕັ້ງປະຕິບັດການຮຽນ-ການສອນ ໃນຂະແໜງການໄອຊີທີ/ດິຈິຕອນ ທີ່ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ;
- ສູ້ຊົນ ສົ່ງເສີມແວດລ້ອມການຮຽນການສອນ ທີ່ຂັບເຄື່ອນໂດຍການຄົ້ນຄວ້າວິທະຍາສາດ ແລະ ສ້າງເປັນຜະລິດຕະພັນບໍລິການວິຊາການ ເພື່ອແກ້ໄຂບັນຫາສິ່ງທ້າທາຍ ໃນວຽກງານເສດຖະກິດສັງຄົມ ຢູ່ໃນ ສປປ ລາວ;
- ສູ້ຊົນ ປັບປຸງໂຄງລ່າງພື້ນຖານຕຶກອາຄານ, ສະຖານທີ່, ຫ້ອງຮຽນ, ຫ້ອງທົດລອງ ແລະ ໂຄງລ່າງພື້ນຖານດິຈິຕອນ ໃຫ້ທັນສະໄໝ ເພື່ອຕອບສະໜອງວຽກງານການຮຽນ-ການສອນ ຂອງ ສະຖາບັນ ເຕັກໂນໂລຊີ ແລະ ການສື່ສານ;
- ສູ້ຊົນ ສ້າງການພົວພັນກັບບັນດາຂະແໜງການພາຍໃນ ແລະ ຕ່າງປະເທດ;
- ສູ້ຊົນ ຍົກລະດັບຄູອາຈານໃຫ້ມີຄວາມຊຳນານ,ມີຄຸນນະພາບສູງ ແລະ ມີການຄົ້ນຄວ້າວິທະຍາສາດເປັນປະຈຳ;

- ສູ້ຊົນ ສ້າງຄວາມເຂັ້ມແຂງ ແລະ ເພີ່ມທັກສະດີຈິຕອນທີ່ຈຳເປັນ ໃຫ້ແກ່ນັກສຶກສາ ແລະ ບຸກຄົນທົ່ວໄປ;
- ສູ້ຮັບປະກັນຄວາມຍືນຍົງທາງດ້ານການເງິນ, ສິ່ງແວດລ້ອມ ແລະ ການດຳເນີນງານຂອງສະຖາບັນ ເຕັກໂນໂລຊີ ແລະ ການສື່ສານ;
- ຄົ້ນຄວ້າ ແລະ ກະກຽມການປະເມີນ ເພື່ອປັບປຸງ ແລະ ພັດທະນາຫຼັກສູດທຸກໆ 1-2 ຮຸ່ນທີ່ສຳເລັດການສຶກສາ ໃຫ້ສອດຄ່ອງກັບແນວທາງນະໂຍບາຍ ຂອງການສຶກສາ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ, ສອດຄ່ອງກັບການຂະຫຍາຍຕົວຂອງເຕັກໂນໂລຊີແຕ່ລະໄລຍະເຊັ່ນ: ປັນຍາປະດິດ, ນະວັດຕະກຳໃໝ່ໆ ແລະ ການພັດທະນາຂອງສະຖາບັນ;
- ແລກປ່ຽນ ແລະ ຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງເພື່ອຮ່ວມກັນພັດທະນາຫຼັກສູດການຮຽນ-ການສອນໃຫ້ແທດເໝາະກັບຄວາມຕ້ອງການຂອງຕະຫຼາດແຮງງານ ປີລະ 1 ຄັ້ງ;
- ນຳໃຊ້ບັນດາມາດຕະຖານ ແລະ ຕົວຊີ້ວັດ ການປະເມີນຄຸນນະພາບການສຶກສາຊັ້ນສູງ ເພື່ອຮັບປະກັນຄຸນນະພາບການສຶກສາພາຍໃນສະຖາບັນ ແຕ່ລະໄລຍະ;
- ສ້າງມາດຕະຖານຄຳຖາມວັດລະດັບທັກສະ ໄອຊີທີ ຂອງສະຖາບັນ ເຕັກໂນໂລຊີ ແລະ ການສື່ສານ;
- ຊຸກຍູ້ໃຫ້ນັກສຶກສາເຂົ້າຮ່ວມຝຶກອົບຮົມ ແລະ ສາມາດເຂົ້າຮ່ວມສອບເສັງ ບັນດາໃບຢັ້ງຢືນ ຂອງພາຍໃນ ແລະ ສາກົນ ເຊັ່ນ: ການວັດລະດັບໄອຊີທີ ຂອງສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ, ໃບຢັ້ງຢືນ Cisco, ຫົວເຫວີຍ ຫຼື Microsoft ເປັນຕົ້ນ ໃຫ້ໄດ້ຫຼາຍກວ່າ 50% ຂອງຈຳນວນນັກສຶກສາທັງໝົດ;
- ຈັດຝຶກອົບຮົມໃຫ້ພະນັກງານ, ຄູອາຈານພາຍໃນສະຖາບັນເຕັກໂນໂລຊີ ແລະ ການສື່ສານ ເຂົ້າຮ່ວມ ແລະ ສາມາດສອບເສັງໃບຢັ້ງຢືນດ້ານໄອຊີທີ ໃນລະດັບພາກພື້ນ ແລະ ສາກົນໃຫ້ໄດ້ຢ່າງໜ້ອຍ 25 ຄົນ;
- ຈັດຝຶກອົບຮົມໄລຍະສັ້ນໃຫ້ພະນັກງານ,ຄູອາຈານ,ນັກສຶກສາ ແລະ ບຸກຄົນທົ່ວໄປ ເຂົ້າຮ່ວມໃຫ້ໄດ້ຢ່າງໜ້ອຍ 10 ຫົວຂໍ້ຕໍ່ປີ;
- ຈັດຕັ້ງກອງປະຊຸມ ແບບແລກປ່ຽນປະສົບການວຽກງານການຈັດຝຶກອົບຮົມ ຢ່າງໜ້ອຍ 1 ຄັ້ງຕໍ່ປີ;
- ຮ່ວມມືການຈັດຝຶກອົບຮົມກັບສະຖາບັນການສຶກສາ ຫຼື ອົງການຈັດຝຶກອົບຮົມສາກົນ ຢ່າງໜ້ອຍ 2 ຄັ້ງຕໍ່ປີ;
- ສ້າງບຸກຄະລາກອນອອກຮັບໃຊ້ສັງຄົມໃນຫຼັກສູດໄລຍະສັ້ນ ແລະ ໄລຍະຍາວ ດ້ານໄອຊີທີ ເພື່ອຮັບໃຊ້ສັງຄົມໃຫ້ໄດ້ຫຼາຍກວ່າ 2,500 ຄົນ;
- ນັກສຶກສາທີ່ຮຽນຈົບ ດ້ານໄອຊີທີ ສາມາດມີວຽກເຮັດງານທຳທັງພາກລັດ, ເອກະຊົນ ແລະ ປະກອບອາຊີບອິດສະຫຼະ 70%;
- ປະເມີນຄວາມເພິ່ງພໍໃຈ ຂອງຜູ້ປະກອບການທີ່ນຳໃຊ້ນັກສຶກສາທີ່ຮຽນຈົບໃນລະດັບດີ;
- ຈັດຝຶກອົບຮົມທັກສະການສື່ສານ, ການນຳສະເໜີ, Soft Skill ແລະ ເຕັກນິກ ICT ຂັ້ນພື້ນຖານໃຫ້ນັກສຶກສາ 250 ຄົນ/ປີ;
- ຄົ້ນຄວ້າແຜນຍຸດທະສາດ ແລະ ພັດທະນາສະຖາບັນເພື່ອຍົກລະດັບໃຫ້ສະຖາບັນ ກາຍເປັນສະຖາບັນທຽບເທົ່າມະຫາວິທະຍາໄລ;
- ສ້າງບຸກຄະລາກອນ ທາງດ້ານຄວາມປອດໄພ ໃຫ້ເປັນຜູ້ຊ່ຽວຊານ ມີປະສົບການໃນນັ້ນມີ: ນັກວິເຄາະເຫດສຸກເສີນທາງໄຊເບີ (Alert Analyst), ຜູ້ຮັບແຈ້ງເຫດສຸກເສີນທາງຄອມພິວເຕີ (Incident Restponse), ນັກວິເຄາະທາງດ້ານພຶດຕິກຳຂອງໂປແກມປະສົງຮ້າຍ (Subject Matter Expert) ແລະ ຜູ້ຄຸ້ມຄອງບໍລິຫານ (SOC Manager);
- ເອົາໃຈໃສ່ຄົ້ນຄວ້ານຳສົ່ງພະນັກງານໄປເຄື່ອນໄຫວວຽກງານ ທັງພາຍໃນ ແລະ ຕ່າງປະເທດ ໃນການເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ, ຢ້ຽມຢາມ ແລະ ອື່ນໆໃຫ້ໄດ້ ຈຳນວນ 3,000 ເທື່ອຄົນ, ໃນນັ້ນເພີ່ມທັກສະຄວາມຮູ້ ດ້ານຄວາມປອດໄພທາງໄຊເບີໃຫ້ພະນັກງານ ເຕັກໂນໂລຊີ ແລະ ການສື່ສານ ທັງສູນກາງ ແລະ ທ້ອງຖິ່ນໃຫ້ໄດ້ 300 ເທື່ອຄົນ; ເພີ່ມທັກສະການບໍລິຫານ-ຄຸ້ມຄອງ, ທັກສະພາສາຕ່າງປະເທດ, ທັກສະວິຊາການ ແລະ ທັກສະການຄຸ້ມຄອງບັນຊີ-ການເງິນ, ກວດກາ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ 1,000 ເທື່ອຄົນ; ສ້າງພະນັກງານ

ໃຫ້ມີທັກສະໃນການນຳໃຊ້ ດິຈິຕອນ ເຂົ້າໃນການບໍລິຫານວຽກງານ ແລະ ບໍລິການປະຊາຊົນ ໃຫ້ໄດ້ 1,000 ເທື່ອຄົນ; ເພີ່ມທັກສະໃນການຄຸ້ມຄອງວຽກງານຫ້ອງການ, ວຽກງານຂ່າວສານ ໃຫ້ໄດ້ 200 ຄົນ; ເພີ່ມທັກສະຄວາມຮູ້ຄວາມສາມາດດ້ານວຽກງານແຜນການ ແລະ ສະຖິຕິ ໃຫ້ພະນັກງານເຕັກໂນໂລຊີ ແລະ ການສື່ສານ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ໄດ້ 300 ຄົນ;

- ຈັດສຳມະນາ, ຝຶກອົບຮົມ ແລະ ເຜີຍແຜ່ ການຫັນເປັນດິຈິຕອນ ໃຫ້ໄດ້ 36 ຄັ້ງ/ປີ ເພື່ອຍົກລະດັບຄວາມຮູ້ບຸກຄະລາກອນໃຫ້ໄດ້ 1,260 ເທື່ອຄົນ;
- ສຸມໃສ່ຄົ້ນຄວ້າສ້າງຫຼັກສູດ ການຮຽນການສອນ ດ້ານຄວາມປອດໄພໄຊເບີ ທັງພາກທິດສະດີ ແລະ ພາກປະຕິບັດຂອງມະຫາວິທະຍາໄລ ແລະ ສະຖາບັນການສຶກສາດ້ານເຕັກໂນໂລຊີ ຂໍ້ມູນຂ່າວສານ;
- ພັດທະນາທັກສະ ແລະ ຝຶກອົບຮົມ ວິຊາສະເພາະໃຫ້ບຸກຄະລາກອນທີ່ຮັບຜິດຊອບວຽກງານຄວາມປອດໄພໄຊເບີ ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ;
- ຊຸກຍູ້ສົ່ງເສີມໃຫ້ນັກຊ່ຽວຊານຄວາມປອດໄພໄຊເບີ ມີໃບຢັ້ງຢືນວິຊາສະເພາະດ້ານຄວາມປອດໄພໄຊເບີ ທີ່ຍອມຮັບຂອງສາກົນ ເຊັ່ນ: ນັກເຈາະລະບົບທີ່ໄດ້ຮັບການຮັບຮອງຄຸນນະທຳ (Certified Ethical Hacker (CEH), ຜູ້ຊ່ຽວຊານດ້ານຄວາມປອດໄພຂໍ້ມູນຂ່າວສານ (Certified Information Systems Security Professional (CISSP), ນັກວິເຄາະຄວາມປອດໄພຂໍ້ມູນຂ່າວສານ (Certified Security Analyst (CSA), ຜູ້ຊ່ຽວຊານດ້ານການທົດສອບລະບົບ (Certified Penetration Testing Professional (CPENT), ນັກກວດສອບຄວາມປອດໄພຂໍ້ມູນຂ່າວສານ (Certified Information Systems Auditor (CISA) ແລະ ອື່ນໆ;
- ສຸມໃສ່ພັດທະນາບຸກຄະລາກອນຄວາມປອດໄພໄຊເບີ ດ້ວຍຮູບການຕ່າງໆ ເຊັ່ນ: ສ້າງຫ້ອງຝຶກອົບຮົມ, ສ້າງຫ້ອງທົດລອງເພື່ອຄົ້ນຄວ້າ, ພັດທະນາລະບົບການຮັກສາຄວາມປອດໄພໄຊເບີ ແລະ ອື່ນໆ;
- ສ້າງແມ່ຍິງໃນຕຳແໜ່ງນຳພາ-ຄຸ້ມຄອງ ໃຫ້ເພີ່ມຂຶ້ນໃນແຕ່ລະຂັ້ນເຊັ່ນ: ຊຸກຍູ້ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ບັນຈຸຊັບຊ້ອນເຂົ້າໃນຕຳແໜ່ງນຳພາຄຸ້ມຄອງຕ່າງໆ ກວມ 30% ຂຶ້ນໄປ; ອັດຕາສ່ວນຂອງພະນັກງານ-ລັດຖະກອນ ໄດ້ຮັບການຍົກລະດັບວິຊາສະເພາະ ດ້ວຍການຝຶກອົບຮົມໄລຍະສັ້ນໃນນັ້ນ ແມ່ຍິງ 40% ຂຶ້ນໄປ (ແຍກພາຍໃນ ແລະ ຕ່າງປະເທດ); ສູ້ຊົນໃຫ້ພະນັກງານເພດຍິງໄດ້ຍົກລະດັບທິດສະດີການ ເມືອງລະດັບຕ່າງໆ ເພີ່ມຂຶ້ນ 20% ຂຶ້ນໄປ ຂອງຜູ້ໄດ້ຮັບຍົກລະດັບທັງໝົດ; ເພີ່ມທະວີຈຳນວນແມ່ຍິງໃຫ້ໄດ້ເຂົ້າຮ່ວມໃນທຸກໆກິດຈະກຳ ເປັນຕົ້ນ ແມ່ນການຝຶກອົບຮົມ, ການສຳມະນາ, ການເຂົ້າຮ່ວມແລກປ່ຽນບົດ ຮຽນ-ປະສົບການກ່ຽວກັບເຕັກນິກວິຊາການຕ່າງໆ ກວມເອົາ 35% ຂຶ້ນໄປ;
- ສ້າງຄວາມເຂັ້ມແຂງໃຫ້ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນທີ່ຮັບຜິດຊອບວຽກຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່-ເດັກ ໃນຂະແໜງເຕັກໂນໂລຊີ ແລະ ການສື່ສານ ຢ່າງໜ້ອຍ 01 ຄັ້ງຕໍ່ປີ;
- ຝຶກອົບຮົມສົ່ງເສີມບົດບາດຍິງ-ຊາຍ ເຂົ້າໃນຍຸກເສດຖະກິດດິຈິຕອນ ເພື່ອສ້າງລາຍຮັບໃຫ້ແກ່ພະນັກງານ-ລັດຖະກອນ ໃນຂະແໜງເຕັກໂນໂລຊີ ແລະ ການສື່ສານ ໃນຂອບເຂດທົ່ວປະເທດ ຢ່າງໜ້ອຍ 02 ຄັ້ງຕໍ່ປີ;
- ສ້າງຄວາມເຂັ້ມແຂງໃຫ້ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນທີ່ຮັບຜິດຊອບວຽກຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່-ເດັກ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງໃນຂະແໜງການ/ໃນຂັ້ນຊຸມຊົນໂດຍຜ່ານການພັດທະນາທັກສະດ້ານ IT ແລະ ການອົບຮົມດ້ານພາວະຜູ້ນຳ;
- ແຜນງານ ປັບປຸງສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານໃຫ້ໄດ້ 10 ມາດຕະຖານລະດັບຊາດລະດັບພາກພື້ນ ຫຼື ສາກົນ;
- ຍົກລະດັບທັກສະດ້ານດິຈິຕອນ ແລະ ສົ່ງເສີມການນຳໃຊ້ເຕັກໂນໂລຊີໃໝ່ໆໃນການບໍລິຫານ ແລະ ການສຶກສາ, ໃຫ້ພະນັກງານລັດ ແລະ ພາກທຸລະກິດ, ສ້າງຄວາມຮ່ວມມືທາງພາກລັດ-ເອກະຊົນ, ໃຫ້ໄດ້ຫຼາຍກວ່າ 2,000 ຄົນ ແລະ ຫຼາຍກວ່າ 30 ພາກສ່ວນເຂົ້າຮ່ວມ;
- ພະນັກງານ ຂັ້ນກະຊວງຢູ່ສູນກາງ ຈຳນວນຫຼາຍກວ່າ 200 ທ່ານ ແລະ ຊາວໜຸ່ມເຍົາວະຊົນຫຼາຍກວ່າ 1,000 ຄົນ ໄດ້ຮັບການຝຶກອົບຮົມ ສຳມະນາຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ເພື່ອເຮັດການຍົກລະດັບການ ໃນການນຳໃຊ້

ເຕັກໂນໂລຊີໃຫ້ຫຼາຍຂຶ້ນ, ໂດຍການເພີ່ມທັກສະດ້ານດິຈິຕອນໃຫ້ແກ່ໄວໜຸ່ມໃນຕົວເມືອງ ແລະ ເຂດຫ່າງໄກຊອກຫຼີກ, ສ້າງໂອກາດໃນການນຳໃຊ້ເຕັກໂນໂລຊີດິຈິຕອນ, ເຂົ້າໃນຊີວິດປະຈຳວັນໃນການຮຽນຮູ້ ແລະ ປະກອບອາຊີບຕ່າງໆ, ລົບລ້າງອຸປະສັກຂອງການເຂົ້າເຖິງຂໍ້ມູນຂ່າວສານ, ການສຶກສາ ແລະ ການເຮັດວຽກປະກອບກິດຈະການຕ່າງໆ ໄດ້ຢ່າງທົ່ວເຖິງ, ເຮັດໃຫ້ເພີ່ມປະສິດທິພາບ ແລະ ປະສິດທິຜົນສູງສຸດໃນການດຳລົງຊີວິດຂອງໄວໜຸ່ມຍຸກໃໝ່;

- ເພື່ອສ້າງຜູ້ນຳສະໄໝໃໝ່ທີ່ມີວິໄສ ແລະ ມີທັກສະຄວາມເປັນຜູ້ນຳດ້ານດິຈິຕອນ (Digital Leadership) ທີ່ມີຄວາມສາມາດໃນການນຳພາອົງກອນ ໃຫ້ກ້າວຂ້າມການປ່ຽນແປງທາງດິຈິຕອນ ຢ່າງມີປະສິດທິພາບ ຜ່ານການອົບຮົມ ແລະ ການເຊື່ອມໂຍງສ້າງເຄືອຂ່າຍຜູ້ນຳລະດັບຊາດແລະພາກພື້ນ;
- ເປັນການສົ່ງເສີມທຸລະກິດສະຕາດອັບໃຫ້ເກີດຂຶ້ນໄດ້ຈິງ ແລະ ຍືນຍົງໂດຍພັດທະນານິຕິກຳ ແລະ ລະບົບນິເວດສະຕາສອັບ ທີ່ເປັນປະໂຫຍດ ຕໍ່ການກໍ່ຕັ້ງທຸລະກິດເກີດໃໝ່ ທີ່ນຳໃຊ້ເຕັກໂນໂລຊີເຂົ້າຊ່ວຍໃນການດຳເນີນທຸລະກິດ ໃຫ້ມີການຂະຫຍາຍຕົວໄດ້ຢ່າງວ່ອງໄວ ແລະ ເພື່ອເປັນການສົ່ງເສີມການລົງທຶນ ແລະ ພັດທະນານະວັດຕະກຳໃໝ່ໆ ດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າມາລົງທຶນໃນສປປ ລາວ ເພີ່ມຂຶ້ນ.

**2. ແຜນງານຈຸດສຸມ**

1) ເສີມສ້າງຂີດຄວາມສາມາດ ຂອງບຸກຄະລາກອນດ້ວຍການຝຶກອົບຮົມ ແລະ ຍົກລະດັບວິຊາສະເພາະ ທັງພາຍໃນ ແລະ ຕ່າງປະເທດ ທົ່ວຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ;
2) ຍົກລະດັບບຸກຄະລາກອນ ແລະ ຝຶກອົບຮົມ-ກໍ່ສ້າງລັດຖະກອນທົ່ວປະເທດ ໃນວຽກງານຫັນເປັນລັດດິຈິຕອນ ແລະ ກຽມຄວາມພ້ອມ ໃນການນຳໃຊ້ ປັນຍາປະດິດ;
3) ສ້າງຫຼັກສູດການຝຶກອົບຮົບໄລຍະສັ້ນກ່ຽວກັບ AI, IoT, UAV, ICT, ມາດຖານສອບຊອບແວ, ລະບົບອັດຕະໂນມັດ, ມາດຖານພາຫະນະໄຟຟ້າ ແລະ ເຕັກໂນໂລຊີອັດສະລິຍະ;
4) ການໂຄສະນາສ້າງຄວາມຮັບຮູ້: ດຳເນີນການເຜີຍແຜ່, ໂຄສະນາສ້າງຄວາມຮັບຮູ້ແກ່ສັງຄົມໃຫ້ຮູ້ເຖິງຜົນປະໂຫຍດ, ລະບຽບໃນການຄຸ້ມຄອງ ແລະສິ່ງທ້າທາຍ ຂອງເຕັກໂນໂລຊີອັດສະລິຍະ;
5) ຈັດການຝຶກອົບຮົມ, ສຳມະນາ, ການສອນ ການນຳໃຊ້ເຕັກໂນໂລຊີອັດສະລິຍະ ໃຫ້ນັກຮຽນ, ພະນັກງານລັດ, ຫົວໜ່ວຍທຸລະກິດ ແລະ ສັງຄົມ ໃຫ້ສາມາດນຳໃຊ້ ເຕັກໂນໂລຊີອັດສະລິຍະ;
6) ສ້າງລະບົບຄຸ້ມຄອງລັດຖະກອນແບບເອເລັກໂຕຼນິກ ແລະ ຫັນເປັນທັນສະໄໝ;
7) ສົ່ງເສີມ ແລະ ພັດທະນາແຫຼ່ງການຮຽນຮູ້ທີ່ທັນສະໄໝແບບຍືນຍົງ ແນ່ໃສ່ການຄົ້ນຄວ້າ-ວິໄຈ, ສ້າງນະວັດຕະກຳວິທະຍາສາດດ້ານ ໄອຊີທີອັນໃໝ່ ແລະ ເປັນການສົ່ງເສີມໃຫ້ຜູ້ຮຽນຮູ້;
8) ສ້າງຄວາມເຂັ້ມແຂງ ແລະ ເຜີຍແຜ່ ວຽກງານເຕັກໂນໂລຊີ ແລະ ນະວັດຕະກຳ ອອກສູ່ສັງຄົມ;
9) ສົ່ງເສີມ ແລະ ພັດທະນາຄູສອນ ໃຫ້ມີຄວາມເຂັ້ມແຂງ ສາມາດຖ່າຍທອດຫຼັກວິຊາການທາງດ້ານເຕັກນິກອັນສະເພາະຂອງຂະແໜງ ໄອຊີທີ;
10) ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງວຽກງານການຮ່ວມມືລົງທຶນໃຫ້ພະນັກງານພາຍໃນກະຊວງແລະຂະແໜງການອ້ອມຂ້າງ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດ ແລະ ຄວາມເຂົ້າໃຈ ໃນວຽກງານກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນໃຫ້ສູງຂຶ້ນ;
11) ສົ່ງເສີມການບົ່ມເພາະບຸກຄະລາກອນ ແລະ ນັກສຶກສາໃນຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ໃຫ້ມີທັກສະແນວຄິດລິເລີ່ມເປັນສູນກາງໃນການພັດທະນາ ແລະ ເປັນສູນກາງໃນການສ້າງຄວາມເປັນເລີດໃນດ້ານ ໄອຊີທີ;
12) ສ້າງຫຼັກສູດການ ຮຽນຮູ້ນຳໃຊ້ເຕັກໂນໂລຊີ ແລະ ການສື່ສານ ຂັ້ນພື້ນຖານໃຫ້ແກ່ປະຊາຊົນໃນເຂດຊົນນະບົດຫ່າງໄກສອກຫຼີກ, ກຸ່ມຄົນທຸກຍາກ, ກຸ່ມຄົນພິການ, ແມ່ຍິງ ແລະ ເດັກນ້ອຍທີ່ດ້ອຍໂອກາດ ໃຫ້ເຂົ້າເຖິງການນຳໃຊ້ບໍລິການອອນລາຍໃນຂອບເຂດທົ່ວປະເທດ;

13) ສຸມໃສ່ສ້າງຄູ່ມື ແລະ ໂຄສະນາກ່ຽວກັບການນຳໃຊ້ ບໍລິການອອນລາຍ ຢ່າງປອດໄພ ແລະ ມີຄວາມຮັບຜິດຊອບຕໍ່ການນຳໃຊ້;
14) ສຸມໃສ່ ສ້າງຜູ້ຊ່ຽວຊານດ້ານເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ ເຊັ່ນ: ສ້າງຜູ້ຊ່ຽວຊານດ້ານການອອກແບບ ແລະ ບໍລິຫານຈັດການເຄືອຂ່າຍໂທລະຄົມມະນາຄົມ, ສ້າງຜູ້ຊ່ຽວຊານດ້ານການພັດທະນາການຕັ້ງຄ່າ ແລະ ບໍລິຫານຈັດການເຄືອຂ່າຍໃນລະດັບພື້ນຖານ, ສ້າງຜູ້ຊ່ຽວຊານດ້ານການຕິດຕັ້ງ ແລະ ບຳລຸງຮັກສາລະບົບສາຍໄຍແກ້ວນຳແສງ ແລະ ອື່ນໆ;
15) ຮ່ວມກັບພາກເອກະຊົນ, ຂະແໜງການຕ່າງໆ ແລະ ສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ ພັດທະນາຫຼັກສູດຝຶກອົບຮົມໄລຍະສັ້ນ-ຍາວ ແລະ ຫຼັກສູດການສຶກສາດ້ານໂທລະຄົມມະນາຄົມ ແລະ ໄອຊີທີ ເພື່ອສ້າງກຳລັງແຮງງານ ໃຫ້ມີທັກສະສີມືທີ່ແນ່ນອນ;
16) ສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃນຂະແໜງການກະສິກຳ, ສາທາລະນະສຸກ, ການສຶກສາ ແລະ ການຜະລິດອຸດສາຫະກຳ;
17) ສ້າງແຮງງານທີ່ມີທັກສະ, ເພີ່ມຈຳນວນນັກຄົ້ນຄວ້າ ແລະ ຜູ້ຊ່ຽວຊານ ດ້ານເຕັກໂນໂລຊີ ແລະ ນະວັດຕະກຳໃຫ້ຫຼາຍຂຶ້ນ;
18) ຈັດຝຶກອົບຮົມວຽກງານການຄຸ້ມຄອງ, ການໃຫ້ບໍລິການໂຄງລ່າງພື້ນຖານປັນຍາປະດິດ.
19) ປັບປຸງລະບົບນ້ຳ, ລະບົບໄຟຟ້າ ແລະ ໂຄງລ່າງພື້ນຖານ ຂອງຕຶກ A, B, C, D ແລະ ຕຶກສູນຝຶກອົບຮົມໄອຊີທີໃຫ້ໄດ້ມາດຕະຖານ, ຄວາມປອດໄພ, ສະດວກສະບາຍ ແລະ ທັນສະໄໝ ເພື່ອຕອບສະໜອງໃຫ້ແກ່ ວຽກງານບໍລິຫານ, ການຮຽນ-ການສອນ ແລະ ການຝຶກອົບຮົມ ພາຍໃນສະຖາບັນເຕັກໂນໂລຊີ ແລະ ການສື່ສານ.

**3. ໂຄງການສະໜັບສະໜູນວຽກງານຈຸດສຸມ**

1. ໂຄງການສ້າງຄວາມເຂັ້ມແຂງ ການນຳໃຊ້ລະບົບທັນສະໄໝ ໃຫ້ແກ່ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ແລະ ຜູ້ປະກອບການ ດ້ານເຕັກໂນໂລຊີດີຈິຕອນ ຢູ່ ສປປ ລາວ.
2. ໂຄງການຝຶກອົບຮົມ AI, IoT,ການພັດທະນາ UAV,ICT, ມາດຖານສອບຊອບແວ, ລະບົບອັດຕະໂນມັດ, ມາດຖານພາຫະນະໄຟຟ້າ ແລະ ເຕັກໂນໂລຊີອັດສະລິຍະ;
3. ໂຄງການສ້າງຄວາມເຂັ້ມແຂງໃຫ້ກັບ ສວນອຸທິຍານດີຈິຕອນຂອງ ສປປ ລາວ ເພື່ອຄວາມຍືນຍົງຂອງການພັດທະນາອຸດສະຫະກຳດີຈິຕອນ (The Project for Scale-up of Lao Digital Park for Digital-Based Sustainable Industrial Development);
4. ໂຄງການສ້າງຄວາມອາດສາມາດໃຫ້ພະນັກງານ ຂັ້ນສູນກາງ ແລະ ທ້ອງຖິ່ນ ວຽກງານການຄຸ້ມຄອງເຕັກໂນໂລຊີ ແລະ ນະວັດຕະກຳ ຢູ່ພາກກາງ ແລະ ພາກໃຕ້;
5. ໂຄງການຝຶກອົບຮົມວຽກງານການຕີລາຄາ, ກວດສອບ ແລະ ປະເມີນເຕັກໂນໂລຊີໃຫ້ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງໃນຂອບເຂດທົ່ວປະເທດ;
6. ໂຄງການສ້າງຄວາມເຂັ້ມແຂງ ວຽກງານຄຸ້ມຄອງການພັດທະນາ ແລະ ນຳໃຊ້ເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ ແລະ ຊັບສິນດີຈິຕອນ ໃຫ້ແກ່ພະນັກງານ-ລັດຖະກອນ ທັງສູນກາງ, ທ້ອງຖິ່ນ ແລະ ບຸກຄົນທົ່ວສັງຄົມ;
7. ໂຄງການຍົກລະດັບຄວາມຮູ້ທາງດ້ານເຕັກໂນໂລຊີ ແລະ ການສື່ສານ ຂັ້ນພື້ນຖານ ໃຫ້ແກ່ພະນັກງານລັດ ຂອງຂະແໜງການກ່ຽວຂ້ອງໃນ ໄລຍະສັ້ນ, ກາງ ແລະ ຍາວ;
8. ໂຄງການສ້າງຄວາມເຂັ້ມແຂງ ແລະ ການນຳໃຊ້ເຕັກໂນໂລຊີກຸ່ມຂໍ້ມູນຜູກພັນໃຫ້ແກ່ຜູ້ປະກອບການ ແລະ ບຸກຄົນທົ່ວສັງຄົມ;
9. ໂຄງການສ້າງຄວາມເຂັ້ມແຂງໃຫ້ກັບສູນກາງ ແລະ ທ້ອງຖິ່ນໃນການເຂົ້າເຖິງ ແລະ ນຳໃຊ້ລະບົບການຄ້າທາງເອເລັກໂຕຣນິກ ເພື່ອການຂະຫຍາຍຊ່ອງທາງການຄ້າ ແລະ ສ້າງເສດຖະກິດກຸ້ມຕົນເອງ;
10. ໂຄງການ ສົ່ງເສີມສ້າງຄວາມເຂັ້ມແຂງໃຫ້ວິຊາການໃນການຄຸ້ມຄອງ ລະບົບເຄືອຂ່າຍອິນເຕີເນັດ, ຊັບພະຍາກອນອິນເຕີເນັດ, ລະບົບຄວາມປອດໄພຂໍ້ມູນຂ່າວສານ, ລະບົບຄລາວ (Cloud Computing), ໂຄງລ່າງພື້ນຖານສູນ

ຂໍ້ມູນ, ລະບົບເຄືອຂ່າຍໂທລະສັບ, ລະບົບຮັບຮອງລາຍເຊັນເອເລກໂຕຣນິກ, ລະບົບຄຸ້ມຄອງລະຫັດອິນເຕີເນັດສູງສຸດແຫ່ງຊາດ (.La) ທັງພາຍໃນ ແລະ ຕ່າງປະເທດ;

11. ໂຄງການເຜີຍແຜ່ ສ້າງຄວາມເຂັ້ງແຂງວຽກງານ ຂອງ ສອຊ ໃຫ້ກັບພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ໃນຂອບເຂດທົ່ວປະເທດ;
12. ໂຄງການສ້າງຄວາມເຂັ້ມແຂງການນຳໃຊ້ເຕັກໂນໂລຊີດິຈິຕອນຜ່ານສື່ສັງຄົມອອນລາຍ ໃຫ້ມີຄວາມປອດໄພຕໍ່ແມ່ຍິງ ແລະ ເດັກ ໃນຂອບເຂດທົ່ວປະເທດ;
13. ໂຄງການຝຶກອົບຮົມການສ້າງຄວາມເຂັ້ມແຂງວຽກງານບໍລິຫານຈັດການອົງກອນສຳລັບຜູ້ບໍລິຫານຍຸກໃໝ່ຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໃນຂອບເຂດທົ່ວປະເທດ;
14. ໂຄງການຝຶກອົບຮົມສ້າງຄວາມເຂັ້ມແຂງວຽກງານການຄຸ້ມຄອງເອກະສານທາງການ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໃນຂອບເຂດທົ່ວປະເທດ;
15. ໂຄງການຝຶກອົບຮົມການສ້າງຄວາມເຂັ້ມແຂງວຽກງານຈັດຕັ້ງ ແລະ ພະນັກງານ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໃນຂອບເຂດທົ່ວປະເທດ;
16. ໂຄງການຍົກສູງຄຸນນະພາບວຽກງານການຄຸ້ມຄອງດ້ານໄອຊີທີໃນການຫັນເປັນດິຈິຕອນ ສຳລັບຜູ້ບໍລິຫານລະດັບກາງ;
17. ໂຄງການຝຶກອົບຮົມການຫັນ ເປັນດິຈິຕອນໃນການຄຸ້ມຄອງພະນັກງານຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໃນຂອບເຂດທົ່ວປະເທດ;
18. ໂຄງການສ້າງຄວາມອາດສາມາດໃນວຽກງານການ ພັດທະນາບຸກຄະລາກອນດ້ານດິຈິຕອນໃນຂົງເຂດເຕັກໂນໂລຊີ ແລະ ການສື່ສານ;
19. ໂຄງການຝຶກອົບຮົມສ້າງຄວາມອາດສາມາດການນຳໃຊ້ເຄື່ອງມືດິຈິຕອນ ເຂົ້າໃນການບໍລິຫານຄຸ້ມຄອງລັດຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໃນຂອບເຂດທົ່ວປະເທດ;
20. ໂຄງການສ້າງພລັດຟອມຄັງຄວາມຮູ້ໃນການພັດທະນາຊັບພະຍາກອນມະນຸດຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ໃນຂອບເຂດທົ່ວປະເທດ;
21. ໂຄງການສ້າງຄວາມເຂັ້ມແຂງເຕັກນິກຄວາມປອດໄພທາງໄຊເບີ (Technical Cybersecurity Training) ໃຫ້ບັນດາແຂວງ ພາກເໜືອ;
22. ໂຄງການສ້າງຄວາມເຂັ້ມແຂງເຕັກນິກຄວາມປອດໄພທາງໄຊເບີ (Technical Cybersecurity Training) ໃຫ້ບັນດາແຂວງ ພາກກາງ ແລະ ພາກໃຕ້;
23. ໂຄງການ ສ້າງຄວາມເຂັ້ມແຂງໃຫ້ພະນັກງານເພດຍິງ ໃນຂະແໜງເຕັກໂນໂລຊີ ແລະ ການສື່ສານ ຂອບເຂດທົ່ວປະເທດ ກ່ຽວກັບການປົກປ້ອງຕົນເອງທາງອອນລາຍ ໃນຍຸກດິຈິຕອນ;
24. ໂຄງການຝຶກຊ້ອມ ຮັບມື ແລະ ຕອບໂຕ້ເຫດສຸກເສີນທາງໄຊເບີ;
25. ໂຄງການປູກຈິດສຳນຶກ ແລະ ເຜີຍແຜ່ນິຕິກຳ ກ່ຽວກັບວຽກງານຄວາມປອດໄພໄຊເບີໃຫ້ແກ່ສັງຄົມ;
26. ໂຄງການ ພັດທະນາຄວາມຮູ້ດ້ານຄວາມປອດໄພທາງອິນເຕີເນັດ ຂອງຊາວໜຸ່ມ ໃນຂອບເຂດທົ່ວປະເທດ;
27. ໂຄງການ ປັບປຸງ ແລະ ພັດທະນາວຽກງານຂ່າວສານ ໃຫ້ທັນສະໄໝ;
28. ໂຄງການສ້າງບຸກຄະລາກອນ ດ້ານການຄຸ້ມຄອງ ແລະ ໃຫ້ບໍລິການ ສູນຂໍ້ມູນແຫ່ງຊາດ;
29. ໂຄງການ ຝຶກອົບຮົມທັກສະການວາງແຜນການ ແລະ ແຜນດຳເນີນງານໃຫ້ພະນັກງານ ເຕັກໂນໂລຊີ ແລະ ການສື່ສານ ທົ່ວປະເທດ;
30. ໂຄງການຕິດຕາມການຈັດຕັ້ງປະຕິບັດ ແຜນພັດທະນາແຜນພັດທະນາ 5 ປີ ຄັ້ງທີ IV (2026-2030) ແລະ ສ້າງແຜນພັດທະນາ 5 ປີ ຄັ້ງທີ V (2030-2035) ຂອງຂະແໜງ ເຕັກໂນໂລຊີ ແລະ ການສື່ສານ;
31. ໂຄງການສ້າງຄວາມເຂັ້ມແຂງວຽກງານແຜນການ ໃຫ້ບັນດາ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ໃນທົ່ວປະເທດ;

32. ໂຄງການ ກໍ່ສ້າງຫ້ອງສາງເກັບສຳນວນ-ສຳເນົາເອກະສານກວດກາ;
33. ໂຄງການ ສ້າງລະບົບຄຸ້ມຄອງວຽກງານກວດກາ ຫັນເປັນດິຈິຕອນ;
34. ໂຄງການສ້າງຄຳຮ້ອງ-ຄຳສະເໜີວຽກງານກວດກາ ຫັນເປັນເອເລັກໂຕຣນິກ (ທັນສະໄໝ);
35. ໂຄງການປັບ ປຸງ ແລະ ພັດທະນາຫຼັກສູດ;
36. ໂຄງການປະ ເມີນວຽກງານ ປະກັນຄຸນະພາບ;
37. ໂຄງການສ້າງທັກສະໄອຊີທີ ແລະ ທັກສະດິຈິຕອນໃຫ້ແກ່ພະນັກງານ, ຄູອາຈານ;
38. ໂຄງການ ສະໜອງອຸປະກອນທົດລອງ ເຂົ້າໃນຫ້ອງຄົ້ນຄວ້າວິທະຍາສາດທາງດ້ານເຕັກໂນ ໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ;
39. ໂຄງການສ້າງລະບົບນິເວດວຽກງານຄົ້ນຄວ້າວິທະຍາສາດພາຍໃນສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
40. ໂຄງການປັບປຸງເຄືອຂ່າຍອິນເຕີເນັດ ແລະ ຫ້ອງຮຽນຄອມພິວເຕີຂອງສະຖາບັນ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
41. ໂຄງການ ພັດທະນາລະບົບ AI ຂອງສະຖາບັນ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
42. ໂຄງການພັດ ທະນາລະບົບຈອງຫ້ອງປະຊຸມພາຍໃນສະຖາບັນເຕັກໂນໂລຊີ ແລະ ການສື່ສານ;
43. ໂຄງການປັບປຸງຕຶກຫ້ອງການ A, B, C, D ແລະ ຕຶກສູນຝຶກອົບຮົມ ໄອຊີທີ ຂອງສະຖາບັນ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
44. ໂຄງການສ້າງຫ້ອງການ, ຫ້ອງຮຽນ, ຫໍພັກ ແລະ ເດີ່ນກິລານັກສຶກສາຂອງສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
45. ໂຄງການສຶກ ສາຄວາມເປັນໄປໄດ້ຂະຫຍາຍວິທະຍາເຂດ;
46. ໂຄງການ ຍົກລະດັບວິຊາສະເພາະຄູອາຈານ;
47. ໂຄງການຄົ້ນ ຄວ້າມາດຕະຖານທັກສະພື້ນຖານ ທາງດ້ານດິຈິຕອນ;
48. ໂຄງການຈັດຊື້ອຸປະກອນເຄື່ອງໃຊ້ໃຫ້ສອດຄ່ອງກັບນະໂຍບາຍສີຂຽວຂອງສະຖາບັນເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ;
49. ໂຄງການແລກປ່ຽນບົດຮຽນ ແລະ ຮັບຮອງມາດຕະຖານສາກົນດ້ານການຝຶກອົບຮົມ ICT;
50. ໂຄງການສ້າງຄວາມເຂັ້ມແຂງການຫັນເປັນດິຈິຕອນຜ່ານລະບົບບໍລິຫານ ແລະ ບໍລິການລັດດິຈິຕອນໃຫ້ແກ່ພະນັກງານຂະແໜງເຕັກໂນໂລຊີ ແລະ ການສື່ສານ ຂອບທົ່ວປະເທດ;

### 4.2.2 ແຜນວຽກຈຸດສຸມ ທີ 2: ສ້າງ ແລະ ປັບປຸງນິຕິກຳ ຮອງຮັບການຫັນເປັນດິຈິຕອນ

ເພື່ອບັນລຸແຜນວຽກຈຸດສຸມທີ່ 2 ຈະຕ້ອງໄດ້ຈັດຕັ້ງປະຕິບັດບັດດາ ວຽກງານຈຸດສຸມ ແລະ ໂຄງການດັ່ງນີ້:

**1. ຄາດໝາຍ ແລະ ຕົວຊີ້ວັດ**

ເພື່ອໃຫ້ການຫັນເປັນດິຈິຕອນ ມີປະສິດທິພາບ ແລະ ໄດ້ຮັບຜົນອັນສູງສຸດ, ພ້ອມດຽວກັນນັ້ນ ເພື່ອຕອບສະໜອງການບໍລິການ ທາງດິຈິຕອນໃຫ້ມີການຄຸ້ມຄອງຢ່າງຮັດກຸມ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຊົມໃຊ້. ຜູ້ໃຫ້ບໍລິການ ກໍ່ຄືຜົນປະໂຫຍດຂອງປະເທດຊາດ ແມ່ນມີຄວາມຈຳເປັນຕ້ອງສ້າງ ແລະ ປັບປຸງກົດໝາຍ ແລະ ລະບຽບການໃນຂະແໜງການຕ່າງໆທີ່ກ່ຽວຂ້ອງ ດັ່ງລຸ່ມນີ້:

- ຄົ້ນຄວ້າ ແລະ ປັບປຸງບັນດານິຕິກຳ ໃຫ້ຮັດກຸມ ແລະ ທັນການປ່ຽນແປງ ແຕ່ລະໄລຍະ ແນ່ໃສ່ຮັບປະກັນ ການຄຸ້ມຄອງຜົນປະໂຫຍດຂອງພັກ-ລັດ, ຜົນປະໂຫຍດ ແລະ ສິດຂອງຜູ້ປະກອບການ ແລະ ຜູ້ຊົມໃຊ້ເປັນຕົ້ນແມ່ນບັນດາກົດໝາຍກ່ຽວກັບການຫັນເປັນດິຈິຕອນເຊັ່ນ: ວຽກງານເຕັກໂນໂລຊີດິຈິຕອນ, ນະວັດຕະກຳ, ໂທລະຄົມມະນາຄົມ, ອິນເຕີເນັດ, ໄປສະນີ, ຄື້ນຄວາມຖີ່ວິທະຍຸສື່ສານ, ປັນຍາປະດິດ, ຄວາມປອດໄພໄຊເບີ;

- ສ້າງນະໂຍບາຍເພື່ອຊຸກຍູ້ການນຳໃຊ້ທຸກບໍລິການ ໃນການຫັນເປັນດີຈີຕອນ ເພື່ອໃຫ້ທຸກພາກສ່ວນຮ່ວມມືໃນຂະບວນການດັ່ງກ່າວນີ້ຢ່າງຟົດຟື້ນ ແລະ ເປັນຂະບວນການ. ພ້ອມດຽວກັນນີ້ ການສ້າງນະໂຍບາຍອໍານວຍຄວາມສະດວກໃຫ້ແກ່ພາກສ່ວນເອກະຊົນ ໃນການລົງທຶນໃສ່ວຽກງານດີຈີຕອນ ຂອງຂະແໜງການຕ່າງໆ ຈະຊ່ວຍກະຕຸ້ນການຫັນເປັນດີຈີຕອນ ເປັນວົງກວ້າງ ເປັນຕົ້ນ ນະໂຍບາຍແຫ່ງຊາດດ້ານດີຈີຕອນ, ນະໂຍບາຍແຫ່ງຊາດດ້ານອິນເຕີເນັດ ຄວາມໄວສູງ ແລະ ນະໂຍບາຍຄວາມປອດໄພດ້ານໄຊເບີ.
- ສ້າງ ແລະ ປັບປຸງນະໂຍບາຍ, ນິຕິກໍາເພື່ອຮອງຮັບການຄຸ້ມຄອງການຫັນເປັນດີຈີຕອນ (Digital Transformation), ລັດຖະບານດີຈີຕອນ (Digital Government), ເສດຖະກິດດີຈີຕອນ (Digital Economy), ສັງຄົມດີຈີຕອນ (Digital Society) ໃຫ້ໄດ້ 50 ສະບັບ (ນະໂຍບາຍ 2 ສະບັບ, ຍຸດທະສາດ 6 ສະບັບ, ແຜນແມ່ບົດ 2 ສະບັບ, ສ້າງ ແລະ ປັບປຸງກົດໝາຍ 7 ສະບັບ, ດຳລັດ 7 ສະບັບ ແລະ ຂໍ້ຕົກລົງ 26 ສະບັບ);
- ຄົ້ນຄວ້າສ້າງ ແລະ ປັບປຸງບັນດາກົດໝາຍ, ນິຕິກໍາທີ່ກ່ຽວຂ້ອງກັບຄວາມປອດໄພໄຊເບີ ເພື່ອຈະຊ່ວຍເພີ່ມຂີດຄວາມສາມາດໃນການປ້ອງກັນ ແລະ ຄຸ້ມຄອງໄພຄຸກຄາມທາງໄຊເບີຢ່າງມີປະສິດທິຜົນ ໂດຍໃຫ້ສອດຄ່ອງກັບສັນຍາ, ສົນທິສັນຍາ ທີ່ສປປ ລາວ ເປັນພາຄີ ແລະ ສາມາດເຊື່ອມໂຍງກັບບັນດາກົດໝາຍຂອງ ພາກພື້ນ ແລະ ສາກົນ, ຊ່ວຍຫຼຸດຜ່ອນຄວາມສ່ຽງຕໍ່ຄວາມເສຍຫາຍດ້ານ ເສດຖະກິດ-ສັງຄົມ ຂອງປະເທດ ແລະ ສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການພັດທະນາເສດຖະກິດດີຈີຕອນ;

**2. ແຜນງານຈຸດສຸມ**

1) ສ້າງ, ປັບປຸງ, ເຜີຍແຜ່ ແລະປະເມີນຜົນການປະຕິບັດກົດໝາຍ, ນະໂຍບາຍ, ນິຕິກໍາ ແລະ ບັນດາລະບຽບການລຸ່ມກົດໝາຍຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ;
2) ປະເມີນຄືນບັນດາກົດໝາຍ ແລະ ນິຕິກໍາທີ່ມີແລ້ວເຊັ່ນ: ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກໍາທາງລະບົບຄອມພິວເຕີ,ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນທາງເອເລັກໂຕຼນິກແລະນິຕິກໍາລຸ່ມກົດໝາຍ ອື່ນເພື່ອຈັດຕັ້ງປະຕິບັດໃຫ້ເປັນຮູບປະທໍາ;
3) ສ້າງຍຸດທະສາດປັນຍາປະດິດແຫ່ງຊາດ, ສ້າງຂໍ້ຕົກລົງວ່າດ້ວຍການກວດສອບ ແລະ ຢັ້ງຢືນດ້ານ ຊອບແວ, ສ້າງຂໍ້ຕົກລົງວ່າດ້ວຍການກວດສອບ ແລະ ຢັ້ງຢືນທີ່ຈໍາເປັນໃນການຄຸ້ມຄອງປັນຍາປະດິດ, ສ້າງຂໍ້ຕົກລົງທີ່ຈໍາເປັນເພື່ອກວດສອບ ແລະ ຢັ້ງຢືນ ການນໍາໃຊ້ ເຄື່ອງຈັກອັດຕະໂນມັດ;
4) ກໍານົດມາດຕະຖານ ແລະ ເງື່ອນໄຂທີ່ຊັດເຈນເພື່ອຊ່ວຍປະເມີນຄວາມປອດໄພ ໃນການປົກປ້ອງໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ດີຈີຕອນ;
5) ເຜີຍແຜ່ກົດໝາຍ, ດໍາລັດ ແລະ ນິຕິກໍາຕ່າງໆ ກ່ຽວກັບວຽກງານຫັນເປັນດີຈີຕອນ ຜ່ານຮູບແບບຈັດສໍາມະນາ ຫຼື ຝຶກອົບຮົມ ໃຫ້ແກ່ພະແນກ ເຕັກໂນໂລຊີ ແລະ ການສື່ສານ ທົ່ວປະເທດ, ບັນດາຜູ້ປະກອບການ ແລະ ສັງຄົມທົ່ວໄປ;
6) ເຜີຍແຜ່ບັນດານິຕິກໍາຜ່ານສື່ສັງຄົມອອນລາຍຂອງກະຊວງ, ຂອງບັນດາສື່ທາງການ ດ້ວຍຮູບແບບບົດຂ່າວ, ເອກະສານ, ວິດີໂອ ແລະ ອື່ນໆ;

**3. ໂຄງການສະໜັບສະໜູນວຽກງານຈຸດສຸມ**

1. ໂຄງການປັບປຸງກົດໝາຍ ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກໍາທາງລະບົບຄອມພິວເຕີ;
2. ໂຄງການປັບປຸງກົດໝາຍ ວ່າດ້ວຍ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
3. ໂຄງການປັບປຸງກົດໝາຍ ວ່າດ້ວຍ ການໄປສະນີ;
4. ໂຄງການປັບປຸງກົດໝາຍ ວ່າດ້ວຍ ຄື້ນຄວາມຖີ່ວິທະຍຸສື່ສານ;
5. ໂຄງການປັບປຸງກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຼນິກ;
6. ໂຄງການປັບປຸງກົດໝາຍ ວ່າດ້ວຍ ລາຍເຊັນເອເລັກໂຕຣນິກ;
7. ໂຄງການປັບປຸງກົດໝາຍ ວ່າດ້ວຍ ໂທລະຄົມມະນາຄົມ;
8. ໂຄງການສ້າງກົດໝາຍ ວ່າດ້ວຍ ຂໍ້ມູນ;

9. ໂຄງການສ້າງກົດໝາຍ ວ່າດ້ວຍ ການພິສູດຫຼັກຖານທາງເອເລັກໂຕຣນິກ;
10. ໂຄງການສ້າງດຳລັດ ວ່າດ້ວຍ ການສົ່ງເສີມທຸລະກິດແບບສະຕາດອັບ;
11. ໂຄງການສ້າງດຳລັດ ວ່າດ້ວຍ ການຫັນເປັນດີຈີຕອນ;
12. ໂຄງການສ້າງດຳລັດ ວ່າດ້ວຍ ການເຊື່ອມຕໍ່ ແລະ ແບ່ງປັນຂໍ້ມູນພາກລັດຜ່ານລະບົບ GDX;
13. ໂຄງການສ້າງດຳລັດ ວ່າດ້ວຍ ມາດຕະຖານການເຊື່ອມຕໍ່ພາກລັດ;
14. ໂຄງການສ້າງດຳລັດ ວ່າດ້ວຍ ການຄຸ້ມຄອງຂໍ້ມູນດີຈີຕອນພາກລັດ;
15. ໂຄງການສ້າງດຳລັດ ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ລາຍການປະເພດບໍລິການລັດທົ່ວໄປ;
16. ໂຄງການສ້າງດຳລັດ ວ່າດ້ວຍ ການປະກາດ ແລະ ຮັບຮອງປະເພດຂໍ້ມູນເປີດພາກລັດ;
17. ໂຄງການສ້າງດຳລັດ ວ່າດ້ວຍ ການຢັ້ງຢືນຕົວຕົນດີຈີຕອນ;
18. ໂຄງການສ້າງດຳລັດ ວ່າດ້ວຍ ການຢັ້ງຢືນເອກະສານລັດດີຈີຕອນ;
19. ໂຄງການສ້າງດຳລັດ ວ່າດ້ວຍ ດັດສະນີຄວາມພ້ອມຫັນເປັນດີຈີຕອນ;
20. ໂຄງການສ້າງດຳລັດ ວ່າດ້ວຍ ການແລກປ່ຽນຂໍ້ມູນຂ່າວສານພາກລັດ;
21. ໂຄງການສ້າງດຳລັດ ວ່າດ້ວຍ ໂຄງລ່າງພື້ນຖານໂທລະຄົມມະນາຄົມ;
22. ໂຄງການສ້າງດຳລັດ ວ່າດ້ວຍ ແຜນພັດທະນາໂທລະຄົມມະນາຄົມ;
23. ໂຄງການສ້າງດຳລັດ ວ່າດ້ວຍ ຊັບສິນດີຈີຕອນ;
24. ໂຄງການສ້າງດຳລັດ ວ່າດ້ວຍ ການບໍລິການໂທລະຄົມ ແລະ ອິນເຕີເນັດ;
25. ໂຄງການສ້າງດຳລັດ ວ່າດ້ວຍ ການຄຸ້ມຄອງໝາຍເລກໂທລະຄົມມະນາຄົມ ແລະ ອິນເຕີເນັດ;
26. ໂຄງການສ້າງດຳລັດ ວ່າດ້ວຍ ການປົກປ້ອງຜູ້ໃຫ້ ແລະ ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;
27. ໂຄງການປັບປຸງດຳລັດ ວ່າດ້ວຍ ການບໍລິການ ແລະ ບໍລິຫານລັດດີຈີຕອນ;
28. ໂຄງການປັບປຸງດຳລັດ ວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ;
29. ໂຄງການປັບປຸງດຳລັດ ວ່າດ້ວຍ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;
30. ໂຄງການປັບປຸງດຳລັດ ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ອິນເຕີເນັດ ລະຫັດຊື່ອິນເຕີເນັດ ຂອງ ສປປ ລາວ;
31. ໂຄງການປັບປຸງຍຸດທະສາດບໍລິຫານລັດແບບດີຈີຕອນໄລຍະ 10 ປີ (2026-2035);
32. ໂຄງການຍຸດທະສາດການພັດທະນາເຂດເຕັກໂນໂລຊີລະດັບສູງ;
33. ໂຄງການສ້າງຍຸດທະສາດການພັດທະນາໂຄງລ່າງພື້ນຖານດີຈີຕອນແຫ່ງຊາດ;
34. ໂຄງການສ້າງຍຸດທະສາດພັດທະນາໝາຍເລກອິນເຕີເນັດ ຮຸ້ນ 6 (IP6) ແຫ່ງຊາດ;
35. ໂຄງການສ້າງແຜນຍຸດທະສາດປັນຍາປະດິດແຫ່ງຊາດ;
36. ໂຄງການສ້າງແຜນຍຸດທະສາດກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ປີ 2026-2030;
37. ໂຄງການສ້າງແຜນຜັງແຫ່ງຊາດກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ສະບັບປີ 2024;
38. ໂຄງການສ້າງແຜນຍຸດທະສາດການຄຸ້ມຄອງທີ່ດິນກະຊວງເຕັກໂນໂລຊີ ແລະ ການສື່ສານ;
39. ໂຄງການສ້າງແຜນຍຸດທະສາດດາວທຽມລາວ 2026-2030;
40. ໂຄງການສ້າງແຜນຍຸດທະສາດຂໍ້ມູນແຫ່ງຊາດ;
41. ໂຄງການສ້າງຍຸດທະສາດການພັດທະນາ ແລະ ສົ່ງເສີມການນຳໃຊ້ເຕັກໂນໂລຊີກຸ່ມຂໍ້ມູນຜູກພັນແຫ່ງຊາດ (Lao National Blockchain Strategy).
42. ໂຄງການຕິດຕາມກວດກາ ແລະ ປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ;
43. ໂຄງການສຳຫຼວດ ແລະ ເກັບກຳຂໍ້ມູນ ກ່ຽວກັບການນຳໃຊ້ນິຕິກຳທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ ດ້ານເຕັກໂນໂລຊີດີຈີຕອນ ໃນຂອບເຂດທົ່ວປະເທດ.
44. ໂຄງການສຳຫຼວດ ແລະ ເກັບກຳຂໍ້ມູນ ປະເມີນເສດຖະກິດດີຈີຕອນ ຂອງ ສປປ ລາວ;

45. ໂຄງການສ້າງນິຕິກຳກ່ຽວກັບການເຮັດທົດລອງ ເພື່ອສະໜັບສະໜູນການດຳເນີນທຸລະກິດດ້ານເຕັກໂນໂລຊີດິຈິຕອນໃໝ່ (Digital Sandbox).
46. ໂຄງການສ້າງ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງກັບວຽກ ຈຸດເຊື່ອມຕໍ່ສາຍສິ່ງໂທລະຄົມມະນາຄົມ ທີ່ຊາຍແດນ
47. ໂຄງການສ້າງລະບຽບການ ການຄຸ້ມຄອງນຳໃຊ້ສູນຂໍ້ມູນ, ຖານຂໍ້ມູນ ແລະ ຂໍ້ມູນ;
48. ໂຄງການກຳນົດຕົວຊີ້ວັດ ການຄຸ້ມຄອງຕະຫຼາດ ແລະ ການແຂ່ງຂັນດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;

### 4.2.3 ແຜນວຽກຈຸດສຸມ ທີ 3: ພັດທະນາລະບົບບໍລິຫານລັດ ແບບດິຈິຕອນ

ເພື່ອບັນລຸແຜນວຽກຈຸດສຸມທີ່ 3 ຈະຕ້ອງໄດ້ຈັດຕັ້ງປະຕິບັດບັດດາ ວຽກງານຈຸດສຸມ ແລະ ໂຄງການດັ່ງນີ້:

**1. ຄາດໝາຍ ແລະ ຕົວຊີ້ວັດ**

- ຫັນທຸກບໍລິການພື້ນຖານທີ່ຈຳເປັນຂອງພາກລັດ ເປັນການບໍລິການຜ່ານອອນລາຍ ໃຫ້ສຳເລັດ 50%, ເພື່ອຍົກລະດັບ ດັດສະນີຕົວຊີ້ວັດແຕ່ລະໜ່ວຍ ດ້ານການບໍລິຫານລັດດິຈິຕອນ ແລະ ດ້ານການພັດທະນາດິຈິຕອນ ໃຫ້ດີຂຶ້ນ;
- ສືບຕໍ່ສ້າງ ແລະ ຂະຫຍາຍລະບົບເຄືອຂ່າຍພາຍໃນພາກລັດ ເຊື່ອມໂຍງບັນດາອົງການຈັດຕັ້ງພັກ-ລັດ ກະຊວງ/ອົງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ຈາກປະຈຸບັນ 67% (36 ຫ້ອງການ) ໃຫ້ໄດ້ 100% (53 ຫ້ອງການ);
- ສືບຕໍ່ຄົ້ນຄ້ວາ ແລະ ພັດທະນາລະບົບເຊື່ອມໂຍງຂໍ້ມູນພາກລັດ (Government Data Exchange) ເພື່ອແລກປ່ຽນ ແລະ ລວມສູນຂໍ້ມູນພາກລັດ, ສ້າງລະບົບຂໍ້ມູນເປີດພາກລັດ (Open Government Data) ເພື່ອໃຫ້ທຸກພາກສ່ວນສາມາດນຳໃຊ້ເພື່ອພັດທະນາບໍລິການໃຫ້ປະຊາຊົນ, ລວມທັງພັດທະນາ Dashboard ເພື່ອເປັນມາດຕະຖານໃນບໍລິຫານຂໍ້ມູນສະຖິຕິພາກລັດ ໃຫ້ເປັນເອກະພາບ;
- ສືບຕໍ່ຂະຫຍາຍການນຳໃຊ້ລະບົບກອງປະຊຸມທາງໄກ (VC) ໃຫ້ແກ່ຫ້ອງການລັດຢູ່ສູນກາງ ແລະ ທ້ອງຖິ່ນ ຈາກປະຈຸບັນ 47% (25 ພາກສ່ວນ) ໃຫ້ໄດ້ 100% (53 ພາກສ່ວນ);
- ສືບຕໍ່ຂະຫຍາຍການນຳໃຊ້ລະບົບອີເມວ (Email) ຂອງພາກລັດ ຈາກ 37% (20 ພາກສ່ວນ) ໃຫ້ໄດ້ 75% (40 ພາກສ່ວນ) ຢູ່ສູນກາງ ແລະ ທ້ອງຖິ່ນ;
- ສືບຕໍ່ພັດທະນາ, ປັບປຸງ ແລະ ຂະຫຍາຍການນຳໃຊ້ບັນດາລະບົບຫ້ອງການທັນສະໄໝຂອງພາກລັດ ຢູ່ສູນກາງ ແລະ ທ້ອງຖິ່ນ ເປັນຕົ້ນ ລະບົບຫ້ອງການທັນສະໄໝ (e-Office) ຂັ້ນກະຊວງ/ອົງການ/ແຂວງ/ນະຄອນຫຼວງ ຈາກ 39% (21 ພາກສ່ວນ) ໃຫ້ໄດ້ 75% (40 ພາກສ່ວນ);
- ຂະຫຍາຍການນຳໃຊ້ລະບົບຈັດເກັບ ແລະ ນຳໃຊ້ເອກະສານຮ່ວມກັນຂອງພາກລັດ G-Share/G-Drive ຈາກ 64% (34 ພາກສ່ວນ) ໃຫ້ໄດ້ 100% (53 ພາກສ່ວນ);
- ສືບຕໍ່ຂະຫຍາຍການນຳໃຊ້ລະບົບ G-Web Platform ໃຫ້ໄດ້ຕາມຄາດໝາຍທີ່ວາງໄວ້ 45 ພາກສ່ວນ;
- ຂະຫຍາຍການນຳໃຊ້ລະບົບສື່ສານພາກລັດ G-Chat ຈາກ 71% (38 ພາກສ່ວນ) ໃຫ້ໄດ້ 100% (53 ພາກສ່ວນ);
- ສືບຕໍ່ສ້າງສູນບໍລິການຂໍ້ມູນຂ່າວສານແບບເອເລັກໂຕຣນິກຢູ່ທ້ອງຖິ່ນ (ປະຈຳແຂວງ ຫຼື ເມືອງ) ໃຫ້ໄດ້ອີກ ຈຳນວນ 2 ພາກ (ຢູ່ພາກເໜືອ ແລະ ພາກໃຕ້).

**2. ແຜນງານສຸມ**

1. ການພັດທະນາ ໂຄງລ່າງພື້ນຖານ ເພື່ອຮອງຮັບການພັດທະນາ ລະບົບບໍລິຫານລັດດິຈິຕອນ;
2. ພັດທະນາເຕັກໂນໂລຊີ, ປັນຍາປະດິດ ແລະ ນະວັດຕະກຳໃຫມ່ ເພື່ອນຳໃຊ້ເຂົ້າໃນລະບົບບໍລິຫານ ແລະ ບໍລິການລັດແບບດິຈິຕອນ;
3. ປັບປຸງ ແລະ ຂະຫຍາຍການນຳໃຊ້ລະບົບບໍລິຫານລັດດິຈິຕອນ ໃຫ້ກວມເອົາຫ້ອງການສຳຄັນໃນທົ່ວປະເທດ;
4. ປັບປຸງ ແລະ ຂະຫຍາຍການນຳໃຊ້ລະບົບບໍລິການລັດດິຈິຕອນໃຫ້ສາມາດບໍລິການແກ່ສັງຄົມໄດ້ຢ່າງສະດວກ;
5. ຊຸກຍູ້ການພັດທະນາ ແລະ ການນຳໃຊ້ ລະບົບບໍລິຫານລັດດິຈິຕອນທົ່ວປະເທດ;

6. ສືບຕໍ່ສູ້ຊຸ້ນພັດທະນາ ແລະ ຂະຫຍາຍວຽກງານບໍລິຫານລັດ, ການບໍລິການປະຊາຊົນ ແລະ ທຸລະກິດເປັນລະບົບດິຈິຕອນທັນສະໄໝຢ່າງກ້ວາງຂວາງ ລວມສູນຜ່ານປະຕູຖານຂໍ້ມູນ (LaoPortal) ເພື່ອຂັບເຄື່ອນການພັດທະນາລັດຖະບານດິຈິຕອນ ທັນເປັນອຸດສາຫະກຳ ແລະ ທັນສະໄໝຢ່າງໝັ້ນຄົງຍືນຍົງ;
7. ສືບຕໍ່ສົ່ງເສີມການພັດທະນາລະບົບບໍລິການສັງຄົມຕ່າງໆ ໃຫ້ມີຄຸນນະພາບ, ມີຄວາມຍຸຕິທຳ ແລະ ປອດໄພ ເຊັ່ນ: L-MOOCs, e-Vote, QR-NameCard, ແລະ ອື່ນໆ;
8. ສືບຕໍ່ສ້າງຂໍ້ມູນຂ່າວສານ ໃນລະບົບ LaoPedia ໃຫ້ມີຂໍ້ມູນຂ່າວສານຂອງທຸກກະຊວງ ແລະ ແຂວງ/ນະຄອນຫຼວງ;
9. ພັດທະນາ ລະບົບແບບຟອມພາກລັດ (G-form) ແລະ ຊຸກຍູ້ການນຳໃຊ້ ແລະ ຝຶກອົບຮົມໃຫ້ບັນດາຫ້ອງການລັດ ແລະ ບັນດາແຂວງ;
10. ພັດທະນາ ລະບົບການຢັ້ງຢືນເອກະສານຜ່ານລະບົບຄິວອາ (QR verify system) ແລະ ຊຸກຍູ້ການນຳໃຊ້ ແລະ ຝຶກອົບຮົມໃຫ້ບັນດາຫ້ອງການລັດ ແລະ ບັນດາແຂວງ.

**3. ໂຄງການສະໜັບສະໜູນວຽກງານຈຸດສຸມ**

1. ໂຄງການການປັບປຸງ ແລະ ຂະຫຍາຍ ລະບົບເຄືອຂ່າຍພາກລັດໃຫ້ບັນດາອົງການຈັດຕັ້ງພັກ-ລັດ ຂັ້ນສູນກາງ (Government Network);
2. ໂຄງການການປັບປຸງ ແລະ ຂະຫຍາຍ ລະບົບເຄືອຂ່າຍພາກລັດໃຫ້ໄດ້ຫ້ອງການເມືອງສຳຄັນທົ່ວປະເທດ (Government Network);
3. ໂຄງການພັດທະນາໂຄງລ່າງພື້ນຖານອິນເຕີເນັດເຂົ້າຫາຫ້ອງການລັດທົ່ວປະເທດ (G-net);
4. ໂຄງການພັດທະນາລະບົບແລກປ່ຽນຂໍ້ມູນພາກລັດ (DGX);
5. ໂຄງການພັດທະນາລະບົບສະແດງຜົນການບໍລິຫານລັດ (Government Deshboard);
6. ໂຄງການປັບປຸງ ແລະ ພັດທະນາລະບົບເຄືອຂ່າຍພາຍໃນ ແລະ ລະບົບ ICT ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
7. ພັດທະນາລະບົບຕິດຕາມລະບົບເຄືອຂ່າຍພາກລັດໃຫ້ໄດ້ 01 ລະບົບ (Government Network Mornitoring System)
8. ໂຄງການຕິດຕາມຄວາມປອດໄພທາງໄຊເບີຂອງລະບົບລັດດິຈິຕອນທົ່ວປະເທດ (Firewall, Anti virus, SSL system);
9. ພັດທະນາ ແລະ ປະຍຸກໃຊ້ ເຕັກໂນໂລຊີ ປັນຍາປະດິດ AI ເຂົ້າໃນລະບົບບໍລິຫານລັດ;
10. ປັບປຸງ ແລະ ຂະຫຍາຍລະບົບອີເມວ (Email) ຂອງພາກລັດ;
11. ໂຄງການພັດທະນາ ລະບົບຮັບສົ່ງເອກະສານ ຜ່ານອອນລາຍ;
12. ໂຄງການປັບປຸງ ແລະ ຂະຫຍາຍລະບົບເວັບໄຊຂອງພາກລັດ G-Web Platform;
13. ໂຄງການປັບປຸງ ແລະ ຂະຫຍາຍລະບົບກອງປະຊຸມທາງໄກ (VC);
14. ໂຄງການພັດທະນາລະບົບປະເມີນຜົນ ແລະ ສະແດງຂໍ້ມູນ ຂອງລັດຖະບານ (digital government dashbroad);
15. ໂຄງການສ້າງຕົວຊີ້ວັດການພັດທະນາການບໍລິຫານລັດ ແລະ ບໍລິການລັດດິຈິຕອນທົ່ວປະເທດ (digital Government index).
16. ໂຄງການສ້າງກົນໄກການປະສານງານ ແລະ ການເຮັດວຽກຮ່ວມກັນຂອງໜ່ວຍງານບໍລິຫານລັດດິຈິຕອນທົ່ວປະເທດ;
17. ໂຄງການສ້າງສູນບໍລິການຂໍ້ມູນຂ່າວສານແບບເອເລັກໂຕຣນິກຢູ່ທ້ອງຖິ່ນ (ປະຈຳແຂວງ ຫຼື ເມືອງ);
18. ໂຄງການພັດທະນາ ພາສາລາວໃນລະບົບຄອມພິວເຕີ Lao Font;
19. ໂຄງການພັດທະນາ ເຕັກໂນໂລຊີພາສາລາວ (Lao font solution : OCR, Voice-Text-Voice)
20. ໂຄງການສ້າງລະບົບຂໍ້ມູນເປີດພາກລັດ (Open Government Data);

21. ໂຄງການພັດທະນາ ລະບົບປະຕູຂໍ້ມູນ e-portal;
22. ປັບປຸງ ແລະ ເຊື່ອມໂຍງຂໍ້ມູນການບໍລິການລັດຜ່ານລະບົບບໍລິການລັດ Gov-X;
23. ໂຄງການປັບປຸງ ແລະ ຊຸກຍູ້ການນໍາໃຊ້ ລະບົບຢັ້ງຢືນລາຍເຊັນດິຈິຕອນ ເຂົ້າໃນລະບົບບໍລິຫານດິຈິຕອນ;
24. ໂຄງການພັດທະນາ ແລະ ຊຸກຍູ້ການນໍາໃຊ້ ລະບົບຢັ້ງຢືນຕົວຕົນດິຈິຕອນ ເຂົ້າໃນລະບົບບໍລິຫານ ແລະ ບໍລິການລັດດິຈິຕອນ;
25. ໂຄງການປັບປຸງ ແລະ ຂະຫຍາຍລະບົບສູນຮຽນຮູ້ທາງໄກແບບເປີດ L-MOOCs;
26. ປັບປຸງລະບົບ e-Vote ໃຫ້ສາມາດຮັບຮອງການລົງຄະແນນສຽງທຸກຮູບແບບ;
27. ໂຄງການຊຸກຍູ້ ແລະ ສົ່ງເສີມການສ້າງຂໍ້ມູນໃນລະບົບກະດານຂ່າວຊຸມຊົນພາກລັດ Laopedia;
28. ໂຄງການພັດທະນາ ລະບົບແບບຟອມພາກລັດ (G-form);
29. ໂຄງການປັບປຸງ ແລະ ຊຸກຍູ້ການນໍາໃຊ້ ລະບົບແບບຟອມອອນລາຍ G-Form;
30. ໂຄງການພັດທະນາ ລະບົບການຢັ້ງຢືນ ເອກະສານຜ່ານລະບົບຄິວອາ (QR verify system);
31. ໂຄງການພັດທະນາ ແລະ ປັບປຸງ ລະບົບຮັບໃຊ້ວຽກງານຫ້ອງການທັນສະໄໝທົ່ວໄປ (e-Card, QR, e-Contract);
32. ໂຄງການສ້າງຄວາມເຂັ້ມແຂງການຫັນເປັນດິຈິຕອນ ຜ່ານລະບົບບໍລິຫານ ແລະ ບໍລິການລັດດິຈິຕອນ ໃຫ້ແກ່ພະນັກງານ ຂະແໜງເຕັກໂນໂລຊີ ແລະ ການສື່ສານ ຂອບເຂດທົ່ວປະເທດ (TOT);
33. ໂຄງການສ້າງລະບົບເກັບກໍາຂໍ້ມູນການໃຊ້ບໍລິການພລັດຟອມ ເພື່ອການວິເຄາະຕະຫຼາດ;

### 4.2.4 ແຜນວຽກຈຸດສຸມທີ 4: ພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ດິຈິຕອນ

ເພື່ອບັນລຸແຜນວຽກຈຸດສຸມທີ່ 4 ຈະຕ້ອງໄດ້ຈັດຕັ້ງປະຕິບັດບັດດາ ວຽກງານຈຸດສຸມ ແລະ ໂຄງການດັ່ງນີ້:

**1. ຄາດໝາຍ ແລະ ຕົວຊີ້ວັດ**

- ສ້າງແຜນຍຸດທະສາດການພັດທະນາໂຄງລ່າງພື້ນຖານ ດິຈິຕອນ ແຫ່ງຊາດ;
- ຄົ້ນຄວ້າ, ຊຸກຍູ້ການນໍາໃຊ້ໂຄງລ່າງພື້ນຖານດິຈິຕອນ ຮ່ວມກັນຢ່າງມີປະສິດທິພາບເປັນຕົ້ນ ການນໍາໃຊ້ສາຍສົ່ງ, ເສົາສົ່ງສັນຍານໂທລະຄົມມະນາຄົມ ສ້າງໃຫ້ມີບໍລິສັດຜູ້ສະໜອງໂຄງລ່າງພື້ນຖານດ້ານໂທລະຄົມມະນາຄົມ;
- ການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໄປສູ່ເຂດສາມສ້າງ, ເຂດຫ່າງໄກສອກຫຼີກ ແລະ ເຂດຈຸດສຸມຂອງລັດຖະບານ ນໍາໃຊ້ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ເພື່ອໃຫ້ປະຊາຊົນໃນເຂດດັ່ງກ່າວ ສາມາດເຂົ້າເຖິງການຊົມໃຊ້ ໂທລະຄົມມະນາຄົມ ແລະ ອິນເຕີເນັດໄດ້;
- ຮັບປະກັນລະບົບການເຊື່ອມຕໍ່ ເຕັກນິກການລວມສູນການສື່ສານ ສັນຍານອິນເຕີເນັດ ຢູ່ນະຄອນຫຼວງວຽງຈັນໃຫ້ໄດ້ 100%, ໂທລະສັບ ຂາອອກ ຕ່າງປະເທດ ໃຫ້ໄດ້ 100%, ຂໍ້ຄວາມສັ້ນ ຂາເຂົ້າ ຕ່າງປະເທດ ໃຫ້ໄດ້ 100%, ຂໍ້ຄວາມສັ້ນ ຂາອອກ ຕ່າງປະເທດ ໃຫ້ໄດ້ 100% ຜ່ານ ສອຊ ແລະ ເຊື່ອມໂຍງ ບັນດາປະເທດພາກພື້ນ ແລະ ສາກົນ;
- ສ້າງແຜນພັດທະນາເລກໝາຍອິນເຕີເນັດ ຣຸ່ນທີ່ 6 (IPv6) ແຫ່ງຊາດ ໃຫ້ສໍາເລັດ, ພ້ອມທັງຄົ້ນຄວ້າ, ຊຸກຍູ້, ສົ່ງເສີມການນໍາໃຊ້ ເລກໝາຍອິນເຕີເນັດ ຣຸ່ນທີ່ 6 (IPv6) ພາຍໃນປະເທດ ແລະ ເຊື່ອມຕໍ່ນໍາໃຊ້ໃນພາກພື້ນ ແລະ ສາກົນ;
- ຈັດຕັ້ງປະຕິບັດປັບປຸງລະບົບຄຸ້ມຄອງ ລະຫັດຊື່ອິນເຕີເນັດ ສູງສຸດແຫ່ງຊາດ ເພື່ອຄຸ້ມຄອງ, ສົ່ງເສີມ ແລະ ໃຫ້ບໍລິການລະຫັດຊື່ອິນເຕີເນັດ ສູງສຸດ ແຫ່ງຊາດ .LA ແລະ .ລາວ ໃຫ້ຮັບປະກັນ 100%;
- ພັດທະນາ ແລະ ຂະຫຍາຍສູນອິນເຕີເນັດ ແຫ່ງຊາດ ດ້ານໂຄງລ່າງພື້ນຖານ, ລະບົບເຕັກນິກ ແລະ ລະບົບຄວາມປອດໄພ ໃຫ້ຮັບປະກັນ 100% ເພື່ອເປັນບ່ອນຕິດຕັ້ງລະບົບຂອງ ສອຊ ເຊັ່ນ: ລະບົບສູນກາງອິນເຕີເນັດພາຍໃນ ແລະ ຕ່າງປະເທດ, ລະບົບສູນກາງໂທລະສັບ-ຂໍ້ຄວາມສັ້ນ ພາຍໃນ ແລະ ຕ່າງປະເທດ, ລະບົບລະຫັດຊື່ອິນເຕີເນັດ ສູງສຸດແຫ່ງຊາດ (.la, .ລາວ), ລະບົບອອກໃບຮັບຮອງລາຍເຊັນເອເລັກໂຕຣນິກ (CA);

- ປັບປຸງລະບົບຕິດຕາມ, ກວດກາເຝົ້າລະວັງ (Network Operation Center, NOC) ລະບົບເຕັກນິກຂອງ ສູນອິນເຕີເນັດ ແຫ່ງຊາດ ເປັນແຕ່ລະໄລຍະໃຫ້ມີປະສິດທິພາບ ເພື່ອຮັບປະກັນການບໍລິການ (SLA)ໃຫ້ໄດ້ 99,99%;
- ປັບປຸງລະບົບເຄືອຂ່າຍອິນເຕີເນັດ ຂອງຕຶກ A, B, C, D ແລະ ຕຶກສູນຝຶກອົບຮົມໄອຊີທີ ໃຫ້ໄດ້ມາດຕະຖານ, ຄວາມປອດໄພ, ສະດວກສະບາຍ ແລະ ທັນສະໄໝ ເພື່ອຕອບສະໜອງໃຫ້ແກ່ວຽກງານບໍລິຫານ, ການຮຽນ-ການສອນ ແລະ ການຝຶກອົບຮົມ ພາຍໃນສະຖາບັນ ເຕັກໂນໂລຊີ ແລະ ການສື່ສານ;
- ສ້າງ ແລະ ພັດທະນາລະບົບເຕັກໂນໂລຊີຂໍ້ມູນຂ່າວສານ (ລະບົບຫໍສະໝຸດເອເລັກໂຕຣນິກ, ລະບົບຄຸ້ມຄອງນັກສຶກສາ, ເວັບໄຊ, ລະບົບຄຸ້ມຄອງພະນັກງານ, ລະບົບການຮຽນການສອນແບບທັນສະໄໝ);
- ສູ້ຊົນປັບປຸງ ແລະ ອາຄານ, ລະບົບໂຄງລ່າງພື້ນຖານ ອາຄານສຳນັກງານ ຂອງກະຊວງໃຫ້ເປັນອາຄານແບບທັນສະໄໝ ເພື່ອຮອງຮັບການຂະຫຍາຍຕົວ ແລະ ການເຮັດວຽກແບບໃໝ່ໃນຍຸກດິຈິຕອນ ໂດຍນໍາໃຊ້ເຕັກໂນໂລຊີເຂົ້າຊ່ວຍ ຮັບປະກັນຄວາມປອດໄພ, ປະຢັດພະລັງງານ ແລະ ເປັນມິດກັບສິ່ງແວດລ້ອມ.

**2. ແຜນງານ**

1. ປັບປຸງ ແລະ ຂະຫຍາຍ ໂຄງລ່າງພື້ນຖານ ລະບົບສາຍແກ້ວໄຍນໍາແສງ ແລະ ລະບົບສື່ສານອິນເຕີເນັດຄວາມໄວສູງແບບມີສາຍ (FTTx) ແລະ ບໍ່ມີສາຍ ໄປສູ່ບັນດາໝູ່ບ້ານຕິດພັນກັບວຽກງານສາມສ້າງ;
2. ປັບປຸງວິສາຫະກິດໂທລະຄົມມະນາຄົມ ແລະ ຜູ້ໃຫ້ບໍລິການອິນເຕີເນັດ ໃຫ້ສອດຄ່ອງກັບສະຖານະການ ແລະຄວາມກ້າວໜ້າຂອງອຸດສາຫະກໍາດິຈິຕອນ;
3. ພັດທະນາລະບົບການສື່ສານຜ່ານດາວທຽມ ໃຫ້ເປັນໂຄງລ່າງພື້ນຖານດ້ານໂທລະຄົມມະນາຄົມຮັບປະກັນການເຊື່ອມຕໍ່ ໃຫ້ກັບລະບົບການສື່ສານທັນສະໄໝ, ທົ່ວເຖິງ, ຄຸນນະພາບສູງ ແລະ ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ;
4. ສືບຕໍ່ ສ້າງແຜນຍຸດທະສາດການພັດທະນາໂຄງລ່າງພື້ນຖານ ດິຈິຕອນ ແຫ່ງຊາດ;
5. ຄົ້ນຄວ້າ, ຊຸກຍູ້ ການນໍາໃຊ້ ໂຄງລ່າງພື້ນຖານດິຈິຕອນ ຮ່ວມກັນຢ່າງມີປະສິດທິພາບເປັນຕົ້ນການນໍາໃຊ້ສາຍສົ່ງ, ເສົາສົ່ງສັນຍານໂທລະຄົມມະນາຄົມ ສ້າງໃຫ້ມີບໍລິສັດຜູ້ສະໜອງໂຄງລ່າງພື້ນຖານ ດ້ານໂທລະຄົມມະນາຄົມ;
6. ການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໄປສູ່ເຂດສາມສ້າງ, ເຂດຫ່າງໄກສອກຫຼີກ ແລະ ເຂດຈຸດສຸມຂອງລັດຖະບານ ນໍາໃຊ້ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ເພື່ອໃຫ້ປະຊາ ຊົນໃນເຂດດັ່ງກ່າວ ສາມາດເຂົ້າເຖິງການຊົມໃຊ້ ໂທລະຄົມມະນາຄົມ ແລະ ອິນເຕີເນັດໄດ້;
7. ຮັບປະກັນລະບົບລວມສູນການສື່ສານ ສັນຍານອິນເຕີເນັດ, ໂທລະສັບ ແລະ ຂໍ້ຄວາມສັ້ນພາຍໃນ ແລະ ຕ່າງປະເທດ ຜ່ານ ສອຊ ແລະ ເຊື່ອມໂຍງ ບັນດາປະເທດພາກພື້ນ ແລະ ສາກົນ;
8. ສືບຕໍ່ ສ້າງແຜນພັດທະນາເລກໝາຍອິນເຕີເນັດຮຸ່ນທີ່ 6 (IPv6) ແຫ່ງຊາດ, ພ້ອມທັງຄົ້ນຄວ້ານໍາໃຊ້ເລກໝາຍອິນເຕີເນັດ ຮຸ່ນທີ່ 6 (IPv6) ພາຍໃນປະເທດ ແລະ ເຊື່ອມຕໍ່ນໍາໃຊ້ໃນພາກພື້ນ ແລະ ສາກົນ;
9. ຈັດຕັ້ງປະຕິບັດປັບປຸງລະບົບຄຸ້ມຄອງ ລະຫັດຊື່ອິນເຕີເນັດ ສູງສຸດແຫ່ງຊາດ ເພື່ອຮັບປະກັນການຄຸ້ມຄອງ, ສົ່ງເສີມ ແລະ ໃຫ້ບໍລິການລະຫັດຊື່ອິນເຕີເນັດ ສູງສຸດ ແຫ່ງຊາດ .LA ແລະ .ລາວ ໃຫ້ມີປະສິດທິພາບ;
10. ພັດທະນາ ແລະ ຂະຫຍາຍ ສູນອິນເຕີເນັດ ແຫ່ງຊາດ ໃຫ້ຮັບປະກັນດ້ານໂຄງລ່າງພື້ນຖານ, ລະບົບເຕັກນິກ ແລະລະບົບຄວາມປອດໄພ ເພື່ອເປັນບ່ອນຕິດຕັ້ງລະບົບຂອງ ສອຊ ເຊັ່ນ: ລະບົບສູນກາງອິນເຕີເນັດ ພາຍໃນ ແລະຕ່າງປະເທດ, ລະບົບສູນກາງໂທລະສັບ-ຂໍ້ຄວາມສັ້ນ ພາຍໃນ ແລະ ຕ່າງປະເທດ, ລະບົບລະຫັດຊື່ອິນເຕີເນັດ ສູງສຸດແຫ່ງຊາດ (.La, .ລາວ), ລະບົບອອກໃບຮັບຮອງລາຍເຊັນເອເລັກໂຕຣນິກ (CA);
11. ປັບປຸງລະບົບຕິດຕາມ, ກວດກາເຝົ້າລະວັງ (Network Operation Center, NOC) ລະບົບເຕັກນິກຂອງ ສູນອິນເຕີເນັດ ແຫ່ງຊາດ ຢ່າງມີປະສິດທິພາບ;
12. ລົງຊຸກຍູ້ ແລະ ຕິດຕາມການເກັບລາຍຮັບເຂົ້າກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ໃຫ້ໄດ້ຕາມແຜນການຄາດຄະເນລາຍຮັບຂອງກອງທຶນ;

13. ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ສະໜອງທຶນໃຫ້ແກ່ບັນດາໂຄງການ ທີ່ສະພາບໍລິຫານກອງທຶນພັດທະນາໂທລະຄົມມະນາ ແລະ ການຫັນເປັນດິຈິຕອນ ຮັບຮອງຕາມທ່າແຮງຂອງກອງທຶນໃຫ້ເໝາະສົມ;
14. ສົ່ງເສີມບັນດາໂຄງການຮ່ວມທຶນຕ່າງໆ ຮ່ວມກັບບັນດາບໍລິສັດດ້ານໂທລະຄົມມະນາຄົມ ແລະ ບໍລິສັດທຸລະກິດຕ່າງໆ ໃນການພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນຂອງ ສປປ ລາວ;
15. ກຳນົດແຜນຍຸດຕິການໃຫ້ບໍລິການລະບົບໂທລະສັບມືຖື 2G ກ່ອນປີ 2030;
16. ສ້າງແຜນງານປັບປຸງຄຸນນະພາບການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;
17. ສ້າງແຜນງານການເຊື່ອມຕໍ່ ແລະ ກຳນົດແຜນຂະຫຍາຍເສັ້ນທາງ ຜ່ານສູນກາງອິນເຕີເນັດແຫ່ງຊາດ (National Internet Exchange: NIX) ເພື່ອອຳນວຍຄວາມສະດວກ ໃຫ້ຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດສາມາດເຊື່ອມຕໍ່ໂດຍກົງ (Peering) ແລະ ຫຼຸດຜ່ອນຕົ້ນທຶນຄ່າເຊື່ອມຕໍ່;
18. ສຶກສາສ້າງລະບົບແຈ້ງເຕືອນ ແລະ ຕອບສະໜອງເມື່ອເກີດໄພພິບັດ ແລະ ເຫດສຸກເສີນຜ່ານ ເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອໃຫ້ປະຊາຊົນໄດ້ຮັບຂໍ້ມູນແຈ້ງເຕືອນຢ່າງວ່ອງໄວ, ທົ່ວເຖິງ ແລະ ທັນສະພາບການ;
19. ສຶກສາສ້າງສະຖານີ ຮັບ-ສົ່ງ ສັນຍານ (BTS) ແບບເຄື່ອນທີ່ຂອງລັດຖະບານ ເພື່ອຮອງຮັບການໃຊ້ງານໃນກໍລະນີສຸກເສີນ ຫຼື ໄພພິບັດ;
20. ກຳນົດມາດຕະຖານ ແລະ ຂໍ້ບັງຄັບໃຫ້ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕ້ອງເຂົ້າດຳເນີນການແກ້ໄຂລະບົບໂທລະຄົມມະນາຄົມ ແລະ ອິນເຕີເນັດ ເມື່ອເກີດໄພພິບັດ.

**3. ໂຄງການສະໜັບສະໜູນວຽກງານຈຸດສຸມ**

1. ໂຄງການສ້າງໂຄງລ່າງພື້ນຖານເຕັກໂນໂລຊີກຸ່ມຂໍ້ມູນຜູກພັນແຫ່ງຊາດ (Lao National Blockchain).
2. ໂຄງການພັດທະນາໂຄງລ່າງພື້ນຖານດິຈິຕອນຂ້າມຊາຍແດນທີ່ໜ້າເຊື່ອຖື ລາວ-ຈີນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກຳລະຫວ່າງປະເທດ
3. ໂຄງການຊຸກຍູ້, ຕິດຕາມ ກວດກາ ການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມອິນເຕີເນັດ ຄວາມໄວສູງແບບມີສາຍ (FTTx) ແລະ ບໍ່ມີສາຍ ໄປສູ່ບັນດາໝູ່ບ້ານຕິດພັນກັບວຽກງານສາມສ້າງ ໄປສູ່ເຂດຫ່າງໄກຊອກຫຼີກ ຂອງບັນດາບໍລິສັດທີ່ໃຫ້ບໍລິການ;
4. ໂຄງການຍົກລະດັບຂີດຄວາມສາມາດດ້ານການບໍລິຫານ ແລະ ການບໍລິການຂອງວິສາຫະກິດໂທລະຄົມມະນາຄົມ ແລະ ຜູ້ໃຫ້ບໍລິການອິນເຕີເນັດ (ISPs) ເພື່ອຮອງຮັບການຫັນເປັນດິຈິຕອນ.
5. ໂຄງການສ້າງຖານຂໍ້ມູນທຸລະກິດ ແລະ ການບໍລິການດ້ານເຕັກໂນໂລຊີດິຈິຕອນ (Digital business directory platform) ຂອງບໍລິສັດດິຈິຕອນ ທີ່ໄດ້ຮັບໃບອະນຸຍາດຈາກ ກະຊວງເຕັກໂນໂລຊີ ແລະ ການສື່ສານ.
6. ໂຄງການສ້າງສູນຢັ້ງຢືນຄຸນນະພາບຖານລະບົບດິຈິຕອນແຫ່ງຊາດ;
7. ໂຄງການພັດທະນາ ແລະ ໃຫ້ບໍລິການລະບົບຄຸ້ມຄອງເລກໝາຍໂທລະສັບມືຖື ຂອງ ສປປ ລາວ;
8. ໂຄງການຕິດຕາມກວດກາ ການຍຸດຕິການໃຫ້ບໍລິການລະບົບໂທລະສັບມືຖື 2G ຂອງ ບໍລິສັດ ທລຄ ໃນຂອບເຂດທົ່ວປະເທດ.
9. ໂຄງການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຫ່າງໄກສອກຫຼີກ ເຂດບ້ານບໍ່ມີສັນຍານໂທລະຄົມມະນາຄົມ ໃນຂອບເຂດທົ່ວປະເທດ;
10. ໂຄງການສ້າງສູນຄຸ້ມຄອງກວດກາ ແລະ ຕິດຕາມ ຄຸນນະພາບການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດແຫ່ງຊາດ ຈຳນວນ 03 ສູນ (01 ສູນ ໃນແຕ່ລະພາກ)
11. ໂຄງການກວດກາ, ຕິດຕາມ ແລະ ກຳນົດຕົວຊີ້ວັດຄຸນນະພາບການບໍລິການເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດທົ່ວປະເທດ

12. ສ້າງລະບົບແຈ້ງເຕືອນເຫດສຸກເສີນຜ່ານເຄືອຂ່າຍໂທລະຄົມມະນາຄົມແລະ ອິນເຕີເນັດ ເພື່ອໃຫ້ປະຊາຊົນໄດ້ຮັບຂໍ້ມູນແຈ້ງເຕືອນຢ່າງວ່ອງໄວ, ທົ່ວເຖິງ ແລະ ທັນສະພາບການ;
13. ໂຄງການລະບົບກວດກາຕິດຕາມຄົນ ແລະ ພາຫະນະ ເຂົ້າ-ອອກ ສຳນັກງານ ກະຊວງເຕັກໂນໂລຊີ ແລະ ການສື່ສານ
14. ໂຄງການສຳຫຼວດ ແລະ ອອກແບບຕຶກອາຄານທີ່ເກີດອັກຄີໄພ (ອາຄານ 4 ຊັ້ນເຂດ ຫສນຍ, ບ້ານສີດຳດວນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ)
15. ໂຄງການບູລະສ້ອມແປງຕຶກສຳນັກງານທີ່ເກີດອັກຄີໄພ ອາຄານ 4 ຊັ້ນ ເຂດ ຫສນຍ, ບ້ານສີດຳດວນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
16. ໂຄງການສະໜອງເຟີນິເຈີ ແລະ ອຸປະກອນ ອາຄານ 4 ຊັ້ນເຂດ ຫສນຍ, ບ້ານສີດຳດວນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
17. ໂຄງການປັບປຸງຫ້ອງເຮັດວຽກ, ກໍ່ສ້າງບ່ອນຈອດລົດ, ປ້ອມຍາມ ຮ່ອງລະບາຍນໍ້າ ສຸຂະພິບານ, ໄຟຟ້າພາຍນອກອາຄານ ແລະ ຕິດຕັ້ງລະບົບອັກຄີໄພ (ອາຄານ ເຂດສີສະເກດ, ເຂດສາຍລົມ, ເຂດຫຼັກ 3, ເຂດດົງໂພສີ, ເຂດດອນຕິ້ວ ແລະ ອາຄານຫໍພັກ)
18. ໂຄງການປັບປຸງ ແລະ ສ້າງສູນອິນເຕີເນັດ ແຫ່ງຊາດ 4 ສູນ, ທີ່ ສາຍລົມ, ດົງໂພສີ ນະຄອນຫຼວງວຽງຈັນ, ແຂວງອຸດົມໄຊ ແລະ ແຂວງຈຳປາສັກ
19. ໂຄງການປັບປຸງຂະຫຍາຍລະບົບຄລາວ (Cloud computing) ຂອງສູນອິນເຕີເນັດ ແຫ່ງຊາດ ສຳຫຼັບ 4 ສູນ ພາກກາງ, ພາກເໜືອ ແລະ ພາກໃຕ້
20. ໂຄງການພັດທະນາ ແລະ ສ້າງລະບົບສາຍສົ່ງການເຊື່ອມຕໍ່ ລະບົບສາຍສົ່ງເພື່ອເຊື່ອມຕໍ່ 4 ສູນອິນເຕີເນັດ ແຫ່ງຊາດ ພາກກາງ, ພາກເໜືອ, ພາກໃຕ້ ເຂົ້າຫາກັນ;
21. ໂຄງການສ້າງຈຸດເຊື່ອມຕໍ່ສາຍສົ່ງໂທລະຄົມມະນາຄົມ ທີ່ຊາຍແດນ ໃນຂອບເຂດທົ່ວປະເທດ
22. ໂຄງການ ສ້າງ, ປັບປຸງ, ຂະຫຍາຍ ລະບົບສູນກາງອິນເຕີເນັດພາຍໃນ (NIX) ແລະ ຕ່າງປະເທດ (IIG)
23. ໂຄງການປັບປຸງ ຂະຫຍາຍ ລະບົບສູນກາງໂທລະສັບພາຍໃນປະເທດ (National Voice eXchange)
24. ໂຄງການປັບປຸງ ຂະຫຍາຍ ລະບົບສູນກາງຂໍ້ຄວາມສັ້ນ (SMSC) ພາຍໃນປະເທດ
25. ໂຄງການສ້າງ ປັບປຸງລະບົບໄລ່ລຽງ ຄ່າທາງຜ່ານໂທລະສັບ ພາຍໃນ ແລະ ຕ່າງປະເທດ (Billing System)
26. ໂຄງການປັບປຸງລະບົບເຕັກນິກ ແລະ ຄວາມປອດໄພ ລະບົບຄຸ້ມຄອງລະຫັດຊື່ອິນເຕີເນັດ ສູງສຸດແຫ່ງຊາດ .LA ແລະ ລາວ;
27. ໂຄງການປັບປຸງລະບົບອອກໃບຢັ້ງຢືນເອເລັກໂຕຣນິກ ແລະ ລາຍເຊັນເອເລັກໂຕນິກ (CA & Digital Signature)
28. ໂຄງການສ້າງມາດຕະຖານຄວາມປອດໄພຂໍ້ມູນຂ່າວສານ ISO-27001 ໃຫ້ທຸກລະບົບການໃຫ້ລິການຂອງສູນອິນເຕີເນັດ ແຫ່ງຊາດ;
29. ໂຄງການສ້າງສູນຂໍ້ມູນປັນຍາປະດິດ (AI) ນຳໃຊ້ພະລັງງານສະອາດ ຜ່ານໂຄງການສາທິດທີ່ໄດ້ຮ່ວມມື ແລະ ໃຫ້ທຶນຊ່ວຍເຫຼືອຂອງເອກະຊົນ;
30. ໂຄງການຮ່ວມມືກັບບໍລິສັດເອກະຊົນດຳເນີນການສຶກສາຄວາມເປັນໄປໄດ້ ໃນການສ້າງ ແລະ ພັດທະນາເຂດເສດຖະກິດປັນຍາປະດິດ (AI Economic Special Zone) ໂດຍນຳໃຊ້ພະລັງງານສະອາດ;
31. ໂຄງການຮ່ວມມືກັບບໍລິສັດເອກະຊົນດຳເນີນການສຶກສາຄວາມເປັນໄປໄດ້ໃນການລົງທຶນກໍ່ສ້າງ, ພັດທະນາ ແລະ ໃຫ້ບໍລິການສູນຂໍ້ມູນແຫ່ງຊາດ ທີ່ໄດ້ມາດຕະຖານສາກົນ ແລະ ຮູບແບບຂອງການຮ່ວມທຶນ;
32. ໂຄງການສຳຫລວດ ແລະ ອອກແບບ ສູນຂໍ້ມູນແຫ່ງຊາດ ໃຫ້ໄດ້ມາດຕະຖານ ແລະ ຄວາມປອດໄພ ຮອງຮັບວຽກງານພັດທະນາເສດຖະກິດດີຈີຕອນ ແລະ ການຫັນເປັນດີຈີຕອນ ແຫ່ງຊາດ;

33. ໂຄງການສ້າງສູນຂໍ້ມູນແຫ່ງຊາດ ແລະ ສູນສຳຮອງ ໃຫ້ໄດ້ມາດຕະຖານ ແລະ ຄວາມປອດໄພ ຮອງຮັບວຽກພັດທະນາເສດຖະກິດດີຈິຕອນ ແລະ ການຫັນເປັນດີຈິຕອນ ແຫ່ງຊາດ;
34. ໂຄງການເຊື່ອມຕໍ່ ສູນຂໍ້ມູນພາກລັດກັບ ສູນຂໍ້ມູນ ແຫ່ງຊາດ.
35. ໂຄງການສ້າງ ແລະ ພັດທະນາລະບົບຖານຂໍ້ມູນລວມ ແຫ່ງຊາດ;
36. ໂຄງການປັບປຸງ, ຈັດຊື້ ແລະ ບຳລຸງຮັກສາລະບົບເຕັກນິກ ສູນຂໍ້ມູນຂໍ້ມູນ ແຫ່ງຊາດ;
37. ໂຄງການໂຄສະນາເຜີຍແຜ່ລະບົບໃຫ້ບໍລິການສູນຂໍ້ມູນແຫ່ງຊາດ ເພື່ອສົ່ງເສີມການນຳໃຊ້ ແລະ ການສ້າງລາຍຮັບຜ່ານການຈັດສຳມະນາ;
38. ໂຄງການຈັດກິດຈະກຳສົ່ງເສີມ ຄວາມເຂົ້າໃຈກ່ຽວກັບສູນຂໍ້ມູນ, ລະບົບຂໍ້ມູນ ໃຫ້ແກ່ພາກລັດ ຂັ້ນສູນກາງ ແລະ ທ້ອງຖິ່ນທົ່ວປະເທດ;
39. ໂຄງການໂຄສະນາ ຈັດເຜີຍແຜ່ວຽກງານຂອງສູນຂໍ້ມູນແຫ່ງຊາດ ຜ່ານສື່ຕ່າງໆ ເປັນຕົ້ນ ສື່ອອນລາຍ. ສື່ໜັງສືພິມ ແລະ ໂທລະທັດ ຫຼື ອື່ນໆ;
40. ໂຄງການສຳຫຼວດ ແລະ ເກັບກຳຂໍ້ມູນ ກ່ຽວກັບລະບົບຖານຂໍ້ມູນ, ລະບົບສູນຂໍ້ມູນ ຂອງພາກລັດ ແລະ ເອກະຊົນ ພ້ອມຈັດສຳມະນາ ແລະ ປະເມີນຜົນ ນຳໄປສ້າງແຜນປັບປຸງພັດທະນາ;
41. ໂຄງການສຶກສາ, ອອກແບບ, ພັດທະນາ ເພື່ອນຳໃຊ້ລະບົບເຕັກນິກການເຊື່ອມຕໍ່ ແລະ ຈັດເກັບຂໍ້ມູນຂອງບັນດາພາກສ່ວນເຂົ້າກັບລະບົບສູນຂໍ້ມູນແຫ່ງລາດ ແລະ ຖານຂໍ້ມູນລວມ;
42. ໂຄງການພັດທະນາລະບົບວິເຄາະຂໍ້ມູນ, ການນຳໃຊ້ປັນຍາປະດິດ ເພື່ອໝູນໃຊ້ປະໂຫຍດຈາກ ລະບົບຖານຂໍ້ມູນແຫ່ງຊາດ ໃຫ້ເກີດຜົນປະໂຫຍດ;
43. ໂຄງການຈັດກິດຈະກຳ, ປະຊຸມສຳມະນາສະໜັບສະໜູນໃນການນຳໃຊ້ຂໍ້ມູນໃຫ້ເປັນປະໂຫຍດ, ປອດໄພກັບທຸກໜ່ວຍ ງານຂອງພາກລັດ, ເອກະຊົນ ແລະ ປະຊາຊົນ;
44. ໂຄງການພັດທະນາກໍ່ສ້າງບຸກຄະລາກອນ ດ້ານວິຊາສະເພາະ ຕິດພັນກັບວຽກງານຄຸ້ມຄອງ, ຍົກລະດັບດ້ານເຕັກນິກວິຊາການ ສູນຂໍ້ມູນແຫ່ງຊາດ;
45. ໂຄງການພັດທະນາບຸກຄະລາກອນ ແລະ ສ້າງມາດຕະຖານ uptime TEIR III ຕາມມາດຕະຖານ TAI-942 ຮັບປະ ກັນການທຳງານແບບຕໍ່ເນື່ອງ ຂອງສູນຂໍ້ມູນ, ດ້ານຄວາມປອດໄພຂໍ້ມູນຂ່າວສານ ແລະມາດຕະຖານ ISO ອື່ນໆ;
46. ໂຄງການຄົ້ນຄ້ວາສຶກສາ ບັນດາມາດຕະຖານດ້ານຄວາມປອດໄພ ເພື່ອໝູນໃຊ້ເຂົ້າໃນການປ້ອງກັນ ລະບົບຂໍ້ມູນ , ລະບົບໂຄງລ່າງພື້ນຖານ ແລະ ລະບົບເຕັກນິກ ຂອງສູນຂໍ້ມູນ.
47. ໂຄງການສະໜອງວັດຖຸອຸປະກອນເພື່ອບຳລຸງຮັກສາລະບົບເຕັກນິກ ສູນຂໍ້ມູນຂໍ້ມູນ ແຫ່ງຊາດ
48. ໂຄງການຊ່ວຍເຫຼືອຂອງ ສປ. ຈີນ ເພື່ອພັດທະນາໂຄງລ່າງພື້ນຖານ ຮອງຮັບການຫັນເປັນດີຈິຕອນ ໂດຍການປັບປຸງໂຄງລ່າງພື້ນຖານສູນຂໍ້ມູນແຫ່ງຊາດ ສູນຫຼັກ ແລະ ສູນສຳຮອງ.
49. ໂຄງການ ກໍ່ສ້າງຫ້ອງສາງເກັບສຳນວນ-ສຳເນົາເອກະສານກວດກາ
50. ໂຄງການ ສ້າງລະບົບຄຸ້ມຄອງວຽກງານກວດກາ ຫັນເປັນດີຈິຕອນ
51. ໂຄງການສ້າງຄຳຮ້ອງ-ຄຳສະເໜີວຽກງານກວດກາ ຫັນເປັນເອເລັກໂຕຣນິກ (ທັນສະໄໝ);
52. ໂຄງການສ້າງລະບົບຄຸ້ມຄອງແບບທັນສະໄໝເພື່ອຍົກລະດັບຄວາມສາມາດຂອງວຽກງານສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ.
53. ໂຄງການສ້າງຫ້ອງມູນເຊື້ອຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ;
54. ໂຄງການສະໜອງບໍລິການ ອິນເຕີເນັດ Free Wi-Fi ໃນຂົງເຂດການສຶກສາ, ສາທາລະນະສຸກ, ຄົມມະນາຄົມ ແລະ ສະຖານທີ່ທ່ອງທ່ຽວສຳຄັນ ທົ່ວປະເທດ;
55. ໂຄງການກວດກາຄຸນນະພາບໂທລະຄົມມະນາຄົມ ໃນຂອບເຂດທົ່ວປະເທດ;

56. ໂຄງການສ້າງສູນບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດໃນເຂດຊົນນະບົດຫ່າງໄກສອກຫຼີກໂດຍບໍ່ເສຍຄ່າ;
57. ໂຄງການສ້າງ ແລະ ພັດທະນາລະບົບຕິດຕາມສະຖານະ ແລະ ການນຳໃຊ້ໝາຍເລກໂທລະສັບມືຖື;
58. ໂຄງການສ້າງ ແລະ ພັດທະນາລະບົບຄຸ້ມຄອງໝາຍເລກໂທລະສັບ ແລະ ອິນເຕີເນັດໃຫ້ສາມາດຕິດຕາມ ແລະ ກວດກາການນຳໃຊ້;
59. ໂຄງການສ້າງ ແລະ ພັດທະນາລະບົບຕິດຕາມ ແລະ ກວດກາການອອກອະນຸຍາດໝາຍເລກໂທລະຄົມມະນາຄົມ ແລະ ອິນເຕີເນັດ;
60. ໂຄງການສ້າງ ແລະ ພັດທະນາລະບົບສະໜອງຂໍ້ມູນຜ່ານໝາຍເລກໂທລະສັບມືຖື ແບບຄົບຊຸດ;
61. ໂຄງການຊຸກຍູ້, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນ ແລະ ການຈຳໜ່າຍໝາຍເລກໂທລະສັບ ໃນແຕ່ລະໄລຍະ;
62. ໂຄງການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດຄວາມໄວສູງໃຫ້ໄປເຖິງຫ່າງໄກສອກຫຼີກ ໃນທົ່ວປະເທດ;
63. ໂຄງການລົງກວດກາຈຸດການເຊື່ອມຕໍ່ລະຫວ່າງປະເທດໃນຂອບເຂດທົ່ວປະເທດ;
64. ໂຄງການສ້າງ ແລະ ພັດທະນາລະບົບແຈ້ງເຕືອນ ແລະ ຕອບສະໜອງເມື່ອເກີດໄພພິບັດ ແລະ ເຫດສຸກເສີນຜ່ານເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ;
65. ໂຄງການຈັດຊື້ລະບົບສະຖານີສັນຍານແບບເຄື່ອນທີ່ສຳລັບຮັບມືໄພພິບັດ;
66. ໂຄງການສ້າງແຜນມາດຕະການ ຟື້ນຟູລະບົບໂທລະຄົມ ເມື່ອເກີດໄພພິບັດ;
67. ໂຄງການປະເມີນຂີດຄວາມສາມາດຂອງໂຄງລ່າງພື້ນຖານໂທລະຄົມມະນາຄົມ ເພື່ອສົ່ງເສີມການນຳໃຊ້;

### 4.2.5 ແຜນວຽກຈຸດສຸມທີ 5: ຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ

ເພື່ອບັນລຸແຜນວຽກຈຸດສຸມທີ່ 5 ຈະຕ້ອງໄດ້ຈັດຕັ້ງປະຕິບັດບັດດາ ວຽກງານຈຸດສຸມ ແລະ ໂຄງການດັ່ງນີ້:

**1. ດ້ານກົດໝາຍ ແລະ ຕົວຊີ້ວັດ**

- ປັບປຸງກົດໝາຍ ວ່າດ້ວຍ ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ບັນດານິຕິກຳລຸ່ມກົດໝາຍ;
- ຈັດສັນ ແລະ ອະນຸຍາດຄື້ນຄວາມຖີ່ວິທະຍຸສື່ສານ,ຂຶ້ນທະບຽນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໃຫ້ສອດຄ່ອງກັບແຜນຜັງແຫ່ງຊາດ ວ່າດ້ວຍ ຄື້ນຄວາມຖີ່ວິທະຍຸສື່ສານ;
- ຈັດສັນຍ່ານຄື້ນຄວາມຖີ່ C-Band, 2300 MHz ແລະ 2600 MHz ເພື່ອຕອບສະໜອງການບໍລິການ 5G ແລະ ເຕັກໂນໂລຊີໃໝ່ໃນອະນາຄົດ;
- ຊຸກຍູ້ການນຳໃຊ້ລະບົບການສື່ສານຜ່ານດາວທຽມ ເຊື່ອມໂຍງການສື່ສານໃນເຂດຫ່າງໄກສອກຫຼີກ;
- ກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກອຸປະກອນ ຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ດີຈີຕອນ ໃຫ້ມີຄວາມສອດຄ່ອງກັບລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ, ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ;
- ສູ້ຊົນສ້າງສະຖານີກວດກາຄື້ນຄວາມຖີ່ວິທະຍຸສື່ສານ ແບບມີຄົນປະຈຳ (Fixed Monitoring Station) ຈຳນວນ 03 ສະຖານີ ແລະ ແບບບໍ່ມີຄົນປະຈຳ (Remote Monitoring Station) ຈຳນວນ 11 ສະຖານີ, ສູນຄວບຄຸມລະບົບຕິດຕາມ 01 ສະຖານີ, ອຸປະກອນກວດກາຄື້ນຄວາມຖີ່ວິທະຍຸສື່ສານ ແບບພົກພາ ຈຳນວນ 04 ເຄື່ອງ, ລົດກວດກາຄື້ນຄວາມຖີ່ວິທະຍຸສື່ສານ (Mobile Monitoring Station) ຈຳນວນ 03 ຄັນ ແລະ ບຳລຸງຮັກສາ, ສ້ອມແປງ ແລະ ຍົກລະດັບອຸປະກອນກວດກາຄື້ນຄວາມຖີ່ວິທະຍຸສື່ສານ;
- ສູ້ຊົນສ້າງຫ້ອງກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກ, ການນຳເຂົ້າອຸປະກອນໂທລະຄົມມະນາຄົມ ແລະ ດີຈີຕອນ ເພື່ອຮັບປະກັນຄຸນນະພາບ, ມາດຕະຖານ ແລະ ຄວາມປອດໄພ ຂອງອຸປະກອນສື່ສານທີ່ຈະນຳມາໃຊ້ ຫຼື ຈຳໜ່າຍໃນ ສປປ ລາວ;

- ຕິດຕາມ ກວດກາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໃນຂອບເຂດທົ່ວປະເທດ ໃຫ້ຖືກຕ້ອງຕາມເປົ້າໝາຍ ເພື່ອຮັບ ປະກັນໃຫ້ແກ່ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ມີປະສິດທິພາບ, ປະສິດທິຜົນ, ທົ່ວເຖິງ ແລະ ບໍ່ໃຫ້ມີການລົບກວນເຊິ່ງກັນ ແລະ ກັນ;
- ສ້າງແຜນຍຸດທະສາດ ກ່ຽວກັບການສື່ສານຜ່ານດາວທຽມ ແຕ່ປີ 2026-2030, ປັບປຸງແຜນການກ່ຽວກັບການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ເພື່ອໃຫ້ສອດຄ່ອງກັບເຕັກໂນໂລຊີດາວທຽມລຸ້ນໃຫມ່, ປັບປຸງ ແລະ ສ້າງບັນດານິຕິກຳ ກ່ຽວກັບວຽກງານການສື່ສານຜ່ານດາວທຽມ ເພື່ອຮອງຮັບການພັດທະນາເຕັກໂນໂລຊີການສື່ສານຜ່ານດາວທຽມ ໃນແຕ່ລະໄລຍະ, ປັບປຸງ ແລະ ສ້າງບັນດານິຕິກຳ ກ່ຽວກັບວຽກງານມາດຕະຖານເຕັກນິກອຸປະກອນໂທລະຄົມ ແລະ ດີຈີຕອນ ໃນແຕ່ລະໄລຍະ, ປັບປຸງ ແລະ ສ້າງບັນດານິຕິກຳ ກ່ຽວກັບວຽກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ ແຕ່ລະໄລຍະ;
- ຄົ້ນຄວ້າ,ປັບປຸງ, ຈັດສັນ, ຈັດແບ່ງການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ສອດຄ່ອງກັບກົດໝາຍ, ລະບຽບການ, ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ;
- ປັບປຸງ ການຈັດສັນຄື້ນຄວາມຖີ່ວິທະຍຸສື່ສານ (Re-farm) ແຖບ 2300 MHz ແລະ 2600MHz ເພື່ອແກ້ໄຂບັນຫາຄື້ນຄວາມຖີ່ລົບກວນ ແລະ ຮອງຮັບເຕັກໂນໂລຊີໃໝ່;
- ຊຸກຍູ້, ສົ່ງເສີມການນຳໃຊ້ດາວທຽມລາວ ເຂົ້າໃນວຽກງານການສຶກສາທາງໄກ (E-Learning) ແລະ ສາທາລະນະສຸກທາງໄກ (E-health) ລວມທັງການບໍລິການພາກລັດ ໃນເຂດຫ່າງໄກສອກຫຼີກ ຫຼື ໃນໄລຍະເກີດເຫດສຸກເສີນ, ໄພພິບັດ, ຄົ້ນຄວ້າ, ສຶກສາການບໍລິການອິນເຕີເນັດຜ່ານດາວທຽມ ເພື່ອຂະຫຍາຍສັນຍານອິນເຕີເນັດໃຫ້ສາມາດຄອບຄຸມທົ່ວປະເທດ;
- ຕິດຕາມ ແລະ ຊຸກຍູ້ ໃຫ້ທຸກພາກສ່ວນບັນດາຫົວໜ່ວຍທຸລະກິດ ແລະ ຫ້າງຮ້ານທີ່ດຳເນີນທຸລະກິດ ກ່ຽວກັບອຸປະກອນໂທລະຄົມມະນາຄົມ ແລະ ICT ຢູ່ ສປປ ລາວ ມາຮັບການກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກອຸປະກອນໃຫ້ຖືກຕ້ອງຕາມລະບຽບການກ່ອນການນຳເຂົ້າ, ຕິດຕາມກວດກາຄວາມປອດໄພດ້ານຄວາມແຮງທົ່ງແມ່ເຫຼັກໄຟຟ້າ ຂອງສະຖານີໂທລະສັບເຄື່ອນທີ່ ທີ່ມີຄວາມສ່ຽງ ຂອງບັນດາຜູ້ໃຫ້ບໍລິການໂທລະຄົມມະນາຄົມ ໃນຂອບເຂດທົ່ວປະເທດ, ກວດກາ ກາໝາຍຢັ້ງຢືນທາງດ້ານເຕັກນິກ ຂອງອຸປະກອນໂທລະຄົມມະນາຄົມ ແລະ ດີຈີຕອນ ເປັນຕົ້ນແມ່ນໂທລະສັບມືຖື, ຄອມພິວເຕີ ຢູ່ບັນດາຫ້າງ/ຮ້ານ ໃນຂອບເຂດທົ່ວປະເທດ ໃຫ້ໄດ້ຢ່າງໜ້ອຍ 5 ຄັ້ງຕໍ່ປີ;
- ປະສານງານຄື້ນຄວາມຖີ່ວິທະຍຸສື່ສານ ລຽບຕາມຊາຍແດນ ລາວ-ໄທ, ລາວ-ຫວຽດນາມ, ລາວ-ກຳປູເຈຍ ໃຫ້ໄດ້ 3 ຄັ້ງຕໍ່ປີ;
- ເຜີຍແຜ່ບັນດານິຕິກຳ ກ່ຽວກັບ ວຽກງານຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ, ວຽກງານການສື່ສານຜ່ານດາວທຽມ ແລະ ວຽກງານກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກ ໃຫ້ແກ່ບັນດາພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ໄດ້ຢ່າງໜ້ອຍ 1 ຄັ້ງຕໍ່ປີ.

**2. ແຜນງານຈຸດສຸມ**

1) ພັດທະນາແຜນການຈັດສັນ ແລະ ຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ, ລະບຽບການຄື້ນຄວາມຖີ່ວິທະຍຸສື່ສານສາກົນ (ITU-R Radio Regulations), ຮອງຮັບການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານສຳລັບເຕັກໂນໂລຊີທີ່ທັນສະໄໝໃນອານາຄົດ, ສອດຄ່ອງກັບສະພາບການຕົວຈິງຂອງ ສປປ ລາວ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກສາກົນ;
2) ແນ່ໃສ່ເພີ່ມທະວີການຂຶ້ນທະບຽນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໃນຂອບເຂດທົ່ວປະເທດ ແລະ ຂຶ້ນທະບຽນການນຳໃຊ້ຄື້ນຄວາມຖີ່ນຳອົງການ ITU ແລະ APT ໃຫ້ຫຼາຍຂຶ້ນ,ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ຢູ່ ສປປ ລາວ ຖືກຕ້ອງຕາມລະບຽບການ ແລະ ເພື່ອສ້າງລາຍຮັບເພີ່ມດ້ານຄ່ານຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໃຫ້ກັບງົບປະມານແຫ່ງລັດ;

3) ກວດກາ ແລະ ແກ້ໄຂຄື້ນຄວາມຖີ່ວິທະຍຸສື່ສານ ຕາມການຈັດສັນ ແລະ ອະນຸຍາດຄື້ນຄວາມຖີ່ວິທະຍຸສື່ສານ ເພື່ອຮັບປະກັນການນໍາໃຊ້ ຄື້ນຄວາມຖີ່ວິທະຍຸສື່ສານໃຫ້ມີຄວາມຍຸຕິທໍາ, ປະສິດທິພາບ, ປະສິດທິຜົນ, ນໍາໃຊ້ຖືກເປົ້າໝາຍ, ທົ່ວເຖິງ ແລະ ບໍ່ໃຫ້ມີການລົບກວນເຊິ່ງກັນ ແລະ ກັນ;

4) ຂຶ້ນທະບຽນຄື້ນຄວາມຖີ່ວິທະຍຸສື່ສານ ໃຫ້ສອດຄ່ອງກັບແຜນຜັງແຫ່ງຊາດ ລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;

5) ສ້າງລະບົບຕິດຕາມ ແລະ ຄຸ້ມຄອງການສື່ສານຜ່ານດາວທຽມ ສໍາລັບດາວທຽມຕ່າງປະເທດ ທີ່ມາໃຫ້ບໍລິການ ໃນ ສປປ ລາວ;

6) ພັດທະນາລະບົບການສື່ສານຜ່ານດາວທຽມໃຫ້ເປັນໂຄງລ່າງພື້ນຖານໂທລະຄົມມະນາຄົມ ຮັບປະກັນການເຊື່ອມຕໍ່ໃຫ້ກັບລະບົບການສື່ສານທັນສະໄໝ, ທົ່ວເຖິງ, ຄຸນນະພາບສູງ ແລະ ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ;

7) ຕິດຕາມ ແລະ ຊຸກຍູ້ ໃຫ້ທຸກພາກສ່ວນບັນດາຫົວໜ່ວຍທຸລະກິດ ແລະ ຫ້າງຮ້ານທີ່ດໍາເນີນທຸລະກິດ ກ່ຽວກັບອຸປະກອນໂທລະຄົມມະນາຄົມ ແລະ ICT ຢູ່ ສປປ ລາວ ມາຮັບການກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກອຸປະກອນໃຫ້ຖືກຕ້ອງຕາມລະບຽບການ ກ່ອນການນໍາເຂົ້າ;

8) ຄຸ້ມຄອງ, ສ້າງ ແລະ ປັບປຸງແຜນຈັດສັນ ເລກໝາຍໂທລະຄົມມະນາຄົມ ແລະ ອິນເຕີເນັດໃຫ້ສອດຄ່ອງກັບການພັດທະນາເຕັກໂນໂລຊີ ແລະ ການບໍລິການໃໝ່ ເພື່ອສ້າງລາຍຮັບເພີ່ມໃຫ້ແກ່ລັດຖະບານ;

9) ສຸມໃສ່ສ້າງ ແລະ ພັດທະນາລະບົບເຕັກນິກທີ່ຈໍາເປັນເພື່ອນໍາໃຊ້ເຂົ້າໃນວຽກງານຄຸ້ມຄອງ, ຈັດສັນ, ຕິດຕາມ, ກວດກາ, ສະໜອງຂໍ້ມູນການບໍລິການ ແລະ ອອກອະນຸຍາດ ການນໍາໃຊ້ຊັບພະຍາກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ຢ່າງມີປະສິດຕິພາບ;

10) ຊຸກຍູ້ການນໍາໃຊ້ບໍລິການອອນລາຍ ທີ່ມີການຢັ້ງຢືນຕົວຕົນຜ່ານເລກໝາຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ສຸມໃສ່ດັດສົມການຈໍາໜ່າຍເລກໝາຍໂທລະສັບ ຜ່ານຈຸດບໍລິການຂອງບັນດາບໍລິສັດ ໃຫ້ບໍລິການໂທລະຄົມທີ່ໄດ້ຮັບອະນຸຍາດ;

11) ປັບປຸງບັນດາຕົວເລກ ຄ່ານໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ, ຄ່າກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກ ໃຫ້ສອດຄ່ອງແທດເໝາະກັບສະພາບການພັດທະນາ ແລະ ການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ.

**3. ໂຄງການສະໜັບສະໜູນວຽກງານຈຸດສຸມ**

1. ໂຄງການສ້າງລະບົບການຂຶ້ນທະບຽນການນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານຜ່ານລະບົບ Online.
2. ໂຄງການປັບປຸງ ພັດທະນາສະຖານີ ແລະ ລະບົບຕິດຕາມ ກວດກາຄື້ນຄວາມຖີ່ວິທະຍຸສື່ສານ ຄົບວົງຈອນ ໃນຂອບເຂດທົ່ວປະເທດ;
3. ໂຄງການຄົ້ນຄ້ວາເລືອກເຟັ້ນມາດຕະຖານເຕັກນິກ ແລະ ຄວາມສາມາດໃຫ້ການບໍລິການປະເພດຕ່າງໆຂອງດາວທຽມຮຸ່ນໃໝ່ ທີ່ແທດເໝາະກັບຄວາມຕ້ອງການຂອງ ສປປ ລາວ ເພື່ອສັ່ງຜະລິດ ແລະ ກໍານົດເວລາການສົ່ງຂຶ້ນສູ່ຕໍາແໜ່ງວົງໂຄຈອນ 128.5 ອົງສາຕາເວັນອອກສຽງໃຕ້ ປ່ຽນແທນດາວທຽມລາວດວງປັດຈຸບັນ;
4. ໂຄງການຄົ້ນຄວ້າສ້າງສູນນໍາໃຊ້ດາວທຽມແຫ່ງຊາດ;
5. ໂຄງການສ້າງລະບົບກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກ, ກ່ອນການນໍາເຂົ້າອຸປະກອນ ໂທລະຄົມມະນາຄົມ ແລະ ດີຈີຕອນ ເພື່ອຮັບປະກັນຄຸນນະພາບ, ມາດຕະຖານ ແລະ ຄວາມປອດໄພ ຂອງອຸປະກອນສື່ສານທີ່ຈະນໍາມາໃຊ້ ຫຼື ຈໍາໜ່າຍໃນ ສປປ ລາວ;
6. ໂຄງການຈັດຊື້ອຸປະກອນກ້ອງວົງຈອນປິດຮັກສາຄວາມປອດໄພສໍານັກງານກະຊວງເຕັກໂນໂລຊີ ແລະ ການສື່ສານ;
7. ໂຄງການສ້າງລະບົບ Mobile Number Portability;
8. ໂຄງການສ້າງລະບົບຄຸ້ມຄອງ E-Sim ແຫ່ງຊາດ;

### 4.2.6 ແຜນວຽກຈຸດສຸມທີ 6: ພັດທະນາລະບົບຄວາມປອດໄພດ້ານໄຊເບີ

ເພື່ອບັນລຸແຜນວຽກຈຸດສຸມທີ່ 6 ຈະຕ້ອງໄດ້ຈັດຕັ້ງປະຕິບັດບັດດາ ວຽກງານຈຸດສຸມ ແລະ ໂຄງການດັ່ງນີ້:

**1. ຄາດໝາຍຕົວຊີ້ບອກ**

– ຊຸກຍູ້ສົ່ງເສີມໃຫ້ຂະແໜງການຕ່າງໆ ທີ່ນຳໃຊ້ເຕັກໂນໂລຊີດີຈິຕອນ ເພື່ອບໍລິຫານຈັດການຄຸ້ມຄອງ, ຕິດຕາມ, ກວດກາ, ບຳລຸງຮັກສາ ແລະ ບໍລິການ ຂໍ້ມູນຂ່າວສານຕ່າງໆ ໃຫ້ປະຕິບັດຕາມມາດຕະຖານຮັກສາຄວາມປອດໄພຂໍ້ມູນຂ່າວສານ ແລະ ບັນດານິຕິກຳທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ປະຕິບັດຕາມມາດຕະຖານຄວາມປອດໄພຂໍ້ມູນຂ່າວສານ ອົງການມາດຕະຖານສາກົນ (International Organization for Standardization : ISO) ເປັນຕົ້ນແມ່ນ ISO 27001;

– ສ້າງໜ່ວຍງານ ຕອບໂຕ້ເຫດສຸກເສີນທາງຄອມພິວເຕີ (CSIRT) ຂອງບັນດາຂະແໜງການພາກລັດ ແລະ ເອກະຊົນ ເພື່ອປະສານງານກັບໜ່ວຍງານສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ (LaoCERT), ໂດຍກຳນົດພາລະບົດບາດໜ້າທີ່ ໜ່ວຍງານຕ່າງໆ ຢ່າງຊັດເຈນໃນການຕ້ານ ແລະ ສະກັດກັ້ນເຫດສຸກເສີນທາງຄອມພິວເຕີ ພາຍໃນປະເທດ;

– ຄົ້ນຄວ້າ ແລະ ສ້າງນະໂຍບາຍ ກ່ຽວກັບການປົກປ້ອງໂຄງລ່າງພື້ນຖານຂໍ້ມູນຂ່າວສານທີ່ສຳຄັນຂອງຊາດ ໂດຍນຳໃຊ້ເຕັກໂນໂລຊີດີຈິຕອນ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ໃຫ້ທັນກັບສະພາບການຂະຫຍາຍຕົວຂອງເຕັກໂນໂລຊີ;

– ສ້າງ ແລະ ພັດທະນາ ສູນປະຕິບັດການຄວາມປອດໄພໄຊເບີແຫ່ງຊາດ (Security Operation Center (SOC) ໃຫ້ສາມາດເປັນສູນກາງເຝົ້າລະວັງ, ຕອບສະໜອງ, ແຈ້ງເຕືອນ, ແກ້ໄຂບັນຫາ ໄພຄຸກຄາມທາງໄຊເບີຂອງປະເທດ ໂດຍສຸມໃສ່ການພັດທະນາລະບົບເຕັກນິກທີ່ທັນສະໄໝ ແລະ ພັດທະນາຄວາມສາມາດຂອງຊ່ຽວຊານໃນການບໍລິຫານ-ຄຸ້ມຄອງ. ໃນນັ້ນ, ປະກອບມີ: ຜູ້ຄຸ້ມຄອງບໍລິຫານ (SOC Manager), ຜູ້ວິເຄາະເຫດສຸກເສີນທາງໄຊເບີ (Alert Analyst), ຜູ້ຮັບແຈ້ງເຫດສຸກເສີນ ທາງຄອມພິວເຕີ (Incident Response), ຜູ້ວິເຄາະພຶດຕິກຳ ຂອງໂປຣແກຣມປະສົງຮ້າຍ (Subject Matter Expert) ແລະ ອື່ນໆ;

– ຊຸກຍູ້ໃຫ້ບັນດາຂະແໜງການທີ່ນຳໃຊ້ເຕັກໂນໂລຊີ ດີຈິຕອນ ທັງພາກລັດ ແລະ ເອກະຊົນ ນຳລະບົບເຄືອຂ່າຍຄອມ ພິວເຕີຂອງຕົນມາເຊື່ອມຕໍ່ກັບ ສູນປະຕິບັດການຄວາມປອດໄພໄຊເບີແຫ່ງຊາດ (Security Operation Center (SOC) ເພື່ອສ້າງກົນໄກການເຝົ້າລະວັງ, ຕິດຕາມ, ກວດກາ, ປະສານງານ, ແຈ້ງ;

– ອຳນວຍຄວາມສະດວກ ໃຫ້ທຸກພາກສ່ວນທົ່ວປະເທດ ໂດຍສະເພາະຂະແໜ່ງກ່ຽວກັບເຕັກໂນໂລຊີຂໍ້ມູນຂ່າວສານ ໃຫ້ມີການສຶກສາຄົ້ນຄວ້າພັດທະນາຜະລິດຕະພັນຊອບແວ ແລະ ຮາດແວ ປ້ອງກັນຄວາມປອດໄພໄຊເບີ;

– ຊຸກຍູ້ສົ່ງເສີມ, ໂຄສະນາເຜີຍແຜ່ ໃຫ້ທຸກພາກສ່ວນທົ່ວປະເທດ ຊົມໃຊ້ ຜະລິດຕະພັນຊອບແວ ແລະ ຮາດແວປ້ອງກັນຄວາມປອດໄພໄຊເບີ ທີ່ສ້າງໂດຍພູມປັນຍາຂອງ ຄົນລາວ;

– ສ້າງກິດຈະກຳກ່ຽວກັບການປູກຈິດສຳນຶກ ແລະ ເຜີຍແຜ່ນິຕິກຳກ່ຽວກັບວຽກງານຄວາມປອດໄພໄຊເບີ ເປັນປະຈຳ;

– ຄົ້ນຄວ້າເນື້ອໃນ ກ່ຽວກັບ ຄວາມປອດໄພໄຊເບີ ເພື່ອສ້າງເປັນເນື້ອໃນອອກເຜີຍແຜ່ໃຫ້ຄວາມຮູ້ແກ່ສັງຄົມ ຜ່ານຊ່ອງທາງໂທລະພາບ, ວິທະຍຸ, ໜັງສືພິມ, ແອັບພລິເຄຊັນ ແລະ ສື່ສັງຄົມອອນລາຍ.

**2. ແຜນງານຈຸດສຸມ**

1) ພັດທະນາສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ (ລາວເຊີດ) ໃຫ້ທຽບເທົ່າກັບສູນເຊີດ ຂອງບັນດາປະເທດໃນພາກພື້ນ ແລະ ສາກົນ;
2) ສ້າງໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ອິນເຕີເນັດໃຫ້ມີຄວາມປອດໄພ;
3) ສ້າງໂຄງລ່າງພື້ນຖານດີຈິຕອນ ໃຫ້ມີຄວາມປອດໄພ;

4) ສົ່ງເສີມການນໍາໃຊ້ ແລະພັດທະນາຊອບແວລະບົບເປີດເປັນທາງການ, ພັດທະນາການໃຊ້ອຸປະກອນເອເລັກໂຕຼນິກ ລະ ບົບຕ່າງໆທີ່ເຊື່ອມຕໍ່ກັບອິນເຕີເນັດແບບເປັນກຸ່ມຢ່າງເໝາະສົມ;

5) ຄົ້ນຄວ້າສ້າງມາດຕະຖານຮັກສາຄວາມປອດໄພຂໍ້ມູນຂ່າວສານ ພາຍໃນອົງກອນ ໂດຍມີການກໍານົດໜ້າທີ່ຕ່າງໆຢ່າງຊັດເຈນ, ມີການສັງລວມຂໍ້ມູນເປັນລະບຽບ ເພື່ອສະດວກໃນການລາຍງານ;

6) ຄົ້ນຄວ້າ ພາລະບົດບາດ ແລະ ອອກໃບຮັບຮອງ ມາດຕະຖານຮັກສາຄວາມປອດໄພຂໍ້ມູນຂ່າວສານ ພາຍໃນອົງກອນ;

7) ຊຸກຍູ້ສົ່ງເສີມໃຫ້ບັນດາອົງກອນຈັດຕັ້ງປະຕິບັດຕາມມາດຕະຖານຄວາມປອດໄພຂໍ້ມູນຂ່າວສານ ຂອງ ສປປ ລາວ ແລະ ປະຕິບັດຕາມມາດຕະຖານຄວາມປອດໄພຂໍ້ມູນຂ່າວສານ ຈາກອົງການມາດຕະຖານສາກົນ, ເປັນຕົ້ນແມ່ນ ISO 27001/ISMS;

8) ຊຸກຍູ້ໃຫ້ຂະແໜງການທີ່ນໍາໃຊ້ເຕັກໂນໂລຊີດີຈີຕອນໃນການຂັບເຄື່ອນວຽກງານຂອງຕົນໃຫ້ມີໜ່ວຍງານເພື່ອຮັບຜິດຊອບວຽກງານ ຕອບໂຕ້ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ;

9) ໜ່ວຍງານຕອບໂຕ້ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີຂອງອົງກອນ ຕ້ອງປະສານງານກັບໜ່ວຍງານຮັກສາຄວາມປອດໄພໄຊເບີແຫ່ງຊາດ ເພື່ອກຽມຄວາມພ້ອມໃນການຮັບມືກັບໄພຄຸກຄາມທາງໄຊເບີທຸກຮູບແບບ, ສາມາດແກ້ໄຂບັນຫາ ແລະ ກູ້ຄືນໃຊ້ປົກກະຕິໄດ້ໂດຍໄວ ພ້ອມກັນນັ້ນກໍມີການແລກປ່ຽນຂໍ້ມູນຂ່າວສານ, ເຂົ້າຮ່ວມກິດຈະກໍາ, ຝຶກຊ້ອມຮັບມືກັບເຫດສຸກເສີນທາງຄອມພິວເຕີ ເປັນປະຈໍາ;

10) ສ້າງກົນໄກແລກປ່ຽນຂໍ້ມູນຂ່າວສານ, ຄວາມເຂົ້າໃຈ ກ່ຽວກັບໄພຄຸກຄາມທາງໄຊເບີພາຍໃນປະເທດ ພ້ອມທັງຂັ້ນຕອນການຮັບມື, ການແກ້ໄຂບັນຫາ, ການລາຍງານເຫດການຕ່າງໆ ຢ່າງເປັນລະບົບ;

11) ສ້າງສູນປະຕິບັດການຄວາມປອດໄພໄຊເບີແຫ່ງຊາດ (Security Operation Center (SOC) ແລະ ຊຸກຍູ້ສົ່ງເສີມໃຫ້ມີໜ່ວຍງານຮັບຜິດຊອບ ວຽກງານຄວາມປອດໄພໄຊເບີເປັນອັນສະເພາະຂອງບັນດາຂະແໜງການ ທີ່ນໍາໃຊ້ເຕັກໂນໂລຊີດີຈີຕອນ;

12) ພັດທະນາທັກສະ, ເຕັກນິກວິຊາການສະເພາະດ້ານ ໃຫ້ສາມາດຄຸ້ມຄອງ ສູນປະຕິບັດການຄວາມປອດໄພແຫ່ງຊາດທາງໄຊເບີ ເພື່ອເຝົ້າລະວັງໄພຄຸກຄາມທາງໄຊເບີ ໃຫ້ບັນດາຂະແໜງທີ່ເປັນໂຄງປະກອບຂອງເສດຖະກິດແຫ່ງຊາດ ເປັນຕົ້ນແມ່ນ: ຂະແໜງການເຕັກໂນໂລຊີ ແລະ ການສື່ສານ, ຂະແໜງການພະລັງງານ, ຂະແໜງການກະສິກໍາ, ຂະແໜງການອຸດສາຫະກໍາ, ຂະແໜງການບໍລິການ, ສາທາລະນະສຸກ, ຄົມມະນາຄົມ-ຂົນສົ່ງ, ຂະແໜງການເງິນ ແລະ ຂະແໜງ ການອື່ນໆ ທີ່ນໍາໃຊ້ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເຂົ້າໃນການຄຸ້ມຄອງວຽກງານຂອງຕົນ ທັງພາກລັດ ແລະ ເອກະຊົນ;

13) ແຜນງານສົ່ງເສີມໃຫ້ ອົງການຈັດຕັ້ງພາກລັດ ແລະ ເອກະຊົນ ຕະຫຼອດເຖິງສະຖາບັນການສຶກສາຕ່າງໆ ສຸມໃສ່ຄົ້ນຄວ້າພັດທະນາ, ນໍາໃຊ້ນະວັດຕະກໍາ ຜະລິດຕະພັນຊອບແວ ແລະ ຮາດແວ ດ້ານຄວາມປອດໄພໄຊເບີ;

14) ໂຄສະນາເຜີຍແຜ່ ນິຕິກໍາ ພ້ອມຄວາມຮູ້ກ່ຽວກັບວຽກງານ ຄວາມປອດໄພໄຊເບີ ສູ່ສັງຄົມ ແລະ ສ້າງກິດຈະກໍາຕ່າງໆ ກ່ຽວກັບວຽກງານຄວາມປອດໄພໄຊເບີ ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນໃນຂອບເຂດ ທົ່ວປະເທດ.

**3. ໂຄງການສະໜັບສະໜູນວຽກງານຈຸດສຸມ**

1. ໂຄງການຈັດຊື້ອຸປະກອນ ກ້ອງວົງຈອນປິດຮັກສາຄວາມປອດໄພສໍານັກງານກະຊວງເຕັກໂນໂລຊີ ແລະ ການສື່ສານ
2. ໂຄງການສະໜອງວັດຖຸອຸປະກອນລະບົບວິເຄາະພຶດຕິກໍາການໂຈມຕີທາງໄຊເບີ
3. ໂຄງການສ້າງເຄື່ອງມືການວິໄຈ ແລະ ວິເຄາະພຶດຕິກໍາ ການນໍາໃຊ້ສື່ສັງຄົມອອນລາຍຂອງ ສປປ ລາວ (Social Listening & Analytic)
4. ໂຄງການສ້າງລະບົບ Cyber threat Intelligence
5. ໂຄງການສຶກສາຄວາມເປັນໄປໄດ້ ແລະ ສ້າງຈຸດປະສານງານຄວາມປອດໄພໄຊເບີ (CSIRT) ກັບພາກລັດ, ເອກະຊົນ, ສູນກາງ ແລະ ທ້ອງຖິ່ນ

6. ໂຄງການ ເຊື່ອມຕໍ່ສູນປະຕິບັດການຄວາມປອດໄພໄຊເບີ ກັບຂະແໜງການທີ່ເປັນໂຄງລ່າງພື້ນຖານທີ່ສຳຄັນຂອງຊາດ (Critical Information Infrastructure) ໃນຂອບເຂດທົ່ວປະເທດ
7. ໂຄງການສ້າງລະບົບແລກປ່ຽນຂໍ້ມູນຂ່າວສານວຽກງານຄວາມປອດໄພໄຊເບີພາຍໃນປະເທດ
8. ໂຄງການຂະຫຍາຍລະບົບສູນປະຕິບັດການຄວາມປອດໄພໄຊເບີໄລຍະ 02 (Cyber Security Operation)
9. ໂຄງການສະໜອງອຸປະກອນຫ້ອງຄົ້ນຄວ້າວິໄຈດ້ານຄວາມປອດໄພທາງໄຊເບີ (Cyber security Laboratory)
10. ໂຄງການສ້າງ Anti Online Scamming Cyber Security Professional Certification Framework
11. ໂຄງການ ສ້າງ SOC set up (National level)
12. ໂຄງການພັດທະນາລະບົບຕິດຕາມ, ເຝົ້າລະວັງຄວາມປອດໄພໃຫ້ແກ່ລະບົບຫ້ອງການທັນສະໄໝຂອງພາກລັດ (Cybersecurity for E-Government)
13. ໂຄງການສ້າງລະບົບຕິດຕາມ ແລະ ຄຸ້ມຄອງມາດຕະຖານຮັກສາຄວາມປອດໄພຂໍ້ມູນຂ່າວສານ ຂອງ ສປປ ລາວ Evaluation and Hardening of hardware and software in Laos (Safety mark).
14. ໂຄງການກວດກາປະເມີນຄວາມສ່ຽງເຄືອຂ່າຍຂອງອົງກອນ (Network Assessment)
15. ໂຄງການກວດກາຊ່ອງໂຫວ່ເຄືອຂ່າຍພາຍໃນອົງກອນ (Vulnerability Assessment) Website and IP security scanning ( Safe mark)
16. ໂຄງການພັດທະນາ ໂປຣແກຣມປ້ອງກັນໄວຣັສ
17. ໂຄງການພັດທະນາລະບົບປ້ອງກັນຄວາມປອດໄພເທິງມືຖືສະມາດໂຟນ
18. ໂຄງການສຳຫຼວດຄວາມເພິ່ງພໍໃຈຂອງຜູ້ຊົມໃຊ້ບໍລິການໂທລະຄົມ ແລະ ອິນເຕີເນັດ

### 4.2.7 ແຜນວຽກຈຸດສຸມທີ 7: ພັດທະນາ ແລະ ນຳໃຊ້ນະວັດຕະກຳ ໄອຊີທີ

ເພື່ອບັນລຸແຜນວຽກຈຸດສຸມທີ່ 7 ຈະຕ້ອງໄດ້ຈັດຕັ້ງປະຕິບັດບັດດາ ວຽກງານຈຸດສຸມ ແລະ ໂຄງການດັ່ງນີ້:

**1. ຄາດໝາຍ ແລະ ຕົວຊີ້ວັດ**

- ການບໍລິຫານ ແລະ ການບໍລິການ ມີຄວາມສະດວກວ່ອງໄວ, ກວດສອບໄດ້ ໂດຍການນຳໃຊ້ລະບົບໄອຊີທີ, ລະບົບດີຈີຕອນ ຫຼື ແອັບພລີເຄຕ່າງໆ ນັບມື້ຫຼາຍຂຶ້ນ;
- ຈຳນວນຜົນງານການຄົ້ນຄວ້າ ແລະ ພັດທະນາ ດ້ານເຕັກໂນໂລຊີ ແລະ ນະວັດຕະກຳ ICT ທີ່ໄດ້ຮັບການຈົດລິຂະສິດ ຫຼື ສົ່ງເຂົ້າແຂ່ງຂັນ ນັບມື້ຫຼາຍຂຶ້ນ ລວມທັງໂຄງການສົ່ງເສີມນະວັດຕະກຳ;
- ຈຳນວນການຝຶກອົບຮົມ ຫຼື ຫຼັກສູດໃນດ້ານ ICT ທີ່ຈັດຂຶ້ນ ລວມທັງຈຳນວນນັກຮຽນ ຫຼື ນັກວິຊາ ການທີ່ຜ່ານການຝຶກອົບຮົມ;
- ການເປີດບໍລິການຝຶກອົບຮົມດ້ານ ICT, ສູນພັດທະນານະວັດຕະກຳ ແລະ ສູນບົ່ມເພາະດ້ານຕ່າງໆລວມທັງມູນຄ່າທຶນ ຫຼື ງົບປະມານສະໜອງ ຫຼື ການລົງທຶນໃນດ້ານເຕັກໂນໂລຊີ ແລະ ນະວັດຕະກຳ ICT;
- ເປັນການສ້າງສູນກາງທີ່ເປັນແຫຼ່ງລວມເຕັກໂນໂລຊີ AI ທີ່ທັນສະໄໝ, ສົ່ງເສີມການຮ່ວມມືລະຫວ່າງພາກລັດ, ພາກທຸລະກິດ ແລະ ສະຖາບັນການສຶກສາ ແລະ ເປັນການຖ່າຍທອດທັກສະດ້ານ AI ໃຫ້ກັບຜູ້ໃຊ້ວຽກທຸກລະດັບເຊັ່ນ: ນັກຮຽນ,ນັກສຶກສາ, ນັກພັດທະນາ, ນັກທຸລະກິດ ແລະ ພະນັກງານລັດຖະກອນ, ໂດຍການສ້າງສູນ AI ພ້ອມເຄື່ອງມື, ເຄື່ອງມືໂປຣແກຣມ, ແລະ Data Center ໃນການພັດທະນາ AI, ສ້າງການທົດລອງ Use Cases ຂອງ AI ໃນພາກລັດ (ການບໍລິການສາທາລະນະ, e-Government, ການສຶກສາ, ສຸຂະພາບ), ຈັດຕັ້ງຫຼັກສູດຝຶກອົບຮົມ AI, Digital Skills, Data Science, Tech Transfer, ຈັດການປະກວດແຂ່ງຂັນ AI Hackathon ແລະ AI Challenge ປະຈຳປີ ແລະ ມີການພັດທະນາຄວາມຮ່ວມມືກັບ Start up ພາຍໃນ ແລະ ຕ່າງປະເທດ;
- ສ້າງສູນການຮຽນຮູ້ ແລະ ນຳໃຊ້ເຕັກໂນໂລຊີ ທີ່ເປັນສື່ກາງໃນການຜະລິດທຸລະກິດສະຕາດອັບໃນສະພາບເສດຖະກິດດີຈີຕ໋ອນ, ຜະລິດນັກທຸລະກິດສະຕາດອັບລຸ້ນໃໝ່ ໂດຍການໃຫ້ການສະໜັບສະໜູນທັງດ້ານຄວາມ

ຮູ້, ທຶນຕັ້ງຕົ້ນ, ແລະ ເຄືອຂ່າຍທະນາຄານ ແລະ ນັກລົງທຶນ, ຊ່ວຍໃນການສົ່ງເສີມຜະລິດນະວັດຕະກໍາໃໝ່ທາງດີຈີຕ່ອນ ເຊິ່ງສາມາດນໍາໃຊ້ໄດ້ໃນຕະຫຼາດແທ້ ແລະ ສົ່ງອອກໄດ້ ເພື່ອສ້າງເປັນຕົ້ນແບບສໍາລັບການຂະຫຍາຍໄປສູ່ແຂວງອື່ນ ໃນສປປ ລາວ. ແລະ ນອກຈາກນັ້ນຍັງເປັນການຊຸກຍູ້ການຮ່ວມມືກັບພາກສ່ວນອື່ນເຊັ່ນ: ມະຫາວິທະຍາໄລ, ສະຖາບັນຄົ້ນຄວ້າ, ບັນດາທຸລະກິດ ແລະ ອົງການສາກົນຕ່າງໆ;

- ສົ່ງເສີມການນໍາເອົາເຕັກໂນໂລຊີສະອາດ (Clean Tech) ແລະ ເຕັກໂນໂລຊີສີຂຽວ (Green Tech) ເຂົ້າມານໍາໃຊ້ໃນພາກການຜະລິດ ແລະ ການບໍລິການໃນສປປ ລາວ, ຍົກລະດັບຄວາມຮູ້ ແລະ ຄວາມເຂົ້າໃຈຂອງທຸລະກິດ ແລະ ພາກສ່ວນຕ່າງໆ ໃນການເຂົ້າເຖິງ ແລະ ປະຍຸກໃຊ້ເຕັກໂນໂລຊີທີ່ຍືນຍົງ, ກະຕຸ້ນການພັດທະນານະວັດຕະກໍາສີຂຽວ ຜ່ານການວິຈັຍ ແລະ ການລົງທຶນ, ປະສານຄວາມຮ່ວມມືລະຫວ່າງພາກລັດ-ເອກະຊົນ-ອົງການສາກົນ ໃນການນໍາໃຊ້ເຕັກໂນໂລຊີສະອາດ;
- ເພື່ອສະໜອງອຸປະກອນຄອມພິວເຕີ ແລະ ອຸປະກອນທີ່ຈໍາເປັນ ເພື່ອສ້າງສິ່ງແວດລ້ອມໃນການຮຽນຮູ້ ແລະ ພັດທະນາທັກສະດິຈິຕ່ອນ (Digital Skills) ໃຫ້ແກ່ນັກຮຽນ ນັກສຶກສາ ແລະປະຊາຊົນ ໂດຍມຸ່ງເນັ້ນເພື່ອກຽມຄວາມພ້ອມໃນການເຂົ້າສູ່ສັງຄົມດິຈິຕ່ອນ ແລະ ສົມທົບນະໂຍບາຍດິຈິຕ່ອນແຫ່ງຊາດ;
- ສ້າງຕັ້ງຫ້ອງຄົ້ນຄວ້າວິທະຍາສາດ ທາງດ້ານເຕັກໂນໂລຊີການສື່ສານ ແລະຂໍ້ມູນຂ່າວສານຮ່ວມກັນ ລະຫວ່າງພະນັກງານຄູອາຈານ, ນັກສຶກສາ ແລະ ຄູ່ຮ່ວມມື;
- ສ້າງບົດໂຄງການຈົບຊັ້ນຂອງນັກສຶກສາທີ່ຕິດພັນກັບການນໍາໃຊ້ຕົວຈິງ ໃຫ້ໄດ້ຢ່າງໜ້ອຍປີລະ 3 ໂຄງການ;
- ຕີພິມບົດຄົ້ນຄວ້າວິທະຍາສາດ ລົງວາລະສານໃຫ້ໄດ້ຫຼາຍກວ່າ 10 ບົດ;
- ສ້າງຜະລິດຕະພັນບໍລິການວິຊາການອອກຮັບໃຊ້ສັງຄົມ ໃຫ້ໄດ້ 10 ຜະລິດພັນ;
- ໃຫ້ສັງຄົມໄດ້ນໍາໃຊ້ເຕັກໂນໂລຊີໃໝ່ ເປັນມິດກັບສິ່ງແວດລ້ອມ;
- ຍົກລະດັບການນໍາໃຊ້ເຕັກໂນໂລຊີດີຈິຕອນ, ເຕັກໂນໂລຊີ ICT ແລະ ນະວັດຕະກໍາ ເຂົ້າໃນການບໍລິຫານ ແລະ ການບໍລິການ ໃນທົ່ວສັງຄົມ;
- ສົ່ງເສີມການຄິດຄົ້ນ, ການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີ ແລະ ນະວັດຕະກໍາໃໝ່ໆ ໂດຍໃຊ້ ICT ເພື່ອແກ້ໄຂບັນຫາ ແລະ ພັດທະນາການບໍລິຫານ ແລະ ບໍລິການ;
- ພັດທະນາຊັບພະຍາກອນມະນຸດ ດ້ານ ICT ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
- ສ້າງລະບົບສະນັບສະໜຸນ ຫຼື ສະພາບແວດລ້ອມອໍານວຍຄວາມສະດວກໃນການຄົ້ນຄວ້າ ແລະ ພັດທະນານະວັດຕະກໍາ;
- ຕົ້ນທຶນໃນການຜະລິດ, ບໍລິການຕໍ່າ ແລະ ຜະລິດຕະພັນ ເປັນທີ່ຕ້ອງການຂອງສັງຄົມ;
- ການບໍລິຫານ ແລະ ການບໍລິການ ມີຄວາມສະດວກວ່ອງໄວ, ກວດສອບໄດ້ ໂດຍການນໍາໃຊ້ລະບົບໄອຊີທີ, ລະບົບດິຈິຕອນ ຫຼື ແອັບພລິເຄເຊີນຕ່າງໆ ນັບມື້ຫຼາຍຂຶ້ນ;
- ຈໍານວນຜົນງານການຄົ້ນຄວ້າ ແລະ ພັດທະນາ ດ້ານເຕັກໂນໂລຊີ ແລະ ນະວັດຕະກໍາ ICT ທີ່ໄດ້ຮັບການຈົດລິຂະສິດ ຫຼື ສົ່ງເຂົ້າແຂ່ງຂັນ ນັບມື້ຫຼາຍຂຶ້ນ ລວມທັງໂຄງການສົ່ງເສີມນະວັດຕະກໍາ;
- ຈໍານວນການຝຶກອົບຮົມ ຫຼື ຫຼັກສູດໃນດ້ານ ICT ທີ່ຈັດຂຶ້ນ ລວມທັງຈໍານວນນັກຮຽນ ຫຼື ນັກວິຊາການທີ່ຜ່ານການຝຶກອົບຮົມ;
- ການເປີດບໍລິການຝຶກອົບຮົມດ້ານ ICT, ສູນພັດທະນານະວັດຕະກໍາ ແລະ ສູນບົ່ມເພາະດ້ານຕ່າງໆລວມທັງມູນຄ່າທຶນ ຫຼື ງົບປະມານສະໜອງ ຫຼື ການລົງທຶນໃນດ້ານເຕັກໂນໂລຊີ ແລະ ນະວັດຕະກໍາ ICT.

**2. ແຜນງານຈຸດສຸມ**

1) ສ້າງລະບົບຊໍາລະດິຈິຕອນ;

2) ສ້າງເງື່ອນໄຂ ແລະ ກົນໄກການຄຸ້ມຄອງ ໃຫ້ຜູ້ປະກອບການທາງດ້ານ ໄອຊີທີ ໃຫ້ສາມາດດຳເນີນທຸລະກິດຢ່າງ ສະດວກ;
3) ສ້າງເງື່ອນໄຂການພັດທະນາອຸດສາຫະກຳ ໄອຊີທີ ແລະ ຜູ້ປະກອບການ ໄອຊີທີໃໝ່ (Start up) ໃຫ້ສາມາດເປັນທ່າແຮງຂອງການຂັບເຄື່ອນເສດຖະກິດ;
4) ສົ່ງເສີມການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ (SMEs) ບົນພື້ນຖານເສດຖະກິດດິຈິຕອນ (Digital SMEs);
5) ສ້າງເງື່ອນໄຂໃຫ້ວຽກງານການນຳໃຊ້ ແລະ ການບໍລິການດິຈິຕອນຂະຫຍາຍຕົວ ທົ່ວສັງຄົມ ຫັນສູ່ສັງຄົມ ແລະ ເສດຖະກິດດິຈິຕອນ;
6) ສົ່ງເສີມການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີດິຈິຕອນ, ເຕັກໂນໂລຊີ ແລະ ນະວັດຕະກຳ ທີ່ທັນສະໄໝ ໃຫ້ເປັນຜະລິດຕະພັນ ແລະ ການບໍລິການ;
7) ສົ່ງເສີມການນຳໃຊ້ເຕັກໂນໂລຊີດິຈິຕອນ, ເຕັກໂນໂລຊີ ແລະ ນະວັດຕະກຳ ທີ່ທັນສະໄໝ ເຂົ້າໃນທຸລະກິດການຜະລິດ ແລະ ບໍລິການ;
8) ສົ່ງເສີມການສ້າງສະຖາບັນຄົ້ນຄວ້າທີ່ເປັນມືອາຊີບ ສາມາດສະໜອງການບໍລິການດ້ານເຕັກໂນໂລຊີ ແລະ ນະວັດຕະກຳ ໃຫ້ແກ່ສັງຄົມ;
9) ສ້າງເມືອງອັດສະລິຍະ (Smart City);
10) ສ້າງເຂດເຕັກໂນໂລຊີລະດັບສູງ;
11) ສ້າງສູນຄົ້ນຄວ້າ ແລະ ສົ່ງເສີມນະວັດຕະກຳ;
12) ໃຫ້ບໍລິການດ້ານເຕັກໂນໂລຊີອາວະກາດ;
13) ໃຫ້ບໍລິການດ້ານພາບຖ່າຍດາວທຽມ;
14) ຕີລາຄາ, ກວດສອບ ແລະ ປະເມີນເຕັກໂນໂລຊີ;
15) ໃຫ້ບໍລິການເຕັກໂນໂລຊີ ແລະ ນະວັດຕະກຳ ໃນຂົງເຂດ: ຂໍ້ມູນເຕັກໂນໂລຊີຂໍ້ມູນພາບຖ່າຍດາວທຽມ, ການຖ່າຍທອດເຕັກໂນໂລຊີ, ການອອກໃບຢັ້ງຢືນ ແລະ ປະເມີນເຕັກໂນໂລຊີ ແລະ ນະວັດຕະກຳ, ການອອກອະນຸຍາດດຳເນີນວຽກງານເຕັກໂນໂລຊີ ແລະ ນະວັດຕະກຳ;
16) ສ້າງຫ້ອງທົດລອງອິນເຕີເນັດແຫ່ງຊັບພະສິ່ງ: ສະໜອງອຸປະກອນໃຫ້ຫ້ອງປະຕິບັດການທົດລອງເຕັກໂນໂລຊີອັດສະລິຍະ (Smart Technology LAB);
17) ສ້າງພື້ນທີ່ໃນການຄົ້ນຄວ້າປະດິດສ້າງດ້ານເຕັກໂນໂລຊີ ແລະ ນະວັດຕະກຳ (Maker spaces for Technology and Innovation);
18) ສົ່ງເສີມການຮ່ວມມືກັບສະຖາບັນຄົ້ນຄວ້າພາຍໃນ ແລະ ສາກົນ ເພື່ອເຮັດການຄົ້ນຄວ້າ ແລະ ພັດທະນາຫັນເອົາເຕັກໂນໂລຊີ ແລະ ນະວັດຕະກຳ ທີ່ທັນສະໄໝ ມາເປັນຜະລິດຕະພັນ ແລະ ການບໍລິການ;
19) ສ້າງໃຫ້ເປັນສະຖາບັນຄົ້ນຄວ້າທີ່ເປັນມືອາຊີບ ແລະ ສາມາດສະໜອງການບໍລິການດ້ານເຕັກໂນໂລຊີ ແລະ ນະວັດຕະກຳ ໃຫ້ແກ່ສັງຄົມ;
20) ສ້າງປຶ້ມແນະນຳການນຳໃຊ້ເຕັກໂນໂລຊີອັດສະລິຍະ ເຂົ້າໃນການພັດທະນາຕົວເມືອງອັດສະລິຍະ.

### 3. ໂຄງການສະໜັບສະໜູນວຽກງານຈຸດສຸມ

1. ພັດທະນາລະບົບການຄຸ້ມຄອງການອະນຸຍາດດ້ວຍເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ
2. ພັດທະນາ ແລະ ນຳໃຊ້ເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ ເຂົ້າໃນວຽກງານກະສິກຳ.
3. ໂຄງການ ຈັດງານແຂ່ງຂັນນະວັດຕະກຳ

4. ໂຄງການເກັບກຳຂໍ້ມູນດ້ານການຄວາມຕ້ອງ ການພັດທະນາເຕັກໂນໂລຊີ ແລະ ນະວັດຕະກຳ ຂອງບັນດາອົງການຈັດຕັ້ງພາກລັດ ແລະ ຂົງເຂດການຜະລິດ ແລະ ບໍລິການ ຢູ່ນະຄອນຫລວງວຽງຈັນ, ຫລວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ.
5. ໂຄງການພັດທະນາລະບົບຖານຂໍ້ມູນຢັ້ງຢືນຕົວຕົນແບບທັນສະໄໝເພື່ອສົ່ງເສີມປອດໄພໃນການເຮັດທຸລະກຳທາງເອເລັກໂຕຣນິກ ຢູ່ ສປປ ລາວ.
6. ໂຄງການພັດທະນາລະບົບທັນສະໄໝ ເພື່ອພັດທະນາເສດຖະກິດພິເສດ ແລະ ສ້າງເສດຖະກິດດິຈິຕອນ ຢູ່ ສປປ ລາວ.
7. ໂຄງການພັດທະນາລະບົບເຕັກໂນໂລຊີດິຈິຕອນ ເພື່ອເກັບລາຍຮັບຂອງພາກລັດ ແລະ ລະບົບຄຸ້ມຄອງທຸລະກິດດິຈິຕອນ
8. ພັດທະນາ ແລະ ທົດລອງການນຳໃຊ້ເຕັກໂນໂລຊີກຸ່ມຂໍ້ມູນຜູກພັນໃນຂະແໜງການເງິນ (ເຊັ່ນ: ການຊຳລະເງິນລະຫວ່າງທະນາຄານ, ລະບົບ KYC ແລະ ການຄຸ້ມຄອງຂໍ້ມູນທີ່ດິນ).
9. ໂຄງການພັດທະນາ ແລະ ໃຫ້ບໍລິການຢັ້ງຢືນລະບົບພລາດຟອມ
10. ໂຄງການພັດທະນາລະບົບບໍລິການທັນສະໄໝ
11. ໂຄງການພັດທະນາເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ ເພື່ອສົ່ງເສີມຜະລິດຕະພັນກະສິກຳຂອງ ສປປ ລາວ (Blockchain Solution for Promotion of Lao Agriculture).
12. ໂຄງການຄົ້ນຄວ້ານຳໃຊ້ເຕັກໂນໂລຊີ ເພື່ອແປຮູບວັດຖຸດິບທຳມະຊາດ
13. ໂຄງການ ຖ່າຍທອດເຕັກໂນໂລຊີໃຫ້ແກ່ຜູ້ປະກອບການເພື່ອສ້າງມູນຄ່າເພີ່ມໃຫ້ແກ່ການຜະລິດ ຜະລິດຕະພັນກະສິກຳແບບຍືນຍົງຢູ່ແຂວງວຽງຈັນ ແລະ ແຂວງຫລວງພະບາງ
14. ໂຄງການຫັນເປັນດິຈິຕອນວຽກງານ IOT ແລະ Smart City
15. ໂຄງການ ສ້າງເຂດເຕັກໂນໂລຊີລະດັບສູງ;
16. ໂຄງການສ້າງສູນຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ ແຫ່ງຊາດ (National Blockchain Research and Development Center).
17. ໂຄງການບໍລິການຂໍ້ມູນຂະໜາດໃຫຍ່ (Big Data) ແບບທັນສະໄໝ ຄຸ້ມຄອງລວມສູນໃນລະດັບປະເທດ.
18. ໂຄງການຄົ້ນຄວ້າ ແລະ ນຳໃຊ້ອິນເຕີເນັດແຫ່ງຊັບພະສິ່ງ ສຳລັບໂຮງເຮືອນກະສິກຳທັນສະໄໝ (IoT- Based Smart Greenhouse Applied Research Project).
19. ໂຄງການຮ່ວມມືດ້ານອາວະກາດ ບັນດາປະເທດແມ່ນ້ຳຂອງ ແມ່ນ້ຳລ້ານຊ້າງ (MeSIC)
20. ໂຄງການສ້າງສູນຄຸ້ມຄອງ ແລະ ບໍລິການຂໍ້ມູນດາວທຽມແຫ່ງຊາດ
21. ສ້າງຄູ່ມືໃນການຕີລາຄາ, ກວດສອບ ແລະ ປະເມີນເຕັກໂນໂລຊີ
22. ໂຄງການພັດທະນາລະບົບຢັ້ງຢືນຂໍ້ມູນການສຶກສາ (Certificate Verification) ດ້ວຍການນຳໃຊ້ເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ.
23. ໂຄງການສ້າງຕັ້ງສູນການນຳໃຊ້ເຕັກໂນໂລຊີດາວທຽມນຳພາທາງເຂົ້າໃນຂົງເຂດການຂົນສົ່ງ(ຄຸ້ມຄອງພາຫະນະ)
24. ໂຄງການ ສ້າງຖານຂໍ້ມູນດ້ານນະວັດຕະກຳ
25. ໂຄງການເກັບກຳຂໍ້ມູນດ້ານການຄວາມຕ້ອງການພັດທະນາເຕັກໂນໂລຊີ ແລະ ນະວັດຕະກຳ ຂອງບັນດາອົງການຈັດຕັ້ງພາກລັດ ແລະ ຂົງເຂດການຜະລິດ ແລະ ບໍລິການ ຢູ່ນະຄອນຫລວງວຽງຈັນ, ຫລວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ.
26. ໂຄງການ ສ້າງສູນພັດທະນານະວັດຕະກຳ
27. ໂຄງການ ສ້າງສູນບົ່ມເພາະ ນັກທຸລະກິດລິເລີ່ມ (Start up);
28. ໂຄງການສ້າງກອງທຶນສົ່ງເສີມ start up;

### 4.2.8 ແຜນວຽກຈຸດສຸມທີ 8: ວຽກງານປັນຍາປະດິດ

ເພື່ອບັນລຸແຜນວຽກຈຸດສຸມທີ 8 ຈະຕ້ອງໄດ້ຈັດຕັ້ງປະຕິບັດບັດດາ ວຽກງານຈຸດສຸມ ແລະ ໂຄງການດັ່ງນີ້:

**1. ຄາດໝາຍ ແລະ ຕົວຊີ້ບອກ**

- ສູ້ຊົນສ້າງສູນນະວັດຕະກໍາປັນຍາປະດິດ (AI Innovation Center);
- ສູ້ຊົນສ້າງສູນຂໍ້ມູນປັນຍາປະດິດ (AI Data Center);
- ພັດທະນາ ແລະ ປະຍຸກໃຊ້ເຕັກໂນໂລຊີປັນຍາປະດິດ AI ເຂົ້າໃນລະບົບບໍລິຫານລັດຢ່າງເປັນຮູບປະທໍາ;
- ເພີ່ມທັກສະດ້ານປັນຍາປະດິດໃຫ້ແກ່ບຸກຄະລາກອນດີຈີຕອນ ເພື່ອຮອງຮັບຄວາມຕ້ອງການຂອງຕະຫຼາດແຮງງານ;
- ສ້າງກອບນິຕິກໍາ ແລະ ນະໂຍບາຍເພື່ອຄຸ້ມຄອງ ແລະ ສົ່ງເສີມການພັດທະນາ AI ຢ່າງມີຈັນຍາບັນ;
- ສົ່ງເສີມທາງດ້ານນະໂຍບາຍ 100% ໃຫ້ຄະນະຄູອາຈານ ເຂົ້າຮ່ວມຝຶກອົບຮົມ ແລະ ສອບເສັງໃບຢັ້ງຢືນ ທີ່ຕິດພັນກັບວຽກງານໄອຊີທີ;
- ພັດທະນາຄວາມສາມາດ ຄວາມຊໍານານທາງດ້ານໄອຊີທີ ຂອງຄູອາຈານ ໃຫ້ໄດ້ 25 ຄົນ.

**2. ວຽກງານຈຸດສຸມ**

1) ພັດທະນາໂຄງລ່າງພື້ນຖານປັນຍາປະດິດ: ສ້າງ ແລະ ປັບປຸງສູນນະວັດຕະກໍາປັນຍາປະດິດ ແລະ ສູນຂໍ້ມູນປັນຍາປະດິດ ເພື່ອຮອງຮັບການຄົ້ນຄວ້າ, ພັດທະນາ, ການຝຶກອົບຮົມແບບຈໍາລອງ (AI models) ແລະ ການປະຍຸກໃຊ້ AI ຢ່າງມີປະສິດທິພາບ;
2) ສ້າງພື້ນທີ່ໃນການຄົ້ນຄວ້າປະດິດສ້າງດ້ານເຕັກໂນໂລຊີ ແລະ ນະວັດຕະກໍາ (Makerspaces for Technology and Innovation);
3) ຫ້ອງທົດລອງ Software: ສ້າງຫ້ອງທົດລອງເພື່ອການພັດທະນາ ແລະ ກວດສອບ software;
4) ຫ້ອງທົດລອງເອເລັກໂຕຣນິກ: ສ້າງຫ້ອງທົດລອງເອເລັກໂຕຣນິກ ແລະ ເຄື່ອງມືກວດສອບ ສະເພາະສໍາລັບການອອກແບບວົງຈອນ, ລະບົບສະໝອງກົນຝັງຕົວ ແລະ ການສ້າງຕົ້ນແບບວົງຈອນເອເລັກໂຕຣນິກ;
5) ສ້າງສູນຄົ້ນຄວ້າ, ປະກອບສ້າງ, ທົດສອບ, ທົດລອງ ແລະ ຂະຫຍາຍການນໍາໃຊ້ເຮືອບິນບໍ່ມີຄົນຂັບ ທັງຢູ່ຕະຫຼາດພາຍໃນ ແລະ ຕ່າງປະເທດ;
6) ສ້າງສູນຂໍ້ມູນ ແລະ ການສື່ສານກ່ຽວກັບໄພພິບັດ (ການຕິດຕາມແຜ່ນດິນໄຫວ, ມົນລະພິດທາງອາກາດ ແລະ ອື່ນໆທີ່ກ່ຽວຂ້ອງ) ໃນ ສປປລາວ (ສ້າງສະຖານີວັດແທກແຜນດິນໄຫວຢູ່ບັນດາ 18 ແຂວງ ຂອງ ສປປລາວ.
7) ຫ້ອງລົດລອງດ້ານຍານພາຫະນະພະລັງງານໃໝ່ (ລົດໄຟຟ້າ (EV), .....)
8) ສົ່ງເສີມການປະຍຸກໃຊ້ປັນຍາປະດິດໃນຂະແໜງການຕ່າງໆ: ພັດທະນາ ແລະ ປະຍຸກໃຊ້ເຕັກໂນໂລຊີ AI ເຂົ້າໃນລະບົບບໍລິຫານລັດ, ວຽກງານກະສິກໍາ, ສາທາລະນະສຸກ, ການສຶກສາ, ການບໍລິການ ແລະ ຂະແໜງການ ອື່ນໆ ເພື່ອເພີ່ມປະສິດທິພາບ, ປະຢັດຕົ້ນທຶນ ແລະ ສ້າງມູນຄ່າເພີ່ມ;
9) ພັດທະນາບຸກຄະລາກອນດ້ານປັນຍາປະດິດ: ກໍ່ສ້າງ, ຍົກລະດັບຄວາມຮູ້ ແລະ ທັກສະດ້ານ AI ໃຫ້ແກ່ພະນັກງານ, ລັດຖະກອນ, ນັກຄົ້ນຄວ້າ, ນັກພັດທະນາຊອບແວ ແລະ ປະຊາຊົນທົ່ວໄປ ເພື່ອຕອບສະໜອງຄວາມຕ້ອງການດ້ານບຸກຄະລາກອນດີຈີຕອນ;
10) ສ້າງ ແລະ ປັບປຸງນິຕິກໍາກ່ຽວກັບປັນຍາປະດິດ: ຄົ້ນຄວ້າ, ສ້າງ ແລະ ປັບປຸງກອບນິຕິກໍາ, ນະໂຍບາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບການພັດທະນາ, ການນໍາໃຊ້ ແລະ ການຄຸ້ມຄອງ AI, ລວມທັງດ້ານຄວາມປອດໄພຂອງຂໍ້ມູນ ແລະ ຈັນຍາບັນ;
11) ຊຸກຍູ້ການຄົ້ນຄວ້າ ແລະ ນະວັດຕະກໍາດ້ານປັນຍາປະດິດ: ສ້າງເງື່ອນໄຂ ແລະ ສະໜັບສະໜູນການຄົ້ນຄວ້າ, ພັດທະນາ ແລະ ນະວັດຕະກໍາໃໝ່ໆ ດ້ານ AI, ສົ່ງເສີມການເກີດຂຶ້ນ ແລະ ການເຕີບຂອງທຸລະກິດລິເລີ່ມ (Startup) ທີ່ນໍາໃຊ້ AI.

3. **ໂຄງການສະໜັບສະໜູນວຽກງານຈຸດສຸມ**

1. ໂຄງການທົດລອງພັດທະນາລະບົບເຕັກໂນໂລຊີນະວັດຕະກໍາເຊັນເຊີ (AI) ເພື່ອຄັດແຍກຂີ້ເຫຍື້ອ (Pilot project to develop innovative sensor/AI technology system for waste separation)
2. ສ້າງມາດຕະຖານ ເພື່ອຮອງຮັບການນໍາໃຊ້ລົດໄຟຟ້າ ແລະ ພາຫະນະບໍ່ມີຄົນຂັບ ໃນ ສປປ ລາວ;
3. ສ້າງຫ້ອງທົດລອງ IoT: ສະໜອງອຸປະກອນໃຫ້ຫ້ອງປະຕິບັດການທົດລອງເຕັກໂນໂລຊີອັດສະລິຍະ (Smart Technology LAB);
4. ສ້າງພື້ນທີ່ໃນການຄົ້ນຄວ້າປະດິດສ້າງດ້ານເຕັກໂນໂລຊີ ແລະ ນະວັດຕະກໍາ (Makerspaces for Technology and Innovation);
5. ຫ້ອງທົດລອງ Software: ສ້າງຫ້ອງທົດລອງເພື່ອ ພັດທະນາ ແລະ ກວດສອບຢັ້ງຢືນຊອບແວ software;
6. ຫ້ອງທົດລອງເອເລັກໂຕຣນິກ: ສ້າງຫ້ອງທົດລອງເອເລັກໂຕຣນິກ ແລະ ເຄື່ອງມືກວດສອບ ສະເພາະສໍາລັບການອອກແບບວົງຈອນ, ລະບົບສະຫມອງກົນຝັງຕົວ ແລະ ການສ້າງຕົ້ນແບບວົງຈອນເອເລັກໂຕຣນິກ;
7. ສ້າງສູນຄົ້ນຄວ້າ, ປະກອບສ້າງ, ທົດສອບ, ທົດລອງ ແລະ ຂະຫຍາຍການນໍາໃຊ້ເຮືອບິນບໍ່ມີຄົນຂັບ ທັງຢູ່ຕະຫຼາດພາຍໃນ ແລະ ຕ່າງປະເທດ;
8. ສ້າງສູນຂໍ້ມູນ ແລະ ການສື່ສານກ່ຽວກັບໄພພິບັດ (ການຕິດຕາມແຜ່ນດິນໄຫວ, ມົນລະພິດທາງອາກາດ ແລະ ອື່ນໆທີ່ກ່ຽວຂ້ອງ) ໃນ ສປປລາວ (ສ້າງສະຖານີວັດແທກແຜນດິນໄຫວຢູ່ບັນດາ 18 ແຂວງ ຂອງ ສປປລາວ;
9. ສ້າງຫຼັກສູດຝຶກອົບຮົມກ່ຽວກັບ AI, IoT, ການພັດທະນາ UAV, ICT, ລະບົບອັດຕະໂນມັດ ແລະ ການທົດສອບພາຫະນະໄຟຟ້າ;
10. ໂຄງການຝຶກອົບຮົມ ກ່ຽວກັບການສ້າງຂີດຄວາສາມາດໃນການນໍາໃຊ້ ເຕັກໂນໂລຊີອັດສະລິຍະ ທົ່ວສັງຄົມ;
11. ໂຄງການຝຶກອົບຮົມກ່ຽວກັບການນໍາໃຊ້, ການຄຸ້ມຄອງ ແລະ ຈັນຍາບັນດ້ານປັນຍາປະດິດ;
12. ໂຄງການຝຶກອົບຮົມກ່ຽວກັບການນໍາໃຊ້ອິນເຕີເນັດແຫ່ງຊັບພະສິ່ງເຂົ້າໃນວຽກງານກະສິກໍາ, ໂຮງງານຜະລິດ ແລະ ການບໍລິຫານຈັດການຕົວເມືອງ;
13. ຈັດຕັ້ງໂຄງການຝຶກອົບຮົມກ່ຽວກັບການນໍາໃຊ້ UAV ເຂົ້າໃນວຽກງານກະສິກໍາ ແລະ ການສໍາຫຼວດ;
14. ການໂຄສະນາສ້າງຄວາມຮັບຮູ້: ດໍາເນີນການໂຄສະນາສ້າງຄວາມຮັບຮູ້ແກ່ສາທາລະນະເພື່ອເນັ້ນໜັກເຖິງຜົນປະໂຫຍດ, ລະບຽບໃນການຄຸ້ມຄອງ ແລະສິ່ງທ້າທາຍ ຂອງເຕັກໂນໂລຊີອັດສະລິຍະ;
15. ການນໍາໃຊ້ IoT ໃນການວັດແທກມົນລະພິດ ແລະແຈ້ງເຕືອນ ຜ່ານ ລະບົບ ICT;
16. ການນໍາໃຊ້ເຕັກໂນໂລຊີ UAV ໃນການປູກປ່າໄມ້ປ້າທົດແທນ ໃນ ສປປ ລາວ;
17. ພັດທະນາຜະລິດຕະພັນ ແລະການບໍລິການ ທີ່ນໍາໃຊ້ ເຕັກໂນໂລຊີ AI, IoT, ການພັດທະນາ UAV, ICT, ລະບົບອັດຕະໂນມັດ ແລະ ເຕັກໂນໂລຊີອັດສະລິຍະອື່ນໆ ອອກຮັບໃຊ້ສັງຄົມ;
18. ໂຄງການສ້າງສູນຂໍ້ມູນ ແລະ ການສື່ສານກ່ຽວກັບໄພພິບັດ (ການຕິດຕາມແຜ່ນດິນໄຫວ, ມົນລະພິດທາງອາກາດ ແລະ ອື່ນໆທີ່ກ່ຽວຂ້ອງ) ໃນ ສປປ ລາວຮ່ວມກັບ ສສ ຫວຽດນາມ;
19. ໂຄງການຮ່ວມມື: ສົ່ງເສີມການຮ່ວມມືກັບສະຖາບັນຄົ້ນຄວ້າພາຍໃນ ແລະ ສາກົນເພື່ອຂັບເຄື່ອນເຕັກໂນໂລຊີອັດສະລິຍະ ແລະ ການແລກປ່ຽນຄວາມຮູ້;
20. ໂຄງການຮ່ວມມື ພັດທະນາ, ປະກອບສ້າງ ແລະ ຂະຫຍາຍການນໍາໃຊ້ UAV ຮ່ວມກັບ Space Eyes ແລະ ບໍລິສັດ flyto UAV ຂອງ ສປ ຈີນ;
21. ສ້າງສູນຝຶກອົບຮົມລັດຖະບານດິຈິຕອນ ໃນ ສປປ ລາວ (Establishment of Digital-Human Resources Development (D-HRD) Center for Enhancing Digital Capacity of Public Officials in Lao PDR
22. ໂຄງການຂໍທີ່ປຶກສາ ຈາກອົງການ ສ.ເກົາຫຼີ

23. ໂຄງການສ້າງສູນ Digital Dream Space (DDS) ແຂວງຈໍາປາສັກ
24. ໂຄງການສ້າງສູນຮ່ວມມືລັດຖະບານດິຈິຕອນ (Digital Government cooperation Center - DGCC) phase2
25. AI Data Ecosystem Development.
26. ໂຄງການຝຶກອົບຮົມການຂຽນຊອບແວລະບົບສູນປະຕິບັດການຄວາມປອດໄພ ໄຊເບີ ໃຫ້ພະນັກງານເຕັກນິກຂອງກົມ ຄວາມປອດໄພໄຊເບີ
27. ໂຄງການພັດທະນາບຸກຄະລາກອນຂະແໜງ ຄວາມປອດໄພໄຊເບີ ໃຫ້ເປັນຊ່ຽວຊານສະເພາະດ້ານ Cybersecurity Certificates (CISSP, CEH, CompTIA Security+, CISM (Non-Member), CISA (Non-Member), OSCP, GSEC, CCSP)
28. ໂຄງການ Secured Communication & Collaboration Solution (GAIA) with Tmax
29. ໂຄງການ ໂຄງຂ່າຍຂໍ້ມູນຂ່າວສານຄວາມໄວສູງ ແລະ ເສັ້ນທາງສາຍໄໝ ດິຈິຕອນ (High Speed Information Network and Digital Silk Road project)

### 4.2.9 ແຜນວຽກຈຸດສຸມທີ 9:ພັດທະນາ ໄປສະນີ ທັນເປັນທັນສະໄໝ.

ແຜນວຽກນີ້ ແມ່ນສ້າງຂຶ້ນເພື່ອບັນລຸເປົ້າໝາຍທີ 9, ເຊິ່ງມີແຜນງານຮອງຮັບດັ່ງນີ້:

**1. ຄາດໝາຍ ແລະ ຕົວຊີ້ບອກ**

- ປັບປຸງ ກົດໝາຍ ວ່າດ້ວຍການໄປສະນີ 1 ສະບັບ, ສ້າງຍຸດທະສາດການພັດທະນາໄປສະນີ 1 ສະບັບ, ສ້າງ ແລະ ປັບປຸງນິຕິກໍາໃຕ້ກົດໝາຍ 7 ສະບັບ;
- ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍຂອງຂະແໜງການໄປສະນີຢູ່ສູນກາງ ແລະ ທ້ອງຖິ່ນໃຫ້ໄດ້ຢ່າງໜ້ອຍ 1 ຄັ້ງ ຕໍ່ປີ;
- ປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍຂອງຂະແໜງການໄປສະນີຢູ່ສູນກາງ ແລະ ທ້ອງຖິ່ນ ຢ່າງໜ້ອຍໃຫ້ໄດ້ 2 ຄັ້ງພາຍໃນ 5 ປີ;
- ສ້າງສູນພັດທະນາໄປສະນີທັນເປັນດິຈິຕອນ 1 ແຫ່ງ;
- ສ້າງສູນກວດກາເຄື່ອງຝາກໄປສະນີລະຫວ່າງປະເທດ 1 ແຫ່ງ;
- ຊຸກຍູ້ ແລະ ສົ່ງເສີມໃຫ້ຜູ້ປະກອບການໄປສະນີ ສ້າງສູນແລກປ່ຽນເມພາຍໃນປະເທດ 3 ແຫ່ງ;
- ສ້າງສູນຂໍ້ມູນຂ່າວສານດ້ານໄປສະນີ 1 ຈຸດ;
- ສ້າງ ແລະ ພັດທະນາລະຫັດໄປສະນີທັນເປັນດິຈິຕອນ;
- ສ້າງຈຸດບໍລິການຮັບ-ຝາກພັດສະດຸໄປສະນີດິຈິຕອນ;
- ຂະຫຍາຍຕາໜ່າງໄປສະນີ ໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ;
- ສຶກສາຄວາມເປັນໄປໄດ້ໃນການສ້າງສູນພັດທະນາໄປສະນີທັນເປັນດິຈິຕອນ;
- ສໍາຫຼວດຈຸດທີ່ຕັ້ງ ແລະ ສ້າງແຜນພັດທະນາ, ສ້າງສູນກວດກາເຄື່ອງຝາກໄປສະນີລະຫວ່າງປະເທດແລະ ລະບົບເຄື່ອງຝາກໄປສະນີລະຫວ່າງປະເທດ ທີ່ທ່າບົກ-ທ່ານາແລ້ງ;
- ຊຸກຍູ້ ແລະ ສົ່ງເສີມໃຫ້ຜູ້ປະກອບການໄປສະນີ ສ້າງສູນແລກປ່ຽນເມພາຍໃນປະເທດ ຢູ່ພາກເໜືອ, ພາກກາງ ແລະ ພາກໃຕ້;
- ສ້າງແຜນພັດທະນາ, ສ້າງໂຄງການສົ່ງເສີມ ແລະ ສ້າງສູນຂໍ້ມູນຂ່າວສານດ້ານໄປສະນີ;
- ສ້າງແຜນພັດທະນາ, ລະບົບຂຶ້ນທະບຽນ ແລະ ພັດທະນາທັກສະການນໍາໃຊ້ລະບົບສູນແລກປ່ຽນເມພາຍໃນປະເທດ;
- ເຜີຍແຜ່ ແລະ ສົ່ງເສີມການນໍາໃຊ້ລະບົບລະຫັດໄປສະນີດິຈິຕອນ ຢ່າງໜ້ອຍ 3 ແຂວງ;
- ສ້າງແຜນພັດທະນາ, ສ້າງໂຄງການສົ່ງເສີມ ແລະ ພັດທະນາຈຸດບໍລິການຮັບຝາກພັດສະດຸດິຈິຕອນ;

- ຊຸກຍູ້ ແລະ ສົ່ງເສີມຂະຫຍາຍຕາໜ່າງໄປສະນີ ໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ກວມເອົາທຸກເມືອງ;
- ສ້າງສູນຝຶກອົບຮົມເພື່ອເພີ່ມຄວາມຮູ້ ແລະ ຄວາມສາມາດຂອງພະນັກງານໄປສະນີລາວ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງລາວໂດຍການເພີ່ມຄວາມສາມາດໃນການໃຫ້ບໍລິການດ້ານໄປສະນີທີ່ມີຄຸນນະພາບໃຫ້ໄດ້ 1 ແຫ່ງ;
- ເພີ່ມທັກສະການບໍລິຫານຄຸ້ມຄອງວຽກງານໄປສະນີ, ທັກສະວິຊາການ ເພື່ອສ້າງຄວາມເຂັ້ມແຂງກັບພະນັກງານອົງການຄຸ້ມຄອງໄປສະນີ ແລະ ຜູ້ປະກອບການໄປສະນີ ໂດຍການຈັດສໍາມະນາ, ຝຶກອົບຮົມ ແລະ ເຜີຍແຜ່ການນໍາໃຊ້ເຕັກໂນໂລຊີ, ການຄຸ້ມຄອງ ແລະ ພັດທະນາໄປສະນີ, ມາດຕະຖານໄປສະນີໃຫ້ໄດ້ 15 ຄັ້ງ ຈໍານວນ 300 ເທື່ອຄົນ ພາຍໃນ 5 ປີ;
- ຮ່ວມກັບບັນດາສະຖາບັນການສຶກສາໃນການສ້າງກິດຈະກໍາຕ່າງໆໃນວັນໄປສະນີແຫ່ງຊາດ ແລະ ວັນໄປສະນີສາກົນ ເພື່ອໃຫ້ເຢົາວະຊົນ ແລະ ຊາວໜຸ່ມລາວຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກໄປສະນີ 2 ຄັ້ງຕໍ່ປີ;
- ສ້າງລະບົບມາດຕະຖານການຄຸ້ມຄອງຜູ້ປະກອບການໄປສະນີພາຍໃນປະເທດ ໃຫ້ໄດ້ 1 ລະບົບ;
- ສ້າງລະບົບເຊື່ອມໂຍງການອອກອະນຸຍາດດໍາເນີນທຸລະກິດບໍລິການໄປສະນີ ໃຫ້ໄດ້ 1 ລະບົບ;
- ສ້າງລະບົບສະຖິຕິໄປສະນີແບບເອເລັກໂຕຣນິກ ໃຫ້ໄດ້ 1 ລະບົບ;
- ຊຸກຍູ້ສົ່ງເສີມໃຫ້ບັນດາຜູ້ປະກອບການໄປສະນີນໍາໃຊ້ໂຄງລ່າງພື້ນຖານ, ຜະລິດຕະພັນ ແລະ ການບໍລິການດ້ານໄປສະນີທີ່ພາກລັດສ້າງຂຶ້ນ ໃຫ້ໄດ້ຢ່າງໜ້ອຍ 2 ບໍລິສັດຕໍ່ປີ;
- ສ້າງຄວາມຮັບຮູ້ໃຫ້ແກ່ ສັງຄົມແລະນໍາໃຊ້ໂຄງລ່າງພື້ນຖານ, ຜະລິດຕະພັນ ແລະ ການບໍລິການດ້ານໄປສະນີທີ່ພາກລັດສ້າງຂຶ້ນ ໃຫ້ໄດ້ 2 ຄັ້ງຕໍ່ປີ;
- ຊຸກຍູ້ ແລະ ສົ່ງເສີມໃຫ້ຜູ້ປະກອບການໄປສະນີ ພັດທະນາແພັລດຟອມ ແລະນໍາໃຊ້ນະວັດຕະກໍາການບໍລິການດ້ານໄປສະນີໃຫ້ມີຄວາມຫຼາກຫຼາຍໃຫ້ໄດ້ຢ່າງໜ້ອຍ 2 ບໍລິສັດ;
- ຊຸກຍູ້ສົ່ງເສີມໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ/ນະຄອນຫຼວງ ໃນການນໍາໃຊ້ເຕັກໂນໂລຊີດ້ານໄປສະນີ 18 ແຂວງ;
- ພົວພັນຮ່ວມມື ກັບສະຫະພາບໄປສະນີສາກົນ ແລະ ສະຫະພາບໄປສະນີອາຊີ-ປາຊີຟິກເພື່ອແລກປ່ຽນຄວາມຮູ້, ປະສົບການ, ບົດຮຽນໃໝ່ທາງດ້ານເຕັກນິກ ເພື່ອຍົກລະດັບຄວາມຮູ້ໃຫ້ແກ່ບຸກຄະລາກອນໄປສະນີໂດຍການເຂົ້າຮ່ວມຝຶກອົບຮົມ ແລະ ເຂົ້າຮ່ວມກອງປະຊຸມສໍາມະນາໃຫ້ໄດ້ 7 ທຶນ ຕໍ່ ປີ ແລະ ພັດທະນາໂຄງລ່າງພື້ນຖານໄປສະນີ ພາຍໃຕ້ໂຄງການ, ກິດຈະກໍາ ແລະ ການຊ່ວຍເຫລືອຕ່າງໆ ຢ່າງໜ້ອຍໃຫ້ໄດ້ 3 ໂຄງການ;
- ປະສານ ແລະ ພົວພັນຮ່ວມມືກັບ ອົງການຈັດຕັ້ງສາກົນເພື່ອຂໍຊ່ຽວຊານ ໃນການແລກປ່ຽນບົດຮຽນແລະ ພັດທະນາຂະແໜງໄປສະນີ ຢ່າງໜ້ອຍ 2 ຄົນ;
- ພົວພັນຮ່ວມມືກັບປະເທດຄູ່ຮ່ວມຍຸດທະສາດ ແລະ ປະເທດສະມາຊິກດ້ອຍກັນ ເພື່ອຍາດແຍ່ງການຊ່ວຍເຫຼືອໃນການພັດທະນາຂະແໜງການໄປສະນີ ຢ່າງໜ້ອຍໃຫ້ໄດ້ 2 ປະເທດ;
- ສ້າງຄວາມຮ່ວມມືກັບອາຊຽນ ແລະ ຈີນ ໃນການພັດທະນາລະບົບເຕັກໂນໂລຊີໂລຊິດ ສະຕິກໄປສະນີ ເພື່ອສະໜັບສະໜູນໃຫ້ແກ່ການຄ້າຊາຍແດນລະຫວ່າງກັນ.

**2. ແຜນງານຈຸດສຸມ**

1) ການພັດທະນານິຕິກໍາຂະແໜງການໄປສະນີ;
2) ພັດທະນາໂຄງລ່າງພື້ນຖານດ້ານໄປສະນີ;
3) ການພັດທະນາຊັບພະຍາກອນມະນຸດດ້ານໄປສະນີ;
4) ສ້າງສູນຝຶກອົບຮົມເພື່ອເພີ່ມຄວາມຮູ້ ແລະ ຄວາມສາມາດຂອງພະນັກງານຂະແໜງໄປສະນີ; ລົງເກັບກໍາຂໍ້ມູນເພື່ອສ້າງຫົວຂໍ້ສໍາມະນາ, ຝຶກອົບຮົມ ກ່ຽວກັບໂລຊິສະຕິກ ແລະ ການໄປສະນີ, ການຫັນຂະແໜງການໄປສະນີເປັນດີຈີຕອນ, ນໍາໃຊ້ເຕັກໂນໂລຊີດີຈີຕອນເຂົ້າໃນການບໍລິຫານຈັດການ, ການຄຸ້ມຄອງ ແລະ ການພັດທະນາ

ການໄປສະນີ; ຈັດສຳມະນາ, ຝຶກອົບຮົມ ແລະ ເຜີຍແຜ່ການນຳໃຊ້ເຕັກໂນໂລຊີ, ການຄຸ້ມຄອງ ແລະ ພັດທະນາໄປສະນີມາດຕະຖານໄປສະນີ;

5) ການພັດທະນາຜະລິດຕະພັນ ແລະ ການບໍລິການດ້ານໄປສະນີ;

6) ສ້າງແຜນພັດທະນາ ແລະ ຂຽນໂຄງການສ້າງລະບົບມາດຕະຖານການຄຸ້ມຄອງຜູ້ປະກອບການໄປສະນີພາຍໃນປະເທດ, ລະບົບເຊື່ອມໂຍງການອອກອະນຸຍາດດຳເນີນທຸລະກິດບໍລິການໄປສະນີ ແລະ ສຳຫຼວດ, ເກັບກຳຂໍ້ມູນ ແລະ ສ້າງລະບົບສະຖິຕິໄປສະນີແບບເອເລັກໂຕຣນິກ.ຊຸກຍູ້ສົ່ງເສີມການນຳໃຊ້ເຕັກໂນໂລຊີດ້ານໄປສະນີ ເຜີຍແຜ່ລະບຽບການ ແລະ ຈັດຝຶກອົບຮົມນຳໃຊ້ໂຄງລ່າງພື້ນຖານ, ຜະລິດຕະພັນ ແລະ ການບໍລິການດ້ານໄປສະນີທີ່ພາກລັດສ້າງຂຶ້ນໃຫ້ແກ່ບັນດາຜູ້ປະກອບການໄປສະນີ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ໂຄສະນານຳໃຊ້ໂຄງລ່າງພື້ນຖານ, ຜະລິດຕະພັນ ແລະ ການບໍລິການດ້ານໄປສະນີທີ່ພາກລັດສ້າງຂຶ້ນ ໃຫ້ແກ່ສັງຄົມ, ປະເມີນການນຳໃຊ້ໂຄງລ່າງພື້ນຖານ, ຜະລິດຕະພັນ ແລະ ການບໍລິການດ້ານໄປສະນີ ທີ່ພາກລັດສ້າງຂຶ້ນ, ຕິດຕາມການນຳໃຊ້ແພັລດຟອມ ແລະ ນະວັດຕະກຳການບໍລິການດ້ານໄປສະນີຂອງຜູ້ປະກອບການໄປສະນີ, ຈັດຝຶກອົບຮົມການນຳໃຊ້ເຕັກໂນໂລຊີດ້ານໄປສະນີໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ/ນະຄອນຫຼວງ;

7) ເປີດກວ້າງການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ. ສ້າງແຜນຮ່ວມມື ແລະ ໂຄງການກັບສະຫະພາບໄປສະນີສາກົນ ແລະ ສະຫະພາບໄປສະນີອາຊີ-ປາຊີຟິກ, ສູ້ຊົນຍາດແຍ່ງຂໍຊ່ວຍຊ່ຽວຊານຈາກຕ່າງປະເທດມາປະຈຳຢູ່ຂະແໜງການໄປສະນີ, ສ້າງແຜນຮ່ວມມື ແລະ ໂຄງການຮ່ວມມືຮອບດ້ານກັບບັນດາປະເທດຄູ່ຮ່ວມຍຸດທະສາດ ແລະ ປະເທດສະມາຊິກດ້ວຍກັນ ເພື່ອຍາດແຍ່ງການຊ່ວຍເຫຼືອ ໃນການພັດທະນາຂະແໜງການໄປສະນີ, ເສີມສ້າງການຮ່ວມມືລະຫວ່າງຜູ້ປະກອບການໄປສະນີ ຂອງ ສປປ ລາວ ແລະ ບັນດາຜູ້ປະກອບການໄປສະນີປະເທດອ້ອມຂ້າງໃນການພັດທະນາການບໍລິການໄປສະນີ, ຈັດຕັ້ງເອທີ ຫຼື ກອງປະຊຸມປຶກສາຫາລືສົນທະນາແລກປ່ຽນກັບບັນດາປະເທດອາຊຽນ ໂດຍສະເພາະກັບບັນດາ 5 ປະເທດທີ່ມີຊາຍແດນຕິດກັບ ສປປ ລາວ ເພື່ອໝູນໃຊ້ມາດຕະຖານ, ເຕັກໂນໂລຊີ, ເຄື່ອງມື ແລະ ລະບຽບການທີ່ເປັນທ່າແຮງໃນດ້ານຕັ້ງໜ້າຂອງສະຫະພາບໄປສະນີສາກົນ ສ້າງເປັນແພລດຟອມສະເພາະຂອງພາກພື້ນ.

**3. ໂຄງການສະໜັບສະໜູນວຽກງານຈຸດສຸມ**

1. ໂຄງການລົງເຜີຍແຜ່ ບັນດານິຕິກຳ ແລະ ລະບຽບການຂະແໜງການໄປສະນີ ໃຫ້ແກ່ບັນດາ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ;
2. ໂຄງການສ້າງແຜນຍຸດທະສາດການພັດທະນາວຽກງານໄປສະນີ ໄລຍະ 10 ປີ (2026-2035)
3. ໂຄງການການສ້າງສູນພັດທະນາໄປສະນີຫັນເປັນດີຈິຕອນ;
4. ໂຄງການສ້າງສູນກວດກາເຄື່ອງຝາກໄປສະນີລະຫວ່າງປະເທດ
5. ໂຄງການສ້າງສູນຂໍ້ມູນຂ່າວສານດ້ານໄປສະນີ
6. ໂຄງການສ້າງຈຸດບໍລິການຮັບ-ຝາກພັດສະດຸດີຈິຕອນ
7. ໂຄງການສ້າງຖານຂໍ້ມູນທີ່ຢູ່ໄປສະນີແຫ່ງຊາດ (National Postal Addressing system)
8. ໂຄງການສ້າງສູນກວດກາເຄື່ອງຝາກໄປສະນີພາຍໃນປະເທດ
9. ໂຄງການປັບປຸງລະຫັດໄປສະນີດີຈິຕອນ
10. ໂຄງການພັດທະນາຄວາມເຂັ້ມແຂງດ້ານມາດຕະຖານການບໍລິການໄປສະນີ ແລະ ຂົນສົ່ງ ໃນຂອບເຂດທົ່ວປະເທດ
11. ໂຄງການສ້າງຄວາມເຂັ້ມແຂງວຽກງານຕ້ານ ແລະ ສະກັດກັ້ນການຮັບຝາກ, ຈັດສົ່ງ ແລະ ແຈກຢາຍ ສິ່ງຂອງເກືອດຫ້າມ ຜ່ານຕາໜ່າງໄປສະນີ ໃນຂອບເຂດທົ່ວປະເທດ.
12. ໂຄງການສ້າງຄວາມເຂັ້ມແຂງການກວດກາເຄື່ອງຝາກ ແລະ ຫັນການລາຍງານສິ່ງເສບຕິດເປັນທັນສະໄໝ ໃຫ້ແກ່ອົງການຄຸ້ມຄອງ ແລະ ຜູ້ປະກອບການຂົນສົ່ງໄປສະນີ ໃນຂອບເຂດທົ່ວປະເທດ

13. ໂຄງການລົງເຜີຍແຜ່ຈັດຝຶກອົບຮົມ ພັດທະນາທັກສະໃນການຄຸ້ມຄອງ ແລະ ພັດທະນາໄປສະນີ ໃຫ້ບັນດາພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ/ນະຄອນຫຼວງ;
14. ໂຄງການເຜີຍແຜ່ ແລະ ຈັດຝຶກອົບຮົມ ນໍາໃຊ້ໂຄງລ່າງພື້ນຖານ, ຜະລິດຕະພັນ ແລະ ການບໍລິການດ້ານໄປສະນີທີ່ພາກລັດສ້າງຂຶ້ນ ໃຫ້ແກ່ຜູ້ປະກອບການໄປສະນີ
15. ໂຄງການສ້າງຄວາມເຂັ້ມແຂງໃຫ້ການບໍລິການໄປສະນີໃຫ້ມີຄວາມປອດໄພຜ່ານຕາໜ່າງໄປສະນີ
16. ໂຄງການຈັດຝຶກອົບຮົມການນໍາໃຊ້ເຕັກໂນໂລຊີດ້ານໄປສະນີ ໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ/ນະຄອນຫຼວງ
17. ໂຄງການສ້າງຄວາມເຂັ້ມແຂງການຄຸ້ມຄອງຄຸນນະພາບປ່ອງບໍລິການໄປສະນີໃນຂອບເຂດທົ່ວປະເທດ
18. ໂຄງການລົງເກັບກໍາຂໍ້ມູນເພື່ອສ້າງຫົວຂໍ້ສໍາມະນາ, ຝຶກອົບຮົມ ໃນການຄຸ້ມຄອງ ແລະ ພັດທະນາໄປສະນີ
19. ໂຄງການສ້າງຄູຝຶກວິຊາການດ້ານໄປສະນີໃຫ້ແກ່ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງນະຄອນຫຼວງໃນຂອບເຂດທົ່ວປະເທດ
20. ໂຄງການສ້າງສູນຝຶກອົບຮົມເພື່ອເພີ່ມຄວາມຮູ້ ແລະ ຄວາມສາມາດຂອງພະນັກງານໃນຂະແໜງໄປສະນີ
21. ໂຄງການພັດທະນາຖານຂໍ້ມູນສະແຕມໄປສະນີລາວ
22. ໂຄງການສ້າງລະບົບມາດຕະຖານການຂຶ້ນທະບຽນຜູ້ປະກອບການຈັດສົ່ງ-ແຈກຢາຍດ້ານໄປສະນີໃນຂອບເຂດທົ່ວປະເທດ
23. ໂຄງການສ້າງຄວາມເຂັ້ມແຂງວຽກງານມາດຕະຖານການອອກອານຸຍາດ ແລະ ການເກັບຄ່າທໍານຽມບໍລິການວຽກງານບໍລິການຂົນສົ່ງໄປສະນີ ໃນຂອບເຂດທົ່ວປະເທດ.
24. ໂຄງການສ້າງລະບົບເຊື່ອມໂຍງການອອກອະນຸຍາດດໍາເນີນທຸລະກິດບໍລິການໄປສະນີ
25. ໂຄງການສ້າງລະບົບກວດກາ ແລະ ອອກໃບຢັ້ງຢືນມາດຕະຖານການບໍລິການຈັດສົ່ງ-ແຈກຢາຍປ່ອງບໍລິການຂະແໜງການຂົນສົ່ງໄປສະນີແບບດິຈິຕອນໃນຂອບເຂດທົ່ວປະເທດ.
26. ໂຄງການຝຶກອົບຮົມການນໍາໃຊ້ລະບົບການອອກອະນຸຍາດດໍາເນີນທຸລະກິດດ້ານໄປສະນີໃຫ້ກັບອົງການຄຸ້ມຄອງໃນຂອບເຂດທົ່ວປະເທດ.

### 4.2.10 ແຜນວຽກຈຸດສຸມ ທີ 10: ການຮ່ວມມື ແລະ ການເຊື່ອມໂຍງ ຕ່າງປະເທດ.

ເພື່ອບັນລຸແຜນວຽກຈຸດສຸມທີ່ 10 ຈະຕ້ອງໄດ້ຈັດຕັ້ງປະຕິບັດບັດດາ ວຽກງານຈຸດສຸມ ແລະ ໂຄງການດັ່ງນີ້:

ເສີມຂະຫຍາຍການພົວພັນ ແລະ ຍາດແຍ່ງການຮ່ວມມື ກັບຕ່າງປະເທດ ໃນຂອບສອງຝ່າຍ, ອາຊຽນ, ອານຸພາກພື້ນ ແລະ ອົງການຈັດຕັ້ງສາກົນ ອີງຕາມແນວທາງການຕ່າງປະເທດຂອງ ສປປ ລາວ ສັນຕິພາບ ເອກະລາດ ມິດຕະພາບ ແລະ ການຮ່ວມມື ຢ່າງສະເໝີຕົ້ນສະເໝີປາຍ ແລະ ປະຕິບັດນະໂຍບາຍ ເປີດກວ້າງການພົວພັນຮ່ວມມື ແບບຫຼາຍທິດ, ຫຼາຍຝ່າຍແລະຫລາຍຮູບແບບເພື່ອຜັນຂະຫຍາຍບັນດາແຜນວຽກ ແລະຍົກສູງບົດບາດຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານ.

**1. ຄາດໝາຍຕົວຊີ້ວັດ**

- ສູ້ຊົນຍາດແຍ່ງທຶນການສະເໜີກິດຈະກໍາ/ໂຄງການ ຂອງບັນດາກົມ/ທຽບເທົ່າ ຈາກບັນດາອົງການຈັດຕັ້ງສາກົນ, ກອງທຶນອາຊຽນ ICT (ASEAN Information Communication and Technology Fund), ຂອບການຮ່ວມມືອານຸພາກພື້ນແມ່ນໍ້າຂອງ (Greater Mekong Subregion (GMS), ຂອບຍຸດທະສາດການຮ່ວມມືດ້ານເສດຖະກິດ-ແມ່ນໍ້າອີຣະວະດີ-ແມ່ນໍ້າເຈົ້າພະຍາ-ແມ່ນໍ້າຂອງ ຫຼື ແອັກແມັກ (Ayeyawady-Chao Praya-Mekong Economic Cooperation Strategy (ACMECS), ຂອບການຮ່ວມມື (ແມ່ນໍ້າຂອງ-ແມ່ນໍ້າລ້ານຊ້າງ, ແມ່ນໍ້າຂອງ-ເກົາຫຼີ, ແມ່ ນໍ້າຂອງ-ຍີ່ປຸ່ນ, ແມ່ນໍ້າຂອງ-ແມ່ນໍ້າຄົງຄາ) ແລະ ຈາກປະເທດຄູ່ຮ່ວມເຈລະ ຈາ ໃຫ້ໄດ້ຢ່າງໜ້ອຍປີລະ 1 ກິດຈະກໍາ/ໂຄງການ;

- ສູ້ຊີນຍາດແຍ່ງທຶນຊ່ວຍເຫລືອຍົກລະດັບຄວາມຮູ້ ຄວາມສາມາດ ໃຫ້ພະນັກງານ ກະຊວງເຕັກໂນໂລຊີ ແລະ ການສື່ສານ ພາຍໃຕ້ ບັນດາຮູບແບບການຝຶກອົບຮົມ (ໄລຍະສັ້ນ ແລະ ໄລຍະຍາວ), ສໍາມະນາ ເປັນຕົ້ນ: ທຶນຊ່ວຍເຫຼືອຝຶກອົບຮົມ, ສໍາມະນາ ໂດຍຜ່ານຫ້ອງການຄະນະກໍາມະການຮ່ວມມື ລາວ-ຈີນ, ທຶນຝຶກອົບຮົມ, ສໍາມະນາ ຂອບແມ່ນໍ້າຂອງ-ແມ່ນໍ້າລ້ານຊ້າງ;
- ສືບຕໍ່ຮ່ວມມືໃນນາມປະເທດສະມາຊິກຂອງບັນດາອົງການຈັດຕັ້ງສາກົນເປັນຕົ້ນ ອົງການສະຫະປະຊາຊາດ (UN), ສະຫະພາບໂທລະຄົມມະນາຄົມສາກົນ (ITU), ອົງການໂທລະຄົມມະນາຄົມອາຊີ-ປາຊີຟິກ (APT), ປະກອບພັນທະປະຈໍາປີ (2026–2030) ຂອງອົງການ ITU, APT, UPU, APPU;
- ສູ້ຊີນຍາດແຍ່ງທຶນເຂົ້າຮ່ວມກອງປະຊຸມ, ສໍາມະນາ ແລະ ຝຶກອົບຮົມຈາກອົງການຈັດຕັ້ງສາກົນ, ຈາກກອງທຶນອາຊຽນ ICT (ASEAN Information Communication and Technology Fund), ຂອບຮ່ວມມືອານຸພາກພື້ນແມ່ນໍ້າຂອງ (Greater Mekong Subregion (GMS), ຂອບຍຸດທະສາດການຮ່ວມມືດ້ານເສດຖະກິດ-ແມ່ນໍ້າອີຣະວະດີ-ແມ່ນໍ້າເຈົ້າພະຍາ-ແມ່ນໍ້າຂອງ ຫຼື ແອັກແມັກ (Ayeyawady-Chao Praya-Mekong Economic Cooperation Strategy (ACMECS), ຮ່ວມມື ຂອບແມ່ນໍ້າຂອງ - ແມ່ນໍ້າລ້ານຊ້າງ, ແມ່ນໍ້າຂອງ ເກົາຫຼີ, ແມ່ນໍ້າຂອງ ຍີ່ປຸ່ນ ແລະ ຈາກປະເທດຄູ່ຮ່ວມເຈລະຈາ ໃຫ້ໄດ້ຢ່າງຕໍ່າ 50 ທຶນ/ປີ;
- ປະສານງານກັບບັນດາຂະແໜງການພາກລັດ ແລະ ເອກະຊົນ ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບວຽກງານຄວາມປອດໄພໄຊເບີ ແລະ ຈັດກິດຈະກໍາຕ່າງໆ ເປັນຕົ້ນແມ່ນ: ການຈັດກອງປະຊຸມ, ສໍາມະນາ ແລະ ຈັດຝຶກອົບຮົມ ຢູ່ພາຍໃນປະເທດ
- ສູ້ຊີນຍາດແຍ່ງທຶນເຂົ້າຮ່ວມ ຍົກລະດັບບຸກຄະລາກອນສົ່ງເສີມວິຊາການ, ເຂົ້າຮ່ວມກອງປະຊຸມ, ສໍາມະນາ ແລະ ຝຶກອົບຮົມ ວຽກງານຄວາມປອດໄພໄຊເບີ ກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ບັນດາຄູ່ຮ່ວມເຈລະຈາ
- ສູ້ຊີນຍາດແຍ່ງໂຄງການຈາກກອງທຶນອາຊຽນໄອຊີທີ, ການຮ່ວມມືອານຸພາກພື້ນ ແລະ ສາກົນ;
- ສູ້ຊີນຍາດແຍ່ງທຶນຊ່ວຍເຫຼືອຝຶກອົບຮົມ, ຍົກລະດັບຄວາມຮູ້ວິຊາສະເພາະ ທີ່ກ່ຽວຂ້ອງກັບວຽກງານຄວາມປອດໄພໄຊເບີ;
- ເພີ່ມທະວີການຮ່ວມມືກັບອົງການບັງຄັບໃຊ້ກົດໝາຍຂອງອົງການສາກົນ, ແລກປ່ຽນຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບຜູ້ຖືກເຄາະຮ້າຍ, ຮ້ອງຂໍຂໍ້ມູນ ແລະ ສະໜອງຂໍ້ມູນຫຼັກຖານດິຈິຕອນ ເພື່ອສືບສວນ ແລະ ດໍາເນີນຄະດີຕໍ່ຜູ້ກະທໍາຜິດທີ່ເປັນອາຊະຍາກໍາທາງໄຊເບີ.

**2. ແຜນງານຈຸດສຸມ**

1) ຮ່ວມມື ໃນຂອບ ອາຊຽນ ແລະ ອານຸພາກພື້ນ;
2) ຮ່ວມມືໃນຂອບ ສອງຝ່າຍ;
3) ຮ່ວມມືໃນຂອບອົງການຈັດຕັ້ງສາກົນ;
4) ຮ່ວມມືດ້ານດິຈິຕອນກັບຕ່າງປະເທດ;
5) ລົງນາມ MoU ຢ່າງໜ້ອຍ 10 ສະບັບກັບບັນດາບໍລິສັດ ແລະ ສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ;
6) ແຜນງານ ແລກປ່ຽນຂໍ້ມູນຂ່າວສານ, ຈັດກອງປະຊຸມ, ສໍາມະນາ, ຝຶກອົບຮົມ ແລະ ຈັດກິດຈະກໍາຕ່າງໆ ກ່ຽວກັບວຽກງານຄວາມປອດໄພໄຊເບີ ລະຫວ່າງບັນດາອົງການຈັດຕັ້ງພາກລັດ, ເອກະຊົນພາຍໃນປະເທດ;
7) ແຜນງານແລກປ່ຽນຄວາມຮູ້,ຂໍ້ມູນຂ່າວສານ ແລະ ບົດຮຽນວຽກງານຄວາມປອດໄພໄຊເບີ ໃນຂອບອາຊຽນ, ອານຸພາກພື້ນ ແລະ ອົງການຈັດຕັ້ງສາກົນ;
8) ແຜນງານການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນວຽກງານຄວາມປອດໄພໄຊເບີ ແລະ ສົ່ງເສີມການຈັດຕັ້ງປະຕິບັດ ຫຼັກການຕ່າງໆຂອງບັນດາປະເທດຄູ່ຮ່ວມສັນຍາໃນແຕ່ລະໄລຍະ.

**3. ໂຄງການສະໜັບສະໜູນວຽກງານຈຸດສຸມ**

1. ໂຄງການຂໍທີ່ປຶກສາ ຈາກອົງການ ສ.ເກົາຫຼີ

2. ໂຄງການສ້າງສູນ Digital Dream Space (DDS) ແຂວງຈຳປາສັກ
3. ໂຄງການສ້າງສູນຮ່ວມມືລັດຖະບານດິຈິຕອນ (**Digital Government cooperation Center - DGCC) phase**2 **AI Data Ecosystem Development**
4. ໂຄງການຝຶກອົບຮົມການຂຽນຊອບແວລະບົບສູນປະຕິບັດການຄວາມປອດໄພ ໄຊເບີ ໃຫ້ພະນັກງານເຕັກນິກຂອງກົມ ຄວາມປອດໄພໄຊເບີ
5. ໂຄງການພັດທະນາບຸກຄະລາກອນຂະແໜງ ຄວາມປອດໄພໄຊເບີ ໃຫ້ເປັນຊ່ຽວຊານສະເພາະດ້ານ Cybersecurity Certificates (CISSP, CEH, CompTIA Security+, CISM (Non-Member), CISA (Non-Member), OSCP, GSEC, CCSP)
6. ໂຄງການ Secured Communication & Collaboration Solution (GAIA) with Tmax
7. ໂຄງການ ໂຄງຂ່າຍຂໍ້ມູນຂ່າວສານຄວາມໄວສູງ ແລະ ເສັ້ນທາງສາຍໄໝ ດິຈິຕອນ (High Speed Information Network and Digital Silk Road project)

## V. ແຜນຄວາມຕ້ອງການງົບປະມານການລົງທຶນ ໃນໄລຍະ 5 ປີ (2026-2030)

ແຜນຄວາມຕ້ອງການ ພັດທະນາ ເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ IV (2026-20230) ຈະຕ້ອງໄດ້ສູ້ຊົນເອົາ ໃຈໃສ່ເປັນພິເສດໃນຄົ້ນຄ້ວາຂົນຂວາຍຍາດແຍ່ງທຶນພາຍໃນ ແລະ ຕ່າງປະເທດ ເພື່ອມາຈັດຕັ້ງປະຕິບັດບັນດາແຜນວຽກຈຸດສຸມ ແລະ ແຜນງານ ທີ່ກຳນົດໄວ້ໃຫ້ບັນລຸໄດ້ຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ນັ້ນໃຫ້ສຳເລັດ ຊຶ່ງໄດ້ຄາດຄະເນແຜນຄວາມຕ້ອງການງົບປະມານໂຄງການລົງທຶນຂອງລັດ ລວມມູນຄ່າທັງໝົດ 1,250 ຕື້ກວ່າກີບ. ນຳໃຊ້ງົບປະມານກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ລວມມູນຄ່າທັງໝົດ 750 ຕື້ກີບ, ນຳໃຊ້ງົບປະມານການຊ່ວຍເຫຼືອເພື່ອການພັດທະນາ (ODA), ໃນນີ້ລວມມີໂຄງການບູລິມະສິດ ເຊິ່ງມີລາຍລະອຽດຄື:

- ໂຄງການລົງທຶນຂອງລັດ (PIP) (ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ): **1)** ໂຄງການຮ່ວມມືພັດທະນາ ແລະ ໃຫ້ບໍລິການລະບົບບໍລິຫານລວມສູນການເຊື່ອມຕໍ່ ແລະ ການຄຸ້ມຄອງອິນເຕີເນັດແຫ່ງຊາດ ມູນຄ່າ 537,50 ກີບ; 2) ໂຄງການຮ່ວມມືພັດທະນາລະບົບຄຸ້ມຄອງໝາຍເລກໂທລະສັບມືຖື ມູນຄ່າ 468.70 ຕື້ກີບ; 3) ໂຄງການຂະຫຍາຍເຄື່ອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ໄປສູ່ 300 ໝູ່ບ້ານ ໃນຂອບເຂດທົ່ວປະເທດ ມູນຄ່າ 100 ຕື້ກີບ; **4)** ໂຄງການພັດທະນາລະບົບໂຄງລ່າງ ແລະການເຊື່ອມໂຍງແລກປ່ຽນຂໍ້ມູນພາກລັດ (G-net, GDX, Dashboard) ມູນຄ່າ 143 ຕື້ກີບ; **5)** ໂຄງການປັບປຸງ ແລະ ຂະຫຍາຍສະຖານນີຄຸ້ມຄອງກວດກາ ຄົ້ນຄວາມຖີ່ວິທະຍຸສື່ສານ ທົ່ວປະເທດ; **6)** ໂຄງການຄຸ້ມຄອງຄວາມປອດໄພຂໍ້ມູນຂ່າວສານຜ່ານອິນເຕີເນັດ, ຕ້ານການຫຼອກລວງທາງອອນລາຍ, ປ້ອງກັນຄວາມປອດໄພທາງໄຊເບີ ມູນຄ່າ 500 ຕື້ກີບ; **7)** ໂຄງການພັດທະນາປັບປຸງ ນະໂຍບາຍເພື່ອຄຸ້ມຄອງ ແລະ ສົ່ງເສີມການພັດທະນາ ແລະ ການບໍລິການ ດ້ານດິຈິຕອນ ມູນຄ່າ 100 ຕື້; **8)** ໂຄງການພັດທະນາທັກສະດິຈິຕອນທົ່ວປະເທດ ມູນຄ່າ 591.25 ຕື້ກີບ; **9)** ໂຄງການພັດທະນາລະບົບບໍລິຫານຫ້ອງການພາກລັດແບບດິຈິຕອນ (Digital Government Office) ມູນຄ່າ 365 ຕື້ກີບ;
- ໂຄງການລົງທຶນພາກເອກະຊົນ (FDI): **10)** ໂຄງການພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ອິນເຕີເນັດທົ່ວປະເທດ ຂອງບັນດາບໍລິສັດລາວໂທລະຄົມມະນາຄົມ ມູນຄ່າ 4,300 ຕື້ກີບ; **11)** ໂຄງການພັດທະນາໂຄງລ່າງພື້ນຖານສູນຂໍ້ມູນ ແລະ ລະບົບຄລາວ ແຫ່ງຊາດ ມູນຄ່າ 4,300 ຕື້ກີບ; **12)** ໂຄງການພັດທະນາໂຄງລ່າງພື້ນຖານ ສູນຂໍ້ມູນປັນຍາປະດິດ ມູນຄ່າ 322,500 ຕື້ກີບ;
- ໂຄງການຊ່ວຍເຫຼືອລ້າ ຈາກລັດຖະບານ ສປ ຈີນ: **13)** ໂຄງການໂຄງຂ່າຍຂໍ້ມູນຂ່າວສານຄວາມໄວສູງ ແລະ ເສັ້ນທາງສາຍໄໝດິຈິຕອນ (High Speed Information Network and Digital Silk Road project) ມູນຄ່າ 1,720 ຕື້ກີບ (520 ລ້ານຢວນ); **14)** ໂຄງການປັນຍາປະດິດ ຂອງ ສປປ ລາວ (Lao AI) ມູນຄ່າ 247.25 ຕື້ກີບ

- ໂຄງການຊ່ວຍເຫຼືອເພື່ອການພັດທະນາ (ODA): **15)** ໂຄງການສ້າງຕັ້ງສູນພັດທະນາບຸກຄະລາກອນລັດດ້ານດີຈິຕອນ ມູນຄ່າ 213 ຕື້ກີບ (9 ລ້ານກວ່າໂດລາສະຫາລັດ) (KOICA, ສ. ເກົາຫຼີ); **16)** ໂຄງການຊ່ວຍເຫຼືອລ້າຈາກລັດຖະບານ ສ. ເກົາຫຼີ ໃນການສ້າງຄວາມເຂັ້ມແຂງໃຫ້ສວນອຸທິຍານດີຈິຕອນ ຂອງ ສປປ ລາວ ເພື່ອຄວາມຍືນຍົງຂອງການພັດທະນາອຸດສະຫະກຳດີຈິຕອນ ມູນຄ່າ 2 ລ້ານກວ່າໂດລາສະຫາລັດ;
- ໂຄງການລົງທຶນລະຫວ່າງພາກລັດ ແລະ ເອກະຊົນ (PPP): **17)** ໂຄງການສາຍລົງດິນ ມູນຄ່າ 819 ລ້ານໂດລະສະຫະລັດ.

## ພາກທີ III
## ວິທີການຈັດຕັ້ງປະຕິບັດ ແລະ ການຕິດຕາມ, ປະເມີນຜົນ
## ແຜນພັດທະນາ 5 ປີ ຮອດປີ 2030

ເພື່ອເຮັດໃຫ້ ແຜນພັດທະນາ 5 ປີ IV (2026-2030) ບັນລຸຕາມແຜນທີ່ວາງໄວ້, ບັນດາກົມ/ທຽບເທົ່າ ຂັ້ນສູນກາງ ແລະ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ຂັ້ນທ້ອງຖິ່ນ ໃຫ້ເອົາໃຈໃສ່ປະຕິບັດບັນດາມາດຕະການຄືດັ່ງນີ້:

### 1. ວິທີການຈັດຕັ້ງປະຕິບັດ

- ຈັດຕັ້ງເຜີຍແຜ່ໃຫ້ພະນັກງານລັດຖະກອນ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ໃຫ້ມີຄວາມເປັນເອກະພາບ, ພ້ອມກັນສູ້ຊົນຈັດຕັ້ງປະຕິບັດແຜນພັດທະນາ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍ;
- ຊຸກຍູ້ທຸກພາກສ່ວນເຂົ້າຮ່ວມໃນການຊອກຫາແຫຼ່ງທຶນເພື່ອນຳໃຊ້ເຂົ້າໃນຈັດຕັ້ງປະຕິບັດ ບັນດາແຜນງານທີ່ກຳນົດໄວ້ໃນແຜນພັດທະນາ ດ້ວຍຮູບການທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກຕ່າງປະເທດໃຫ້ໄດ້ຕາມເປົ້າ ໝາຍ;
- ເພີ່ມທະວີຂອດການປະສານງານຢ່າງກົມກຽວລະຫວ່າງພາກລັດດ້ວຍກັນ (ສາຍຕັ້ງ ແລະ ສາຍຂວາງ), ພາກລັດກັບເອກະຊົນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານໃຫ້ໄດ້ຕາມກຳນົດໝາຍ.

### 2. ກົນໄກການຈັດຕັ້ງປະຕິບັດ

- ເພື່ອຮັບປະກັນການບັນລຸຈຸດໝາຍລວມການພັດທະນາຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ທີ່ວາງໄວ້ໃຫ້ໄດ້ຮັບໝາກຜົນນັ້ນບັນດາກົມ/ທຽບເທົ່າ, ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ຕ້ອງໄດ້ຍົກສູງຄວາມຮັບຜິດຊອບ ໂດຍນຳໃຊ້ກົນໄກການຄຸ້ມຄອງຕາມທິດ 3 ສ້າງ ແຕ່ຂັ້ນສູນກາງຫາຂັ້ນທ້ອງຖິ່ນຮາກຖານ ເພື່ອໃຫ້ມີຄວາມສະດວກ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີຜົນສຳເລັດ ແລະ ມີປະສິດທິຜົນ;
- ບັນດາກົມ/ທຽບເທົ່າ, ບັນດາພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ຕ້ອງຖືເອົາແຜນການສະບັບນີ້ນຳໄປຜັນຂະຫຍາຍເຂົ້າໃນແຜນວຽກຂອງຕົນຢ່າງລະອຽດ ຕາມພາລະບົດບາດຄວາມຮັບຜິດຊອບຂອງຕົນ ໂດຍໃຫ້ສອດຄ່ອງກັນ ລະຫວ່າງແຜນງານ, ແຜນເງິນ ແລະ ແຜນຄົນ.

### 3. ການຕິດຕາມ ແລະ ປະເມີນຜົນ

- ກົມແຜນການ ແລະ ການເງິນ ເປັນໃຈກາງ ປະສານກັບທຸກພາກສ່ວນທີ່ກ່ຽວຂ້ອງ ຮັບຜິດຊອບໃນການຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ຂອງແຜນພັດທະນາ 5 ປີຄັ້ງທີ IV (2026-2030) ເພື່ອໃຫ້ບັນລຸຕາມເປົ້າໝາຍຂອງແຜນການທີ່ວາງໄວ້;
- ການຕິດຕາມ ແລະ ປະເມີນຜົນແຜນພັດທະນາ ຈະໃຊ້ເຄື່ອງມື (ຕາຕະລາງ) ເພື່ອຕິດຕາມຢ່າງເປັນລະບົບ ແລະ ຊັດເຈນ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ;
- ບັນດາກົມ/ທຽບເທົ່າ ແລະ ບັນດາພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ຕ້ອງໄດ້ສະຫຼຸບ, ສັງລວມ ແລະ ລາຍງານການ ຈັດຕັ້ງປະຕິບັດແຜນພັດທະນາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນເປັນແຕ່ລະເດືອນ, ປະຈຳໄຕມາດ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ແລ້ວສົ່ງໃຫ້ກົມແຜນການ ແລະ ການເງິນ ຢ່າງເປັນປົກກະຕິ;
- ປັບປຸງລະບົບ ແລະ ເຄື່ອງມືໃຫ້ເປັນທັນສະໄໝໃນການຕິດຕາມປະເມີນຜົນແຜນພັດທະນາໃຫ້ເປັນລະບົບຄົບຊຸດ, ເຜີຍແຜ່ ແລະ ຝຶກອົບຮົມວິທີການນຳໃຊ້ຢ່າງທົ່ວເຖິງ ເພື່ອພ້ອມກັນຈັດຕັ້ງປະຕິບັດຢ່າງເປັນເອກະພາບນັບຕັ້ງແຕ່ມີການຮັບຮອງເປັນຕົ້ນໄປ.